# ບົດນຳ

ທ່ານຈະເຫັນໄດ້ວ່າ ວິຊານີ້ແມ່ນເລື່ອງຂອງການດຳເນີນຊີວິດ ໂດຍມີຄວາມຕັ້ງໃຈມຸ້ງເນັ້ນໃຫ້ຜູ້ເຊື່ອເກີດການກໍ່ຮູບແບບຊີວິດຄຣິສຕຽນຝ່າຍວິນຍານ ໃຫ້ໃຫຍ່ຂຶ້ນໂດຍການຍ່າງນຳແບບຢ່າງຂອງພຣະເຢຊູຄຣິສ ຜູ້ຂຽນຈຶ່ງຂຽນອອກມາໃນແນວພາກປະຕິບັດຫລາຍກວ່າທາງດ້ານວິຊາການ ເຮົາຕ້ອງຍອມຮັບວ່າການດຳເນີນຊີວິດຄຣິສຕຽນຝ່າຍວິນຍານຈິດແມ່ນເລື່ອງການປະຕິບັດຊີວິດປະຈຳວັນຂອງຜູ້ທີ່ມີຄວາມເຊື່ອຢ່າງແທ້ຈິງ ຂໍໃຫ້ວິຊານີ້ເປັນປະໂຍດຕື່ມອີກແນວນຶ່ງ ແມ່ນໃຫ້ນັກສຶກສານຳເອົາບົດຮຽນທີ່ໄດ້ມານີ້ໄປປັບປຸງເສີມແຕ່ງແກ້ໄຂໃຫ້ເໝາະສົມ ແລ້ວນຳໄປສອນສະມາຊິກໃຫ້ເກີດຜົນໃນຄຣິສຈັກ ໃຫ້ສະມາຊິກແຕ່ລະຄົນມີການຈະເຣີນ ແລະໃຫຍ່ຂຶ້ນໃນການຝຶກຝົນປັ້ນແປງຊີວິດຄຣິສຕຽນຝ່າຍວິນຍານ (Christian Spiritual Formation) ໃຫ້ເດີນຕາມແບບຢ່າງຂອງພຣະຄຣິສ ຊຶ່ງເປັນຈຸດມຸ່ງໝາຍເອກຂອງວິຊານີ້

ຄວາມສຳຄັນຂອງວິຊານີ້ ກຳລັງເນັ້ນໜັກໃນປັດຈຸບັນຂອງຄຣິສຈັກທັງຫລາຍ ແຕ່ກ່ອນທີ່ເຮົາຈະເຂົ້າໃຈວິຊານີ້ໃຫ້ລັກແນ່ນັ້ນຂໍຍົກຕົວຢ່າງງ່າຍ ໆ ທີ່ເຮົາເຫັນກັນຢູ່ທຸກ ໆ ມື້ເສັຽກ່ອນ ຕົວຢ່າງນຶ່ງທີ່ເຫັນໄດ້ຊັດແຈ້ງ ແມ່ນການຕຽມຕົວໃຫ້ພ້ອມດີກັບຜູ້ທີ່ຈະເຂົ້າປະກວດນາງງາມໂລກ ພວກຫຸ້ນສ່ວນເຂົາຕ້ອງເອົາຕົວນາງງາມໄປຝຶກ ໄປແອບຍ່າງ ແອບຍິ້ມ ແອບໝຸນຕົວ ແອບຄວາມເວົ້າ ແອບຄວາມຄິດໃຫ້ທັນໂລກ ອີກທັງ ສາຍຕາ ທ່າທີ ມາລະຍາດ ຄວາມສົນໃຈ ເປັນຄົນດີມີເຫດຜົນ ຈົນກັມມະການເຂົາຄັດເລືອກເອົາເຂົ້າຮອບສຸດທ້າຍ ໃຜກໍຍິນດີທີ່ມີຂ່າວການປະກວດເຖິງແມ່ນວ່າເປັນເລື່ອງຝ່າຍເນື້ອໜັງກໍຍັງຍອມປະຖິ້ມທຸກສິ່ງເພື່ອແລ່ນໄປເປີດທີວີໃຫ້ທັນເບິ່ງຄວາມງາມຂອງຄົນ

ການປະກວດຊາຍງາມທີ່ບ່ອນໃດກໍຄືກັນ ຜູ້ເຂົ້າປະກວດເຂົາຕ້ອງຮຽນ ຕ້ອງໃຊ້ຄວາມພະຍາຍາມຢ່າງຫລວງຫລາຍ ທີ່ຈະຟອຣ໌ມຕົວ ຟອຣ໌ມກລ້າມເນື້ອ (Physical Formation) ໃຫ້ເຂົ້າຮູບເຂົ້າຮອຍຈົນປາກົດເດັ່ນຊັດເຖິງຄວາມແຂງເກັ່ງຂອງກລ້າມເນື້ອ ຄົນເຫລົ່ານີ້ຍິນດີໃຊ້ເວລາເປັນປີ ໆ ຝຶກຍ່າງ ຝຶກຍືນ ຝຶກໂກ້ງໂຄ້ງ ແລະຝຶກໃບໜ້າທ່າທາງ ໃນການເກງຕົວທີ່ສແດງໃຫ້ເຫັນເຖິງສຸຂພາບດີກ້າມເນື້ອແຂງແຮງ ບໍ່ແມ່ນເກງຕົວອອກມາດ້ວຍຄວາມຍາກລຳບາກຈົນໜ້າມືດ ໜ້າດຳ

ພຣະທັມເອເຟໂຊ 4:17 **"ເຫດສັນນັ້ນ ຂ້າພະເຈົ້າຈຶ່ງຂໍຢືນຢັນ ແລະເປັນພຍານໃນພຣະນາມຂອງອົງພຣະຜູ້ເປັນເຈົ້າວ່າ ຕັ້ງແຕ່ນີ້ຕໍ່ໄປທ່ານທັງຫລາຍຢ່າດຳເນີນຊີວິດຕາມຢ່າງຄົນຕ່າງຊາດທີ່ເຂົາດຳເນີນກັນນັ້ນ ຄືດ້ວຍໃຈໂງ່ອັນຫາປະໂຍດບໍ່ໄດ້"** ດັ່ງນັ້ນຄຣິສຕຽນຈຶ່ງສົມຄວນທີ່ຈະກໍ່ຮູບແບບຂອງກິຣິຍາທ່າທີ ວາຈາ ການດຳເນີນຊີວິດຄຣິສຕຽນໃຫ້ສົມກັບການເປັນ **"ຄຣິສຕຽນ"** ເຮົາຜູ້ເປັນຄຣິສຕຽນຈະຮຽນຢ່າງນຳໃຜ ມີສິ່ງໃດແດ່ທີ່ເຮົາຕ້ອງຮຽນຮູ້ ອົດສາຝຶກຕົວໃຫ້ສົມກັບຖານະການເປັນລູກທີ່ດີຂອງພຣະເຈົ້າຄົນຊາວໂລກເຂົາຍັງຮູ້ວ່າທີ່ຈະໄດ້ຄົນງາມ ພາສາດີ ຄວາມຄິດດີນັ້ນຕ້ອງໃຊ້ເວລາເປັນປີ ໆ ຝຶກແອບໃຫ້

ເຂົ້າຟອຣ໌ມ (Formation) ແລ້ວເຮົາຜູ້ເກີດໃໝ່ໃນພຣະຄຣິສຈະຕ້ອງມີຊີວິດທີ່ດີ ຫລາຍກວ່າເຣື່ອງຝ່າຍເນື້ອໜັງ ເຮົາຈຳເປັນຕ້ອງຮຽນຮູ້ວ່າເຮົາຈະເດີນຈະຍ່າງຊີວິດຄຣິສຕຽນໄດ້ແນວໃດຖ້າຫາກວ່າບໍ່ມີການບອກສອນ ຫລືບໍ່ມີຮູບແບບໃຫ້ເຮົາໄດ້ເບິ່ງນຳ ຈຶ່ງເປັນເຫດໃຫ້ຄຣິສຕຽນຫລາຍ ໆ ຄົນທີ່ເກີດຊີວິດໃໝ່ໃນພຣະຄຣິສມາຫລາຍ ໆ ປີ ຫລືບາງເທື່ອຫລາຍສິບປີແລ້ວກໍຕາມ ຍັງມີການຂັດເຄືອງ ຂາດເຂີນ ເດີນຍ່າງບໍ່ເປັນ ກລາຍເປັນຄຣິສຕຽນທີ່ອ່ອນເປັ້ຽ ເສັຍຄວາມຮູ້ສຶກ ຄິດທໍ້ແທ້ ແກ້ບັນຫາຊີວິດໄດ້ຍາກ ມີຊີວິດທີ່ບໍ່ສາມາດຖວາຍກຽດແດ່ພຣະເຈົ້າໄດ້ ແລະເປັນອຸປສັກຕໍ່ການກ້າວໜ້າຂອງຄຣິສຈັກດັ່ງນັ້ນແລ້ວ ບົດຮຽນນີ້ຈຶ່ງໄດ້ຖືກຂຽນຂຶ້ນມາ ເພື່ອເປັນແນວທາງບອກໃຫ້ຮູ້ເຖິງຮູບແບບພື້ນຖານຂອງການດຳເນີນຊີວິດຄຣິສຕຽນຝ່າຍວິນຍານທີ່ຖືກຕ້ອງ (Christian Spiritual Formation) ໂດຍການຮຽນຍ່າງນຳໄປກັບພຣະຄຣິສ ຕາມທີ່ພຣະທັມເອເຟໂຊ 4:23-24 ກ່າວໄວ້ວ່າ **"ຈົ່ງໃຫ້ວິນຍານຈິດຂອງທ່ານຖືກຊົງຕັ້ງຂຶ້ນໃໝ່ ແລະໃຫ້ທ່ານທັງຫລາຍສວມສະພາບມະນຸດໃໝ່ ຊຶ່ງຊົງສ້າງຂຶ້ນໃໝ່ຕາມແບບລັກສະນະຂອງພຣະເຈົ້າໃນຄວາມຊອບທັມ ແລະຄວາມບໍຣິສຸດທີ່ແທ້ຈິງ"**

ໃນບົດຮຽນນີ້ ແມ່ນວ່າເຮົາຈະບໍ່ສາມາດບອກທ່ານໄດ້ໝົດເຖິງທຸກຍ່າງກ້າວຂອງການລຽນແບບພຣະຄຣິສ ແຕ່ເປັນພຽງບົດຮຽນເລີ້ມຕົ້ນທີ່ຈະຊ່ວຍໃຫ້ເຮົາຮູ້ຈັກໄປຄົ້ນຫາຄວາມເລິກຊຶ້ງເຕີມຂຶ້ນຫລາຍກວ່ານີ້ອີກ ຄືກັບວ່ານັກກລ້າມໃໝ່ ກລ້າມເນື້ອຍັງບໍ່ທັນຟອຣ໌ມຕົວເຕັມທີ່ ແຕ່ເຮົາຄ່ອຍ ໆ ຮຽນຮູ້ຈັກເອົາພຣະທັມຄຳສອນຂອງພຣະເຈົ້າ ເປັນນ້ຳມັນ (ມວຍ) ມານວດ ມາຄຶງ ເພື່ອເກີດແຮງກະຕຸ້ນເຮົາໃຫ້ມີກຳລັງ ໃຫ້ເກີດເປັນຊີວິດຄຣິສຕຽນຝ່າຍວິນຍານທີ່ເຂັ້ມແຂງ ມີພລັງເດີນຍ່າງຕາມພຣະຄຣິສ ຊຶ່ງເປັນເຣື່ອງຂອງການຕິດຕາມພຣະອົງ ແລະຍ່າງນຳພຣະອົງຕລອດຊີວິດຂອງເຮົາ ຈົນກວ່າເຮົາຈະໄດ້ພົບກັບພຣະອົງໜ້າຕໍ່ໜ້າ ພຣະທັມເອເຟໂຊ 5:1 ແລະ 4:13 **"ເພາະສັນນັ້ນທ່ານທັງຫລາຍ ຈົ່ງເປັນຜູ້ດຳເນີນຊີວິດຕາມແບບຢ່າງພຣະເຈົ້າເໝືອນເປັນບຸດທີ່ຊົງຮັກ . . . ຈົນກວ່າເຮົາທຸກຄົນຈະເປັນຄົນໃຫຍ່ເຕັມສ່ວນ"**

ຂໍພຣະເຈົ້າອວຍພຣະພອນທ່ານ

ມົນທີຣາ ສຸງສຸດີນທ

# ບົດທີ 1

# ການອົບຮົມຝຶກຕົນເບື້ອງຕົ້ນໃຫ້ເປັນຄົນຂອງພຣະເຈົ້າ ເອົາແບບຢ່າງຍ່າງນຳພຣະຄຣິສ

**ເຮົາແນ່ໃຈວ່າພຣະອົງຜູ້ຊົງຕັ້ງຕົ້ນການດີໄວ້ໃນພວກເຈົ້າແລ້ວ**
**ຄົງຈະຊົງກະທຳໃຫ້ສຳເຣັດຈົນເຖິງວັນແຫ່ງພຣະເຢຊູຄຣິສ**
**ຟີລິບປອຍ 1:6**

ການເປັນຄຣິສຕຽນໝາຍເຖິງການເປັນຜູ້ຕິດຕາມພຣະຄຣິສ ຫລືຍ່າງນຳພຣະຄຣິສ ແມ່ນການຮຽນຮູ້ຕິດຕາມເປັນສາວົກຂອງພຣະອົງແລະມີການປ່ຽນແປງຊີວິດໃຫ້ມີຮູບແບບຄລ້າຍຄື ຫລືໃຫ້ໃກ້ຄຽງກັບພຣະລັກສະນະຂອງພຣະອົງສົມກັບທີ່ເປັນສາວົກແລະໃຫ້ສົມກັບທີ່ເຮົາເອີ້ນຕົວເຮົາວ່າ **"ຄຣິສຕຽນ"**

ໃນປັດຈຸບັນນີ້ທີ່ກຳລັງຢູ່ໃນສັດຕະວັດທີ 21 ຮູບແບບຊີວິດຄວາມເປັນຢູ່ໂດຍສະເພາະແລ້ວໃນປະເທດທີ່ຈະເຣີນກ້າວໜ້າພັດທະນາແລ້ວ ຄົນທີ່ຢູ່ໃນຍຸກນີ້ຊີວິດໄດ້ຖືກທັນ ໃຫ້ຜັນປ່ຽນໄປຕາມກະແສຂອງຄວາມຮີບຮ້ອນ ທຸກຢ່າງຕ້ອງ "ຟ້າວ" ຟ້າວກິນ ຟ້າວໄປ ແມ້ແຕ່ອາຫານກໍຕ້ອງເປັນອາຫານສຳເຣັດຮູບຊຶ່ງຂາຍຢູ່ເຕັມຕລາດ ຟ້າວຊື້ໄວ້ໃຊ້ສະດວກໃສ່ໃນຕູ້ໄມໂຄແວບ 2-3 ນາທີກິນໄດ້ ຟ້າວໄປໄວ ໆ ຟ້າວເອົາລູກໄປຝາກເຂົາລ້ຽງ ຟ້າວໄປເຮັດວຽກ ຟ້າວກັບມາຮັບລູກ ຟ້າວເຮັດງານໃນເຮືອນ ເຮັດໃຫ້ຂາດການເອົາໃຈໃສ່ອົບຮົມລູກຂອງຕົວ ພໍ່ແມ່ທີ່ແກ່ເຖົ້າແລ້ວກໍເອົາໄປຝາກໃຫ້ຜູ້ອື່ນເຂົາດູແລ ຍ້ອນເຮົາຟ້າວຫລາຍ ຟ້າວໄປຫາເງິນຍ້ານຂາດເຂີນ ຫາກວ່າບໍ່ໄດ້ຊື້ສິ່ງດີທັນສມັຍຕາມຄົນອື່ນເຂົາກໍບໍ່ດີໃຈເຫັນຜູ້ອື່ນມີຫຍັງເຮົາກໍຟ້າວໄປເອົາມາໂດຍລືມໄປວ່າ ເຮົາຈຳເປັນຕ້ອງມີສິ່ງນັ້ນຫລືບໍ່ ລາງເທື່ອເປັນໜີ້ເປັນສິນຈົນມີບັນຫາໃນຄອບຄົວ ຊີວິດທີ່ຂາດວິນັຍຂາດການສຳຣວດກວດເບິ່ງ ກໍພາໃຫ້ຕັດສິນໃຈຜິດຄິດເສັຽໃຈ ຂາດສະຕິ ຂາດການຢັບຢັ້ງໃຈ ແມ້ແຕ່ຄົນທີ່ເປັນຄຣິສຕຽນມາແລ້ວຫລາຍສິບປີກໍຍັງລືມໄປວ່າ ຕົນເອງເປັນຄຣິສຕຽນ ມີຊີວິດທີ່ປ່ຽນໃໝ່ແລ້ວ ສົມຄວນດຳເນີນຊີວິດໃຫ້ສົມກັບການເປັນບຸດທີ່ຮັກຂອງພຣະເຈົ້າ ມີການຝຶກຝົນຕົນໃຫ້ມີຣະບຽບວິນັຍ ແລະຮັບເອົາແບບຢ່າງຂອງພຣະຄຣິສ **"ຢ່າດຳເນີນຊີວິດເໝືອນຢ່າງຊາວໂລກນີ້ ແຕ່ຈົ່ງຮັບການຊົງປ່ຽນແປງຈິດໃຈ ແລ້ວອຸປນິສັຍຂອງພວກເຈົ້າຈຶ່ງຈະປ່ຽນໃໝ່ ເພື່ອເຈົ້າທັງຫລາຍຈະໄດ້ຮູ້ນ້ຳພຣະທັຍຂອງພຣະເຈົ້າ ຈະໄດ້ຮູ້ວ່າອັນໃດດີ ອັນໃດເປັນທີ່ຊອບພຣະທັຍ ແລະອັນໃດດີທີ່ສຸດ"** (ໂຣມ 12:2)

ພຣະທັມໂຣມ 8:12-17 "ເຫດດັ່ງນັ້ນພີ່ນ້ອງທັງຫລາຍເອີຍ ພວກເຮົາໄດ້ເປັນໜີ້ ແຕ່ບໍ່ແມ່ນໜີ້ໃນທາງເນື້ອກາຍຊຶ່ງດຳເນີນຊີວິດຕາມຢ່າງມະນຸດນັ້ນ ເພາະຖ້າເຈົ້າທັງຫລາຍດຳເນີນຊີວິດຕາມຝ່າຍເນື້ອກາຍ ພວກເຈົ້າຄືງຈະຕາຍ ແຕ່ຖ້າໂດຍຣິດພຣະວິນຍານພວກເຈົ້າໄດ້ທຳລາຍການຂອງຝ່າຍເນື້ອກາຍເສັຽ ເຈົ້າຄືງຈະມີຊີວິດຢູ່ ເພາະວ່າພຣະວິນຍານຂອງພຣະເຈົ້າຊົງນຳພາຜູ້ໃດ ຜູ້ນັ້ນແຫລະ ເປັນບຸດຂອງພຣະເຈົ້າ ເຫດວ່າເຈົ້າທັງຫລາຍບໍ່ໄດ້ຮັບວິນຍານທີ່ໃຫ້ມີນິສັຍຢ່າງຂ້ອຍຂ້າ ຊຶ່ງນຳເຖິງຄວາມຢ້ານກົວອີກ ແຕ່ພວກເຈົ້າໄດ້ຮັບພຣະວິນຍານຜູ້ຊົງໃຫ້ເປັນບຸດຂອງພຣະເຈົ້າ ທີ່ໃຫ້ເຮົາທັງຫລາຍຮ້ອງເອີ້ນພຣະເຈົ້າວ່າ "ອັບບາ" ຄືພຣະບິດາ ຝ່າຍພຣະວິນຍານນັ້ນຊົງຮ່ວມເປັນພຍານກັບວິນຍານຂອງເຮົາ ທັງຫລາຍວ່າ ພວກເຮົາເປັນບຸດຂອງພຣະເຈົ້າ ແລະຖ້າເຮົາທັງຫລາຍເປັນບຸດແລ້ວ ເຮົາກໍເປັນຜູ້ຮັບມໍຣະດົກດ້ວຍ ຄືເປັນຜູ້ຮັບມໍຣະດົກຈາກພຣະເຈົ້າ ແລະເປັນຜູ້ຮ່ວມຮັບມໍຣະດົກກັບພຣະຄຣິສ ຖ້າແມ່ນເຮົາທັງຫລາຍໄດ້ທົນທຸກທໍຣະມານດ້ວຍກັນກັບພຣະອົງນັ້ນ ພວກເຮົາກໍຈະໄດ້ຮັບສະງ່າຣາສີກັບພຣະອົງເໝືອນກັນ"

ຂໍ້ພຣະທັມປະຈຳບົດນີ້ ສົມຄວນເປັນບົດຮຽນໃຫ້ເຮົາໄດ້ຝຶກຕົວຝຶກຕົນເປັນຄົນທີ່ຮູ້ຈັກການດຳເນີນຊີວິດຄຣິສຕຽນ ອັນເປັນບາດກ້າວທຳອິດທີ່ຈະລຽນແບບຂອງພຣະເຢຊູຄຣິສ ໂດຍອາສັຍອຳນາດແຫ່ງພຣະວິນຍານບໍຣິສຸດຊ່ວຍເຮົາໃນການດຳເນີນຊີວິດປະຈຳວັນຢ່າງຄຣິສຕຽນທີ່ມີຄວາມເຊື່ອແທ້

## <u>ບາດກ້າວທີນຶ່ງ</u> ຍ່າງນຳພຣະຄຣິສ

ກ) ສຳລັບຄຣິສຕຽນທີ່ຕ້ອງການຮຽນຮູ້ຈັກການເປັນສາວົກແທ້ຂອງພຣະເຢຊູ ແລະໄດ້ເລີ້ມຕົ້ນບາດກ້າວທຳອິດກັບພຣະຄຣິສແລ້ວ ຈະຕ້ອງໂຕຂຶ້ນເປັນຜູ້ໃຫຍ່ໃນທຸກມື້ ແລະເປັນແບບຢ່າງແກ່ສະມາຊິກຄຣິສຈັກຄົນອື່ນ ໆ ຕໍ່ ໆ ໄປ

2) ນັກກິລາໂອລິມປິກຈະແລ່ນກະໂດດຂ້າມເຄື່ອງກີດຂວາງ ຫລືຄູ່ຊາວໜຸ່ມຈະເດີນຄວງຄູ່ກັນທີ່ແຄມທະເລ ກ່ອນໜ້ານັ້ນອີກ ກ່ອນທີ່ນັກເຕັ້ນແບລເລ່ຈະເຕັ້ນຣຳເທິງປາຍເທົ້າ ຫລືນັກໄຕ່ພູຈະຮອດຍອດພູ <u>ທຸກ ໆ ຄົນຕ້ອງເກີດເປັນລູກອ່ອນເສັຽກ່ອນ</u> <u>ແລ້ວຈຶ່ງຄ່ອຍຝຶກຄານ</u> <u>ຝຶກຕັ້ງຕົວຍືນຂຶ້ນ</u> <u>ແລ້ວກໍຫັດຍ່າງ</u> ພຣະຄຣິສທັມຄັມພີສົມທຽບການເກີດແລະການໃຫຍ່ຂຶ້ນຝ່າຍຈິດວິນຍານ ຄືກັນກັບການເກີດແລະພັດທະນາການຂອງຝ່າຍຮ່າງກາຍ ວິຖີທາງຊີວິດຂອງຝ່າຍຈິດວິນຍານເລີ້ມຕົ້ນບາດກ້າວທຳອິດ ອັນເປັນອະນຸສອນທີ່ສົມຄວນແກ່ການຈື່ຈຳ ຄືເລີ້ມຕົ້ນດ້ວຍການຮັບຕ້ອນເອົາພຣະເຢຊູຄຣິສເປັນອົງພຣະຜູ້ເປັນເຈົ້າ ແລະພຣະຜູ້ຊ່ວຍໃຫ້ຣອດພົ້ນ ພຣະຄຣິສທັມຄັມພີເອີ້ນປາກົດການນີ້ວ່າ **"ບັງເກີດໃໝ່"** (Born Again ໂຢຮັນ 3:3) ຫລັງຈາກການເກີດໃໝ່ນີ້ແລ້ວ ຊີວິດຂອງຄຣິສຕຽນຄືກັນ ຕ້ອງມີບາດກ້າວຕ່າງ ໆ ທີ່ຕ້ອງຮຽນຮູ້ໃນການ **"ຍ່າງກ້າວ"** ກັບພຣະຄຣິສໃນມື້ນີ້ແລະມື້ຕໍ່ ໆ ໄປ

ພຣະຄຣິສທັມຄັມພີໄດ້ບັນທຶກໄວ້ຫລາຍຕອນວ່າພຣະເຢຊູຊົງປີກຕົວປະຄວາມຫວຸ້ນວາຍໄປຫາທີ່ສະງົບແລ້ວອະທິຖານ (ມທ 14:23, ມກ 1:35, ລກ 5:16, 6:12, 11:1)

ເຮົາຈະເຮັດຕາມບາດກ້າວທີ 1 ຕາມແບບຢ່າງພຣະຄຣິສ (ຝຶກສຸຂພາບຝ່າຍຈິດວິນຍານ) ທ່ານຈະຫາເວລາວັນລະ 5 ນາທີຕອນເຊົ້າ ຫລືຕອນພັກ 15 ນາທີຈາກວຽກຂອງທ່ານທີ່ໂຮງງານ ແລ້ວຍ່າງອອກຫ່າງຈາກຝູງຊົນ ຄົນອ້ອມຂ້າງ ທີ່ມີແຕ່ຄວາມເວົ້າຫລິ້ນຫຍອກກວນປະສາທໃຫ້ປວດຫົວ ໃນ 5 ນາທີທີ່ທ່ານຈະຕ້ອງເດີນອອກຫ່າງຈາກໝູ່ຄູ່ ທ່ານຈະບອກກັບເຂົາວ່າ “ຂໍໄປທຸຣະສ່ວນຕົວຈັກ 5 ນາທີ” ໃນ 5 ນາທີນີ້ທ່ານເລີ້ມແຕ່ນາທີແລກທີ່ທ່ານຕ້ອງເດີນຫັນອອກໄປນັ້ນ ທ່ານກໍເລີ້ມອະທິຖານກັບພຣະເຈົ້າ ໂດຍການສັລເສີນພຣະນາມຂອງພຣະອົງ ແລະເວົ້ານຳພຣະອົງໃນສິ່ງທີ່ທ່ານອຸກໃຈແລະກັງວົນໃຈທີ່ສຸດ ຈະເປັນເຣື່ອງການເງິນ ເຣື່ອງລູກ ເຣື່ອງເມັຽ ເຣື່ອງສຸຂພາບ ຫລືກະທັ່ງການສາຣະພາບບາບຜິດຕໍ່ພຣະອົງ ໃນ 5 ນາທີນີ້ ຂໍພຣະອົງຊ່ວຍທ່ານໃຫ້ສາມາດຜະເຊີນກັບສຽງເວົ້າຂວັນ ຫລືຄຳເວົ້າຍົ່ວເຍົ້າຫຍອກລໍ້ໄດ້ຕລອດມື້ ຂໍໃນພຣະນາມຂອງພຣະເຢຊູຄຣິສເຈົ້າ ອາແມນ

5 ນາທີຕອນຊ່ວງພັກບ່າຍ (ຂໍໃຫ້ຕັ້ງເປົ້າໝາຍທີ່ຈະເຮັດໃຫ້ໄດ້) ໃນໂຮງງານໃນທີ່ເຮົາເຮັດວຽກຈະຕ້ອງມີໃຜບາງຄົນທີ່ຢູ່ໃນສາຍຕາຂອງທ່ານວ່າ ທ່ານສາມາດນຳເຂົາມາເຖິງພຣະຄຣິສ ແລະມາເຖິງຄຣິສຈັກຂອງທ່ານໄດ້ ທ່ານຕ້ອງເປັນໝູ່ກັບເຂົາ ແຕ່ຢ່າເວົ້າຫລາຍໂພດ ແຕ່ໃຫ້ໄຫວ້ວອນໃນໃຈຂອງທ່ານ ໂດຍຟັງເຂົາ ດ້ວຍການເບິ່ງທີ່ຕາຂອງເຂົາ ຮັບຮູ້ຄວາມທຸກຂອງເຂົາ ເຂົ້າໃຈເຂົາ ເຫັນອົກເຫັນໃຈເຂົາ ໃນໃຈຂອງທ່ານຕ້ອງຂໍໃຫ້ພຣະວິນຍານບໍຣິສຸດຊ່ວຍເຂົາ ແລະຊ່ວຍທ່ານທີ່ຈະເບິ່ງຄວາມພ້ອມຂອງເຂົາ ຖ້າເຂົາພ້ອມກໍຂໍໃຫ້ເຂົາໄຫວ້ວອນນຳທ່ານ ລາງເທື່ອທ່ານອາດຈະວ່າເຮັດບໍ່ໄດ້ດອກ ແຕ່ຖ້າທ່ານເປີດໂອກາດໃຫ້ແກ່ຕົວເອງ ແລະຕັ້ງໃຈທີ່ຈະເຮັດໃຫ້ໄດ້ ທ່ານກຳລັງເປີດໂອກາດທີ່ຈະຊ່ວຍໃຫ້ໝູ່ຂອງທ່ານຮັບຄວາມພົ້ນໃນພຣະຄຣິສ

5 ນາທີກ່ອນນອນ (ຮຽນຮູ້ຈັກນຳພຣະທັຍຂອງພຣະເຈົ້າ) ການທີ່ເຮົາຈະເປັນລູກທີ່ດີ ເຮົາຕ້ອງຮູ້ໃຈຜູ້ເປັນພຣະບິດາ ທ່ານຮູ້ຫລືບໍ່ວ່າພຣະຄຣິສທັມຄັມພີໄດ້ເປີດເຜີຍນໍ້າຈິດນໍ້າໃຈຂອງພຣະເຈົ້າໂດຍຜ່ານທາງປວັດສາດ ຜ່ານທາງຊີວິດຂອງຄົນຈຳນວນຫລາຍໃນພຣະຄຣິສ ອີກທັງຄຳສອນຕ່າງ ໆ ທີໄດ້ສຳເຣັດແລ້ວໃນພຣະເຢຊູຄຣິສ ທ່ານພຽງແຕ່ໃຊ້ເວລາ 5 ນາທີງ່າຍ ໆ ອ່ານພຣະຄັມພີ 1 ຂໍ້ ຫລື 1 ຕອນອ່ານຄູ່ມືທີ່ຊ່ວຍໃຫ້ເຂົ້າໃຈ ເຊັ່ນ **“ມານາປະຈຳວັນ”** ຫລືຫນັງສືຄຣິສຕຽນທີ່ປະກອບດ້ວຍຄຳສອນທີ່ໃຫ້ຣະບຽບວິນັຍໃນການດຳເນີນຊີວິດຂອງທ່ານກັບພຣະຄຣິສ ໃຊ້ເວລາພຽງ 1-2 ນາທີທີ່ໄຫວ້ວອນສັລເສີນພຣະເຈົ້າຫລືຂໍການນຳພາໃນສິ່ງຈຳເປັນ ຮັບຮອງວ່າທ່ານຈະຫລັບສະບາຍຫາຍຫ່ວງໄດ້ຕລອດຄືນ ເຖິງຍາມຮຸ່ງເຊົ້າຢ່າຝ້າວໄປ ສັລເສີນພຣະອົງເປັນຂໍ້ຄວາມແລກ ຈະເປັນຂໍ້ຄວາມທີ່ເວົ້າອອກຈາກປາກຫລືແມ່ນຂໍ້ຄວາມຄິດນຶກໃນໃຈ ພຣະເຈົ້າຊົງມີຄວາມເມດຕາ ພຣະອົງຊົງຊາບຢູ່ແລ້ວ ເພາະວ່າພຣະທັມໂຣມ 8:28-30 ກ່າວວ່າ **“ພວກເຮົາຮູ້ແລ້ວວ່າພຣະເຈົ້າຊົງຮ່ວມກັບຄົນທັງຫລາຍທີ່ຮັກພຣະອົງ ເພື່ອໃຫ້ເກີດຜົນດີໃນທຸກສິ່ງ ຄືຄົນທັງປວງທີ່ພຣະອົງໄດ້ຊົງເອີ້ນໄວ້ຕາມພຣະປະສົງຂອງພຣະອົງ ດ້ວຍວ່າຄົນທັງຫລາຍທີ່ພຣະອົງໄດ້ຊົງສັງເກດຮູ້ລ່ວງໜ້າແລ້ວນັ້ນ ພຣະອົງກໍໄດ້ຊົງກຳນົດໄວ້ກ່ອນ ເພື່ອໃຫ້ເປັນຕາມແບບລັກສະນະແຫ່ງພຣະບຸດຂອງພຣະອົງ ເພື່ອພຣະບຸດນັ້ນຈະໄດ້ເປັນບຸດກົກໃນຖ້າມກາງພວກນ້ອງ**

ຫລາຍຄົນ ແລະບັນດາຜູ້ທີ່ພຣະອົງໄດ້ຊົງກຳນົດໄວ້ລ່ວງໜ້າແລ້ວນັ້ນ ພຣະອົງກໍໄດ້ຊົງເອີ້ນມາດ້ວຍ ແລະຜູ້ທີ່ພຣະອົງຊົງເອີ້ນມານັ້ນ ພຣະອົງກໍຊົງຖືເປັນຄົນຊອບທັມ ແລະຜູ້ທີ່ພຣະອົງຊົງຖືວ່າເປັນຄົນຊອບທັມນັ້ນ ພຣະອົງກໍຊົງໂຜດໃຫ້ມີສະງ່າຣາສີດ້ວຍ"

## ບາດກ້າວທີສອງ ຊີວິດຄຣິສຕຽນໃນຖານະທີ່ເປັນສາວົກຂອງພຣະຄຣິສ

ກ) ຂໍໃຫ້ໃຊ້ເວລາໃນການຮຽນຮູ້ຈັກພຣະເຢຊູຄຣິສຈາກພຣະຄຣິສທັມຄັມພີ ເພື່ອໃຫ້ພຣະວັຈນະຂອງພຣະເຈົ້າຄືແວ່ນແຍງສ່ອງຊີວິດເຮົາ ແລະຊ່ວຍເຮົາໃຫ້ຈະເຣີນເຕີບໃຫຍ່ຝ່າຍຈິດວິນຍານ ຫລາຍຄົນອາດຈະກ່າວວ່າ ຂ) ແມ່ນຫຍັງເຮົາຈຶ່ງຕ້ອງມີການສ່ອງແສງຊີວິດຂອງເຮົາ ເຮົາໄດ້ເປັນຄຣິສຕຽນດົນແລ້ວ ໄປຄຣິສຈັກທຸກອາທິດ ທັງຍັງສອນຄົນອື່ນໄດ້ອີກດ້ວຍ ເປັນຜູ້ນຳ ເປັນກັມມະການ ໃນທີ່ນີ້ມີຂໍເຕືອນໃຈທ່ານວ່າ ເຮົາຕ້ອງສ່ອງຊີວິດຂອງເຮົາກັບພຣະວັຈນະທຸກມື້ ຍ້ອນເຮົາຕ້ອງການເປັນສາວົກແທ້ ເປັນຜູ້ເຊື່ອແທ້ ເປັນຜູ້ບັງເກີດໃໝ່ແທ້ ເປັນຜູ້ຮັກພຣະເຈົ້າແທ້ ເປັນຜູ້ຮັບໃຊ້ພຣະເຈົ້າທີ່ສັດຊື່ ແລະຖວາຍກຽດແດ່ພຣະເຈົ້າ ບໍ່ແມ່ນຫາກຽດໃສ່ຕົວເອງ ຄ) ການເປັນສາວົກແທ້ຂອງພຣະເຢຊູຕ້ອງອາສັຍພຣະກຳລັງ ແລະພລັງຈາກພຣະເຈົ້າ ຕ້ອງຕິດຕາມ ຕ້ອງຮຽນຮູ້ ຝຶກຝົນຕົນເອງຢ່າງມີວິນັຍ ມີການເຊື່ອຟັງພຣະເຈົ້າ ແລະເຂົ້າໃຈຄຳສອນຂອງພຣະຄັມພີຢ່າງແຈ່ມແຈ້ງແລະເລິກຊຶ້ງ ມີການດຳເນີນຊີວິດທີ່ຖ່ອມໃຈ ຮູ້ຈັກການຮັບໃຊ້ ມີຊີວິດຄຣິສຕຽນໃນແຕ່ລະມື້ ທີ່ມີແບບຢ່າງຕາມພຣະເຢຊູຄຣິສ ໂດຍການຍ່າງນຳພຣະອົງໄປທີລະກ້າວ ເຮົາຈະເປັນສາວົກທີ່ເກີດຜົນຕ້ອງອາສັຍພລັງຈາກພຣະວັຈນະຂອງພຣະເຈົ້າ ຄືກັບອາຫານທີ່ຈຳເປັນຕໍ່ຊີວິດ ອາສັຍການອະທິຖານ ຄືກັບລົມຫາຍໃຈທີ່ເປັນພລັງ ມີການຮັບໃຊ້ຄືກັບການອອກກຳລັງກາຍ ມີປະສົບການຊີວິດແບບຄຣິສຕຽນທີ່ເຊື່ອຟັງຄວາມພຣະເຢຊູ ຄືກັບການຟອຣ໌ມຕົວຝຶກແອບຊີວິດເຮົາໃຫ້ເຂົ້າຮູບເຂົ້າແບບ ງ) ເຮົາປະຕິບັດຊີວິດຄຣິສຕຽນທີ່ສັດຊື່ທຸກມື້ຕາມພຣະເຢຊູຄຣິສ ເພື່ອຮັກສາຕົວເຮົາໃຫ້ຄົງຮູບຄົງຮ່າງຂອງການເປັນຄຣິສຕຽນແທ້ ແລະເມື່ອໃຜເຫັນເຮົາ ເຂົາກໍຮູ້ວ່າເຮົາແມ່ນສາວົກຂອງພຣະຄຣິສ ພຣະເຢຊູຊົງສັນຍາວ່າ ພຣະວິນຍານບໍຣິສຸດຂອງພຣະອົງຊົງສັ່ງສອນແລະນຳພາທ່ານ ທ່ານຈະບໍ່ຖືກປະຖິ້ມ ເຖິງແມ່ນວ່າຈະຕ້ອງຜະເຊີນກັບຄວາມທຸກຍາກລຳບາກໃນຊີວິດຂອງທ່ານ ພຣະເຈົ້າຊົງສັນຍາວ່າ **"ເຮົາຈະບໍ່ປະເຈົ້າ ຫລືຖິ້ມເຈົ້າຈັກເທື່ອ"** (ເຮັບເຣີ 13:5) ຈ) ຫລາຍກວ່ານັ້ນອີກ ທ່ານຈະໄດ້ຮັບຜົນປໂຍດຈາກການມີມິດຕະພາບ ໃນການສາມັກຄີກັບຄຣິສຕຽນ ກັບຜູ້ອື່ນທີ່ມີຄວາມເຊື່ອ ໂດຍການຮຽນຮູ້ຈາກປະສົບການຂອງການເປັນຄຣິສຕຽນຮ່ວມກັນກັບພຣະເຈົ້າ

## ບາດກ້າວທີສາມ ການຝຶກຕົນໃຫ້ມີວິນັຍໃນການດຳເນີນຊີວິດປະຈຳວັນ

ກ) ການອົບຮົມຊີວິດຄຣິສຕຽນໃຫ້ເປັນຄົນຂອງພຣະເຈົ້ານັ້ນເປັນສິ່ງທີ່ສຳຄັນຫລາຍ ເມື່ອຄົນໜຶ່ງຄົນໃດໄດ້ບັງເກີດໃໝ່ແລ້ວພວກເຂົາກໍຈະໄດ້ຮັບການປ່ຽນແປງຖານະໃໝ່ ຄືການເປັນບຸດຂອງພຣະເຈົ້າ

ຊຶ່ງໝາຍເຖິງເຂົາບໍ່ເປັນຂອງໂລກ ແຕ່ເປັນຂອງພຣະເຈົ້າ ເພາະເຫດນີ້ເອງມານຈຶ່ງໄດ້ພຍາຍາມມາໂຈມຕີ ທຳລາຍ ແລະລໍ້ລວງຊີວິດຂອງຄຣິສຕຽນ ເພາະວ່າຄຣິສຕຽນເຄີຍເປັນພວກຂອງມັນ

ດັ່ງນັ້ນຄຣິສຕຽນຈຶ່ງຕ້ອງຕື່ນຕົວຢູ່ສເມີ ເພື່ອທີ່ຈະມີໄຊຊະນະຕໍ່ສົງຄາມຝ່າຍຈິດວິນຍານ ຊຶ່ງເຖິງວ່າເປັນສິ່ງທີ່ເບິ່ງບໍ່ເຫັນແຕ່ກໍມີຈິງ ເຮົາຈຶ່ງຕ້ອງຕຽມຕົວໃຫ້ພ້ອມເພື່ອຮັບມືກັບສິ່ງນີ້ດ້ວຍການອົບຮົມຝຶກຕົນໃຫ້ມີວິນັຍໃນຊີວິດປະຈຳວັນກັນ ເປັນການເສີມສ້າງຮູບແບບຊີວິດຝ່າຍວິນຍານຈິດຂອງຄຣິສຕຽນ (Christian Spiritual Formation)

ການເລີ້ມຕົ້ນໃນການອົບຮົມຊີວິດຄຣິສຕຽນໃຫ້ມີວິນັຍນັ້ນ ຈະຕ້ອງເຂົ້າໃຈພຣະຄັມພີໂດຍການສຶກສາພຣະວັຈນະຂອງພຣະເຈົ້າດ້ວຍການຊົງນຳຂອງພຣະວິນຍານບໍຣິສຸດ ຜູ້ທີ່ເຂົ້າໃຈໃນພຣະລັກສະນະຂອງພຣະເຈົ້າ ແລະພຣະບັນຊາຂອງພຣະອົງນັ້ນ ຈະຕ້ອງຂັບຕາມຄຳສອນຂອງພຣະຄັມພີໃໝ່ແລະນຳມາໃຊ້ຢ່າງຖືກຕ້ອງໃນການດຳເນີນຊີວິດປະຈຳມື້ດ້ວຍຄວາມຊື່ນຊົມຍິນດີ ຊຶ່ງເຮັດໃຫ້ເຮົາສາມາດທີ່ຈະເຂົ້າໃຈໄດ້ຢ່າງຊັດເຈນວ່າ ຄຣິສຕຽນຄວນທີ່ຈະມີຊີວິດຢ່າງໃດ ແລະຄວນທີ່ຈະດຳເນີນຊີວິດກັບພຣະເຈົ້າໄດ້ຢ່າງໃດນຳ ແລ້ວຈະເກີດຜົນຫຍັງ ເຮົາເສັຽຊັຍຍ້ອນສາເຫດຫຍັງ ການທົດລອງຂອງມານແມ່ນຫຍັງ ເຮົາຈະປ້ອງກັນຊີວິດທີ່ຜິດພາດໄດ້ແນວໃດ ການມີຊີວິດທີ່ເຕັມລົ້ນໃນພຣະວິນຍານບໍຣິສຸດແລະອື່ນ ໆ ເປັນຕົ້ນ

ໃນທີ່ສຸດການອົບຮົມຊີວິດໃນພຣະເຢຊູຄຣິສຢ່າງຕໍ່ເນື່ອງນັ້ນ ຈະເຮັດໃຫ້ຈິດວິນຍານຈະເລີ້ມໃຫຍ່ຂຶ້ນເປັນຜູ້ໃຫຍ່ໃນຝ່າຍຈິດວິນຍານ ເຮົາຈະພົບກັບຄວາມຮັກຂອງພຣະເຈົ້າ ຄຣິສຕຽນທີ່ອົບຮົມຊີວິດຢ່າງເອົາຈິງເອົາຈັງສເມີນັ້ນຈະໄດ້ຮຽນຮູ້ຫລາຍ ໆຢ່າງຈາກພຣະເຢຊູຄຣິສໂດຍກົງ ພວກເຂົາຈຶ່ງໄດ້ຮັບການປ່ຽນແປງຈິດໃຈໃໝ່ຢູ່ສເມີ ສິ່ງທີ່ສຳຄັນໃນການອົບຮົມໃຫ້ມີວິນັຍໃນຊີວິດໃໝ່ນັ້ນກໍຄື ເຮົາຕ້ອງຮູ້ຈັກລຳດັບການປ່ຽນແປງ ແມ່ນຮູ້ວ່າຈິດໃຈນັ້ນສຳຄັນກວ່າສິ່ງທີ່ຢູ່ພາຍນອກ ສິ່ງທີ່ເບິ່ງບໍ່ເຫັນສຳຄັນກວ່າສິ່ງທີ່ເບິ່ງເຫັນໄດ້ ສະພາບຂອງເຮົາທີ່ຢູ່ໃນຄວາມຮັກຂອງພຣະເຈົ້າສຳຄັນກວ່າສິ່ງອື່ນ ແລະຊີວິດສຳຄັນກວ່າວັດຖຸຕ່າງ ໆ ສິ່ງເຫລົ່ານີ້ບໍ່ແມ່ນງ່າຍ ໆ ເພາະເຮົາເອງມີສະພາບ 2 ສະພາບ ຄືຝ່າຍເນື້ອໜັງກັບຝ່າຍວິນຍານ ຄວາມລົ້ງເຄີຍຢູ່ໃນເນື້ອໜັງແລະຕິດຢູ່ກັບສິ່ງເກົ່າ ໆ ເຮັດໃຫ້ເບິ່ງສິ່ງທີ່ສຳຄັນນີ້ບໍ່ແຈ້ງ ເພາະສະນັ້ນທຸກເວລາທຸກນາທີເຮົາຈະຕ້ອງພຶ່ງພຣະວິນຍານບໍຣິສຸດ ແລະໃຫ້ພຣະວິນຍານບໍຣິສຸດສະແດງສິ່ງສຳຄັນທີ່ມີຄຸນຄ່າຫລາຍທີ່ສຸດ ພ້ອມທັງໃຫ້ເຮົາຫຸ້ມເທກັບສິ່ງນັ້ນດ້ວຍຣິດເດດຂອງພຣະວິນຍານບໍຣິສຸດ ຖ້າເຮົາໄດ້ຮັບການຊົງນຳຂອງພຣະວິນຍານບໍຣິສຸດແລະການຄອບຄອງຂອງພຣະອົງ ເຮົາຈະສາມາດອົບຮົມຝຶກຊີວິດຄຣິສຕຽນໄດ້ຢ່າງຖືກຕ້ອງ ການອົບຮົມຊີວິດຝ່າຍວິນຍານທຸກຢ່າງໃຫ້ເຮົາຮູ້ຈັກເຈົ້າຊີວິດແມ່ນພຣະເຢຊູຄຣິສຫລາຍຍິ່ງຂຶ້ນ ແລະເພີ່ມສະຕິປັນຍາທີ່ຈະສາມາດຜະເຊີນກັບສະຖານະການໃຫ້ເຮົາໄດ້ຊັຍໃນຊີວິດ ດັ່ງນັ້ນເຮົາຕ້ອງອົບຮົມໃຫ້ຊີວິດມີວິນັຍກັບສິ່ງແວດລ້ອມທຸກຢ່າງທີ່ເຮົາພົບຢ່າງເອົາຈິງເອົາຈັງ ຊຶ່ງບົດຮຽນນີ້ຂໍແນະນຳວ່າ ເຮົາຈະອົບຮົມວິນັຍຊີວິດຕາມສະຖານນະການຕ່າງ ໆ ໄດ້ແນວໃດ ຮຽນຮູ້ສິ່ງນີ້ແມ່ນສິ່ງທີ່ເຮົາຈະຕ້ອງຮຽນຮູ້ຢ່າງຕໍ່ເນື່ອງ ບໍ່ມີຜູ້ໃດກ້າກ່າວວ່າ ຂ້າພະເຈົ້າຮຽນ

ຮູ້ໝົດສິ້ນບູນແລ້ວ ເວັ້ນໄວ້ແຕ່ພຣະເຢຊູຄຣິສອົງດຽວ ຊຶ່ງເຮົາກຳລັງຍ່າງນຳແລະເອົາແບບຢ່າງຂອງພຣະອົງຕໍ່ໄປຈົນຕລອດຊີວິດ

ເຮົາໄດ້ອົດສາສູ້ໃນການແຂ່ງຂັນ ເຮົາໄດ້ແລ່ນແຂ່ງຂັນຈົນເຖິງທີ່ສຸດ

ເຮົາໄດ້ຮັກສາຄວາມເຊື່ອໄວ້ແລ້ວ

ແຕ່ນີ້ຕໍ່ໄປພວງມາລັຍຄືຣາງວັນແຫ່ງຄວາມຊອບທັມຊົງຈັດໄວ້ຖ້າເຮົາແລ້ວ

ຊຶ່ງອົງພຣະຜູ້ເປັນເຈົ້າຜູ້ພິພາກສາອັນຍຸດຕິທັມ ຈະຊົງປະທານແກ່ເຮົາໃນວັນນັ້ນ

ແລະບໍ່ແມ່ນແກ່ເຮົາຜູ້ດຽວ

ແຕ່ຈະຊົງປະທານແກ່ຄົນທັງປວງທີ່ມີໃຈຍິນດີໃນການຊົງສະເດັດມາປາກົດຂອງພຣະອົງ

2 ຕີໂມທຽວ 4:7-8

# ບົດທີ 2

## ພຣະຄຣິສແມ່ນໃຜ
## ຮຽນຮູ້ເຂົ້າໃຈ ຍ່າງນຳພຣະອົງ

**ຊີໂມນເປໂຕທູນຕອບວ່າ "ທ່ານເປັນພຣະຄຣິສ**
**ພຣະບຸດຂອງພຣະເຈົ້າຜູ້ຊົງພຣະຊົນຢູ່"**
**ມັດທາຍ 16:16**

ການທີ່ຜູ້ນຶ່ງຜູ້ໃດຈະຍ່າງນຳໃຜ ຢ່າງນ້ອຍທີ່ສຸດຜູ້ນັ້ນຕ້ອງຮູ້ຈັກກັນ ແລະຍອມທີ່ຈະຍ່າງໄປນຳກັນ ພຣະເຢຊູສະເດັດມາໃນໂລກນີ້ ເພື່ອເປີດເຜີຍນ້ຳພຣະທັຍແລະພຣະປະສົງຂອງພຣະເຈົ້າ **ພຣະເຢຊູແມ່ນ "ພຣະຄຣິສ ພຣະບຸດຂອງພຣະເຈົ້າຜູ້ຊົງພຣະຊົນຢູ່"** (ມທ 16:16) ການທີ່ເຮົາຈະຍ່າງນຳໄປກັບພຣະອົງນັ້ນ ເຮົາຈຳເປັນທີ່ສຸດຕ້ອງຮູ້ຈັກວ່າ ພຣະເຢຊູແມ່ນໃຜ ແລະພຣະອົງມີຈຸດປະສົງໃດທີ່ຍອມເສັຽສະລະຄວາມສຸກສົມບູນເທິງສວັນມາບັງເກີດເປັນມະນຸດ ເພື່ອເປັນແບບຢ່າງແກ່ມະນຸດໃນເຣື່ອງຄວາມຊອບທັມ ພຣະອົງຖືກທົດລອງຄືກັບເຮົາທຸກຄົນ ແລະຮ້າຍແຮງຫລາຍກວ່າເຮົາອີກ ແຕ່ພຣະອົງບໍ່ຊົງເຮັດບາບ ພຣະອົງມີຊີວິດທີ່ມີຊັຍເໜືອບາບ ແລະຍັງຍອມຮັບເອົາບາບໂທດແທນມະນຸດ ພຣະອົງສະເດັດມາບັງເກີດໃນໂລກນີ້ ເພື່ອນຳເອົາຄົນບາບໃນໂລກນີ້ໃຫ້ເປັນຄົນດີກັບພຣະເຈົ້າ ພຣະເຢຊູຍອມເສັຽສະລະທຸກສິ່ງເພື່ອໃຫ້ຣາຊອານາຈັກ ແລະຄວາມຊອບທັມຂອງພຣະເຈົ້າສຳເຣັດໃນໂລກນີ້ ແລະເພື່ອໃຫ້ສຳເຣັດໃນຕົວເຮົາດ້ວຍ ພຣະອົງຊົງຍອມເຊື່ອຟັງຈົນເຖິງຄວາມຕາຍ **"ເມື່ອຊົງປາກົດພຣະອົງໃນສະພາບມະນຸດແລ້ວ ພຣະອົງກໍຊົງຖ່ອມພຣະອົງລົງ ຍອມເຊື່ອຟັງຈົນເຖິງຄວາມມໍຣະນາທີ່ໄມ້ກາງແຂນ"** (ຟປ 2:8) ສຳລັບເຮົາແລ້ວ ເຮົາທີ່ເປັນຄຣິສຕຽນຈະຍ່າງຕາມພຣະເຢຊູໄດ້ແນວໃດ ເຮົາຈະສາມາດເສັຽສະລະໄດ້ເຖິງປານນັ້ນບໍ່ ພຣະທັມລູກາ 9:23-24 ກ່າວວ່າ **"ຖ້າຜູ້ໃດຢາກຕາມເຮົາມາ ໃຫ້ຜູ້ນັ້ນຕັດສິດຂອງຕົນເສັຽແລະຮັບແບກໄມ້ກາງແຂນຂອງຕົນທຸກວັນ ແລ້ວຕິດຕາມເຮົາມາ ເພາະວ່າຜູ້ໃດຢາກຊ່ອຍຊີວິດຂອງຕົນໃຫ້ພົ້ນ ຜູ້ນັ້ນຈະເສັຍຊີວິດ ແຕ່ຜູ້ໃດຈະເສັຽຊີວິດຂອງຕົນເພາະເຫັນແກ່ເຮົາ ຜູ້ນັ້ນກໍຈະມີຊີວິດພົ້ນ"** (ລູກາ 9:23-24)

ການຕິດຕາມພຣະອົງດ້ວຍວິທີນີ້ ລາງເທື່ອເຮົາອາດຈະຄິດວ່າແມ່ນທາງທີ່ຍາກ ແຕ່ແທ້ຈິງແລ້ວພຣະຄຣິສຊົງຮູ້ແລະເຂົ້າໃຈເຮົາ ພຣະອົງເຂົ້າໃຈເຖິງຄວາມທຸກຍາກທີ່ມະນຸດຕ້ອງຕໍ່ສູ້ຢູ່ທຸກມື້ຍ້ອນຄວາມຜິດບາບຂອງມະນຸດເອງ ເຖິງປານນັ້ນ ພຣະອົງຊົງເອີ້ນໃຫ້ເຮົານຳເອົາຄວາມທຸກຍາກຂອງເຮົາມາອີງໃສ່ພຣະຄຣິສ ພຣະອົງຕັດວ່າ **"ບັນດາຜູ້ທີ່ເຮັດການໜັກໜ່ວງແລະແບກພາຣະໜັກ ຈົ່ງມາຫາເຮົາແລະເຮົາຈະໃຫ້ພວກທ່ານໄດ້ຮັບຄວາມເຊົາເມື່ອຍ ຈົ່ງເອົາແອກຂອງເຮົາແບກໄວ້ແລ້ວຮຽນຮູ້ຈາກເຮົາ**

**ເພາະວ່າເຮົາເປັນຜູ້ໃຈອ່ອນສຸພາບແລະຖ່ອມລົງ ແລ້ວຈິດໃຈຂອງທ່ານຈະໄດ້ພົບຄວາມເຊົາເມື່ອຍ ດ້ວຍວ່າແອກຂອງເຮົາກໍພໍເໝາະແລະພາຣະຂອງເຮົາກໍເບົາ"** (ມັດທາຍ 11:28-30) ທີ່ວ່າແອກຂອງພຣະອົງກໍເບົາຍ້ອນວ່າພຣະອົງຊົງຮ່ວມແບກແອກນຳເຮົາ ພຣະອົງໄດ້ເປັນແບບຢ່າງແກ່ເຮົາ ແລະຕ້ອງການໃຫ້ເຮົາມີຄວາມເຊື່ອ ແລະໄວ້ວາງໃຈກັບພຣະອົງຢ່າງແນ່ນອນເພາະວ່າ ເມື່ອພຣະອົງໄດ້ລົງທີ່ນສະເດັດມາໃນໂລກນີ້ດ້ວຍພຣະອົງເອງແລ້ວ ພຣະອົງບໍ່ໄດ້ມາລ້າ ໆ ຫລືມາຢ່າງບໍ່ມີຈຸດໝາຍ ແຕ່ວ່າພຣະອົງຊົງມີຈຸດໝາຍ ແລະຈຸດມຸ້ງໝາຍທີ່ສຳຄັນນັ້ນ ແມ່ນຊ່ວຍເຮົາໃຫ້ລອດພົ້ນ ບໍ່ພຽງແຕ່ຄວາມລອດພົ້ນທາງຝ່າຍຈິດວິນຍານເທົ່ານັ້ນ ແຕ່ຮວມເຖິງການທີ່ພຣະອົງຈະຊ່ວຍເຮົາທຸກມື້ໃຫ້ຈະເຣີນແລະໃຫຍ່ຂຶ້ນ ໃຫ້ເຂົ້າໃຈພຣະອົງຫລາຍຂຶ້ນວ່າ **ພຣະອົງແມ່ນໃຜ** ແລະພຣະອົງມີພຣະປະສົງທີ່ດີຕໍ່ເຮົາ ຮັກເຮົາ ຕ້ອງການນຳພາເຮົາ ຕ້ອງການຊ່ວຍເຫລືອເຮົາຕລອດເວລາ ພຽງແຕ່ເຮົາເຊື່ອແລະໝັ້ນໃຈໃນຄວາມເປັນພຣະເຈົ້າຂອງພຣະອົງ ມີຄວາມຮັກ ສັດຊື່ ແລະໄວ້ວາງໃຈໃນພຣະອົງ ພຽງເທົ່ານັ້ນແຫລະທີ່ພຣະອົງປາດຖນາຕ້ອງການໃຫ້ເຮົາຢ່າງນຳພຣະອົງ ແລະພຣະອົງຈະຮ່ວມຄຽງບ່າຄຽງໄຫລ່ແບກແອກນຳກັນໄປກັບເຮົາ

ດັ່ງນັ້ນຫົນທາງທີ່ຈະຮູ້ຈັກວ່າພຣະອົງແມ່ນໃຜກໍບໍ່ຍາກ ເພາະວ່າພຣະອົງເອງຈະເປັນຜູ້ບອກສອນເຮົາ ຊຶ່ງມີຫລັກຖານປາກົດໃຫ້ເຫັນວ່າຄຣິສຕຽນທັງຫລາຍຕ່າງມີປະສົບການອັນດຽວກັນທີ່ສາມາດກ່າວເຖິງພຣະເຢຊູໄດ້ກົງກັນ ເຮັດໃຫ້ເຮົາມີພລັງເຂັ້ມແຂງໃນການດຳເນີນຊີວິດຄຣິສຕຽນຢ່າງມີຄວາມໝັ້ນໃຈ ຄວາມເຂົ້າໃຈນີ້ເຮັດໃຫ້ເຮົາເປັນສຸກ **"ເພາະວ່າບໍ່ແມ່ນມະນຸດທີ່ໄດ້ສະແດງຄຳນີ້ແກ່ທ່ານ ແຕ່ແມ່ນພຣະບິດາຂອງເຮົາຜູ້ຊົງສະຖິດໃນສວັນຊົງໃຫ້ຊາບ"** (ມທ 16:17) ພຣະເຈົ້າໄດ້ປະທານຄຳສັນຍາຫລາຍ ໆ ຕອນວ່າ ພຣະອົງຈະຊ່ວຍສິ່ງທີ່ເຮົາບໍ່ຮູ້ບໍ່ເຂົ້າໃຈໃຫ້ໄດ້ຮູ້ແລະເຂົ້າໃຈ **"ແຕ່ກ່ອນອື່ນ ທ່ານທັງຫລາຍຈົ່ງສແວງຫາຣາຊອານາຈັກຂອງພຣະເຈົ້າ ແລະຄວາມຊອບທັມຂອງພຣະອົງ ແລະພຣະອົງຈະຊົງເພີ້ມເຕີມສິ່ງທັງປວງເຫລົ່ານີ້ໃຫ້ແກ່ທ່ານ"** (ມທ 6:33) ພຣະເຈົ້າໄດ້ປະທານສິ່ງດີຫລາຍ ໆ ແນວແກ່ຊີວິດເຮົາ ແຕ່ວ່າພຣະອົງກໍຮຽກຮ້ອງໃຫ້ເຮົາຕອບສນອງພຣະອົງ ຄືວ່າພຣະອົງຕ້ອງການໃຫ້ເຮົາເຊື່ອຟັງພຣະອົງ ດັ່ງນັ້ນເຮົາຈຶ່ງຕອບສນອງພຣະຄຸນຂອງພຣະອົງໂດຍການເຊື່ອຟັງ ແລະຂອບພຣະຄຸນພຣະອົງສເມີໂດຍລະນຶກເຖິງການເສັຽສະລະຊີວິດຂອງພຣະອົງເພື່ອເຮົາ ອີກທັງສິ່ງດີ ໆ ທີ່ພຣະອົງໄດ້ປະທານແກ່ເຮົາ

ພຣະອົງໄດ້ປະທານຄຸນຄ່າຊີວິດທີ່ເກີນກວ່າເຮົາຈະຄາດຄິດ ແລະທຸກສິ່ງທີ່ພຣະອົງໃຫ້ແກ່ເຮົາຢ່າງບໍ່ມີເງື່ອນໄຂເພື່ອຊ່ວຍໃຫ້ເຮົາຜູ້ເປັນຄຣິສຕຽນມີຊີວິດຝ່າຍວິນຍານທີ່ໃຫຍ່ໃນພຣະອົງ ພຣະເຢຊູໄດ້ຮຽກໃຫ້ສາວົກຄິດພິຈາຣະນາເຖິງຄວາມຕັ້ງໃຈຂອງເຂົາທີ່ມີຕໍ່ພຣະອົງແລະຕໍ່ຄຣິສຈັກຂອງພຣະອົງ ວ່າເຮົາມີຊີວິດຢູ່ເພື່ອຜູ້ໃດ ໃຜແມ່ນຜູ້ທີ່ສຳຄັນທີ່ສຸດ ແລະເປັນເອກໃນຊີວິດຂອງທ່ານ ຄຣິສຕຽນຕ້ອງຮູ້ຈັກຍົກຍໍພຣະຄຣິສໃຫ້ເປັນເອກໃນຊີວິດ ໃນການໃຊ້ຊີວິດແລະກະທຳທຸກແນວໃຫ້ພຣະຄຣິສເປັນສູນກາງແຫ່ງຈິດໃຈຂອງເຮົາ ຮູ້ຈັກກ່າວຄຳສັລເສີນພຣະເຈົ້າ ຈະດ້ວຍປາກກໍດີ ຫລືດ້ວຍຈິງໃຈແທ້ ໆ ໃນຈິດໃຈກໍ

ດີ ພຣະເຈົ້າຊົງພໍພຣະທັຍ ແລະນີ້ກໍແມ່ນແບບຢ່າງອີກແນວນຶ່ງທີ່ເຮົາດຳເນີນຊີວິດຄຣິສຕຽນຕາມພຣະຄຣິສ ພຣະອົງຕັດວ່າ **"ຝ່າຍເຮົາ ເມື່ອຖືກຍົກຂຶ້ນຈາກແຜ່ນດິນໂລກແລ້ວ ເຮົາກໍຈະຊັກນຳຄົນທັງຫລາຍມາຫາເຮົາ"** (ຢຮ 12:32) ຄຣິສຕຽນສົມຄວນຍົກພຣະເຢຊູໃຫ້ຊາວໂລກໄດ້ເຫັນ ໂດຍການດຳເນີນຊີວິດທີ່ຖືກຕ້ອງທຸກ ໆ ແນວ ບໍ່ວ່າຈະເປັນການແຕ່ງຕົວທີ່ງາມໜ້າເບິ່ງ ການວາງຕົວທີ່ໜ້າສັນເສີນ ແລະຖວາຍກຽດແດ່ພຣະອົງ ຕັ້ງແຕ່ການເວົ້າຈາ ທ່າທາງ ການໃຊ້ເງິນ ການນຶກຄິດເຖິງຜູ້ອື່ນ ການມີສົມມາຄາຣາວະ ການອ່ອນສຸພາບ ການຍ່າງນຳພຣະຄຣິສທຸກມື້ແນວນີ້ ຈະຊ່ວຍເຮົາໃນການກໍ່ຮ່າງສ້າງຮູບແບບຂອງການເປັນຄຣິສຕຽນຝ່າຍວິນຍານ (Christian Spiritual Formation) ການຮູ້ຈັກໃຊ້ຊີວິດຄຣິສຕຽນ ແລະການໃຫຍ່ຂຶ້ນໃນການເປັນສາວົກແທ້ ທີ່ຜູ້ຄົນທັງຫລາຍໄດ້ແລເຫັນ

ໃຫ້ເຮົາເລົ່າປາກເປົ່າພຣະທັມມັດທາຍ 6:33 ແລະໃຫ້ເຮົາສແວງຫາພຣະອົງທຸກມື້ ໃຫ້ພຣະອົງເປັນເອກໃນຊີວິດໃນທຸກສິ່ງທຸກຢ່າງທີ່ທ່ານເຮັດ ທ່ານຈະສາມາດພົບກັບປະສົບການທີ່ເກີນຄວາມຄາດຄິດ ທ່ານຈະພົບກັບການນຳພາຂອງພຣະເຈົ້າ ຄວາມຮັກແລະຄວາມອົບອຸ່ນທີ່ພຣະອົງສັນຍາໄວ້ຈະຢູ່ນຳທ່ານທຸກມື້ຕາມທີ່ທ່ານຕ້ອງການ

## ນຶ່ງ. ພຣະເຢຊູຄຣິສແມ່ນຜູ້ໃດ

ພຣະເຢຊູແມ່ນພຣະບຸດຂອງພຣະເຈົ້າ ແລະດ້ວຍຄວາມຮັກຢ່າງຫລວງຫລາຍທີ່ພຣະເຈົ້າມີຕໍ່ມະນຸດ ແລະຕ້ອງການໃຫ້ມະນຸດໄດ້ເຫັນໄດ້ເຂົ້າໃຈໃນພຣະເຈົ້າ ມີສັມພັນທະພາບຢ່າງຖືກຕ້ອງກັບພຣະອົງ ເຖິງວ່າພຣະເຈົ້າໄດ້ສ້າງຈັກກະວານທັງຟ້າສວັນແລະແຜ່ນດິນໂລກ ສິ່ງມີຊີວິດທັງຫລາຍຮວມເຖິງມະນຸດທີ່ພຣະອົງຊົງຮັກແລະເປັນຫ່ວງ ແຕ່ສິ່ງສຳຄັນແມ່ນການກູ້ມະນຸດໃຫ້ພົ້ນຈາກຂຸມນໍຣົກ ດັ່ງນັ້ນ **ພຣະອົງຈຶ່ງໄດ້ມາຊົງບັງເກີດນຳຍິງພົມມະຈາຣີນາງມາຣີອາ ໂດຍຣິດເດດຂອງພຣະວິນຍານບໍຣິສຸດ ຊົງຈະເຣີນວັຍໃຫຍ່ຂຶ້ນຕໍ່ໜ້າຄົນທັງປວງ ເພື່ອເປີດເຜີຍນ້ຳພຣະທັຍຂອງພຣະເຈົ້າ ພຣະອົງຊົງມີຊີວິດທີ່ເຊື່ອຟັງພຣະເຈົ້າ ແລະບໍ່ເຮັດບາບ ພຣະອົງມາບັງເກີດໃນໂລກນີ້ ເພື່ອໃຫ້ແຜນການຊ່ວຍມະນຸດໃຫ້ພົ້ນ ແລະໃຫ້ມະນຸດຫັນກັບມາຄືນດີຫາພຣະເຈົ້າໃຫ້ສຳເຣັດ ໂດຍການຍອມເສັຽສະລະພຣະຊົນຊີບຂອງພຣະອົງຍອມຕາຍໄຖ່ຄວາມຜິດບາບຂອງມະນຸດທັງມວລ ແຕ່ວ່າໃນມື້ຖ້ວນສາມພຣະອົງຊົງເປັນຄືນຈາກຕາຍ ພຣະອົງໄດ້ປາກົດຕົວຕໍ່ອັຄສາວົກ ຕໍ່ຜູ້ເຊື່ອ ແລະຕໍ່ມວລຊົນເຖິງການເປັນຄືນຈາກຕາຍ ພຣະອົງໄດ້ຢູ່ນຳເຂົາຮອດ 40 ມື້ ແລະບອກເຖິງຄວາມມູ້ງໝາຍແທ້ຂອງພຣະເຈົ້າ ໄດ້ມີຄຳສັ່ງສຸດທ້າຍ ແມ່ນ "ພຣະມະຫາບັນຊາ" ໃຫ້ຜູ້ເຊື່ອປະຕິບັດຣາຊກິຈຂອງພຣະອົງຕໍ່ໄປ ເພື່ອສ້າງແຜ່ນດິນແລະຣາຊອານາຈັກຂອງພຣະເຈົ້າ ພຣະອົງໄດ້ມີສັນຍາທີ່ຈະປະທານພຣະຜູ້ຊ່ວຍ ແມ່ນພຣະວິນຍານບໍຣິສຸດຂອງພຣະອົງທີ່ຈະສະຖິດຢູ່ນຳຜູ້ເຊື່ອເພື່ອຮັກສາຜູ້ເຊື່ອທຸກຄົນ ພຣະອົງຊົງເປັນພຣະເຈົ້າຜູ້ຊົງພຣະຊົນຢູ່ ຫລັງຈາກເປັນຄືນຈາກຕາຍແລ້ວ ພຣະເຢຊູໄດ້ສະເດັດເທິງສວັນ ແລະຊົງປະທັບຢູ່ກ້ານຂວາພຣະຫັດຂອງພຣະເຈົ້າ ເປັນຜູ້ທີ່ສັມພັນເຊື່ອມຕໍ່ຣະຫວ່າງມະນຸດກັບພຣະເຈົ້າ ພຣະອົງຊົງສັນຍາແນ່ນອນວ່າ ພຣະອົງຈະສະເດັດກັບ**

ຄືນມາດ້ວຍຣິດທານຸພາບແລະດ້ວຍຣັສມີອັນເຮືອງຮຸ່ງ ເພື່ອມາຮັບເອົາຜູ້ເຊື່ອໃນມື້ສຸດທ້າຍ ແລະເພື່ອພິພາກສາໂລກມະນຸດທີ່ເຮັດບາບແລະເປັນກະບົດຕໍ່ພຣະເຈົ້າ

**ສອງ. ພຣະລັກສະນະນໍ້າພຣະທັຍຂອງພຣະເຢຊູຄຣິສ**

"ທ່ານຈົ່ງມີນໍ້າໃຈຕໍ່ກັນເໝືອນຢ່າງທີ່ມີໃນພຣະເຢຊູຄຣິສ ຜູ້ຊົງສະພາບຂອງພຣະເຈົ້າ ແຕ່ບໍ່ໄດ້ຊົງ ຖືວ່າການເທົ່າທຽມກັບພຣະເຈົ້ານັ້ນເປັນສິ່ງທີ່ຈະຕ້ອງຢຶດຖື ແຕ່ໄດ້ກັບຊົງສະລະ ແລະຊົງຮັບສະພາບຂ້າທາດຊົງຖືກໍາເນີດເປັນມະນຸດ ແລະເມື່ອຊົງປາກົດພຣະອົງໃນສະພາບມະນຸດແລ້ວ ພຣະອົງກໍຊົງຖ່ອມພຣະອົງລົງຍອມເຊື່ອຟັງຈົນເຖິງຄວາມມໍລະນາ ກະທັ່ງຄວາມມໍລະນາທີ່ກາງແຂນ ເຫດສະນັ້ນພຣະເຈົ້າຈຶ່ງໄດ້ຊົງຍົກພຣະອົງຂຶ້ນຢ່າງສູງ ແລະໄດ້ໂຜດປະທານພຣະນາມເໜືອນາມທັງປວງໃຫ້ແກ່ພຣະອົງ ເພື່ອເພາະພຣະນາມນັ້ນ ທຸກເຂົ່າໃນສວັນ ທີ່ແຜ່ນດິນໂລກ ໃຕ້ພື້ນແຜ່ນດິນໂລກ ຈະຄຸກເຂົ່າລົງກາບພຣະເຢຊູ ແລະເພື່ອທຸກລີ້ນຈະຍອມຮັບວ່າພຣະເຢຊູຄຣິສຊົງເປັນອົງພຣະຜູ້ເປັນເຈົ້າ ອັນເປັນການຖວາຍພຣະກຽດແດ່ພຣະບິດາເຈົ້າ" (ຟປ 2:1-5)

ເຖິງແມ່ນວ່າພຣະເຢຊູຄຣິສຊົງມີຖານະເປັນພຣະບຸດຂອງພຣະເຈົ້າກໍຕາມ ແຕ່ພຣະອົງກໍໄດ້ຊົງຍອມຮັບສະພາບເປັນມະນຸດ ຊຶ່ງສະແດງເຖິງການຖ່ອມພຣະທັຍຢ່າງຍິ່ງ ເພາະການທີ່ພຣະອົງໄດ້ຊົງສະລະຖານະການເປັນຈອມກະສັດຈາກສວັນ ຊຶ່ງເຕັມໄດ້ດ້ວຍຄວາມຊື່ນຊົມຍິນດີ ແລ້ວສະເດັດລົງມາຢູ່ທ່າມກາງມະນຸດຊຶ່ງລົ້ມເຫລວໃນຄວາມຜິດບາບນັ້ນ ພຣະອົງໄດ້ຊົງບັງເກີດເປັນຄວາມຍາກຈົນ ທີ່ມີອາຊີບເປັນຊ່າງໄມ້ຢູ່ນໍາສາມັນຊົນ ຊຶ່ງເປັນການລົດຖານະຖ່ອມລົງຢ່າງຫລວງຫລາຍ ແລະຕໍ່ມາພຣະເຢຊູຄຣິສໄດ້ຊົງລຸດຖານະຂອງພຣະອົງອີກເທື່ອໜຶ່ງ ດ້ວຍການທີ່ຍອມສິ້ນພຣະຊົນເທິງໄມ້ກາງແຂນ ໃນຖານະທີ່ເປັນນັກໂທດປະຫານທີ່ບໍ່ມີຄວາມຜິດ

ພຣະເຢຊູ

↓

ພຣະບຸດຂອງພຣະເຈົ້າ

↓

ຊົງບັງເກີດເປັນມະນຸດ

↓

ຊົງຍອມເປັນຄົນຍາກຈົນ

↓

ຊົງຍອມສິ້ນພຣະຊົນເທິງໄມ້ກາງແຂນ

ພຣະເຢຊູຄຣິສໄດ້ຊົງຖ່ອມພຣະທັຍລົງຈົນເຖິງທີ່ສຸດ ຊຶ່ງພຣະທັຍຂອງພຣະອົງນີ້ສາມາດທີ່ຈະສະແດງຜ່ານທາງຊີວິດຂອງເຮົາໄດ້ ຖ້າເຮົາຍອມເປັນອັນໜຶ່ງອັນດຽວກັນກັບພຣະອົງ

ສາມ. ພຣະຄຣິສທັມຄັມພີຫຍັ່ງຍືນເຖິງຖານະຂອງພຣະເຢຊູຄຣິສ ໄວ້ດັ່ງນີ້

1. ພຣະເຢຊູຊົງດຳຣົງຢູ່ກ່ອນສ້າງຟ້າສວັນແລະມະນຸດ (ປຖກ 1:26) ແລ້ວພຣະເຈົ້າຕັດວ່າ **"ໃຫ້ເຮົາສ້າງມະນຸດຕາມຮູບແບບຢ່າງຂອງເຮົາ"** (ຄຳໃນພາສາເຮັບເຣີໃຊ້ຄຳສັພນາມຂອງພຣະເຈົ້າວ່າ **"ເຮົາ"** ເປັນພະຫູພົດ (Plural) ຊຶ່ງສະແດງເຖິງພຣະບິດາ ພຣະບຸດແລະພຣະວິນຍານບໍຣິສຸດຊົງເປັນຢູ່ຮ່ວມກັນໃນການສ້າງຟ້າສວັນແລະມະນຸດ)

2. ທຸກສິ່ງເກີດມາຈາກພຣະເຢຊູຄຣິສ (ຢຮ 1:1, 3-4) **"ເມື່ອຕົ້ນເດີມນັ້ນພຣະວັຈນະຊົງເປັນຢູ່ແລ້ວ ພຣະວັຈນະນັ້ນຊົງສະຖິດຢູ່ກັບພຣະເຈົ້າ ພຣະວັຈນະນັ້ນແຫລະ ຊົງເປັນພຣະເຈົ້າ . . . ພຣະເຈົ້າຊົງສ້າງສິ່ງທັງປວງຂຶ້ນມາໂດຍພຣະວັຈນະ ໃນບັນດາສິ່ງທີ່ເປັນມານັ້ນ ບໍ່ມີຈັກສິ່ງທີ່ເປັນມາໂດຍນອກຈາກພຣະວັຈນະ ພຣະວັຈນະນັ້ນຊົງມີຊີວິດຢູ່ໃນພຣະອົງເອງ ແລະຊີວິດນັ້ນເປັນຄວາມສວ່າງຂອງມະນຸສໂລກ"**

3. ພຣະເຢຊູຊົງດຳຣົງຢູ່ຕັ້ງແຕ່ກ່ອນສມັຍອັບຣາຮາມ (ປຖກ 18:1-2) **"ພຣະຜູ້ເປັນເຈົ້າໄດ້ປາກົດແກ່ອັບຣາຮາມທີ່ຕົ້ນໄມ້ສັກສິດຂອງມັມເຣ ຂະນະທີ່ ທ່ານນັ່ງຢູ່ທີ່ປະຕູເຕັນເວລາແດດຮ້ອນ ເມື່ອອັບຣາຮາມເງີຍໜ້າຂຶ້ນ ກໍເຫັນຊາຍສາມຄົນຢືນຢູ່ທາງໜ້າທ່ານ . . ."** ພຣະເຢຊູແມ່ນຊາຍຄົນນຶ່ງໃນສາມນັ້ນ

4. ພຣະເຢຊູຄຣິສຈະບັງເກີດຈາກຍິງພົມມະຈາຣີ (ອສຢ 7:14) ພຣະຜູ້ເປັນເຈົ້າຈຶ່ງຈະຊົງສະແດງໝາຍສຳຄັນໃຫ້ເຈົ້າເຫັນດັ່ງນີ້ ຄືຍິງສາວຜູ້ນຶ່ງຈະຖືພາ ແລະອອກບຸດມາເປັນຊາຍນາງຈະຕັ້ງຊື່ໃຫ້ບຸດນີ້ວ່າ **"ເອມານູເອນ"** ແມ່ນການຂອງພຣະເຈົ້າ

5. ທູດສວັນຢັ່ງຢືນວ່າພຣະເຢຊູເປັນພຣະບຸດຂອງພຣະເຈົ້າ (ລກ 1:35) ທູດສວັນໄດ້ຕອບນາງວ່າ **"ພຣະວິນຍານບໍຣິສຸດຈະສະເດັດລົງມາເຖິງເຈົ້າ ແລະຣິດເດດຂອງຜູ້ສູງສຸດຈະປົກຄຸມເຈົ້າໄວ້ ເຫດສັນນີ້ບຸດທີ່ຈະເກີດມານັ້ນຈະໄດ້ເອີ້ນວ່າບໍຣິສຸດ ຄື ພຣະບຸດຂອງພຣະເຈົ້າ"**

6. ພຣະເຢຊູຄຣິສເປັນບຸດທີ່ຮັກຂອງພຣະເຈົ້າ (ມທ 3:17) **"ເບິ່ງແມ໋ ມີພຣະສຸຣະສຽງຈາກຟ້າສວັນຊົງກ່າວວ່າ, "ທ່ານຜູ້ນີ້ເປັນບຸດທີ່ຮັກຂອງເຮົາ ເຮົາຊອບໃຈຫລາຍໃນທ່ານ"**

7. ມານຍອມຮັບວ່າພຣະເຢຊູເປັນພຣະບຸດຂອງພຣະເຈົ້າ (ມທ 8:28-29) **". . . ມີສອງຄົນທີ່ມີຜີສິງຢູ່ . . . ເຂົາໂຫດຮ້າຍ . . . ເບິ່ງແມ໋ ເຂົາຮ້ອງໃສ່ພຣະອົງທູນວ່າ "ໂອ ບຸດພຣະເຈົ້າເອີຍ ທ່ານມາຫຍຸ້ງກ່ຽວກັບເຮົາດ້ວຍເຫດໃດ ຈະມາທໍຣະມານເຮົາກ່ອນເວລາກຳນົດຫລື"**

8. ພຣະເຢຊູຄຣິສຮັບມອບອຳນາດທຸກຢ່າງຈາກພຣະບິດາ (ມທ 11:27) **"ພຣະບິດາຂອງເຮົາໄດ້ຊົງມອບສິ່ງສາຣະພັດໃຫ້ແກ່ເຮົາ ແລະບໍ່ມີຜູ້ໃດຮູ້ຈັກພຣະບຸດນອກຈາກພຣະບິດາ ແລະບໍ່ມີຜູ້ໃດຮູ້ຈັກພຣະບິດານອກຈາກພຣະບຸດ ກັບຜູ້ທີ່ພຣະບຸດປະສົງຈະສະແດງໃຫ້ຮູ້"**

9. ພຣະເຈົ້າຊົງຢັ້ງຢືນວ່າພຣະເຢຊູເປັນບຸດຂອງພຣະອົງ (ມທ 17:5) ເບິ່ງແມ໋ ມີພຣະສຸຣະສຽງອອກມາຈາກເມກນັ້ນວ່າ "ທ່ານຜູ້ນີ້ແຫລະ ເປັນບຸດທີ່ຮັກຂອງເຮົາ ຊຶ່ງເຮົາຊອບໃຈຫລາຍ ພວກເຈົ້າຈົ່ງເຊື່ອຟັງທ່ານ"

10. ຜູ້ທີ່ວາງໃຈໃນພຣະເຢຊູກໍວາງໃຈໃນພຣະເຈົ້າດ້ວຍ (ຢຮ 12:44) ພຣະເຢຊູຊົງເປັ່ງສຽງກ່າວວ່າ "ຜູ້ທີ່ເຊື່ອໃນເຮົາກໍບໍ່ແມ່ນເຊື່ອໃນເຮົາ ແຕ່ເຊື່ອໃນພຣະອົງຜູ້ຊົງໃຊ້ເຮົາມາ"

11. ພຣະເຢຊູຊົງເປັນຄືນຈາກຄວາມຕາຍແລະໄປສູ່ພຣະບິດາ (ຢຮ 20:17, 27) ບອກເຂົາວ່າ "ເຮົາຈະຂຶ້ນເມືອຫາພຣະບິດາຂອງເຮົາ . . . ຈົ່ງເດ່ນິ້ວມືຂອງທ່ານມາລູບເບິ່ງຝ່າມືຂອງເຮົາຈົ່ງເດ່ມືຂອງທ່ານມາໃສ່ຂ້າງຂອງເຮົາ ຢ່າຂາດຄວາມເຊື່ອແຕ່ຈົ່ງເຊື່ອ"

12. ພຣະເຢຊູຄຣິສທຳໃຫ້ໂລກນີ້ຄືນດີກັບພຣະເຈົ້າ (2 ກທ 5:19-20) "ຄືພຣະເຈົ້າຜູ້ຊົງສະຖິດຢູ່ໃນອົງພຣະຄຣິດ ໄດ້ຊົງກະທຳໃຫ້ມະນຸດຄືນດີກັນກັບພຣະອົງໂດຍພຣະຄຣິສ . . . ເຫດສັນນັ້ນເຮົາຈຶ່ງເປັນທູດຂອງພຣະຄຣິສ"

13. ພຣະເຢຊູຄຣິສສະເດັດ (2 ກທ 5:21) "ເພາະວ່າພຣະເຈົ້າໄດ້ຊົງກະທຳໃຫ້ພຣະຄຣິດ ຜູ້ຊົງບໍ່ມີຄວາມຜິດບາບນັ້ນ ໄດ້ເຂົ້າສ່ວນກັບຄວາມຜິດບາບຂອງເຮົາ ເພື່ອພວກເຮົາຈະໄດ້ສ່ວນໃນຄວາມຊອບທັມຂອງພຣະເຈົ້າໂດຍທາງພຣະອົງ"

14. ພຣະເຢຊູຄຣິສມີອຳນາດເໜືອທຸກສິ່ງ (ອຟ 1:21) "ສູງກວ່າບັນດາຜູ້ປົກຄອງ ຜູ້ມີອຳນາດຜູ້ມີຣິດເດດ ຜູ້ມີອານຸພາບ ແລະເຫນືອກວ່ານາມຊື່ທັງປວງທີ່ເຂົາເອີ່ຍຂຶ້ນ ບໍ່ໃຊ່ໃນສມັຍນີ້ເທົ່ານັ້ນ ແຕ່ວ່າໃນສມັຍທີ່ຈະມາເຖິງດ້ວຍ"

15. ພຣະເຢຊູຄຣິສເປັນຜູ້ກາງແຕ່ຜູ້ດຽວຣະຫວ່າງມະນຸດກັບພຣະເຈົ້າ (1 ຕທ 2:5-6) "ດ້ວຍເຫດວ່າມີພຣະເຈົ້າອົງດຽວ ແລະມີຜູ້ກາງແຕ່ຜູ້ດຽວລະຫວ່າງພຣະເຈົ້າກັບມະນຸດ ຄືພຣະເຢຊູຄຣິສຜູ້ຊົງສະພາບເປັນມະນຸດຜູ້ໄດ້ຊົງສລະພຣະອົງເອງເປັນຄ່າໄຖ່ສຳລັບຄົນທັງປວງ"

16. ພຣະເຢຊູຄຣິສກັບພຣະເຈົ້າເປັນອັນນຶ່ງອັນດຽວກັນ (ຮບ 1:3) "ພຣະບຸດນັ້ນເປັນແສງສະທ້ອນພຣະສະງ່າຣາສີຂອງພຣະເຈົ້າ ແລະມີສະພາບເປັນແບບພິມດຽວກັນກັບພຣະອົງ"

17. ພຣະເຢຊູກັບພຣະບິດາເປັນອັນນຶ່ງອັນດຽວກັນ (ຢຮ 10:30) "ເຮົາກັບພຣະບິດາກໍເປັນອັນນຶ່ງອັນດຽວກັນ"

ອ່ານ 3/8/07

# ບົດທີ 3

# ຍ່າງນຳພຣະຄຣິສ
# ມີຊີວິດທີ່ຕິດແທກກັບພຣະວັຈນະຂອງພຣະເຈົ້າ

**"ຊາຍໜຸ່ມຈະຮັກສາທາງຂອງຕົນໃຫ້ບໍຣິສຸດໄດ້ຢ່າງໃດ ໂດຍຣະມັດຣະວັງຕາມພຣະວັຈນະຂອງພຣະອົງ" ເພງສັລເສີນ 119:9**

**"ຂ້າພຣະອົງໄດ້ສະສົມພຣະດຳຣັດຂອງພຣະອົງໄວ້ໃນໃຈຂອງຂ້າພຣະອົງ ເພື່ອຂ້າພຣະອົງຈະບໍ່ເຮັດບາບຕໍ່ພຣະອົງ" ເພງສັລເສີນ 119:11**

ເຮົາຈະຕ້ອງຍອມຮັບວ່າ ການໃຊ້ຊີວິດໃນໂລກທີ່ມີວິທຍາການກ້າວໜ້າ ຄວາມຮີບຮ້ອນແລະສັງຄົມທີ່ມີການແຂ່ງຂັນກັນ ການດຳເນີນຊີວິດໃນທຸກມື້ນີ້ແສນຍາກລຳບາກ ຕ້ອງຜະເຊີນກັບການທົດລອງຮອບຕົວເຮົາ ຊຶ່ງເປັນການຍາກທີ່ຈະຮັກສາຕົວໃຫ້ບໍຣິສຸດແລະຂັບຕາມພຣະດຳຣັດຂອງພຣະເຈົ້າ ແຕ່ວ່າມີຄຣິສຕຽນຈຳນານຫລາຍທີ່ສາມາດຜ່ານການທົດລອງ ແລະດຳເນີນຊີວິດຕິດຕາມພຣະເຈົ້າດ້ວຍການເຊື່ອຟັງພຣະວັຈນະຂອງພຣະອົງ ຊຶ່ງເປັນການຕຽມຕົວໄວ້ໃຫ້ພ້ອມແລະບໍ່ຍອມຕົກລົງໄປໃນຄວາມຜິດບາບ ແຕ່ມີໄຊໃນການດຳເນີນຊີວິດ ພ້ອມຈະຕ້ອນຮັບການສະເດັດມາຂອງພຣະເຢຊູຄຣິສໄດ້ ມີການຣະວັງຣະໄວໃນການປະພຶດຕາມທີ່ພຣະວັຈນະຂອງພຣະເຈົ້າ ພຣະທັມ 1 ເປໂຕ 5:8 ສອນວ່າ "ທ່ານທັງຫລາຍຈົ່ງຄອຍລະວັງຕົວແລະເຝົ້າຢູ່ ດ້ວຍວ່າສັດຕູຂອງພວກທ່ານຄືມານ ທ່ຽວວົນວຽນໄປມາເໝືອນໂຕສິງທີ່ແຜດສຽງຊອກຫາຄົນທີ່ມັນຈະກັດກິນໄດ້"

ຊີວິດຄຣິສຕຽນທີ່ລໍຖ້າພຣະຄຣິສນັ້ນ ຈຳເປັນຕ້ອງມີຊີວິດທີ່ໃຫຍ່ຂຶ້ນໃນພຣະອົງ ທັງນີ້ຕ້ອງອາສັຍພຣະວັຈນະຂອງພຣະເຈົ້າເປັນຄວາມສວ່າງດັ່ງໂຄມສ່ອງທາງ ເພາະວ່າພຣະວັຈນະຂອງພຣະອົງມີອຳນາດ ແລະຊ່ວຍເຮົາໃນການຕັດສິນໃຈທຸກມື້ ຖ້າຫາກເຮົາຍອມອຸທິດເວລາອ່ານພຣະວັຈນະຂອງພຣະອົງປະຈຳທຸກມື້ແລ້ວ ເຮົາຈະຄົ້ນພົບພຣະປະສົງແລະນ້ຳພຣະທັຍຂອງພຣະເຈົ້າ ເພື່ອຟູມຟັກຮູບແບບການດຳເນີນຊີວິດຂອງເຮົາໃຫ້ເໝາະສົມກັບການເປັນຄຣິສຕຽນ ແລະມີປະສົບການ ມີພລັງແລະເຫື່ອແຮງທີ່ຈະຮູ້ຈັກຍ່າງນຳພຣະອົງ ພຣະທັມເພງສັລເສີນ 119:105 **"ພຣະວັຈນະຂອງພຣະອົງເປັນໂຄມນຳທາງໃຫ້ຂ້າພະອົງ ແລະເປັນຄວາມສວ່າງແກ່ທາງເດີນໃຫ້ຂ້າພະອົງ"**

ຄຣິສຕຽນທີ່ເຕີບໂຕໃນການດຳເນີນຊີວິດຄຣິສຕຽນຢ່າງແທ້ຈິງ ຈະຍອມຮັບວ່າພຣະວັຈນະຂອງພຣະເຈົ້າແມ່ນສິ່ງຈຳເປັນ ທີ່ສາມາດປະທານຄວາມຊົມຊື່ນຍິນດີນຳທ່ານ ຍ້ອນດ້ວຍການເຊື່ອຟັງແລະປະຕິບັດຕາມຄຳສອນຂອງພຣະຄັມພີເປັນຂໍກະແຈໄຂໄປສູ່ຊີວິດທີ່ດີຮອບຄອບ ທ່ານເຢເຣມີຢາກ່າວວ່າ **"ພຣະອົງໄດ້ກ່າວແກ່ຂ້າພຣະອົງ ແລະຂ້າພະອົງກໍໄດ້ເຊື່ອຟັງພຣະອົງທຸກຖ້ອຍຄຳ ຂ້າແດ່ພຣະຜູ້ເປັນເຈົ້າອົງຊົງລິດອຳນາດຍິ່ງໃຫຍ່ ຂ້າພະອົງເປັນຂອງພຣະອົງ ສະນັ້ນແຫລະ ຖ້ອຍຄຳຂອງພຣະອົງຈຶ່ງເຮັດໃຫ້ຈິດໃຈຂອງຂ້າພະອົງ ເຕັມລົ້ນໄປດ້ວຍຄວາມຊົມຊື່ນຍິນດີແລະຄວາມສຸກໃຈ"** (ເຢເຣມີຢາ 15:16) ພຣະເຢຊູກໍຍັງໄດ້ໜູນນ້ຳໃຈວ່າ **"ຂໍ້ຄວາມເຫລົ່ານີ້ເຮົາໄດ້ບອກທ່ານທັງຫລາຍແລ້ວ ເພື່ອຄວາມຍິນດີຂອງເຮົາຈະຢູ່ໃນທ່ານ ແລະຄວາມຍິນດີຂອງທ່ານຈະຄົບບໍຣິບູນ"** (ໂຢຮັນ 15:11)

ຄຣິສຕຽນທີ່ຍ່າງນຳພຣະຄຣິສ ແມ່ນຜູ້ທີ່ຍອມຝຶກຝົນຕົວໂດຍຮັບປະສົບການໃນການເຊື່ອຟັງພຣະວັຈນະຂອງພຣະເຈົ້າ ສາມາດເປັນພຍານຢ່າງໜັກແໜ້ນວ່າ ເຂົາໄດ້ພົບກັບຄວາມສວ່າງຈາກພຣະວັຈນະຂອງພຣະອົງ ແລະຄວາມຕຶງຄຽດອຸກໃຈກໍຈາງຫາຍໄປ ແລະຊີວິດມີກຳລັງມີເຫື່ອແຮງທີ່ຈະຕໍ່ສູ້ກັບອຸປະສັກແລະການທົດລອງທີ່ຢູ່ອ້ອມຂ້າງ ທ່ານຈະພົບວ່າສັນຕິສຸກພາຍໃນທ່ານຈະມີເພີ້ມເຕີມຂຶ້ນຍ້ອນທ່ານເຊື່ອຟັງໄວ້ວາງໃຈໃນພຣະເຈົ້າແລະໃຫ້ພຣະອົງເຂົ້າມາເປັນຜູ້ນຳພາຄວາມຮູ້ສຶກພາຍໃນຊີວິດຂອງທ່ານ ເຮັດໃຫ້ທ່ານສາມາດເຂົ້າໃຈຈຸດມຸ້ງໝາຍແທ້ຂອງຊີວິດ ແລະສາມາດດຳເນີນຊີວິດຕາມແບບຄຣິສຕຽນທີ່ຖວາຍກຽດແດ່ພຣະຜູ້ເປັນເຈົ້າ ອັນນີ້ແຫລະທີ່ເຮົາເອີ້ນວ່າ ເຮົາເປັນຄຣິສຕຽນທີ່ດຳເນີນຊີວິດຝ່າຍວິນຍານຈິດຕາມແບບຢ່າງຂອງພຣະຄຣິສ (Chirsitan Spiritual Formation) ຊຶ່ງມີຄວາມໝາຍວ່າ ຊີວິດຄຣິສຕຽນຂອງເຮົາຖືກກໍ່ຮ່າງສ້າງຂຶ້ນບົນຮາກຖານຈາກພຣະວັຈນະຄຳສັ່ງສອນຂອງພຣະເຈົ້າ ຮູບແບບນີ້ຈະຖືກກໍ່ຂຶ້ນທີລະເລັກລະນ້ອຍໃນການດຳເນີນຊີວິດປະຈຳວັນຂອງເຮົາ ເປັນຊີວິດທີ່ມີພລັງອຳນາດທາງຝ່າຍວິນຍານຈິດທີ່ຖືກກໍ່ຮູບ ຫລືຖືກຟອມຕົວຂຶ້ນ (Formation) ເສີມສ້າງຈົນເຮົາມີລັກສະນະຄຣິສຕຽນທີ່ແທ້ຈິງ ແລະມີລັກສະນະທີ່ໃກ້ຄຽງຄ້າຍຄືກັບພຣະລັກສະນະຊີວິດຂອງພຣະເຢຊູຄຣິສຫລາຍຂຶ້ນທຸກມື້ ຄວາມສຳຄັນໃນຂໍ້ນີ້ຢູ່ທີ່ວ່າ ພຣະວັຈນະຂອງພຣະເຈົ້າໄດ້ມີອຳນາດບົດບາດຕໍ່ຕົວທ່ານຫລືບໍ່ ຄຣິສຕຽນທີ່ເຊື່ອຟັງແລະຍ່າງນຳພຣະຄຣິສ ໄດ້ພົບກັບການນຳພາຂອງພຣະເຈົ້າ ພົບກຳລັງໃຈ ແລະມີພລັງ ມີກຳລັງຕໍ່ສູ້ຊີວິດ ຕໍ່ສູ້ຄວາມບາບທີ່ຢູ່ອ້ອມຂ້າງໄດ້ ຍ້ອນເຂົາໄດ້ເຊື່ອຟັງພຣະວັຈນະຂອງພຣະອົງແທ້ຈິງ **"ຊາຍໜຸ່ມຮັກສາຊີວິດໃຫ້ບໍຣິສຸດໄດ້ຢ່າງໃດ? ກໍໂດຍເຊື່ອຟັງຂໍ້ຄຳສັ່ງຂອງພຣະເຈົ້າ... ຂ້າພະອົງຖືຮັກສາພຣະບັນຍັດໄວ້ຢູ່ໃນຈິດໃຈ ເພື່ອວ່າຈະບໍ່ໄດ້ເຮັດບາບຕໍ່ສູ້ພຣະເຈົ້າ"** (ພສສ 119:9) ພຣະວັຈນະຂອງພຣະເຈົ້າທີ່ແຈ້ງຢູ່ໃນໃຈເຮົາຈະນຳພາໃຫ້ເຮົາມີຊັຍເໜືອຄວາມຜິດບາບ ທັງຈະນຳພາຊີວິດຂອງເຮົາໃຫ້ເປັນທີ່ຊອບພຣະທັຍພຣະເຈົ້າ ແລະເປັນແບບຢ່າງຕໍ່ຜູ້ທີ່ຢູ່ອ້ອມຂ້າງເຮົາ ຊຶ່ງເປັນພຍານສຳຄັນແກ່ຄົນທັງຫລາຍທີ່ເຂົາຈະໄດ້ເຫັນພຣະເຈົ້າໂດຍຜ່ານທາງເຮົາ

ທ່ານຄວນຈົດຈຳໄວ້ວ່າ ເຄື່ອງມືສຳຄັນທີ່ສຸດໃນການກໍ່ຮູບແບບຊີວິດຄຣິສຕຽນແມ່ນພຣະຄຣິສທັມຄັມພີ

(ຢຮ 5:39, 2ຕທ 3:15-(17

- ❖ ພຣະຄຣິສທັມຄັມພີເປັນການເປີດເຜີຍນ້ຳພຣະທັຍຂອງພຣະເຈົ້າ
- ❖ ພຣະຄຣິສທັມຄັມພີເປັນຄວາມຈິງທີ່ດຳລົງຢູ່ຕລອດໄປເປັນນິດ
- ❖ ພຣະຄຣິສທັມຄັມພີຊົງສັກສິດແລະມີຣິດອຳນາດຢູ່ສເມີ
- ❖ ພຣະຄຣິສທັມຄັມພີເປັນມາດຕະຖານທີ່ຖືກຕ້ອງແລະບໍ່ມີຂໍ້ບົກຜ່ອງໃດ ໆ
- ❖ ພຣະຄຣິສທັມຄັມພີໃຫ້ສະຕິປັນຍາແລະນຳໄປເຖິງຄວາມພົ້ນໄດ້
- ❖ ພຣະຄຣິສທັມຄັມພີເປັນຫລັກໃນການດຳເນີນຊີວິດໃຫ້ເຮົາຂັບຕາມໃນຊີວິດປະຈຳວັນ
- ❖ ພຣະເຈົ້າຊົງໃຊ້ພຣະວັຈນະຂອງພຣະອົງນຳທາງຊີວິດຂອງທ່ານ

ທ່ານໂປໂລໄດ້ຝາກຜູ້ເຊື່ອທັງຫລາຍໃນເມືອງເອເຟໂຊໄວ້ນຳພຣະເຈົ້າວ່າ **"ເຫດສະນັ້ນ ບັດນີ້ເຮົາຝາກທ່ານທັງຫລາຍໄວ້ກັບພຣະເຈົ້າ ແລະກັບພຣະທັມອັນປະກອບດ້ວຍພຣະຄຸນຂອງພຣະອົງ ຊຶ່ງມີຣິດອາດສາມາດສ້າງພວກທ່ານຂຶ້ນໄດ້ ແລະໃຫ້ພວກທ່ານໄດ້ຮັບມໍຣະດົກດ້ວຍກັນກັບບັນດາຜູ້ຖືກຊຳຣະໃຫ້ບໍຣິສຸດ"** (ກິຈການ 20:32) ພຣະວັຈນະສາມາດໃຫ້ຄວາມອີ່ມໜຳສຳຣານແກ່ຊີວິດ ແມ່ນອາຫານຝ່າຍວິນຍານຈິດທີ່ຫລໍ່ລ້ຽງໃຫ້ເຮົາໃຫຍ່ຂຶ້ນໃນພຣະອົງ ເປັນການຈັດຕຽມຊີວິດຂອງເຮົາເຂົ້າສູ່ຄວາມອະມະຕະຄືຊີວິດອັນຕລອດໄປເປັນນິດກັບພຣະເຈົ້າ ການຮັບພຣະວັຈນະຂອງພຣະເຈົ້າຢ່າງສະນ່ຳສເມີ ຈະຫລໍ່ລ້ຽງຊີວິດຂອງເຮົາໃຫ້ມີຄວາມເຂັ້ມແຂງຕໍ່ສູ້ກັບອຸປສັກຕ່າງ ໆ ໄດ້ ຫາກວ່າເຮົາບໍ່ໄດ້ອ່ານພຣະວັຈນະປະຈຳວັນແລ້ວ ຝ່າຍວິນຍານຈິດຈະຫິວໂຫຍ ຄວາມຄິດຜິດ ອິດສາຢ່ານລື່ນ ການເອົາປຽບຜູ້ອື່ນກໍຈະເຂົ້າມາແທນທີ່ ດັ່ງພິດຮ້າຍໃສ່ຊີວິດເຮົາ ພຣະທັມເປໂຕສະບັບສອງ 2:2 ກ່າວວ່າ **"ຈະມີຫລາຍຄົນຕິດຕາມການຊົ່ວອັນຕ່ຳຊ້າຂອງເຂົາ ເພາະເນື່ອງຈາກຄົນເຫລົ່ານັ້ນເປັນເຫດ ທາງຂອງຄວາມຈິງຈະຖືກປະມາດ"**

ໃຫ້ເຮົາເລົ່າປາກເປົ່າພຣະທັມເພງສັລເສີນ 119:9, 11 ທີ່ເລີ່ມຕົ້ນບົດຮຽນນີ້ແລະພາວະນາພຣະທັມຂໍ້ນີ້ໄວ້ໃນໃຈຕລອດເວລາ ເພື່ອໃຫ້ພຣະວັຈນະຂອງພຣະອົງເສີມສ້າງເຮົາຂຶ້ນ ແລ້ວໃຫ້ເຮົາສັງເກດເບິ່ງວ່າມີຫຍັງແດ່ ທີ່ເປັນພຣະພອນເກີດຂຶ້ນໃນຊີວິດ ເມື່ອເຮົາມີພຣະວັຈນະຢູ່ໃນເຮົາຢ່າງແທ້ຈິງ

## ຈະຟັງພຣະວັຈນະຂອງພຣະເຈົ້າແລະຈື່ຈຳໄດ້ແນວໃດ?

ໄດ້ມີຂໍ້ຄວາມທີ່ເລົ່າສູ່ກັນຟັງມາດົນນານກ່ຽວກັບເລື່ອງການຈື່ຈຳຄຳເທສນາ ຊຶ່ງຫລາຍຄົນກໍຍອມ ຮັບວ່າເປັນເລື່ອງທີ່ເກີດແກ່ຕົວເອງຢ່າງແທ້ຈິງດ້ວຍ ແມ່ນວ່າໂດຍທົ່ວໄປແລ້ວ ຄຣິສຕຽນທີ່ມັກຟັງຄຳເທສນາແລະພໍອົກພໍໃຈຕໍ່ຄຳເທສນາໃນຂນະທີ່ນັ່ງຟັງຢູ່ໃນບ່ອນນະມັສການພຣະເຈົ້າ ແຕ່ເມື່ອຟັງຈົບແລະລຸກຂຶ້ນຈາກທີ່ນັ່ງໃນເວລາພຽງນຶ່ງນາທີ ເຂົາຈະເລີ້ມລືມສິ່ງທີ່ໄດ້ຟັງມາ ເມື່ອເດີນອອກຈາກບ່ອນ

ນະມັສການໄປເຖິງປະຕູໂບດ ສິ່ງທີ່ເຂົາໄດ້ຟັງມາ ເຂົາຈະຈື່ໄດ້ພຽງ 50% ເມື່ອເຂົາໄປພາເອົາລູກຫລານ ຫລືຄົນໃນຄອບຄົວມາເຖິງທີ່ລານຈອດຣົຖແລະກ້າວຂຶ້ນຣົຖນັ້ນ ສ່ວນຫລາຍຈະບໍ່ໄດ້ຄິດເຖິງຄໍາເທສນາອີກເລີຍ ສ່ວນນ້ອຍຂອງຜູ້ທີ່ຍັງຄິດເຖິງຄໍາເທສນານັ້ນ ອາດຈະທົບທວນໄດ້ແຕ່ 25% ແຕ່ເມື່ອຜູ້ນັ້ນຂັບຣົຖກັບເມືອເຮືອນຂອງຕົນເອງແລ້ວ ເກືອບ 90% ຂອງຄໍາເທສນາໄດ້ລືມໄປເສັຽແລ້ວ ຫລືອາດຈະບໍ່ໄດ້ຄິດເຖິງຄໍາເທສນາທີ່ເພິ່ງໄດ້ຍິນມາອີກເລີຍ ມີພຽງ 10% ເທົ່ານັ້ນທີ່ເກັບກໍາເອົາຄໍາເທສນາມາທົບທວນຫລືຈື່ຈໍາໄວ້ ເພື່ອເອົາມາປັບປຸງການດໍາເນີນຊີວິດຂອງຕົນ

ພຣະທັມໂຢຮັນ 8:31 ກ່າວວ່າ **"ຖ້າທ່ານທັງຫລາຍຕັ້ງໝັ້ນຄົງຢູ່ໃນຖ້ອຍຄໍາຂອງເຮົາ ພວກທ່ານກໍເປັນສາວົກແທ້ ໆ ຂອງເຮົາ"** (ສະບັບແປໃໝ່) ພຣະເຢຊູຊົງກ່າວເຖິງຜູ້ທີ່ປະຕິບັດຕາມນໍ້າພຣະທັຍຂອງພຣະເຈົ້າ ແມ່ນຜູ້ທີ່ມີສັມພັນທະພາບສນິດແນ້ນເປັນພິເສດກັບພຣະອົງ ເພາະຜູ້ໃດກໍຕາມທີ່ປະຕິບັດຕາມຄວາມປະສົງຂອງພຣະເຈົ້າ ກໍເປັນນ້ອງຊາຍນ້ອງສາວ ເປັນດັ່ງເຄືອຍາດຂອງພຣະອົງ (ພຣະທັມມາຣະໂກ 3:31-35) ຄຣິສຕຽນທີ່ໄດ້ຮັບຄວາມຊູໃຈໃນການຟັງຄໍາເທສນາ ແລະຈື່ຈໍາຕໍ່ຄໍາສອນທີ່ໄດ້ຮັບຟັງ ແມ່ນຜູ້ທີ່ປະຕິບັດຕາມນໍ້າພຣະທັຍຂອງພຣະເຈົ້າ ແລະມີຊີວິດເໝາະສົມກັບການເປັນບຸດທີ່ຮັກຂອງພຣະອົງ (ອຟ 5:1) ຈາກການສໍາຣວດພົບວ່າ ພວກເຮົາມັກຫລົງລືມ 90% ຂອງເຣື່ອງທີ່ເຮົາໄດ້ຟັງພາຍໃນ 72 ຊົ່ວໂມງ ອັນນີ້ບໍ່ໄດ້ໝາຍຄວາມວ່າພວກເຮົາບໍ່ມັກຟັງພຣະວັຈນະຂອງພຣະເຈົ້າ ແຕ່ໝາຍຄວາມວ່າເຮົາບໍ່ສາມາດເກັບຮັກສາເຣື່ອງໄວ້ໄດ້ ແລະບໍ່ໄດ້ຫາວິທີທີ່ຈະຈື່ຈໍາຄໍາສອນໄວ້ໃນໃຈອີກທັງບໍ່ໄດ້ຕັ້ງອົກຕັ້ງໃຈ ຫລືອຸທິດຕົວໃນການດໍາເນີນຊີວິດຄຣິສຕຽນຕາມທີ່ໄດ້ຍິນໄດ້ອ່ານພຣະວັຈນະຂອງພຣະເຈົ້າ ດັ່ງນັ້ນການຈົດບັນທຶກຄໍາເທສນາເປັນການຊ່ວຍໃຫ້ເຮົາສາມາດຈື່ຈໍາພຣະທັມໄດ້ດີຍິ່ງຂຶ້ນ ໃນການສຶກສາພຣະວັຈນະຂອງພຣະເຈົ້າກໍຄືກັນ ບໍ່ວ່າຈະເປັນການຮຽນໃນເຊົ້າວັນອາທິດ ຫລືການເຂົ້າຮ່ວມຮຽນໃນໂອກາດອື່ນ ໆ ຮວມເຖິງການເຝົ້າດຽວ ການຮຽນຮູ້ພຣະວັຈນະຂອງພຣະເຈົ້າໃນທຸກກໍຣະນີຈໍາເປັນຕ້ອງມີຊີວິດຄຣິສຕຽນ ເພື່ອເປັນການກະຕຽມຕົວກໍ່ຮ່າງສ້າງຮູບແບບຂອງຊີວິດຄຣິສຕຽນໂດຍການນໍາມາຂັບຕາມໃນຊີວິດປະຈໍາວັນ ດັ່ງນັ້ນແລ້ວການທີ່ຈະສາມາດຈື່ຈໍາພຣະວັຈນະຂອງພຣະເຈົ້າໄດ້ກໍຕ້ອງມີການຈົດບັນທຶກຄໍາສອນ ມີການຈົດຈໍາຂໍ້ພຣະຄັມພີ ມີການເລົ່າປາກເປົ່າ ແລະມີການຣະນຶກເຖິງຢູ່ສເມີ

## ການຕຽມຕົວເພື່ອຈະໄດ້ຈື່ຈໍາພຣະວັຈນະຂອງພຣະເຈົ້າ

## ຈາກການຟັງຄໍາເທສນາຫລືຈາກການຮຽນ ການອ່ານພຣະຄຣິສທັມຄັມພີ

1. **ຈົ່ງອະທິຖານ** ເຮົາສົມຄວນອະທິຖານເພື່ອຜູ້ເທສນາຫລືຜູ້ສອນໃນການຕຽມຕົວແບ່ງປັນພຣະວັຈນະຂອງພຣະເຈົ້າ ໃຫ້ເຂົາມີສະຕິປັນຍາມີຊີວິດທີ່ເປັນແບບຢ່າງ ຮູ້ຈັກສອນໃຫ້ເຂົ້າໃຈໄດ້ງ່າຍ ທູນຂໍໃຫ້ພຣະເຈົ້າເປີດຈິດໃຈແລະແນວຄວາມຄິດຂອງຜູ້ຟັງ ໃນເວລາອະທິຖານກໍສົມຄວນທີ່ຈະຂໍພຣະເຈົ້າບັນດານຈິດໃຈໃຫ້ຜູ້ຟັງເປີດໃຈອອກຟັງຄໍາເທສນາ ແລະຈື່ຈໍາຂໍ້

ພຣະທັມຄຳສອນຈາກພຣະຄັມພີ ລວມທັງຕົວເຮົາເອງກໍຕ້ອງເປີດຈິດໃຈໃນການຮັບຟັງດ້ວຍ

2. **ຈົ່ງນຳພຣະຄຣິສທັມຄັມພີຂອງທ່ານໄປນຳເມື່ອຮ່ວມນະມັສການ ຫລືເຂົ້າຮ່ວມການຮຽນພຣະຄັມພີ** ເມື່ອທ່ານຟັງຄຳເທສນາໃຫ້ອ່ານພຣະຄັມພີໄປຕາມທີ່ຜູ້ເທສນາຫລືຜູ້ສອນໄດ້ຊີ້ນຳໃຫ້ອ່ານ ທ່ານອາດຈະຂີດໝາຍໃນຂໍ້ທີ່ສຳຄັນ ຫລືຂຽນຂໍ້ອ້າງອີງໄວ້ເພື່ອການສຶກສາໃນພາຍຫລັງ

3. **ຈົ່ງຕື່ນຕາຕື່ນໃຈ ໃຫ້ຕັ້ງໃຈຟັງ** ເປັນການຍາກທີ່ຈະປຸກໃຫ້ມີຄວາມຕັ້ງໃຈຢູ່ຕລອດເວລາ ຊາຕານມັກຈະຂັດຂວາງບໍ່ໃຫ້ເຮົາຕັ້ງໃຈຟັງ ແລະມີຄວາມຕ້ອງການຈະລັກພາເອົາພຣະວັຈນະຂອງພຣະເຈົ້າຈາກເຮົາ ຈົ່ງພະຍາຍາມນັ່ງເຂົ້າມາໃຫ້ໃກ້ກັບຜູ້ທີ່ເທສນາຫລືຜູ້ສອນ ເພື່ອຫລີກໜີຈາກສິ່ງທີ່ຣົບກວນຄວາມຕັ້ງໃຈໃນການຟັງ ຈົ່ງພະຍາຍາມຈັບຈຸດສຳຄັນຂອງຄຳເທສນາແລະຂໍ້ພຣະທັມຫລາຍກວ່ານັ່ງສັງເກດຄວາມຜິດພາດໃນຕົວຜູ້ເທສນາຫລືຜູ້ສອນ

4. **ຈົ່ງຈົດບັນທຶກ** ຂໍໃຫ້ພະຍາຍາມຈົດບັນທຶກເຣື່ອງທີ່ສຳຄັນໃນຄຳເທສນາຫລືການຮຽນພຣະວັຈນະທັມຂອງພຣະເຈົ້າ ຢ່າງນ້ອຍນຶ່ງເຣື່ອງ ເພື່ອທ່ານຈະໄດ້ຮູ້ແນວປະຕິບັດປັບປຸງແກ້ໄຂຊີວິດຂອງທ່ານໃນອາທິດນັ້ນ ໃຫ້ຈົດວັນທີ ຊື່ແລະຂອງຜູ້ສອນຫລືຜູ້ເທສນາ ໃຫ້ຈົດຄຳສອນຫລືແນວຄວາມຄິດໄວ້ໃນຂະນະທີ່ພຣະເຈົ້າດົນບັນດານໃຈທ່ານ ຕ້ອງເຂົ້າໃຈວ່າຄຳສອນຫລືຄຳເທສນາ ແມ່ນຄຳເວົ້າຂອງພຣະເຈົ້າທີ່ເວົ້ານຳທ່ານ **ຈັບຈຸດໃຫ້ໄດ້ແນວຄວາມຄິດນຶ່ງ ກໍຍັງດີກວ່າຟັງຫລາຍ ໆ ໄປລ້າ ໆ ແລ້ວບໍ່ຈື່ຈັກແນວ** ເມື່ອຈື່ຈຳຄຳສອນໄດ້ໃຫ້ຖືປະຕິບັດຢ່າງເອົາຈິງເອົາຈັງ ເພື່ອໃຫ້ຊີວິດຄຣິສຕຽນມີຮູບແບບການດຳເນີນຊີວິດຕາມແບບຢ່າງຂອງພຣະຄຣິສ

5. **ຈົ່ງເຮັດໃຫ້ພຣະວັຈນະແລະຄຳສອນເຂົ້າກັບຊີວິດຂອງຕົນ** ການທີ່ທ່ານໄດ້ຮຽນຮູ້ພຣະວັຈນະແລ້ວຖືວ່າເປັນພຽງຄຳສອນທົ່ວ ໆ ໄປຈະເຮັດໃຫ້ທ່ານບໍ່ຮູ້ແນວປະຕິບັດ ຂໍໃຫ້ຕັ້ງຄຳຖາມ ຖາມຕົວເອງວ່າ "ພຣະເຈົ້າກຳລັງຕ້ອງການໃຫ້ທ່ານປ່ຽນແປງ ຫລືໃຫ້ເຮັດແນວໃດຕາມພຣະທັມຂໍ້ນັ້ນ ຫລືພຣະອົງມີຫຍັງແດ່ທີ່ກຳລັງຈະເວົ້ານຳຂ້ານ້ອຍ" ພຣະທັມຢາໂກໂບ 1:22 ກ່າວວ່າ **"ແຕ່ທ່ານທັງຫລາຍຈົ່ງກາຍເປັນຜູ້ຂັບຕາມພຣະທັມນັ້ນ ບໍ່ແມ່ນເປັນແຕ່ພຽງຜູ້ໄດ້ຍິນເທົ່ານັ້ນ ຊຶ່ງເປັນການລໍ້ລວງຕົນເອງ"**

## ທ່ານຈະຈື່ຈຳແລະໃຊ້ພຣະວັນຈນະໃນຊີວິດຂອງທ່ານໄດ້ແນວໃດ

1. **ການຈື່ຈຳພຣະທັມມີທ່າທີທີ່ແຕກຕ່າງກັບການຈື່ຈຳແນວອື່ນ** ແມ່ນໂດຍທັມມະດາທ່ານສາມາດຈື່ຈຳຊື່ຄົນ ໝາຍເລກໂທສັບໄດ້ ແຕ່ການຈື່ຈຳພຣະວັຈນະຂອງພຣະເຈົ້າມີດີພິເສດຫລາຍກວ່ານັ້ນອີກ ເພາະວ່າທ່ານມີພຣະວິນຍານບໍຣິສຸດຊຶ່ງເປັນພຣະຜູ້ຊ່ວຍແລະໄດ້ສັນຍາວ່າ **"ພຣະອົງ**

**ຈະນຳທ່ານທັງຫລາຍໄປສູ່ຄວາມຈິງທັງໝົດ"** (ໂຢຮັນ 16:13) ແລະພຣະວິນຍານບໍຣິສຸດ ແມ່ນຜູ້ຊ່ວຍຊູກຳລັງທ່ານໃຫ້ຈື່ໄດ້ແລະຂັບຕາມໄດ້

2. ເມື່ອທ່ານເລີ້ມຕົ້ນຈື່ຈຳ ໃຫ້ທ່ານອ່ານຂໍ້ພຣະຄັມພີທີ່ຢູ່ຂ້າງຄຽງຂໍ້ທີ່ທ່ານຕ້ອງການຈື່ຈຳ ເພາະເນື້ອ ນັຍຂໍ້ຄວາມຂອງຂໍ້ພຣະຄັມພີທີ່ຢູ່ຂ້າງຄຽງ ມີເຣື່ອງຣາວຫລືເຫດການທີ່ຈະຊ່ວຍໃຫ້ຈື່ຈຳໄດ້ດີຍິ່ງຂຶ້ນ **ແລ້ວໃຫ້ຄິດເຖິງຂໍ້ພຣະຄັມພີທີ່ຈື່ຈຳວ່າເຂົ້າກັບຊີວິດຂອງທ່ານແນວໃດ** ຈະຊ່ວຍໃຫ້ທ່ານຈື່ຈຳໄດ້ດີຍິ່ງຂຶ້ນເມື່ອຂໍ້ພຣະຄັມພີກົງກັບຊີວິດຈິງຂອງທ່ານ

3. **ຈົ່ງອ່ານອອກສຽງຂໍ້ພຣະຄັມພີທີ່ຈື່ຈຳ** ໃຫ້ຮຽນຮູ້ຈັກລຳດັບຂອງຄຳເວົ້າ ໃຫ້ຈື່ຈຳຫົວຂໍ້ກ່ອນ ແລ້ວຂໍ້ອ້າງອີງ (ຕົວຢ່າງໂຢຮັນ ບົດທີ 8 ຂໍ້ 31) ແລ້ວຈື່ຈຳຂໍ້ຄວາມແລກໃຫ້ຄັກເສັຽກ່ອນຈຶ່ງຄ່ອຍຈື່ຈຳຂໍ້ຄວາມຖັດໄປ ໃຫ້ຈື່ຈຳທີລະຄວາມ ແລ້ວຄ່ອຍເຕີມເຂົ້າໄປທີລະຄວາມຈົນສຸດ ແລ້ວເລົ່າຍໍ້າຫລາຍ ໆ ຮອບ

4. **ທົບທວນຂໍ້ພຣະຄັມພີທີ່ຈື່ຈຳທຸກມື້** ໂດຍໃຫ້ກ່າວເຖິງຂໍ້ອ້າງອີງຂອງພຣະທັມກ່ອນແລະຫລັງຂໍ້ພຣະຄັມພີ ເວົ້າປາກເປົ່າເມື່ອເວລາກ່ອນກິນເຂົ້າ ກ່ອນນອນ ໃຫ້ຄົນອື່ນກວດເບິ່ງຄວາມຖືກຕ້ອງ ພະຍາຍາມຄິດເຖິງຕົວເອງໃສ່ໃນຂໍ້ພຣະທັມນັ້ນ ໃຫ້ທົບທວນ 60 ມື້

5. **ອະທິຖານດ້ວຍຂໍ້ພຣະຄັມພີທີ່ຈື່ຈຳກັບພຣະເຈົ້າ** ໂດຍໃຊ້ພຣະວັຈນະທັມທີ່ຈື່ໄດ້ໃນຄຳໄຫວ້ວອນຂອງທ່ານເປັນການພາວະນາທັມ ຂໍໃຫ້ພຣະເຈົ້າເປີດເຜີຍຄວາມຈິງຂອງຂໍ້ພຣະຄັມພີແກ່ຊີວິດທ່ານ ໃນການປະຕິບັດຕາມ

6. **ພາວະນາທັມ** ໂດຍການຕັ້ງຄຳຖາມຂໍ້ນຶ່ງຫລືສອງຂໍ້ສຳລັບຂໍ້ພຣະຄັມພີທີ່ຈື່ຈຳ ດັ່ງເຊັ່ນ ໃຜ? ເມື່ອໃດ? ທີ່ໃດ? ຫຍັງ? ເປັນຫຍັງ? ແນວໃດ? ຕົວຢ່າງ ຄົນຊອບທັມແມ່ນຜູ້ໃດ

**ຕົວຢ່າງການພາວະນາທັມ**

- ຄົນຊອບທັມແມ່ນຜູ້ທີ່ຕິດຕາມພຣະເຈົ້າດ້ວຍຄວາມເຊື່ອ ພຣະທັມໂຣມ 1:17 ກ່າວວ່າ "ຜູ້ທີ່ເປັນຄົນຊອບທັມເພາະຄວາມເຊື່ອ ຜູ້ນັ້ນແຫລະຈະໄດ້ຊີວິດ" ພຣະເຈົ້າຂ້າຂໍໃຫ້ຂ້າພຣະອົງສາມາດດຳຣົງຊີວິດເລີ້ມຕົ້ນດ້ວຍຄວາມເຊື່ອ ແລະລົງທ້າຍດ້ວຍຄວາມເຊື່ອ ໃຫ້ຂ້າພຣະອົງເປັນຄົນຊອບທັມຍ້ອນຄວາມເຊື່ອທີ່ຂ້ານ້ອຍມີຕໍ່ພຣະອົງ ແລະເປັນແບບຢ່າງແກ່ຄົນທັງຫລາຍ

- ເຮົາຈະມີປັນຍາໄດ້ແນວໃດ ພຣະທັມສຸພາສິດ 1:7 ກ່າວວ່າ **"ການຢຳເກງພຣະເຈົ້າ ເປັນແຫລ່ງເກີດຂອງຄວາມຮູ້ຫລືປັນຍາ"** ພຣະອົງເຈົ້າຂ້າຂໍຊ່ວຍໃຫ້ຂ້າພຣະອົງຢຳເກງພຣະອົງ ແລະຊ່ວຍໃຫ້ຂ້າພຣະອົງຮູ້ຈັກສອນຄົນໜູ່ມໃຫ້ຮູ້ຈັກຢຳເກງພຣະອົງ ເພື່ອເຂົາຈະໄດ້ປັນຍາໃນການດຳເນີນຊີວິດເພື່ອຕາມພຣະປັນຍາຂອງພຣະອົງ

ທ່ານສາມາດພາວະນາທັມແບວນີ້ໄດ້ໃນຍາມໃດກໍໄດ້ ບໍ່ວ່າຈະຢູ່ໃນຍາມທຸກ ຫລືໃນຍາມສຸກ ການພາວະນາທັມແບວນີ້ຈະນຳທ່ານໃຫ້ພົບກັບປັນຍາແລະສັນຕິສຸກໃນພຣະຄຣິສ ແລະຈະຟູມຟັກກໍ່ຕົວໃຫ້ເກີດຮູບແບບ (formation) ຂອງການມີຊີວິດຄຣິສຕຽນ (Christian) ທີ່ໃຫຍ່ໃນຊີວິດຝ່າຍຈິດວິນຍານ (Spiritual) ອັນນີ້ແຫລະແມ່ນທີ່ມາຂອງວິຊານີ້ ແມ່ນການຣິເລີ້ມການດຳເນີນຊີວິດຄຣິສຕຽນຝ່າຍວິນຍານຈິດ (Christian Spiritual Formation) ໃຫ້ມີຊີວິດທີ່ຂັບຕາມເສັ້ນທາງແລະແບບຢ່າງລັກສະນະຂອງພຣະເຢຊູຄຣິສ

Listen to the wrong voice
1 Jh 2:
world 1) Physical Creation
2) People
3) World system

# ບົດທີ 4

# ຍ່າງນຳພຣະຄຣິສ
# ອາສັຍພຣະກຳລັງຂອງພຣະເຈົ້າ

**"ເຮົາສາມາດສູ້ກັບທຸກສິ່ງໄດ້ໂດຍພຣະອົງຜູ້ຊົງຊູກຳລັງເຮົາ"**
**ຟີລິປອຍ 4:13**

ເປັນທັມມະດາຂອງຊີວິດທີ່ລາງມື້ທ່ານຈະພົບກັບຄວາມທໍ້ຖອຍ ໝົດໝັດໃຈຫລືບັນຫາ ອາດຈະມີສ່ວນນ້ອຍທີ່ຕ້ອງພົບກັບຄວາມລົ້ມເຫລວ ແຕ່ພຣະວັຈນະຂອງພຣະເຈົ້າກ່າວແກ່ເຮົາວ່າ **"ການທີ່ເຈົ້າມີຄຸນຈາກເຮົາ ກໍພໍສຳລັບເຈົ້າແລ້ວ ດ້ວຍວ່າຄວາມອ່ອນແອມີຢູ່ທີ່ໃດ ເດດຂອງເຮົາກໍມີຣິດຂຶ້ນເຕັມຂນາດຢູ່ທີ່ນັ້ນ"** (2 ໂກຣິນໂທ 12:9)

ຕລອດມາໃນປວັດສາດຊຶ່ງນັບໄດ້ເປັນຮ້ອຍເປັນພັນປີ ພຣະອົງຕັກເຕືອນໃຈເຮົາສເມີວ່າ ບໍ່ຕ້ອງຢ້ານ ບໍ່ຕ້ອງສະທ້ານໃຈ **"ເພາະເຮົາຢູ່ກັບໝູ່ເຈົ້າ ສະນັ້ນຢ່າສູ້ຢ້ານກົວ ຢ່າສູ້ຢ້ານສິ່ງໃດ ໆ ເຮົາຄືພຣະເຈົ້າຂອງໝູ່ເຈົ້າ ເຮົາຈະຊ່ວຍຊູໃຫ້ໝູ່ເຈົ້າໄດ້ເຂັ້ມແຂງ ເຮົາຈະປົກປັກຮັກສາຊ່ວຍໝູ່ເຈົ້າໃຫ້ພົ້ນ"** (ເອເຊຢາ 41:10)

ຫາກວ່າເຮົາສາມາດເລົ່າປາກເປົ່າຂໍ້ພຣະທັມຟີລິປອຍ 4:13 (ທາງເທິງ) ອັນເປັນຂໍ້ໜູນໃຈໃຫ້ເຮົາຮູ້ຈັກອາສັຍພຣະກຳລັງຂອງພຣະເຈົ້າ ແມ່ນການຊ່ວຍໃຫ້ເຮົາຮູ້ຈັກຮ້ອງຫາເຫື່ອແຮງກຳລັງຈາກພຣະເຈົ້າ ທີ່ຈະກູ້ເຮົາ ຊ່ວຍເສີມແຮງແລະຊູໃຈເຮົາໃນຊີວິດປະຈຳວັນ ເພື່ອຊ່ວຍໃຫ້ເຮົາເກີດການເຊື່ອຟັງພຣະເຈົ້າ ແລະໄຕ່ເຕົ້າສູ່ຄວາມໄພບູນຫລືຄວາມສົມບູນແບບຂອງພຣະຄຣິສ ແມ່ນການທີ່ເຮົາຈະຮຽນຮູ້ຍ່າງນຳພຣະອົງ ເປັນການຮຽນຮູ້ທີ່ຈະສ້າງນິສັຍຂອງເຮົາໃຫ້ໄວ້ວາງໃຈໃນພຣະເຈົ້າ ໃຫ້ເພິ່ງອາສັຍໃນຣິດເດດການນຳພາຂອງພຣະເຈົ້າ ແລະເພື່ອປັ້ນແປງຊີວິດຂອງເຮົາໃຫ້ເໝືອນ ຫລືໃກ້ຄຽງກັບພຣະລັກສະນະນິສັຍ ລວມເຖິງແບບຢ່າງການໃຊ້ຊີວິດທີ່ຄ້າຍຄືກັບພຣະຄຣິສ (Christlike) ແມ່ນຈິງແທ້ທີ່ພຣະເຢຊູຄຣິສຊົງເປັນພຣະເຈົ້າ ແຕ່ວ່າໃນເວລາທີ່ພຣະອົງຊົງບັງເກີດເປັນມະນຸດນັ້ນ ພຣະອົງກຳລັງຮັບໜ້າທີ່ໃນຖານະບຸກຄົນພາບນຶ່ງຂອງຕຣີເອກການຸພາບ ໃນເວລານັ້ນພຣະອົງໄດ້ສວມສະພາບຂອງມະນຸດ 100% ພຣະອົງຕ້ອງຖືກການລໍ້ລວງຈາກມານ ຈາກບາບອື່ນ ໆ ແລະຈາກການທົດລອງ ຈາກຄວາມທຸກຍາກຝ່າຍເນື້ອໜັງຄືກັນກັບຊີວິດຂອງພວກເຮົາ ພຣະອົງຍອມຮັບສະພາບມະນຸດເພື່ອຈະໄດ້ມີຊີວິດທີ່ເປັນແບບຢ່າງແກ່ມະນຸດທັງຫລາຍ ແຕ່ວ່າພຣະອົງຊົງໄດ້ພິສູດແລ້ວວ່າ ພຣະອົງມີຊີວິດທີ່ມີໄຊຕໍ່ມານ

ຮ້າຍ ພຣະອົງບໍ່ເຮັດບາບຍ້ອນອາສັຍກຳລັງຈາກພຣະເຈົ້າ ດັ່ງທີ່ກ່າວໄວ້ໃນພຣະທັມໂຢຮັນ 8:28-30 ພຣະເຢຊູໄດ້ກ່າວວ່າ **"ແຕ່ພຣະບິດາໄດ້ຊົງສອນເຮົາຢ່າງໃດ ເຮົາຈຶ່ງກ່າວຢ່າງນັ້ນ ພຣະອົງຜູ້ຊົງໃຊ້ເຮົາມາກໍຊົງສະຖິດຢູ່ກັບເຮົາ ພຣະອົງບໍ່ໄດ້ຊົງປະເຮົາໄວ້ໃຫ້ຢູ່ຜູ້ດຽວ ເພາະວ່າເຮົາເຮັດຕາມຊອບພຣະທັຍຂອງພຣະອົງຢູ່ສເມີ"** ເມື່ອພຣະອົງຊົງກ່າວຄຳເຫລົ່ານັ້ນມີຫລາຍຄົນໄດ້ເຊື່ອໃນພຣະອົງ

ພຣະເຈົ້າຊົງຮ່ວມມືກັບຜູ້ເຊື່ອທຸກຄົນແລະພ້ອມສະເມີທີ່ຈະຊ່ວຍ ພຣະອົງບໍ່ໄດ້ປະໃຫ້ເຮົາຢູ່ຜູ້ດຽວໂດຍລຳພັງ ພຣະທັມໂຢຮັນ 5:17, 19-20 ກ່າວວ່າ ແຕ່ພຣະເຢຊູຊົງຕອບເຂົາວ່າ **"ພຣະບິດາຂອງເຮົາຍັງຊົງກະທຳກິຈການມາຈົນເຖິງບັດນີ້ ແລະຝ່າຍເຮົາກໍເຮັດຢູ່ເໝືອນກັນ". . . ພຣະເຢຊູຊົງກ່າວກັບເຂົາວ່າ "ເຮົາບອກທ່ານທັງຫລາຍຕາມຄວາມຈິງວ່າພຣະບຸດຈະກະທຳສິ່ງໃດຕາມໃຈບໍ່ໄດ້ ນອກຈາກທີ່ໄດ້ເຫັນພຣະບິດາຊົງກະທຳ ເພາະວ່າສິ່ງໃດທີ່ພຣະບິດາຊົງກະທຳ ສິ່ງນັ້ນແຫລະ ພຣະບຸດຈຶ່ງຊົງກະທຳເໝືອນກັນ ເພາະວ່າພຣະບິດາຊົງຮັກພຣະບຸດ ແລະຊົງສະແດງໃຫ້ພຣະບຸດເຫັນທຸກສິ່ງທີ່ພຣະອົງເອງຊົງກະທຳ ແລ້ວພຣະອົງຈະຊົງສະແດງໃຫ້ພຣະບຸດເຫັນການໃຫຍ່ກວ່ານັ້ນອີກ ຊຶ່ງທ່ານທັງຫລາຍຈະອັດສະຈັນໃຈ"**

ພຣະເຈົ້າເປັນພຣະເຈົ້າທີ່ຊົງເປັນຢູ່ທຸກເວລາ ແລະເບິ່ງແຍງຮັກສາຢູ່ອ້ອມເຮົາ ແລະຢູ່ໃນເຮົາ ຊຶ່ງເຮົາສາມາດມີປະສົບການກັບພຣະອົງໄດ້ໂດຍກົງ ພຣະວິນຍານບໍຣິສຸດສະຖິດຢູ່ນຳເຮົາ ແລະພ້ອມທີ່ຈະຊ່ວຍນຳພາຊີວິດຄຣິສຕຽນເຮົາ ພ້ອມທີ່ຈະຮ່ວມເຮັດວຽກນຳເຮົາໄດ້ທຸກເມື່ອ ທຸກເວລານາທີ ແຕ່ທີ່ໜ້າເສັຽດາຍທີ່ສຸດ ແມ່ນເຮົາຫັນຫລັງໃຫ້ກັບພຣະອົງ ເຮົາບໍ່ເຊື່ອຟັງ ຍ້ອນເຮົາມີຊີວິດທີ່ຍຸ່ງຍາກຮີບຮ້ອນ ແລະມີຫລາຍສິ່ງທີ່ຄອບຄຸມຊີວິດຂອງເຮົາ ຈົນກະທັ່ງເຮົາບໍ່ສັງເກດເຫັນພຣະອົງ ບໍ່ເຫັນນໍ້າພຣະທັຍແລະພຣະປະສົງອັນແນ່ນອນຂອງພຣະເຈົ້າ ແທ້ຈິງແລ້ວພຣະອົງຕ້ອງການໃຫ້ເຮົາໃກ້ຊິດ ມີສັມພັນທະພາບ ແລະເພິ່ງພາອາສັຍອຳນາດຈາກພຣະອົງ ໃຫ້ເຮົາມີຊີວິດ ມີພລັງມີກຳລັງໃຈກຳລັງກາຍ ມີຊີວິດໃໝ່ທີ່ບໍ່ລົ້ມ ບໍ່ຫລົງ ບໍ່ຕົກໃນບາບ ອັນນີ້ແມ່ນນໍ້າພຣະທັຍແທ້ຈິງຂອງພຣະອົງ "ເຫດສັນນັ້ນຖ້າຜູ້ໃດຢູ່ໃນພຣະຄຣິສ ຜູ້ນັ້ນກໍເປັນຄົນທີ່ຖືກຊົງສ້າງຂຶ້ນໃໝ່ແລ້ວ ຖານະເກົ່າເຫລົ່ານັ້ນກໍລ່ວງໄປແລ້ວ ເບິ່ງແມ໋ ກາຍເປັນສິ່ງໃໝ່ທັງນັ້ນ ສິ່ງທັງປວງນີ້ເກີດມາຈາກພຣະເຈົ້າ ຜູ້ຊົງໂຜດໃຫ້ເຮົາຄືນດີກັບພຣະອົງທາງພຣະຄຣິສ ແລະຊົງປະທານໃຫ້ເຮົາມີໜ້າທີ່ປະຕິບັດໃນການຄືນດີນັ້ນ ຄືພຣະເຈົ້າຜູ້ຊົງສະຖິດຢູ່ໃນອົງພຣະຄຣິສ ໄດ້ຊົງກະທຳໃຫ້ມະນຸດຄືນດີກັນກັບພຣະອົງ ບໍ່ໄດ້ຊົງຖືໂທດໃນການຜິດບາບຂອງເຂົາ ແລະຊົງມອບຂ່າວເຣື່ອງການທີ່ພຣະອົງໃຫ້ຄືນດີກັນນັ້ນໄວ້ກັບເຮົາ ເຫດສັນນັ້ນເຮົາຈຶ່ງເປັນທູດຂອງພຣະຄຣິສ ໂດຍທີ່ພຣະເຈົ້າຊົງຂໍຮ້ອງເຈົ້າທັງຫລາຍທາງເຮົາ ເຮົາຈຶ່ງຂໍຮ້ອງພວກເຈົ້າໃນນາມຂອງພຣະຄຣິສວ່າ **"ຈົ່ງຍອມໃຫ້ພຣະເຈົ້າຊົງກະທຳໃຫ້ເຈົ້າຄືນດີກັນກັບພຣະອົງເຖີນ"** (2 ກທ 5:17-20)

**<u>ເຫດໃດຄຣິສຕຽນສ່ວນຫລາຍຈຶ່ງອ່ອນກຳລັງໃນການດຳເນີນຊີວິດຄຣິສຕຽນ</u>**

ຄຣິສຕຽນສ່ວນຫລາຍຫລັງຈາກຮັບເຊື່ອ ຮັບບັພຕິສມາເປັນສະມາຊິກຂອງຄຣິສຈັກແລ້ວ ອາດ

ຈະຍັງມີຄວາມກະຕືລືລົ້ນໃນການປຸ່ງແປງຊີວິດ ແລະພະຍາຍາມດຳເນີນຊີວິດຄຣິສຕຽນດ້ວຍພະລະກຳລັງຂອງຕົນເອງ ແຕ່ເມື່ອເວລາຍາວນານອອກໄປ ພົບວ່າຊີວິດເລີ້ມເກີດການຈຳເຈໃນການໄປນະມັສການ ໃນການອະທິຖານໄຫວ້ວອນ ໃນການສຶກສາພຣະຄັມພີ ດ້ວຍເຫດນີ້ຄວາມອ່ອນກຳລັງ ເກີດການທົດຖອຍເຮັດໃຫ້ຊີວິດຄຣິສຕຽນບໍ່ແຂງແຮງ ແລະເກີດການອະລຸ່ມອະລ່ວຍຕໍ່ເນື້ອໜັງ ຕໍ່ບາບ ເກີດການຜິດສິລທັມ ຜິດຜົວຜິດເມັຽ ແລະບໍ່ສາມາດມີຊີວິດທີ່ເປັນແບບຢ່າງທີ່ດີໃນຖານະຄຣິສຕຽນ ແທ້ຈິງຄຳວ່າຄຣິສຕຽນ ແມ່ນຜູ້ທີ່ເປັນສາວົກຕິດຕາມພຣະຄຣິສ ແລະດຳເນີນຊີວິດໃຫ້ສົມກັບການຕິດຕາມພຣະຄຣິສ ແຕ່ເມື່ອກຳລັງອ່ອນລົງແລ້ວກໍກາຍເປັນຕິດຕາມເຣື່ອງອື່ນ ໆ ໄປ ອາດຈະເປັນເງິນຄຳຊັບສົມບັດມາເປັນພຣະເຈົ້າແທນ ຫລືອາດຈະຕິດຕາມດ້ານຄວາມງາມຂອງໃບໜ້າ ເສື້ອຜ້າແພງ ໆ ອາຫານ ດີ ໆ ຣົຖງາມ ໆ ເຮືອນຫລັງໃຫຍ່ ສິ່ງເຫລົ່ານີ້ໄດ້ເຂົ້າມາແທນທີ່ ດ້ວຍເຫດນີ້ພລັງອຳນາດທີ່ຈະເຮັດໃຫ້ຊີວິດເດີນໃຫ້ຖືກທາງກໍລົດນ້ອຍຖອຍລົງ ຄວາມສຳຄັນຂອງຄຣິສຈັກ ຄວາມສຳຄັນຂອງພຣະວັຈນະຂອງພຣະເຈົ້າ ຄວາມສຳຄັນຂອງການເປັນພະຍານ ແລະການມີຊີວິດແບບຄຣິສຕຽນກໍຈາງຫາຍໄປ ນີ້ເປັນອາການທີ່ເກີດຂຶ້ນກັບຄຣິສຕຽນຫລາຍຄົນ ແລະແມ່ນສັນຍານແຫ່ງຄວາມອັນຕລາຍ ເພາະວ່າຊີວິດແນວນີ້ບໍ່ແມ່ນຊີວິດທີ່ພຣະເຈົ້າເອີ້ນເຮົາມາເປັນສາວົກ ພຣະອົງເອີ້ນເຮົາມາເພື່ອດຳເນີນຊີວິດທີ່ສົມຄວນແລະຖວາຍສະງ່າຣາສີແດ່ພຣະເຈົ້າ ໂດຍອາສັຍພຣະຜູ້ຊ່ວຍແມ່ນພຣະວິນຍານບໍຣິສຸດເປັນຜູ້ຊູກຳລັງເຮົາ ໃຫ້ເຮົາດຳເນີນຊີວິດຄຣິສຕຽນໃຫ້ສົມກັບຖານະທີ່ເຮົາໄດ້ເກີດໃໝ່ແລ້ວເປັນລູກຂອງພຣະເຈົ້າ ມີຊີວິດຝ່າຍວິນຍານຈິດທີ່ໃຫຍ່ຂຶ້ນຕາມລັກສະນະຂອງພຣະຄຣິສ

**ຄວາມທຸກຍາກສອນໃຫ້ຮູ້ຈັກເພິ່ງອາສັຍພຣະກຳລັງຂອງພຣະເຈົ້າ**

ສິດຍາພິບາລທ່ານນຶ່ງຕິດປ້າຍທີ່ໜ້າປະຕູຄຣິສຈັກວ່າ ຖ້າທ່ານມີບັນຫາເຊີນເຂົ້າມາ ຖ້າທ່ານບໍ່ມີບັນຫາກໍເຊີນເຂົ້າມາ ແລະບອກເຮົາວ່າທ່ານເພິ່ງພາອາສັຍພຣະເຈົ້າແນວໃດ ເຮົາຈະເຮັດແນວໃດຈຶ່ງຈະຊ່ວຍໃຫ້ຊີວິດສາມາດມີໄຊຕໍ່ຄວາມທຸກຍາກ

ເບິ່ງດູຊີວິດທ່ານໂຢເຊຟທີ່ຜ່ານການທົດລອງມາແລ້ວໃນພຣະຄັມພີ ຈາກການເປັນລູກຮັກຂອງຢາໂຄບຜູ້ເປັນພໍ່ ລາວຕ້ອງກາຍເປັນຜູ້ທີ່ຖືກກຽດຊັງຂອງອ້າຍຫລາຍຄົນ ຖືກຂາຍໄປເປັນທາດທີ່ອີຢິບ ຖືກການລໍ້ລວງຈາກນາຍຍິງ ຖືກຕິດຄຸກ ແຕ່ທ່ານໂຢເຊຟມີຊີວິດທີ່ບໍ່ເຮັດບາບ ແລະມີໄຊຢ່າງເຫລືອລົ້ນຍ້ອນການເພິ່ງພາອາສັຍພຣະເຈົ້າ ເຂົາຢູ່ໄດ້ຍ້ອນເຂົາຍຶດໝັ້ນໃນຄວາມເຊື່ອອັນຊອບທັມ ແລະແນ່ນອນເຂົ້າຕ້ອງພາວະນາຫາພຣະເຈົ້າໃຫ້ຊ່ວຍກູ້ເຂົາຕລອດເວລາ ຈົນໃນທີ່ສຸດຊີວິດຂອງເຂົາໄດ້ຜ່ານພົ້ນອຸປະສັກຄວາມທຸກຍາກ ແລະນຳຄວາມຊື່ນຊົມຍິນດີມາສູ່ວົງຕະກູລຂອງເຂົາແມ່ນຢາໂຄບຜູ້ເປັນພໍ່ ແລະອ້າຍອີກຫລາຍຄົນອີກທັງນ້ອງເບນຈະມິນ ຊີວິດທີ່ຍອມອົດທົນແລະໄດ້ຜ່ານພົ້ນການທົດລອງແນວນີ້ ປຸ່ງບໄດ້ກັບຄວາມເວົ້າທີ່ເຮົາຮູ້ຈັກກັນດີວ່າ ທອງຄຳທີ່ຜ່ານໄຟເຜົາໄໝ້ແລ້ວຍັງຄົງຢູ່ໄດ້ແມ່ນຄຳບໍຣິສຸດແທ້ ແລະຕົວຫອຍໃນທະເລຈະເກີດມຸກງາມໄດ້ຍ້ອນມີເມັດຊາຍເຂົ້າໄປຣະຄາຍເຄືອງຕົວຂອງມັນໃນຝາຫອຍທີ່ເຮັດໃຫ້ເກີດຮອຍບາດແຜລ ແລ້ວມັນຈຶ່ງພະຍາຍາມຮັກສາບາດແຜລໂດຍການຄາຍເອົາສານ

ຊະນິດນຶ່ງອອກມາຄອບງໍາເມັດຊາຍນັ້ນ ດ້ວຍຄວາມພຍາຍາມຢ່າງສຸດຂີດ ແລະດ້ວຍການຊ່ວຍເຫລືອຕາມທັມມະຊາດທີ່ພຣະເຈົ້າສ້າງໄວ້ ມັນກາຍເປັນໄຂ່ມຸກເມັດງາມ ຊີວິດຄຣິສຕຽນທີ່ຜ່ານພົ້ນຄວາມທຸກຍາກ ແລະຮູ້ຈັກເພິ່ງພາອາສັຍພຣະກໍາລັງຂອງພຣະເຈົ້າໃນການຊ່ວຍກູ້ຊີວິດໃຫ້ກັບຄືນດີກັບພຣະອົງກໍປຽບຄືກັບໄຂ່ມຸກ ຫລືເພັດເມັດງາມທີ່ພຣະເຈົ້າຊົງພໍພຣະທັຍຫລາຍ ພຽງແຕ່ເຮົາຕ້ອງບໍ່ລືມຮ້ອງຂໍຄວາມຊ່ວຍເຫລືອ ຂໍພຣະກໍາລັງຈາກພຣະເຈົ້າໃຫ້ເຮົາຮູ້ຈັກຟູມຟັກ ຝຶກຝົນຕົວຂອງເຮົາໃຫ້ມີຊີວິດຄຣິສຕຽນທີ່ແທ້ຈິງ ຊຶ່ງພວກເຮົາຮູ້ແລ້ວວ່າທຸກເຫດການທີ່ເກີດຂຶ້ນນັ້ນ ພຣະເຈົ້າໄດ້ບັນດານໃຫ້ເກີດຜົນດີສໍາລັບຜູ້ທີ່ຮັກພຣະອົງ ຄືພຣະອົງໄດ້ເອີ້ນໄວ້ຕາມພຣະປະສົງ "ພວກເຮົາຮູ້ແລ້ວວ່າພຣະເຈົ້າຊົງຮ່ວມກັບຄົນທັງຫລາຍທີ່ຮັກພຣະອົງ ເພື່ອໃຫ້ເກີດຜົນດີໃນທຸກສິ່ງ ຄືຄົນທັງປວງທີ່ພຣະອົງໄດ້ຊົງເອີ້ນໄວ້ຕາມພຣະປະສົງຂອງພຣະອົງ" (ຣມ 8:28)

**<u>ອາສັຍກໍາລັງຂອງພຣະເຈົ້າໂດຍເພິ່ງພາພຣະວິນຍານບໍຣິສຸດ</u>**

ໃນທໍານອງດຽວກັນນັ້ນແຫລະ ພຣະວິນຍານຊົງຊ່ອຍຊູເຮົາທັງຫລາຍ ເມື່ອພວກເຮົາອ່ອນກໍາລັງລົງ ເພາະເຮົາທັງຫລາຍບໍ່ຮູ້ວ່າພວກເຮົາຄວນຈະອ້ອນວອນຂໍສິ່ງໃດ ແຕ່ອົງພຣະວິນຍານຊົງຊ່ອຍຂໍແທນພວກເຮົາ ດ້ວຍການຖອດຫຸ່ນຢ່າງຫາຄໍາເວົ້າບໍ່ໄດ້ ແລະພຣະອົງຜູ້ຊົງສອດສ່ອງຮູ້ໃຈມະນຸດ ກໍຊົງຊາບຄວາມນຶກຄິດຂອງພຣະວິນຍານ ເພາະວ່າ ພຣະວິນຍານຊົງອ້ອນວອນຂໍສໍາລັບພວກໄພ່ພົນຂອງພຣະເຈົ້າຕາມນໍ້າພຣະທັຍພຣະອົງ (ຣມ 8:26-27)

ການດໍາເນີນຊີວິດຄຣິສຕຽນໂດຍອາສັຍຣິດອໍານາດຂອງພຣະວິນຍານເປັນຜູ້ທີ່ນໍາພາເຮົານັ້ນ ມີຄວາມສໍາຄັນຫລາຍ ພຣະວິນຍານບໍຣິສຸດແມ່ນບຸກຄົນລະພາບນຶ່ງຂອງພຣະເຈົ້າ ພຣະອົງມີໜ້າທີ່ໃນການນໍາພາຄຣິສຕຽນໃຫ້ມີຊີວິດທີ່ສໍາແດງຄວາມຮັກແລະຖວາຍຄວາມຈົງຮັກພັກດີຕໍ່ພຣະເຈົ້າ ໂດຍການເຊື່ອຟັງ ແລະດໍາເນີນຊີວິດຄຣິສຕຽນຢ່າງຖືກຕ້ອງແລະຖ່ອມໃຈ ພຣະວິນຍານບໍຣິສຸດຈະນໍາພາຜູ້ເຊື່ອໃຫ້ເກີດສະຕິປັນຍາ ແລະຮູ້ຈັກນໍ້າພຣະທັຍຂອງພຣະເຈົ້າ ພຣະອົງຊົງສະຖິດຢູ່ໃນເຮົາ ທໍາງານໃນຈິດໃຈເຮົາ ຊົງເປີດເຜີຍເຫດການລ່ວງໜ້າ ຊົງຕັກເຕືອນຮັກສາແລະນໍາໜ້າເຮົາ ຢູ່ອ້ອມຂ້າງປົກປ້ອງຮັກສາເຮົາຈາກຄວາມຊົ່ວຮ້າຍ ຢູ່ເໜືອເຮົາທີ່ສົມຄວນໄດ້ຮັບການການສັລເສີນ ແລະພຣະອົງຊົງຖ່ອມພຣະທັຍທີ່ຈະຕົກຕໍ່າລົງມາພ້ອມທີ່ຈະຊຸກຍູ້ຊວ້ານຊູເຮົາຂຶ້ນ ເພື່ອບໍ່ໃຫ້ຫລົງທາງຈາກພຣະເຈົ້າ ພຣະວິນຍານຂອງພຣະເຈົ້າຊົງເປັນຫ່ວງເຮົາ ພຣະອົງຊົງເປັນດັ່ງແມ່ນໍ້າແຫ່ງຊີວິດທີ່ເສີມກໍາລັງຊູຊ່ວຍເຮົາເມື່ອເຮົາອ່ອນແອ ພຣະອົງຊົງເປັນຄວາມສວ່າງແກ່ຊີວິດຂອງເຮົາ ໃຫ້ເຮົາເຫັນຮຸ່ງໃນຄວາມຊອບທັມເມື່ອເຮົາເຮັດຜິດ ພຣະອົງຊົງເປີດຕາ ເປີດໃຈຂອງເຮົາໃຫ້ເຂົ້າໃຈພຣະວັຈນະຂອງພຣະເຈົ້າ ແລະໃຫ້ເຫັນຄວາມຈິງຂອງຊີວິດຄຣິສຕຽນທີ່ແທ້ຈິງທຸກປະການ ພຣະວິນຍານບໍຣິສຸດແມ່ນກໍາລັງຊູຊ່ວຍເຮົາໃຫ້ດໍາເນີນຊີວິດສູ່ຄວາມຄົບບໍຣິບູນ ທີລະຂັ້ນທີລະຕອນໃຫ້ເຮົາໃຫຍ່ຂຶ້ນໃນຝ່າຍວິນຍານຈິດ ພຣະອົງຮ້ອງຫາໃຫ້ເຮົາເພິ່ງພາອາສັຍພຣະກໍາລັງຂອງພຣະເຈົ້າ

## ການເຕັມລົ້ນດ້ວຍພຣະວິນຍານບໍຣິສຸດ

ຄຣິສຕຽນທີ່ດຳເນີນຊີວິດໂດຍອາສັຍພຣະກຳລັງ ແລະການຊູຊ່ວຍຂອງພຣະວິນຍານບໍຣິສຸດ ແມ່ນຊີວິດຄຣິສຕຽນທີ່ເຊື່ອຟັງພຣະເຈົ້າ *"ເພາະວ່າພຣະວິນຍານຂອງພຣະເຈົ້າຊົງນຳພາຜູ້ໃດ ຜູ້ນັ້ນແຫລະ ເປັນບຸດຂອງພຣະເຈົ້າ"* ແມ່ນການຍອມໃຫ້ພຣະວິນຍານຄອບຄອງທຸກສ່ວນຂອງຊີວິດ ຊຶ່ງເປັນກຳລັງໃນການເສີມສ້າງເຮົາຂຶ້ນໃໝ່ ແມ່ນຊີວິດທີ່ມີການປ່ຽນແປງ ແລະເກີດການກໍ່ຮ່າງສ້າງຮູບແບບຊີວິດຄຣິສຕຽນ ທີ່ສະແດງເຖິງໂຄງຮ່າງທີ່ເຫັນໄດ້ ແລະສັມຜັສໄດ້ ແລະມີການຕອບສນອງຕໍ່ສັງຄົມດ້ວຍລັກສະນະທ່າທີທີ່ເປັນຄຣິສຕຽນ ມີຊີວິດທີ່ປະກອບດ້ວຍຜົນຂອງພຣະວິນຍານ **"ຝ່າຍຜົນຂອງພຣະວິນຍານນັ້ນ ຄືຄວາມຮັກ ຄວາມຍິນດີ ສັນຕິສຸກ ຄວາມອົດກັ້ນໄວ້ນານ ຄວາມປານີ ຄວາມດີ ຄວາມສັດຊື່ ຄວາມສຸພາບອ່ອນຫວານ ການຮູ້ຈັກບັງຄັບຕົນ"** (ຄາລາເຕັຽ 5:22-23) ຊຶ່ງເປັນທີ່ພໍພຣະທັຍພຣະເຈົ້າຫລາຍກວ່າດອກໄມ້ຫລືເຄື່ອງຖວາຍບູຊາອື່ນ ໆ ອີກທັງມີຄວາມແຕກຕ່າງກັບຜົນຂອງເນື້ອໜັງທີ່ປາກົດໃນພຣະທັມຄາລາເຕັຽ 5:19-21 **"ແຕ່ການງານຂອງມະນຸດທັມມະດານັ້ນກໍປາກົດແຈ້ງແລ້ວ ຄືການຫລິ້ນຊູ້ ການບໍ່ສະອາດ ການໂລພະຕັນຫາ ການໄຫວ້ພຣະທຽມ ການເຊື່ອເວດມົນຄາຖາ ການເປັນສັດຕຣູກັນ ການວິວາດຜິດຖຽງກັນ ການເຫິງສາກັນ ການຄຽດແຄ້ນກັນ ການໃຝ່ສູງຕໍ່ກັນ ການແຕກແຍກກັນ ການຖືພັກຖືພວກ ການອິດສາກັນ ການເສບສຸຣາຢາເມົາ ການກິນລ້ຽງຢ່າງຊົ່ວຊ້າ ແລະການອື່ນ ໆ ໃນທຳນອງນີ້ອີກ ເຮົາຂໍເຕືອນເຈົ້າທັງຫລາຍເໝືອນກັບທີ່ເຮົາໄດ້ເຕືອນພວກເຈົ້າລ່ວງໜ້າແລ້ວວ່າ ຄົນທີ່ເຄີຍເຮັດການຢ່າງນັ້ນຈະບໍ່ມີສ່ວນໃນຣາຊອານາຈັກຂອງພຣະເຈົ້າ"** ເມື່ອຄຣິສຕຽນຜູ້ສາມາດບັນລຸເຖິງຈຸດນີ້ ໂດຍມີຜົນຂອງພຣະວິນຍານຢ່າງເຕັມບໍຣິບູນແລ້ວ ເຮົາຕ້ອງຍອມຮັບວ່າ ຜູ້ນັ້ນແມ່ນເຕັມລົ້ນໂດຍພຣະວິນຍານ ສັນຍາລັກຂອງການເຕັມລົ້ນໃນພຣະວິນຍານນັ້ນ ບໍ່ແມ່ນຜູ້ເວົ້າເກັ່ງ ບໍ່ແມ່ນຜູ້ມີຣິດອຳນາດ ບໍ່ແມ່ນຜູ້ປາກໄດ້ຫລາຍພາສາ ຫລືຮັກສາພະຍາດ ສິ່ງທີ່ໄດ້ກ່າວມານີ້ແມ່ນຂອງປະທານຫລາຍກວ່າ ແຕ່ຜູ້ທີ່ເຕັມລົ້ນດ້ວຍພຣະວິນຍານ ແມ່ນຜູ້ທີ່ເຊື່ອຟັງພຣະເຈົ້າ ແມ່ນຜູ້ທີ່ອ່ອນນ້ອມຖ່ອມໃຈ ແມ່ນຜູ້ທີ່ຂໍອາສັຍກຳລັງຈາກພຣະວິນຍານບໍຣິສຸດໃຫ້ເສີມແຮງໃນການດຳເນີນຊີວິດ ຕິດຕາມແບບຢ່າງຂອງພຣະຄຣິສ ແລະແມ່ນຜູ້ທີປາກົດຊີວິດອອກມາດ້ວຍຜົນຂອງພຣະວິນຍານຕາມທີ່ໄດ້ກ່າວມາແລ້ວ ຊຶ່ງພຣະເຈົ້າຊົງພໍພຣະທັຍຫລາຍ ເພາະວ່າພຣະເຢຊູຄຣິສເປັນແບບຢ່າງທີ່ພໍພຣະທັຍຂອງພຣະເຈົ້າໂດຍການຍອມເຊື່ອຟັງດ້ວຍຊີວິດຂອງພຣະອົງເອງ **"ເມື່ອຊົງປາກົດພຣະອົງໃນສະພາບມະນຸດແລ້ວ ພຣະອົງກໍຊົງຖ່ອມພຣະອົງລົງ ຍອມເຊື່ອຟັງຈົນເຖິງຄວາມມໍຣະນາ ຄືເຖິງຄວາມມໍຣະນາທີ່ໄມ້ກາງແຂນ"** (ຟປ 2:8)

**"ຂໍໃຫ້ນັກສຶກສາເຮັດລາຍງານຕາມຂໍ້ກຳນົດໃນໜ້າຕໍ່ໄປ"**

## ຂໍ້ກຳນົດການລາຍງານບົດຮຽນ (Report)

ນັກສຶກສາຕ້ອງຂຽນລາຍງານຄວາມເຂົ້າໃຈຂອງທ່ານ 5 ໜ້າເຈັ້ຽ ໂດຍສຶກສາຈາກບົດຮຽນຂ້າງລຸ່ມ ລາຍງານຂອງທ່ານຈະຕ້ອງກ່າວເຖິງຫົວຂໍ້ຕໍ່ໄປນີ້

- ຊື່ແລະນາມສກຸລຂອງທ່ານ [illegible]
- ຊື່ວິທຍາເຂດຫລືຊື່ເມືອງທີ່ເປັນສູນສຶກສາ [illegible]
- ຫົວຂໍ້ເຣື່ອງ [illegible]
- ເນື້ອຫາ [illegible]
- ຂໍ້ຄວາມຄິດເຫັນ ແລະຂໍ້ສລູບຈາກການສຶກສາ ບົດຮຽນຕໍ່ໄປນີ້
- ສົ່ງລາຍງານຄືນທາງໂຮງຮຽນພາຍໃນວັນທີ່ 15 ສິງຫາ (August) 2006 ຂໍໃຫ້ພິມຫລືຂຽນດ້ວຍລາຍມືທີ່ອ່ານໄດ້ງ່າຍ



## ຊີວິດທີ່ຢູ່ໃນພຣະວິນຍານບໍຣິສຸດ
## Spiritual Life

ພຣະເຢຊູຄຣິສໄດ້ສະເດັດມາເພື່ອໃຫ້ຄຣິສຕຽນໄດ້ຮັບຊີວິດທີ່ຄົບບໍຣິບູນ ຊຶ່ງສິ່ງນີ້ເກີດມາຈາກແບບຢ່າງການດຳເນີນຊີວິດຂອງພຣະເຢຊູຄຣິສ ດັ່ງນັ້ນເມື່ອຄຣິສຕຽນໄດ້ດຳເນີນຊີວິດຕາມແບບຢ່າງຂອງພຣະອົງແລ້ວ ເຮົາກໍຈະໄດ້ຮັບຜົນຂອງພຣະວິນຍານບໍຣິສຸດຢ່າງເຕັມປ່ຽມ ແລະມີຊີວິດທີ່ຖວາຍພຣະກຽດຕິຍົດແດ່ພຣະເຈົ້າ ຊຶ່ງການທີ່ຈະມີຊີວິດເຊັ່ນນີ້ໄດ້ນັ້ນ ບໍ່ແມ່ນເປັນການພຍາຍາມກະທຳດ້ວຍກຳລັງຂອງຕົນເອງ ແຕ່ຂຶ້ນຢູ່ກັບການເພິ່ງອາສັຍພຣະວິນຍານບໍຣິສຸດ ພຣະອົງຊົງເປັນບຸກຄົນ ຊົງສະຖິດຢູ່ໃນຊີວິດຂອງເຮົາສເມີ ແລະຊົງເຮັດວຽກຜ່ານຊີວິດຂອງເຮົາໄດ້ທຸກເວລາ ພຣະວິນຍານບໍຣິສຸດຈຶ່ງຊົງສະແດງຊີວິດຂອງພຣະເຢຊູຄຣິສຜ່ານທາງຊີວິດຂອງເຮົາໄດ້ ພຣະອົງຊົງເປັນຜູ້ເປີດເຜີຍແຜນການຂອງພຣະເຈົ້າໃຫ້ແກ່ເຮົາ ແລະຊົງເປັນຜູ້ນຳເຮົາໃຫ້ກະທຳຕາມນ້ຳພຣະທັຍຂອງພຣະເຈົ້າໃນທຸກເຫດການ ດັ່ງນັ້ນເມື່ອເຮົາເປັນຄຣິສຕຽນແລ້ວ ເຮົາຈຶ່ງຄວນທີ່ຈະຖາມວ່າຕົວຂອງເຮົາເອງວ່າ ໄດ້ດຳເນີນຊີວິດຢູ່ໃນພຣະວິນຍານບໍຣິສຸດຫຫລາຍພຽງໃດ ຍິ່ງເຮົາດຳເນີນຊີວິດຢູ່ໃນພຣະວິນຍານບໍຣິສຸດຫລາຍ ເຮົາກໍຈະມີຊີວິດທີ່ເປັນເໝືອນພຣະຄຣິສຫລາຍຍິ່ງຂຶ້ນເທົ່ານັ້ນ ດັ່ງນັ້ນການອົບຮົມເພື່ອທີ່ຈະພັດທະນາບຸກຄະລິກກະພາບຂອງຄຣິສຕຽນ ຈຶ່ງຕ້ອງເພິ່ງພາອາສັຍະວິນຍານບໍຣິສຸດເປັນສຳຄັນ ເພາະໂດຍກຳລັງແລະຄວາມພຍາຍາມຂອງເຮົາເອງແລ້ວ ສິ່ງນີ້ຍ່ອມເປັນໄປບໍ່ໄດ້ຢ່າງແນ່ນອນ ການທີ່ພຣະເຈົ້າຊົງສະຖິດແລະຊົງຄອບຄອງຊີວິດຂອງຄຣິສຕຽນນັ້ນເປັນເລື່ອງທີ່ໜ້າອັດສະຈັນ ຊຶ່ງຖ້າຜູ້ເຊື່ອໄດ້ຮູ້ເຖິງຄວາມຈິງທີ່

ຍິ່ງໃຫຍ່ນີ້ແລ້ວ ກໍຈະເຮັດໃຫ້ຖວາຍຊີວິດແດ່ພຣະເຈົ້າຢ່າງສິ້ນເຊີງ ແລ້ວເຮົາກໍຈະໄດ້ຮັບປະສົບການທີ່ໜ້າຕື່ນເຕັ້ນ ແລະໄດ້ຮັບສິດທິພິເສດທີ່ຍິ່ງໃຫຍ່ເປັນຜົນຕາມມາ

ໃນບົດຮຽນນີ້ເຮົາຈະສຶກສາວ່າ ພຣະວິນຍານບໍຣິສຸດນັ້ນຄືຜູ້ໃດແລະການເຕັມປ່ຽມດ້ວຍພຣະວິນຍານບໍຣິສຸດນັ້ນມີຄວາມໝາຍຢ່າງປານໃດ ລວມທັງສຶກສາກ່ຽວກັບຄວາມບາບທີ່ເປັນການກະບົດຕໍ່ພຣະວິນຍານບຣິສຸດ ແລະການດຳເນີນຊີວິດຢູ່ໃນພຣະວິນຍານບໍຣິສຸດທຸກເວລາວ່າເປັນຢ່າງໃດດ້ວຍ ຈຶ່ງຫວັງເປັນຢ່າງຍິ່ງວ່າ ຜູ້ຮຽນຈະໄດ້ພົບກັບຄວາມລ້ຳເລີກຂອງຊີວິດທີ່ດຳເນີນກັບພຣະວິນຍານບໍຣິສຸດຢ່າງແທ້ຈິງ ແລະຍອມຈຳນົນໃຫ້ພຣະເຈົ້າເປັນຜູ້ຄອບຄອງຊີວິດ ຊຶ່ງສິ່ງນີ້ເປັນປະສົບການທີ່ຢູ່ເໜືອຄວາມເຂົ້າໃຈຂອງມະນຸດ

## ນຶ່ງ. ການເຕັມປ່ຽມດ້ວຍພຣະວິນຍານບໍຣິສຸດ

1. **ຄວາມໝາຍຂອງການເຕັມປ່ຽມດ້ວຍພຣະວິນຍານບຣິສຸດ ໝາຍເຖິງ**
   1) ການເຕັມປ່ຽມໄປດ້ວຍພຣະເຢຊູຄຣິສແລະມີຊີວິດຢູ່ໃນຂອງພຣະເຈົ້າ (ຢຮ15:1-8)
   2) ຊີວິດທີ່ຄົບບໍຣິບູນ ຊຶ່ງມີແມ່ນ້ຳທີ່ມີນ້ຳທຳຣົງຊີວິດ ໄຫລອອກມາຈາກພາຍໃນຜູ້ເຊື່ອ
   3) ການໄດ້ຮັບຣິດເດດໃນການເປັນພະຍານເຖິງພຣະເຢຊູຄຣິສ
   4) ການເກີດຜົນຂອງພຣະວິນຍານພາຍໃນຊີວິດ ແລະເກີດຜົນດ້ານການປະກາດພາຍນອກ (ຄຕ 5:22-23, ຢຮ 15:8, 16)
   5) ການມີປະສົບການທີ່ພະເຢຊູຄຣິສ ຊົງສະຖິດຢູ່ພາຍໃນຊີວິດ (ກຈ 2:20)
2. **ເຫດຜົນທີ່ຄຣິສຕຽນສ່ວນໃຫຍ່ບໍ່ໄດ້ມີປະສົບການ ການເຕັມປ່ຽມດ້ວຍພຣະວິນຍານ**
   1) ມີຄວາມບາບທີ່ຍັງບໍ່ໄດ້ສາຣະພາບຕໍ່ພະເຈົ້າ ເຊັ່ນ ຄວາມສົງສັຍຕໍ່ພຣະເຈົ້າ ການມີນິສັຍທີ່ມັກຈັບຜິດຜູ້ອື່ນ ຄວາມບາບຄວາມຜິດຫວັງແລະອື່ນ ໆ (ພສສ. 66:18)
   2) ບໍ່ມີຄວາມເຂົ້າໃຈວ່າຈະເຕັມປ່ຽມດ້ວຍພຣະວິນຍານບໍຣິສຸດໄດ້ຢ່າງໃດ
      - ❖ ຄຣິສຕຽນເນື້ອໜັງຈະບໍ່ມີຄວາມເຂົ້າໃຈເຖິງການເຕັມປ່ຽມດ້ວຍພຣະວິນຍານບໍຣິສຸດວ່າເປັນແນວໃດ ຊຶ່ງຖ້າພວກເຂົາມີຄວາມເຂົ້າໃຈເຖິງສິ່ງນີ້ຢ່າງແທ້ຈິງແລ້ວ ກໍຈະກາຍເປັນຄຣິສຕຽນທີ່ເຕັມປ່ຽມດ້ວຍພຣະວິນຍານບໍຣິສຸດໄດ້
      - ❖ ຄຣິສຕຽນທີ່ຍາກຈົນຝ່າຍຈິດວິນຍານ ຊຶ່ງບໍ່ຮູ້ຈັກສະພາບຂອງຕົນເອງ ການບໍ່ສແວງຫາເຮັດໃຫ້ບໍ່ຮູ້ວ່າຕົນເອງມີຂຸມຊັບອັນລ້ຳຄ່າຢູ່ໃນພຣະເຢຊູຄຣິສ ແລະບໍ່ຮູ້ຈັກຫລືລະເລີຍທີ່ຈະຮັບເອົາຊີວິດທີ່ຄົບບຣິບູນ (ກຊ 2:9-10)
      - ❖ ຄຣິສຕຽນສ່ວນໃຫຍ່ມັກຈະພຍາຍາມກະທຳຕາມກົດເກນຂອງພຣະເຈົ້າ ໂດຍອາສັຍກຳລັງຂອງຕົນເອງ ຈຶ່ງຕ້ອງພົບກັບຄວາມອ່ອນແອ ແລະມີຄວາມຮູ້ສຶກທີ່ຕົກຕ່ຳ ຊຶ່ງຕາມຄວາມຈິງແລ້ວການດຳເນີນຊີວິດຄຣິສຕຽນນັ້ນບໍ່ແມ່ນເປັນເຣື່ອງທີ່ຍາກ ແຕ່ເຮົາບໍ່ສາມາດທີ່ຈະອາສັຍ

ກຳລັງຂອງຕົນເອງ ເພາະຂຸມພລັງຂອງຄຣິສຕຽນມີຢູ່ທີ່ພຣະເຈົ້າເທົ່ານັ້ນ *"ນີ້ເປັນຄຳສັ່ງສອນຂອງພຣະເຈົ້າທີ່ໃຫ້ໄວ້ກັບເສລຸບາເບນ ວ່າບໍ່ແມ່ນດ້ວຍກຳລັງ ບໍ່ແມ່ນດ້ວຍຣິດທານຸພາບ ແຕ່ດ້ວຍວິນຍານຂອງເຮົາ ພຣະເຈົ້າຈອມໂຍທາ ຕັດດັ່ງນີ້ແຫລະ"* (ສກຢ 4:6)

3) **ມີຄວາມເຂົ້າໃຈຜິດຕໍ່ພຣະເຈົ້າ ແລະເກີດຄວາມຢ້ານຂຶ້ນມາໃນຊີວິດຂອງພວກເຂົາ** (ຢຮ. 8:44)
   - ❖ ມີຄວາມສົງສັຍໃນຄວາມຮັກໝັ້ນຄົງຂອງພຣະເຈົ້າ ເພາະບໍ່ຮູ້ຈັກຄວາມຈິງ ຖ້າພວກເຂົາໄດ້ຮູ້ເຖິງຄວາມຮັກທີ່ຍິ່ງໃຫຍ່ຂອງພຣະເຈົ້າແລ້ວ ຄວາມຢ້ານກໍຈະຫາຍໄປຢ່າງອັຕໂນມັດ (ຢຮ.3:16, ຣມ.5:8, 1 ຢຮ. 4:18)
   - ❖ ບໍ່ຮູ້ຄວາມຈິງວ່າພຣະເຈົ້າຊົງມີແຜນການທີ່ດີເລີດສຳລັບຊີວິດຂອງພວກເຂົາ ແລະຢ້ານວ່າພຣະເຈົ້າຈະຊົງປ່ຽນແປງແຜນການຊີວິດຂອງພວກເຂົາ ແລະເຮັດໃຫ້ພວກເຂົາຕ້ອງພົບກັບຄວາມຜິດຫວັງແທນ
   - ❖ ຢ້ານວ່າພຣະເຈົ້າຈະຊົງສັ່ງໃຫ້ເຮັດວຽກຊຶ່ງເປັນໄປບໍ່ໄດ້ ແຕ່ທີ່ຈິງແລ້ວພຣະເຈົ້າຊົງເປັນຜູ້ໂຜດປະທານກຳລັງ ແລະຊົງເພີ່ມເຕີມສິ່ງທີ່ຈຳເປັນໃຫ້ສເມີ (ຟປ 4:19)
   - ❖ ຢ້ານວ່າພຣະເຈົ້າຈະຊົງເອົາຄວາມລົ້ງເຄີຍ ສິ່ງທີ່ຕົນເຄີຍເຮັດຕາມເນື້ອໜັງເກົ່າ ແລະເອົາຄວາມມ່ວນຊື່ໄປຈາກຊີວິດ ແຕ່ທີ່ຈິງແລ້ວພຣະເຢຊູຄຣິສໄດ້ຊົງສະເດັດມາ ເພື່ອທີ່ຈະຊົງໂຜດປະທານຊີວິດທີ່ຄົບບໍຣິບູນໃຫ້ແກ່ເຮົາ (ຢຮ 10:10)

## 3. ວິທີການທີ່ຈະບັນລຸເຖິງການເຕັມປ່ຽມດ້ວຍພຣະວິນຍານບໍຣິສຸດ

1) ຄຣິສຕຽນຈະຕ້ອງຮູ້ວ່າພຣະວິນຍານບໍຣິສຸດ ຄືຜູ້ໃດແລະສະເດັດມາເພື່ອຫຍັງ ລວມທັງຈະຕ້ອງຮູ້ຄວາມໝາຍວ່າການເຕັມປ່ຽມດ້ວຍພຣະວິນຍານບໍຣິສຸດນັ້ນຄືຫຍັງ
2) ຈະຕ້ອງມີຄວາມຫິວກະຫາຍ ແລະສແວງຫາຄວາມຊອບທັມແລະຣິດເດດຂອງພຣະເຈົ້າສຸດຊີວິດເໝືອນກວາງນ້ອຍທີ່ກະເສືອກກະສົນຫານ້ຳໃນລຳທານ (ພສສ 42:1-2, ມທ 5:6, ຢຮ 7:37)
3) ຈົ່ງສາຣະພາບຄວາມຜິດບາບທີ່ພຣະວິນຍານບໍຣິສຸດໄດ້ຊົງສະແດງໃຫ້ແກ່ທ່ານ ເພື່ອທີ່ຈະໄດ້ຮັບການອະພັຍໂທດແລະການຊົງຊຳຣະໃຫ້ບໍຣິສຸດຈາກພຣະເຈົ້າ (1 ຢຮ 1:9)
4) ຈະຕ້ອງມີຄວາມເຊື່ອ (ຄຕ. 3:14) ເພາະຖ້າການກະທຳໃດໆ ຂອງເຮົາທີ່ບໍ່ມີຄວາມເຊື່ອຮ່ວມຢູ່ດ້ວຍກໍເປັນການບາບທັງສິ້ນ ແລະເປັນສິ່ງທີ່ພຣະເຈົ້າບໍ່ຊົງພໍພຣະທັຍເລີຍ (ຮຣ 11:6, ຣມ 14:23) ດັ່ງນັ້ນ ຄຣິສຕຽນຈຶ່ງຕ້ອງເຊື່ອໃນພຣະບັນຊາແລະພຣະສັນຍາຂອງພຣະເຈົ້າ
   - ❖ ພຣະບັນຊາຂອງພຣະເຈົ້າ ຄື **"ຈົ່ງປະກອບດ້ວຍພຣະວິນຍານບໍຣິສຸດ"** (ອຟ 5:18) ການເຕັມປ່ຽມດ້ວຍພຣະວິນຍານບໍຣິສຸດນັ້ນ ໝາຍເຖິງການທີ່ພຣະເຈົ້າຊົງຄອບຄອງຊີວິດຢ່າງຕໍ່ເນື່ອງບໍ່ແມ່ນພຽງເທື່ອດຽວ
   - ❖ ພຣະສັນຍາຂອງພຣະເຈົ້າ ຄື **"..... ຖ້າເຮົາທູນຂໍສິ່ງໃດທີ່ເປັນພຣະປະສົງຂອງພຣະອົງ ພຣະອົງກໍຊົງໂຜດຟັງເຮົາ"** (1ຢຮ.5:14-15) ການເຕັມປ່ຽມດ້ວຍພຣະວິນຍານນັ້ນເປັນພຣະປະສົງຂອງ

ພຣະເຈົ້າ ດັ່ງນັ້ນພຣະອົງຈຶ່ງພ້ອມຟັງຄຳອະທິຖານຂອງເຮົາຢູ່ສເມີ ຖ້າເຮົາທູນຂໍຕໍ່ພຣະອົງດ້ວຍຄວາມຈິງໃຈແລ້ວ ເຮົາກໍຈະໄດ້ຮັບການເຕັມປ່ຽມດ້ວຍພຣະວິນຍານບໍຣິສຸດຢ່າງແນ່ນອນ ເພາະວ່າພຣະເຈົ້າຊົງປາຖນາທີ່ຈະປະທານສິ່ງນີ້ໃຫ້ແກ່ເຮົາຫລາຍກວ່າຄວາມຕ້ອງການທີ່ເຮົາມີຢູ່ເສັຽອີກ

- ❖ ຄຣິສຕຽນຈະຕ້ອງດຳເນີນຊີວິດໂດຍຄວາມເຊື່ອເທົ່ານັ້ນ (ຣມ 1:17, ຄຕ 3:11)

5) ຈະຕ້ອງອະທິຖານວິງວອນຢ່າງຈິງຈັງ ເພື່ອທີ່ຈະໄດ້ຮັບການເຕັມປ່ຽມດ້ວຍພະວິນຍານບໍລິສຸດ (ລກ 11:13)

- ❖ ຈົ່ງອະທິຖານທູນຂໍດ້ວຍຄຳເວົ້າທີ່ເຂົ້າໃຈງ່າຍ ໆ ແລະຕາມຄວາມຈິງ ເພາະວ່າພຣະເຈົ້າຊົງທອດພຣະເນດເບິ່ງພາຍໃນຈິດໃຈຂອງທ່ານຢູ່ຕລອດເວລາ
- ❖ ຈົ່ງມີຄວາມເຊື່ອວ່າພຣະເຈົ້າຈະຊົງໂຜດປະທານໃນສິ່ງທີ່ທ່ານໄດ້ທູນຂໍຢ່າງແນ່ນອນ (ມກ 11:24, ຢກ 1:6, ມທ 7:7)
- ❖ ຈົ່ງທູນຂໍໃຫ້ພຣະວິນຍານບໍຣິສຸດຊົງເຕັມປ່ຽມພາຍໃນຊີວິດຂອງທ່ານ ດ້ວຍຈິດໃຈທີ່ກ້າຫານເພາະພຣະວິນຍານບໍຣິສຸດຊົງສະຖິດຢູ່ພາຍໃນຈິດໃຈຂອງທ່ານຢູ່ແລ້ວ
- ❖ ພຣະເຈົ້າຊົງຕ້ອງການທີ່ຈະໃຫ້ເຮົາໄດ້ເຕັມປ່ຽມດ້ວຍພຣະວິນຍານບຣິສຸດຢູ່ສເມີ ເຮົາຈຶ່ງຄວນທີ່ຈະມີຄວາມກ້າໃນການທູນຂໍຕໍ່ພຣະອົງ ໂດຍບໍ່ມີຄວາມຍ້ານກົວ

6) ເຮົາຄວນທີ່ຈະຂອບຄຸນພຣະເຈົ້າ ເພື່ອເປັນການສະແດງເຖິງຄວາມເຊື່ອວ່າ ພຣະເຈົ້າໄດ້ຊົງໃຫ້ເຮົາມີຊີວິດທີ່ເຕັມປ່ຽມດ້ວຍພຣະວິນຍານບໍລິສຸດແລ້ວ

7) ເຮົາຕ້ອງຖວາຍຊີວິດທັງໝົດແດ່ພຣະເຈົ້າດ້ວຍຄວາມກະຕືລືລົ້ນ ແລະຈະຕ້ອງມີຄວາມຕັ້ງໃຈໃນການເຊື່ອຟັງພຣະເຈົ້າຢ່າງເຕັມທີ່ ໃນການດຳເນີນຊີວິດຕາມແບບຄຣິສຕຽນທຸກມື້

**4. ຊີວິດທີ່ເຕັມປ່ຽມດ້ວຍພຣະວິນຍານບໍຣິສຸດນັ້ນສາມາດຈະພິສູດໄດ້ຈາກ**

1) ການມີຄວາມເຊື່ອຕໍ່ພຣະສັນຍາຂອງພຣະເຈົ້າທີ່ມີໃນພຣະວັຈນະຂອງພຣະອົງ

- ❖ ຊີວິດທີ່ເຊື່ອຟັງຕໍ່ນ້ຳພຣະທັຍຂອງພຣະເຈົ້າຢ່າງເຕັມທີ່ ການມອບຖວາຍຊີວິດແດ່ພຣະເຈົ້າ ແລະການມີຊີວິດທີ່ອະທິຖານທູນຂໍການເຕັມລົ້ນດ້ວຍພຣະວິນຍານຢູ່ສເມີນັ້ນ ເປັນສພາບທີ່ພຣະເຈົ້າຊົງໂຜດປະທານຊີວິດທີ່ເຕັມລົ້ນດ້ວຍພຣະວິນຍານບໍຣິສຸດໃຫ້ຢ່າງແນ່ນອນ
- ❖ ມີຄວາມເຊື່ອຕໍ່ພຣະສັນຍາຂອງພຣະເຈົ້າວ່າເປັນຄວາມຈິງ ບໍ່ວ່າຈະມີຄວາມຮູ້ສຶກຢ່າງໃດກໍຕາມ




- ❖ ມີຄວາມເຊື່ອວ່າພຣະເຈົ້າຟັງຄຳອະທິຖານ ແລະເຮົາໝັ້ນໃຈໄດ້ຮັບສິ່ງນັ້ນແລ້ວ

2) ວັດແທກຊີວິດສ່ວນຕົວ

- ❖ ທ່ານມີຄວາມຕື່ນເຕັ້ນໃນຄວາມຮັກຂອງພຣະເຢຊູຄຣິສຫລືບໍ່
- ❖ ທ່ານມີຄວາມຫ່ວງໃຍຜູ້ທີ່ຍັງບໍ່ຮູ້ຈັກຄວາມຮັກແລະການອະພັຍໂທດບາບຈາກພຣະເຢຊູຄຣິສ ຢ່າງຈິງຈັງຫລືບໍ່
- ❖ ທ່ານມີຄວາມຮັບຜິດຊອບຕໍ່ໜ້າທີ່ໃນການປະກາດປະເສີດຂອງພຣະເຢຊູຄຣິສດ້ວຍຄວາມເຊື່ອຢ່າງກ້າຫານຫລືບໍ່

ຖ້າທ່ານມີສິ່ງເຫລົ້ານີ້ຢູ່ໃນຊີວິດ ກໍສະແດງວ່າທ່ານມີຊີວິດທີ່ເຕັມລົ້ນດ້ວຍພຣະວິນຍານບໍຣິສຸດແລ້ວ

**5. ການມີຊີວິດທີ່ເຕັມປ່ຽມດ້ວຍພຣະວິນຍານບໍຣິສຸດຢູ່ສເມີ**

1) ຈົ່ງພາວະນາເຖິງຄວາມຈິງທີ່ວ່າ ພຣະເຢຊູຄຣິສຜູ້ຊົງພຣະຊົນຢູ່ ໄດ້ຊົງສະຖິດຢູ່ໃນຈິດໃຈຂອງທ່ານ (ມທ 28:20, ຢຮ 3:20) ດັ່ງນັ້ນທ່ານຈຶ່ງໄດ້ຕາຍຕໍ່ເນື້ອໜັງ ຄວາມບາບແລະໂລກແລ້ວ ໂດຍທາງພຣະເຢຊູຄຣິສ ຈົ່ງພິຈາຣະນາເຖິງສິ່ງນີ້ຢ່າງສມ່ຳສເມີ (ຣມ 6:11, ຄຕ 2:20)

2) ຈົ່ງເຊື່ອຟັງຄຳສັ່ງສອນຂອງພຣະເຈົ້າຢ່າງເຕັມທີ່ (ຣມ 12:1-2)

3) ຈົ່ງຕັ້ງເວລາໃນການອະທິຖານທຸກມື້ ເພື່ອທູນຂໍການຊົງນຳຈາກພຣະເຈົ້າ ໃນການດຳເນີນຊີວິດປະຈຳວັນ ແລະການນຳວິນຍານຄົນທີ່ຫລົງຫາຍເພື່ອໃຫ້ໄດ້ຮັບຄວາມພົ້ນ (ອຟ 18, 1 ຊມອ 12:23)

4) ຈົ່ງອ່ານແລະສຶກສາຄຳສັ່ງສອນຂອງພຣະເຈົ້າທຸກມື້ (ຮຣ 4:12, ກຈ 17:11, ພສສ 119:11)

5) ຢ່າໃຫ້ພຣະວິນຍານບໍຣິສຸດເສັຽພຣະທັຍ ແລະຢ່າດັບພຣະວິນຍານ (ອຟ 4:30, 1 ທຊ 5:19)

6) ຈົ່ງມີຄວາມຫິວກະຫາຍທີ່ຈະຕິດສະນິດກັບພຣະວິນຍານຢູ່ສເມີ (ຢກ 4:5)

7) ຈົ່ງມີຈິດໃຈທີ່ກະຕືລືລົ້ນໃນການທີ່ຈະກະທຳຕາມນ້ຳພຣະທັຍຂອງພຣະເຈົ້າ ແລະມີຊີວິດທີ່ຖວາຍພຣະກຽດຕິຍົດແດ່ພຣະເຈົ້າ ໂດຍການເພິ່ງອາສັຍພຣະວິນຍານບໍຣິສຸດ (1 ກທ 10:31)



**6. ຄວາມບາບຕ່າງ ໆ ທີ່ຂັດຂວາງການເຮັດວຽກງານຂອງພຣະວິນຍານບໍຣິສຸດ**

ການທີ່ເຮົາບໍ່ເຊື່ອຟັງພຣະວິນຍານບໍຣິສຸດນັ້ນ ເປັນການເຮັດໃຫ້ພຣະວິນຍານບໍຣິສຸດຊົງເສັຽພຣະທັຍເພາະພຣະອົງຊົງມີພຣະລັກສະນະຄວາມເປັນບຸກຄົນຢູ່ ດັ່ງນັ້ນເຮົາຈຶ່ງບໍ່ຄວນທີ່ຈະກະທຳບາບທັງທີ່ເຈດຕະນາຫລືບໍ່ເຈດຕະນາກໍຕາມ ລັກສະນະຂອງການບໍ່ເຊື່ອຟັງພຣະວິນຍານບໍຣິສຸດນັ້ນ ຄື

1) **ການໝິ່ນປະມາດຕໍ່ພຣະວິນຍານບໍຣິສຸດດ້ວຍຄວາມຕັ້ງໃຈ** (ມທ 12:11-12)

ການໝິ່ນປະມາດຕໍ່ພຣະວິນຍານບໍຣິສຸດ ແມ່ນຄວາມບາບທີ່ບໍ່ສາມາດຈະຮັບການຍົກໂທດໄດ້ ແລະເປັນຄວາມບາບທີ່ໜ້າຢ້ານຫລາຍທີ່ສຸດໃນໂລກ ເພາະເປັນການໝິ່ນຣິດທານຸພາບຂອງພຣະເຈົ້າ ເຊັ່ນ ການທີ່ມະນຸດບໍ່ຮູ້ຈັກພຣະເຢຊູຄຣິດນັ້ນກໍຈະປະຕິເສດພຣະອົງໄດ້ ແລະພຣະເຈົ້າຊົງໂຜດຍົກໂທດໃຫ້ເມື່ອພວກເຂົາໄດ້ກັບໃຈບັງເກີດໃໝ່ ແລະຍອມຮັບພຣະເຢຊູຄຣິດເປັນພຣະຜູ້ໄຖ່ໃນຊີວິດຂອງພວກເຂົາ ແຕ່ຖ້າພວກເຂົາໄດ້ຮູ້ຈັກຄວາມຈິງແລະເຫັນເຖິງຣິດທານຸພາບຂອງພຣະວິນຍານທີ່ໄດ້ຊົງເຮັດວຽກຜ່ານທາງຂ່າວປະເສີດ ແລ້ວກັບປະຕິເສດບໍ່ຍອມຮັບເຊື່ອຟັງ ພວກເຂົາກໍຈະໄດ້ຮັບໂທດເຊັ່ນດຽວກັບພວກນັກທັມທີ່ໄດ້ກ່າວຮ້າຍຕໍ່ພຣະເຢຊູຄຣິສ ວ່າພຣະອົງຊົງເຮັດວຽກແລະຂັບຜີໂດຍໃຊ້ອຳນາດຂອງມານຊາຕານ ຊຶ່ງເປັນການກ່າວໝິ່ນປະມາດຕໍ່ພຣະວິນຍານບໍຣິສຸດຢ່າງຮຸນແຮງ (ມກ 3:22-30)

2) **ການຂັດຂືນຕໍ່ພຣະວິນຍານບໍຣິສຸດດ້ວຍຄວາມຍິ່ງຜະຍອງ** (ຮຣ 10:29)

ພຣະວິນຍານບໍຣິສຸດເປັນຜູ້ທີ່ຊົງສະແດງພຣະຜູ້ໄຖ່ໃຫ້ແກ່ຄົນບາບ ແຕ່ການປະຕິເສດບໍ່ຍອມຮັບງານຂອງພຣະວິນຍານບໍຣິສຸດ ດ້ວຍການບໍ່ເຊື່ອນັ້ນເປັນການຂັດຂືນຕໍ່ພຣະວິນຍານບໍຣິສຸດ ປຽບເໝືອນກັບການທີ່ຄົນບາບໄດ້ບອກກັບພຣະວິນຍານບໍຣິສຸດວ່າ ການໄຖ່ບາບຂອງພຣະເຢຊູຄຣິສນັ້ນ ເປັນເຣື່ອງທີ່ຕົວະແລະຫລອກລວງ ແລະມີວິທີການອື່ນທີ່ຈະໄດ້ຮັບຄວາມພົ້ນອີກຫລາຍ ໆ ທາງ ເພາະພວກທີ່ບໍ່ມີຄວາມເຊື່ອເຫັນວ່າການສິ້ນພຣະຊົນເທິງໄມ້ກາງແຂນຂອງພຣະເຢຊູຄຣິດນັ້ນ ເປັນເຣື່ອງທີ່ທັມມະດາເຊັ່ນດຽວກັບຄວາມຕາຍຂອງຄົນທົ່ວໄປ ຊຶ່ງການປະຕິເສດຄວາມເປັນພຣະເຈົ້າຂອງພຣະເຢຊູຄຣິສແລະພຣະໂລຫິດທີ່ລ້ຳຄ່າຂອງພຣະອົງນັ້ນ ເປັນການດູໝິ່ນການເປັນພຍານຂອງພຣະວິນຍານບໍຣິສຸດດ້ວຍ (1 ຢຮ 5:8)

3) **ການບໍ່ເຊື່ອຟັງເຮັດໃຫ້ພຣະວິນຍານບໍຣິສຸດເສັຽພຣະທັຍເຖິງພຣະພິໂຣດ** (ອຊຢ 63:10)

ຕົວຢ່າງໃນເຣື່ອງນີ້ເຮົາຈະເຫັນໄດ້ຈາກຊີວິດຂອງຊາວອິສຣາເອນ ແທ້ທີ່ຈິງແລ້ວຄວາມຮັກໝັ້ນຄົງຂອງພຣະເຈົ້ານັ້ນບໍ່ມີມື້ປ່ຽນແປງ ເຖິງແມ່ນວ່າຊົນຊາດອິສຣາເອນຈະລົ້ມເຫລວໃນການເຊື່ອຟັງພຣະເຈົ້າກໍຕາມ ແຕ່ມະນຸດໃນສມັຍປັດຈຸບັນນີ້ແຮງກະບົດຕໍ່ພະເຈົ້າຫລາຍກວ່ານັ້ນເສັຽອີກ ດັ່ງນັ້ນເຮົາຈຶ່ງຄວນຄິດເບິ່ງວ່າການກະທຳໃຫ້ພຣະເຈົ້າຊົງເສັຽພຣະທັຍນັ້ນ ເປັນສິ່ງທີ່ເຮົາໄດ້ເຮັດຜິດແລະຮູ້ສຳນຶກເຖິງຂໍ້ບົກພ່ອງຂອງຕົວເອງ ໂດຍພຣະວິນຍານບໍຣິສຸດໄດ້ສຳແດງໃຫ້ເຮົາຮູ້ ເຮົາມັກຈະປະຕິເສດຕໍ່ຄວາມຜິດຂອງເຮົາ ແທນການຍອມຮັບດ້ວຍການຂອບຄຸນພຣະເຈົ້າ ທີ່ພຣະອົງໄດ້ຊົງເປີດເຜີຍຂໍ້ບົກຜ່ອງທີ່ໜ້າຊັງຂອງເຮົາ ເພື່ອໃຫ້ເຮົາຈະໄດ້ສາຣະພາບແລະຮັບການຊຳຣະຄວາມຜິດບາບຈາກພຣະເຈົ້າ ຫາກວ່າເຮົາບໍ່ຍອມຮັບຟັງຄຳຕັກເຕືອນຈາກພີ່ນ້ອງຄຣິສຕຽນທີ່ຢູ່ຮ່ວມກັນ ແລະຈົມດ້ວຍຄວາມຮູ້ສຶກທີ່ວ່າຕົນເອງຖືກຕ້ອງສເມີ ສິ່ງນີ້ຈະເຮັດໃຫ້ພຣະວິນຍານບໍຣິສຸດຊົງເສັຽ-ພຣະທັຍຈົນຊົງພຣະພິໂຣດ ດັ່ງນັ້ນເຮົາຈຶ່ງບໍ່ຄວນດື້ດຶງຫລືຂັດຂືນ ດ້ວຍການປະຖິ້ມຄວາມແຂງກະດ້າງຂອງຕົນເອງ ແລ້ວຍອມຮັບພຣະພອນທີ່ພຣະວິນຍານບໍຣິສຸດໄດ້ຊົງໂປດໂຜດປະທານໃຫ້ແກ່ເຮົາ

4) **ການຂັດຂວາງພຣະວິນຍານບໍຣິສຸດຢູ່ສເມີດ້ວຍຄວາມສົງສັຍແລະບໍ່ໄວ້ວາງໃຈໃນພຣະເຈົ້າ**(ກຈ 7:51, ຮຣ.3:19)

ການບໍ່ເຊື່ອຟັງພຣະເຈົ້າເຮັດໃຫ້ມະນຸດກະບົດຕໍ່ພຣະເຈົ້າ ເມື່ອພຣະວິນຍານບໍຣິສຸດໄດ້ເຕືອນໃຫ້ຈິດສຳນຶກຂອງເຮົາເຊື່ອຟັງພຣະວັຈນະຂອງພຣະເຈົ້າໂດຍທັນທີ ແຕ່ເຮົາກັບມີຈິດໃຈທີ່ດື້ດຶງຕໍ່ການຊົງນຳແລະຄຳຂໍຮ້ອງຂອງພຣະວິນຍານບຣິສຸດ ກໍສະແດງວ່າເຮົາບໍ່ມີຄວາມເຊື່ອຕໍ່ພຣະເຈົ້າ ເມື່ອພຣະວິນຍານໄດ້ຊົງກະຕຸ້ນເຕືອນໃຫ້ເຮົາໄດ້ລະຖິ້ມຄວາມຜິດບາບ ໃຫ້ຖວາຍຕົວເປັນຜູ້ຮັບໃຊ້ ໃຫ້ໄປຮຽນພຣະຄັມພີໃນໂຮງຮຽນພຣະຄຣິສທັມຄັມພີ ໃຫ້ດຳເນີນຊີວິດແຍກຈາກຊາວໂລກ ໃຫ້ຊ່ວຍເຫລືອຄົນຍາກຈົນແລະ ອື່ນ ໆ ແຕ່ຖ້າເຮົາປະຕິເສດ ກໍຄືການສະແດງອອກເຖິງການບໍ່ມີຄວາມເຊື່ອໃນພຣະເຈົ້າຄືກັນ

5) **ການທົດລອງພຣະວິນຍານບໍຣິສຸດຢ່າງບໍ່ສັດຊື່ແລະບໍ່ມີຄວາມຈິງ** (ກຈ 5:1-9)

ການທີ່ອານາເນັຽກັບຊະຟີລາໄດ້ຫລອກລວງພີ່ນ້ອງຄຣິສຕຽນນັ້ນ ແມ່ນການທີ່ພວກເຂົາໄດ້ເຮັດມຸສາຕໍ່ພຣະວິນຍານບໍຣິສຸດດ້ວຍ ເພາະພວກເຂົາໄດ້ສະແດງວ່າຕົນເອງເປັນຄົນທີ່ມີນ້ຳໃຈໃນການຖວາຍແດ່ພະເຈົ້າຕໍ່ໜ້າຜູ້ອື່ນເທົ່ານັ້ນ ແຕ່ໃນຄວາມເປັນຈິງແລ້ວພວກເຂົາກຳລັງປິດບັງຄວາມຜິດບາບບາງຢ່າງໄວ້ຢູ່

6) **ການດັບພຣະວິນຍານບໍຣິສຸດດ້ວຍການຍຶດໝັ້ນໃນຄວາມຄິດຂອງຕົນເອງ** (1 ທຊ 5:19-20)

ການທີ່ພຣະຄັມພີໄດ້ກ່າວວ່າ **"ຢ່າດັບພຣະວິນຍານ"** ນັ້ນຖືວ່າເປັນຄຳສັ່ງທີ່ເດັດຂາດ ຄຳວ່າ **"ດັບ"** ນັ້ນເປັນຄຳທີ່ມີຄວາມໝາຍຄືກັບຄຳວ່າ **"ເຜົາ"** (ອຊຢ 4:4) ເໝືອນກັບຄົນທີ່ຖືກຂັງຢູ່ໃນຫ້ອງທີ່ມີກາສພິດ ແລະຕ້ອງຕາຍເພາະບໍ່ມີອາກາດບໍຣິສຸດໃຫ້ຫາຍໃຈ ການທີ່ເຮົາປະຕິເສດແລະຕໍ່ຕ້ານບໍ່ໃຫ້ພຣະວິນຍານບໍຣິສຸດໄດ້ຊົງກະທຳງານພາຍໃນຊີວິດຂອງເຮົາ ກໍເປັນການດັບພຣະວິນຍານໃນລັກສະນະດຽວກັນ ດັ່ງນັ້ນເມື່ອໃດທີ່ພຣະວິນຍານບໍຣິສຸດໄດ້ຊົງຕັດກັບເຮົາ ບໍ່ວ່າໂດຍທາງພຣະຄັມພີຫລືຈິດສຳນຶກກໍຕາມ ເຮົາກໍຕ້ອງຍອມທີ່ຈະເຊື່ອຟັງ ແລະຍອມທີ່ຈະຈ່າຍຄ່າຣາຄາດ້ວຍຊີວິດທັງໝົດ ພຣະວິນຍານບໍຣິສຸດມັກຈະຊົງຕັກເຕືອນເຮົາດ້ວຍສຽງດັ່ງ ເມື່ອເຮົາໄດ້ກັບໃຈໃໝ່ແລ້ວ ແຕ່ຖ້າເຮົາບໍ່ໄດ້ເຊື່ອຟັງພຣະອົງແລ້ວ ສຽງຂອງພຣະວິນຍານທີ່ໄດ້ຊົງຮ້ອງໃນຈິດໃຈຂອງເຮົາ ກໍຈະເບົາລົງໄປເລື້ອຍ ໆ ຈົນຫາຍມິດໄປໃນທີ່ສຸດ ເພາະເຮົາປິດຫູຟັງ

7) **ການກະທຳໃຫ້ພຣະວິນຍານບໍຣິສຸດຊົງເສັຽພຣະທັຍດ້ວຍຄວາມບາບ** (ອຟ 4:30)

ພຣະວິນຍານບໍຣິສຸດຊົງຕ້ອງການທີ່ຈະໃຫ້ເຮົາຕໍ່ສູ້ກັບຄວາມບາບ ແລະຍອມທີ່ຈະເຊື່ອຟັງພຣະເຈົ້າ ແຕ່ຖ້າເຮົາມີຊີວິດທີ່ພ່າຍເສັຽຕໍ່ຄວາມບາບແລ້ວ ກໍຈະເຮັດໃຫ້ພຣະວິນຍານຊົງເສັຽພຣະທັຍຫລາຍ ເພາະການປະນີປະນອມກັບຄວາມບາບນັ້ນ ເປັນການທຳລາຍຄວາມໄວ້ວາງໃຈທີ່ເຮົາມີຕໍ່ພຣະວິນຍານ ແລະທີ່ພຣະວິນຍານມີຕໍ່ເຮົາດ້ວຍ ດັ່ງນັ້ນພຣະອົງຈຶ່ງບໍ່ຊົງເຮັດວຽກໃນຊີວິດຂອງຄົນທີ່ເກັບສະສົມຄວາມຜິດບາບໄວ້ ເຮົາຈຶ່ງຕ້ອງລະມັດລະວັງ ແລະຢ່າຄິດວ່າ



ການກະທຳເຊັ່ນນີ້ເປັນເລື່ອງທີ່ບໍ່ສຳຄັນ ເພາະເຮົາບໍ່ຄວນທີ່ຈະກະທຳໃຫ້ພຣະວິນຍານບໍຣິສຸດຊົງເສັຽພຣະທັຍເລີຍ *"ຈົ່ງໃຫ້ໃຈຂົມຂື່ນ ໃຈໂມໂຫໂຫໂສ ໃຈຄຽດຮ້າຍ ການອຶກກະທຶກຜິດຖຽງກັນ ການກ່າວສຽດສີກັນ ແລະການຄິດປອງຮ້າຍທຸກຢ່າງ ຈົ່ງຖິ້ມໃຫ້ຫ່າງໄກຈາກທ່ານທັງຫລາຍເສັຽ"* (ອຟ 4:31)

## ສອງ. ວິທີການດຳເນີນຊີວິດໃນພຣະວິນຍານບໍຣິສຸດ

*"ເຮົາເປັນເຄືອອະງຸ່ນ ທ່ານທັງຫລາຍເປັນກິ່ງ ຜູ້ທີ່ເຂົ້າສະນິດຢູ່ໃນເຮົາ ແລະເຮົາເຂົ້າສະນິດຢູ່ໃນຜູ້ນັ້ນ ແມ່ນຜູ້ນັ້ນແຫລະ ຈະເກີດຜົນຫລາຍ ເພາະຖ້າແຍກຈາກເຮົາແລ້ວພວກທ່ານບໍ່ອາດເຮັດສິ່ງໃດໄດ້.. ຖ້າພວກທ່ານຖືຮັກສາຂໍ້ບັນຍັດຂອງເຮົາ ທ່ານກໍຈະຕັ້ງຢູ່ໃນຄວາມຮັກຂອງເຮົາ ເໝືອນດັ່ງທີ່ເຮົາໄດ້ຖືຮັກສາບັນຍັດພຣະບິດາ ເຮົາຈຶ່ງຕັ້ງຢູ່ໃນຄວາມຮັກຂອງພຣະອົງ"* (ຢຮ 15:5, 10)

1. **ການເປັນຄຣິສຕຽນແທ້ນັ້ນເປັນສິ່ງທີ່ເປັນໄປບໍ່ໄດ້ດ້ວຍກຳລັງຂອງມະນຸດແຕ່ຢ່າງດຽວ**
   1) ການດຳເນີນຊີວິດຄຣິສຕຽນນັ້ນ ຍ່ອມຕ້ອງພົບກັບຄວາມຍາກລຳບາກແລະອຸປະສັກບັນຫາຕ່າງ ໆ ຫລາຍ ໆ ມີແຕ່ພຣະເຢຊູຄຣິສອົງດຽວເທົ່ານັ້ນທີ່ຊົງດຳເນີນຊີວິດຢ່າງມີຊັຍຊະນະເໜືອທຸກສິ່ງ
   2) ແຕ່ບຸກຄົນທີ່ເຊື່ອວາງໃຈໃນພຣະເຢຊູຄຣິສນັ້ນ ຈະສາມາດເຂົ້າໃຈຊີວິດຂອງຄຣິສຕຽນໄດ້ຢ່າງຖືກຕ້ອງ ແລະພວກເຂົາສາມາດດຳເນີນຊີວິດຢ່າງຜູ້ມີຊັຍໄດ້ ເຖິງແມ່ນວ່າຈະເປັນພຽງເດັກນ້ອຍໃນຄວາມເຊື່ອກໍຕາມ
   3) ພຣະເຢຊູຄຣິສຊົງມີຄວາມປາຖນາ ທີ່ຈະໃຫ້ຊີວິດທີ່ຄືນພຣະຊົນດ້ວຍຣິດເດດຂອງພະອົງນັ້ນໄດ້ສະແດງອອກມາໃນການດຳເນີນຊີວິດປະຈຳວັນຂອງເຮົາດ້ວຍ
   4) ເຄັດລັບແຫ່ງຊັຍຊະນະໃນການດຳເນີນຊີວິສຄຣິສຕຽນນັ້ນກໍຄື ການເພິ່ງພາພຣະວິນຍານບໍຣິສຸດໃນທຸກບາດກ້າວຂອງຊີວິດ
2. **ການດຳເນີນຊີວິດໃນພຣະວິນຍານດ້ວຍຄວາມເຊື່ອນັ້ນ ມີວິທີການຫາຍໃຈຝ່າຍຈິດວິນຍານດັ່ງນີ້**
   1) ໃນການດຳເນີນຊີວິດຄຣິສຕຽນນັ້ນ ເຮົາຈະພົບວ່າເຖິງແມ່ນວ່າເຮົາຈະຮັບໃຊ້ພຣະເຈົ້າດ້ວຍສຸດໃຈ ແລະດຳເນີນຊີວິດໄປກັບພຣະເຈົ້າດ້ວຍຄວາມເຊື່ອທີ່ພັດທະນາຂຶ້ນທຸກມື້ກໍຕາມ ແຕ່ຄວາມຈິງແລ້ວຫລາຍເທື່ອເຮົາກໍເຮັດຜິດພາດ ດັ່ງນັ້ນເຮົາຈຶ່ງຄວນທີ່ຈະຂອບຄຸນພຣະເຈົ້າ ສຳລັບການທີ່ພຣະອົງໄດ້ຊົງຊຳຣະລ້າງຄວາມຜິດບາບພາຍໃນຊີວິດຂອງເຮົາ ທັງໃນອະດີດ ປະຈຸບັນ ແລະອະນາຄົດ ດ້ວຍພຣະໂລຫິດຂອງພຣະເຢຊູຄຣິດທີ່ເທິງໄມ້ກາງແຂນ ແລະທູນຂໍຄວາມຮັກ ການຍົກໂທດຈາກພຣະເຈົ້າດ້ວຍຄວາມກ້າ ໃນຖານະທີ່ເຮົາເປັນບຸດຂອງພຣະອົງ ສິ່ງສຳຄັນທີ່ຂາດບໍ່ໄດ້ກໍຄືເຮົາຈະຕ້ອງຍິນຍອມຮັບການປ່ຽນແປງ ແລະມີຊີວິດທີ່ເຕັມປ່ຽມດ້ວຍພຣະວິນຍານບໍຣິສຸດ ໂດຍມີຄວາມເຊື່ອຢ່າງຕໍ່ເນື່ອງຢູ່ສເມີ (ຮຣ 10:1-18)
   2) ຖ້າທ່ານກະທຳຜິດຕໍ່ພຣະເຈົ້າ ໂດຍມີຕົນເອງເປັນສູນກາງຂອງຊີວິດແລ້ວ ກໍຂໍໃຫ້ທ່ານໄດ້ໃຊ້ວິທີການຫາຍໃຈຝ່າຍຈິດວິນຍານ ເພື່ອເປັນສັນຍາລັກເຕືອນໃຈເຮົາ ດັ່ງຕໍ່ໄປນີ້

- **ການຫາຍໃຈອອກ** ໝາຍເຖິງການສາລະພາບຄວາມຜິດບາບຂອງທ່ານ (1 ຢຮ.1:9) ດ້ວຍການຍອມຮັບຄວາມຈິງ ແລະປ່ຽນຄວາມຄິດປ່ຽນແປງຊີວິດໃຫ້ເປັນເໝືອນກັບພຣະວັຈນະຂອງພຣະເຈົ້າ ຜົນຂອງການສາລະພາບບາບນັ້ນຄື ຕ້ອງມີການຂອບຄຸນພຣະເຈົ້າ ແລະການປ່ຽນແປງການກະທຳດ້ວຍ ຊຶ່ງການຂອບຄຸນນັ້ນເປັນການສະແດງອອກດ້ວຍຄວາມເຊື່ອຂອງທ່ານ ທີ່ມີຕໍ່ຄວາມຮັກແລະການຊົງຍົກໂທດຂອງພຣະເຈົ້າ ແລະການສາລະພາບບາບທີ່ແທ້ຈິງນັ້ນຈະຕ້ອງມີການປ່ຽນແປງທ່າທີພາຍໃນຈິດໃຈແລະການປະພຶດດ້ວຍ
- **ການຫາຍໃຈເຂົ້າ** ໝາຍເຖິງ ການເຕັມປ່ຽມດ້ວຍພຣະວິນຍານບໍລິສຸດໂດຍຄວາມເຊື່ອພາຍຫລັງຈາກສາລະພາບບາບ ຊຶ່ງເປັນພຣະບັນຊາຂອງພຣະເຈົ້າ ຄື *"ແລະຢ່າເມົາເຫລົ້າແວງ ຊຶ່ງພາໃຫ້ເສັຽຄົນ ແຕ່ຈົ່ງເຕັມໄປດ້ວຍພຣະວິນຍານກໍດີກວ່າ"* (ອຟ 5:18) ແລະເປັນພຣະສັນຍາຂອງພະເຈົ້າຊຶ່ງເປັນພຣະປະສົງຂອງພຣະອົງດ້ວຍ *"ແລະນີ້ຄືຄວາມໝັ້ນໃຈທີ່ເຮົາມີຕໍ່ພຣະອົງ ຄືຖ້າເຮົາຮູ້ວ່າພຣະອົງຊົງໂຜດຟັງເຮົາ ເມື່ອເຮົາທູນຂໍສິ່ງໃດໆ ເຮົາກໍຮູ້ວ່າເຮົາໄດ້ຮັບສິ່ງທີ່ທູນຂໍນັ້ນຈາກພຣະອົງ"* (1 ຢຮ 5:14-15) ແລະຈົ່ງຂອບຄຸນພຣະເຈົ້າທີ່ພຣະອົງໄດ້ຊົງຄອບຄອງແລະຊົງໂຜດປະທານພຣະວິນຍານບໍລິສຸດໃຫ້ແກ່ເຮົາແລ້ວ

3. **ຫລັກສັດຈະທັມ 5 ປະການທີ່ສຳຄັນໃນການຫາຍໃຈຝ່າຍວິນຍານ**

   1) ຈົ່ງໝັ້ນໃຈໃນການມີຊີວິດທີ່ເຕັມປ່ຽມດ້ວຍພຣະວິນຍານບໍລິສຸດ ເຮົາຈະຕ້ອງລະເລີກເຖິງພຣະບັນຊາແລະພຣະສັນຍາຂອງພຣະເຈົ້າ ຖ້າເຮົາສາລະພາບບາບຂອງເຮົາ ແດ່ພຣະເຈົ້າຢ່າງແທ້ຈິງ ແລະວິງວອນທູນຂໍການເຕັມປ່ຽມດ້ວຍພຣະວິນຍານບໍລິສຸດແລ້ວ ເຮົາຈະຕ້ອງມີຄວາມເຊື່ອວ່າເຮົາໄດ້ຮັບການເຕັມປ່ຽມດ້ວຍພຣະວິນຍານບໍລິສຸດດ້ວຍ ດັ່ງນັ້ນເຮົາຈະຕ້ອງເຊື່ອວາງໃຈໃນພຣະເຈົ້າແລະເຊື່ອໃນພຣະວັຈນະຂອງພຣະອົງ
   2) ຈົ່ງສາລະພາບແລະປະຖິ້ມຄວາມຜິດບາບຢ່າງເດັດຂາດ ເຮົາຈະຕ້ອງມີຄວາມຮູ້ສຶກໄວຕໍ່ການຫລີກໜີຈາກຄວາມບາບ ເມື່ອເຮັດຄວາມບາບແລ້ວເຮົາຈະຕ້ອງຮີບສາລະພາບໂດຍທັນທີແລະບໍ່ເຮັດອີກ ເພາະການບໍ່ສາລະພາບບາບນັ້ນຈະເຮັດໃຫ້ຄວາມຜິດບາບມີອິດທິພົນຕໍ່ຊີວິດຂອງເຮົາໃນດ້ານອື່ນ ໆ ດ້ວຍ ແຕ່ພຣະວິນຍານກໍຊົງສາມາດສະແດງໃຫ້ເຮົາໄດ້ຮູ້ເຖິງຄວາມຜິດບາບຂອງຕົນເອງໄດ້ ແລະເຮົາບໍ່ຕ້ອງລົ້ງເຄີຍກັບບາບນັ້ນອີກ
   3) ຈົ່ງຕຽມຕົວທີ່ຈະຜະເຊີນໜ້າກັບສົງຄາມຝ່າຍຈິດວິນຍານ
      - ເຮົາຄວນຈຳໄວ້ວ່າສົງຄາມນັ້ນຂຶ້ນຢູ່ກັບມານທີ່ພຍາຍາມຕໍ່ສູ້ພຣະເຈົ້າບໍ່ແມ່ນຕົວຂອງເຮົາເອງ ເຖິງແມ່ນວ່າເຮົາຈະຕຽມຕົວໃຫ້ພ້ອມທີ່ຈະຮັບມືກໍຕາມ (ອພຍ 14:14, 1 ຊມອ 17:47)
      - ເຮົາຈະຕ້ອງຮູ້ວ່າສັດຕູທີ່ຮ້າຍກາດຊຶ່ງຈ່ອງດຶງເຮົາຢູ່ຕລອດເວລານັ້ນກໍຄື

ກ. **ໂລກ** ພຣະຄັມພີໄດ້ເຕືອນເຮົາວ່າຢ່າຮັກໂລກ ຫລືສິ່ງທີ່ມີຢູ່ໃນໂລກນີ້ເພາະພຣະເຈົ້າບໍ່ຊົງພໍພຣະທັຍຕໍ່ຜູ້ທີ່ຮັກໂລກເລີຍ ດັ່ງນັ້ນເຮົາຈຶ່ງຕ້ອງມີຄວາມໝັ້ນໃຈວ່າ ພຣະເຢຊູຄຣິດໄດ້ຊົງຊະນະໂລກແລ້ວ (1 ຢຮ. 2:15-17)

ຂ. **ເນື້ອໜັງ** ຊຶ່ງໝາຍເຖິງ ສະພາບຂອງຄວາມບາບແລະຊີວິດເກົ່າທີ່ຂັດແຍ້ງແລະຕໍ່ຕ້ານກັບພຣະວິນຍານບໍຣິສຸດ ເນື້ອໜັງເປັນສະພາບທີ່ມີຢູ່ພາຍໃນມະນຸດທຸກຄົນ ມັນເປັນກິເລສຄວາມຢາກທີ່ເກີດຂຶ້ນມາ ແລະເປັນການຕໍ່ຕ້ານກັບນ້ຳພຣະທັຍຂອງພຣະເຈົ້າ ແລະຖ້າເຮົາບໍ່ປະຕິເສດມັນແລ້ວສິ່ງນີ້ກໍຈະກາຍເປັນຄວາມຜິດບາບທີ່ເກີດຂຶ້ນພາຍໃນຊີວິດຂອງເຮົາ ດັ່ງນັ້ນຖ້າພຣະວິນຍານບໍຣິສຸດໄດ້ຊົງຄອບຄອງຊີວິດຂອງເຮົາຢ່າງຕໍ່ເນື່ອງແລ້ວ ການຂັດແຍ້ງພາຍໃນຈິດໃຈຂອງເຮົາກໍສາມາດຮັບການແກ້ໄຂໄດ້ ແລະເນື້ອໜັງຂອງເຮົາກໍຈະຫາຍໄປ (ຄຕ. 5:16-17)

ຄ. **ມານຊາຕານ** ເປັນວິນຍານຊົ່ວທີ່ປຽບເໝືອນກັບສິ່ງທີ່ວົນວຽນຢູ່ອ້ອມຮອບ ແລະສະແວງຫາຄົນທີ່ມັນຈະກັດກິນໄດ້ (1 ປຕ 5:8-9) ພຣະເຈົ້າຈຶ່ງຊົງຕັດໃຫ້ເຮົາໄດ້ຫລີກລ້ຽງການເຍົ້າຍວນຂອງມານແລະຕໍ່ຕ້ານກົລອຸບາຍຂອງມັນ ສິ່ງທີ່ຄວນຈຳກໍຄື ເຮົາຈະຊະນະຕໍ່ມານໄດ້ໂດຍການສວມຍຸດທະພັນທັງຊຸດຂອງພຣະເຢຊູຄຣິດ ຜູ້ຊົງມີໄຊຊະນະຕໍ່ມານໂດຍໄມ້ກາງແຂນເມື່ອສອງພັນປີກ່ອນ (ອຟ 6:10-17)

4) ຈົ່ງຮູ້ວ່າເຮົາມີມໍລະດົກຝ່າຍວິນຍານຢ່າງຫລວງຫລາຍ ຄື

- ❖ ພຣະເຢຊູຄຣິດໄດ້ຊົງສະຖິດຢູ່ພາຍໃນຈິດໃຈຂອງເຮົາ ໂດຍຣິດເດດແຫ່ງການຄືນພຣະຊົນຂອງພະອົງ
- ❖ ພຣະເຈົ້າຜູ້ຊົງສະຖິດຢູ່ພາຍໃນຊີວິດຂອງເຮົານັ້ນ ຊົງເປັນໃຫຍ່ກວ່າມານຊາຕານທີ່ຢູ່ໃນໂລກນີ້ ດັ່ງນັ້ນເຮົາຈຶ່ງບໍ່ຕ້ອງຢ້ານມານ ຕາບໃດທີ່ເຮົາມີພຣະເຢຊູຄຣິດຊົງປະທັບຢູ່ເທິງບັນລັງໃຈຂອງເຮົາ ແຕ່ຖ້າເຮົາບໍ່ເຊື່ອຟັງພຣະເຈົ້າ ດ້ວຍການເລືອກເຮັດຕາມໃຈຕົນເອງແລ້ວ ເຮົາກໍຈະເສັຽຊັຍຕໍ່ມານຢ່າງແນ່ນອນ
- ❖ ເຮົາເປັນທາຍາດຂອງພຣະເຈົ້າຮ່ວມກັບພຣະຄຣິສ ດັ່ງນັ້ນ ເຮົາຈຶ່ງມີບັນຊີໃນທະນາຄານສວັນ (ຣມ. 8:17)

**5) ຈົ່ງເຊື່ອໃນພຣະເຈົ້າ**

- ❖ ຖ້າເຮົາບໍ່ມີຄວາມເຊື່ອແລ້ວ ຈະເຮັດໃຫ້ພຣະເຈົ້າຊົງພໍພຣະທັຍບໍ່ໄດ້ເລີຍ (ຮຣ 11:6) ພຣະຄັມພີໄດ້ເນັ້ນໃຫ້ເຮົາມີຄວາມເຊື່ອ (ຄຕ 3:1-14) ແລະການບໍ່ມີຄວາມເຊື່ອນັ້ນກໍຄື ຄວາມບາບ (ຣມ 14:23) ພຣະເຈົ້າຊົງພຣະພິໂຣດຕໍ່ຊົນຊາດອິສຣາເອນທີ່ບໍ່ມີຄວາມເຊື່ອ (ຮຣ 3:17)
- ❖ ການເຊື່ອໃນພຣະເຈົ້າ ຄື ການຂອບຄຸນພຣະເຈົ້າໃນທຸກກໍຣະນີ (1 ທຊ 5:18)

ກ. ພຣະຄັມພີໄດ້ກ່າວໄວ້ວ່າ **"ຈົ່ງລະຄວາມກະວົນກະວາຍຂອງທ່ານໄວ້ກັບພຣະອົງ ເພາະວ່າພຣະອົງຊົງຫ່ວງໃຍທ່ານທັງຫລາຍ"** (1 ປຕ 5:17)

ຂ. ຄົນທີ່ຮັກພຣະອົງຈະເກີດຜົນອັນດີໃນທຸກສິ່ງ (ຣມ. 8:28)

ຄ. ໃນພຣະທັມ (ພຣະທັມເຮັບເຣີບົດທີ 11) ໄດ້ກ່າວເຖິງຕົວຢ່າງຂອງບຸກຄົນທີ່ມີຄວາມເຊື່ອ ໃນພຣະເຈົ້າວ່າ ພວກເຂົາເຫລົ່ານັ້ນມີຄວາມເຊື່ອຕໍ່ພຣະເຈົ້າແນວໃດ ແລະໄດ້ຮັບລາງວັນຈາກພຣະເຈົ້າແນວໃດ

ງ. ເຮົາສາມາດເຊື່ອວາງໃຈໃນພຣະເຈົ້າໄດ້ເຕັມຮ້ອຍເປີເຊັນແລະວິທີທີ່ດີທີ່ສຸດຊຶ່ງເຮົາຈະສະແດງຄວາມເຊື່ອຕໍ່ພຣະເຈົ້າກໍຄື ການຂອບຄຸນພຣະເຈົ້າ ດັ່ງນັ້ນເມື່ອໃດທີ່ເຮົາເຈັບປ່ວຍຫລືມີຄວາມກະວົນກະວາຍເຖິງບັນຫາທາງດ້ານເສດຖະກິດ ຫລືຄົນຮັກເສັຽຊີວິດ ລວມທັງການທີ່ເຮົາຕ້ອງຜະເຊີນກັບບັນຫາແລະຄວາມທຸກຍາກລຳບາກຕ່າງ ໆ ນັ້ນ ເຮົາກໍຍັງສາມາດທີ່ຈະຂອບຄຸນພຣະເຈົ້າໄດ້

ຈ. ການຂອບຄຸນເປັນການສະແດງອອກເຖິງການມີຄວາມເຊື່ອແລະການໄວ້ວາງໃຈໃນພຣະເຈົ້າ ຊຶ່ງເປັນປະຕູສູ່ຣິດເດດຂອງພຣະເຈົ້າ ແລະການແກ້ໄຂບັນຫາທີ່ຫຍຸ້ງຍາກໄດ້

4. **ບຸກຄົນທີ່ດຳເນີນຊີວິດໃນພຣະວິນຍານບໍຣິສຸດຈະມີຊີວິດແຫ່ງການປະກາດ ແລະໄດ້ຮັບພຣະພອນຈາກຜົນຂອງການປະກາດຂ່າວປະເສີດ ຊຶ່ງມີຄຸນສົມບັດດັ່ງນີ້**

1) ມີຄວາມໝັ້ນໃຈວ່າຕົນເອງເປັນບຸດຂອງພຣະເຈົ້າ ແລະເປັນຄຣິສຕຽນແທ້ ການຮູ້ຈັກພຣະເຈົ້າໂດຍທາງສມອງເທົ່ານັ້ນຍັງບໍ່ພຽງພໍ ແຕ່ເຮົາຈຳເປັນຕ້ອງຮູ້ຈັກພຣະເຢຊູຄຣິສ ທັງທາງດ້ານຄວາມຮູ້ ຄວາມຕັ້ງໃຈ ແລະອາຣົມຄວາມຮູ້ສຶກ ແລະເຮົາຈະຕ້ອງມີຄວາມໝັ້ນໃຈວ່າພຣະເຢຊູຄຣິດຜູ້ຊົງພຣະຊົນຢູ່ນັ້ນ ໄດ້ຊົງສະຖິດຢູ່ພາຍໃນຊີວິດຂອງເຮົາ (ຢຮ 1:12, ພນ. 3:20, ຄຕ 2:20)

2) ມີຄວາມໝັ້ນໃຈວ່າຕົນເອງໄດ້ສາລະພາບບາບໝົດແລ້ວ ມີການຕັ້ງຕົ້ນຊີວິດໃໝ່ ບໍ່ມີຄວາມບາບໃດຫລົງເຫລືອຢູ່ໃນຊີວິດ

- ຄວາມບາບເປັນສິ່ງທີ່ຂັດຂວາງຣິດເດດຂອງພຣະເຈົ້າ (ພສສ. 66:18)
- ເມື່ອໃດທີ່ທ່ານກະທຳບາບຈົ່ງຝຶກການຫາຍໃຈຝ່າຍວິນຍານທັນທີ ແລ້ວຈົ່ງໝັ້ນໃຈວ່າພຣະເຈົ້າຊົງຍົກໂທດບາບໃຫ້ແລ້ວ
- ຈົ່ງປັກໃຈຢູ່ກັບພຣະເຢຊູຄຣິສເທົ່ານັ້ນ ເມື່ອທ່ານໄດ້ສາຣະພາບຄວາມບາບແລ້ວ ຈົ່ງຕັ້ງໝັ້ນແລະຕັ້ງໃຈໃໝ່ແລະປະຕິເສດຄວາມຮູ້ສຶກນຶກຄິດເກົ່າຂອງຕົນເອງ

3) ມີຄວາມໝັ້ນໃຈວ່າຕົນເອງໄດ້ຮັບການເຕັມປ່ຽມດ້ວຍພຣະວິນຍານບໍລິສຸດຢ່າງແທ້ຈິງ

- ❖ ເຮົາໄດ້ຮັບການເຕັມປ່ຽມດ້ວຍພຣະວິນຍານບໍຣິສຸດໂດຍຄວາມເຊື່ອ ຕາມພຣະບັນຊາແລະພຣະສັນຍາຂອງພຣະເຈົ້າ (ຄລຕ. 3:14)
- ❖ ເຖິງແມ່ນວ່າເຮົາບໍ່ມີຄວາມຮູ້ສຶກຕໍ່ຣິດເດດຂອງພຣະວິນຍານບໍລິສຸດກໍຕາມ ແຕ່ເມື່ອໃດທີ່ເຮົາໄດ້ປະກາດຂ່າວປະເສີດເຖິງເຣື່ອງຂອງພະເຢຊູຄຣິສນັ້ນ ເຮົາຈະສາມາດສຳຜັດເຖິງການຊົງສະຖິດຂອງພຣະວິນຍານບໍລິສຸດໄດ້

5) ມີການຕຽມຕົວໃນການທີ່ຈະປະກາດເຖິງຄວາມເຊື່ອຂອງຕົນເອງທີ່ມີຕໍ່ພຣະຄຣິສ

- ❖ ການປະກາດຈະເກີດຜົນໄດ້ດີນັ້ນ ຈະຕ້ອງໄດ້ຮັບການອົບຮົມ ແລະມີການຕຽມຕົວໃນການປະກາດຂ່າວປະເສີດເສັຽກ່ອນ
- ❖ ເຮົາຈະຕ້ອງຮຽນຮູ້ວ່າ ຊີວິດທີ່ຄົບບໍຣິບູນນັ້ນມີລັກສະນະຢ່າງໃດ ແລະເຮົາຈະໄດ້ຮັບສິ່ງນີ້ໄດ້ແນວໃດ ລວມທັງວິທີການປະກາດທີ່ມີປະສິດທິພາບດ້ວຍ

6) ມີການອະທິຖານຢ່າງສມ່ຳສເມີ

- ❖ ເຮົາຈະຕ້ອງບໍ່ຢຸດໃນການອະທິຖານເພື່ອຄົນທີ່ບໍ່ເຊື່ອ ເພາະວ່າພຣະເຈົ້າບໍ່ຊົງຕ້ອງການໃຫ້ມະນຸດແມ່ນແຕ່ຄົນດຽວພິນາດໄປ (1 ປຕ 3:9, 1 ຕທ 2:4)
- ❖ ຄວນເຮັດຕາລາງອະທິຖານ ແລ້ວຂຽນຫົວຂໍ້ອະທິຖານທີ່ຈະທູນຂໍການຊົງນຳຈາກພຣະເຈົ້າ

7) ມີການອອກໄປປະກາດກັບຄົນທີ່ບໍ່ເຊື່ອແທ້ ໆ

- ❖ ຄວາມເຊື່ອນັ້ນປຽບເໝືອນກັບກ້າມເນື້ອ ຊຶ່ງຕ້ອງມີການອອກກຳລັງຢູ່ສະເໝີຈຶ່ງຈະແຂງແຮງ ການປະກາດຈຶ່ງເປັນການຝຶກກ້າມເນື້ອຂອງຄວາມເຊື່ອໃຫ້ແຂງແຮງ ແຕ່ຖ້າຄວາມເຊື່ອບໍ່ມີການກະທຳທີ່ສະແດງອອກມາເປັນຊີວິດແຫ່ງການປະກາດ ກໍສະແດງວ່າຄວາມເຊື່ອນັ້ນອ່ອນແອຫລືຕາຍແລ້ວ
- ❖ ຢ່າລໍຖ້າຈົນກະທັ້ງຄົນອື່ນມາຫາທ່ານ ແຕ່ຈົ່ງໄປຫາພວກເຂົາກ່ອນ (ມທ 28:19)

8) ປະກາດເຖິງເລື່ອງພຣະເຢຊູຄຣິດເທົ່ານັ້ນ

- ❖ ໃນການປະກາດນັ້ນຕ້ອງຣະວັງບໍ່ໃຫ້ມີການຜິດຖຽງກັນ ແລະບໍ່ຕ້ອງເວົ້າເຖິງສາສນາໃດຄະນະນິກາຍຕ່າງ ໆ ແຕ່ຈົ່ງປະກາດຂ່າວປະເສີດແຫ່ງໄມ້ກາງແຂນ ແລະການຄືນພະຊົນຂອງພຣະເຢຊູຄຣິສເທົ່ານັ້ນ (1 ກທ 2:1-5)
- ❖ ໃນການປະກາດເຖິງເຣື່ອງຄວາມຮັກຂອງພຣະເຢຊູຄຣິສນັ້ນຈະເປັນສິ່ງທີ່ດຶງດູດຈິດໃຈຂອງຜູ້ຟັງຄືກັນກັບແມ່ເຫລັກທີ່ສາມາດດຶງດູດເສດເຫລັກຕ່າງ ໆ ໄດ້

9) ມີການຄາດຫວັງວ່າການປະກາດຈະເກີດຜົນຢ່າງແນ່ນອນໂດຍຄວາມເຊື່ອ

- ❖ ໃນສ່ວນເລິກຂອງຈິດໃຈມະນຸດທຸກຄົນນັ້ນ ມີຄວາມຫິວກະຫາຍຫາພຣະເຈົ້າຢູ່

- ❖ ທຸກສິ່ງຈະເກີດຂຶ້ນຕາມຄວາມເຊື່ອຂອງເຮົາ (ມທ.9:29) ເຮົາຕ້ອງມີຄວາມເຊື່ອວ່າພຣະເຈົ້າຊົງສາມາດໃຊ້ເຮົາໄດ້
- ❖ ການປະກາດເປັນໜ້າທີ່ຂອງເຮົາ ສ່ວນຜົນທີ່ຈະເກີດຂຶ້ນນັ້ນມອບໄວ້ກັບພຣະເຈົ້າ (1ກທ 3:6-7)
- ❖ ເມື່ອມີຄົນຮັບເຊື່ອນັ້ນ ເຮົາຈະຕ້ອງຖວາຍກຽດຕິຍົດທັງໝົດແດ່ພະເຈົ້າ ແລະແນະນຳເຂົາໃຫ້ໄປເຖິງຄຣິສຈັກ ຫລືບອກເລົ່າໃຫ້ຄຣິສຈັກທ້ອງຖິ່ນໄປຕິດຕາມຕໍ່ໄປ

**5 ບຸກຄົນທີ່ດຳເນີນຊີວິດໃນພຣະວິນຍານບໍຣິສຸດນັ້ນ ຈະຕ້ອງຍອມຮັບພຣະວິນຍານບໍຣິສຸດວ່າ ຊົງເປັນເຈົ້າຊີວິດເໜືອຊີວິດຂອງຕົນເອງ**

ໃນການດຳເນີນຊີວິດປະຈຳວັນນັ້ນ ເຮົາຈະຕ້ອງເພິ່ງອາໄສພຣະວິນຍານບໍລິສຸດຢ່າງເຕັມທີ່ໃນທຸກກໍຣະນີ ແລະປຶກສາກັບພຣະອົງໃນຖານະທີ່ຊົງເປັນເຈົ້າຊີວິດໃນທຸກເຣື່ອງ ເມື່ອເຮົາໃຊ້ຂອງປະທານຝ່າຍວິນຍານນັ້ນເຮົາຈະຕ້ອງລະວັງບໍ່ໃຊ້ສິ່ງນີ້ເພື່ອຊື້ສຽງຂອງຕົນເອງ ຫລືຢ່າຄິດວ່າຂອງປະທານເປັນເຄື່ອງວັດແທກການເຕີບໂຕຝ່າຍວິນຍານ ເພາະເປັນຄົນລະເຣື່ອງກັນ

ໄດ້ຮັບການອະນຸຍາດໃຫ້ກ່າຍເປັນພາສາລາວຈາກ "ເສີມສ້າງສາວົກ" ໂດຍ ສາສນາຈານ ປະຍຸທ ເລາຫະວິ

# ບົດທີ 5

# ຢ່າງນຳພຣະເຢຊູ ນາຍຄຣູຜູ້ເປັນແບບຢ່າງ

**"ເໝືອນຢ່າງນັ້ນແຫລະ ພວກທ່ານຈົ່ງສ່ອງແຈ້ງແກ່ຄົນທັງປວງ**
**ເພື່ອວ່າ ເມື່ອເຂົາເຫັນການດີທີ່ພວກທ່ານເຮັດ**
**ເຂົາຈະໄດ້ສັຣເສີນພຣະບິດາຂອງພວກທ່ານຜູ້ຊົງສະຖິດຢູ່ໃນສວັນ"**
**ພຣະທັມມັດທາຍ 5:16**

ຂໍ້ພຣະທັມທີ່ປາກົດທາງເທິງນີ້ ແມ່ນວິຖີທາງນຶ່ງຂອງການເປັນຄຣິສຕຽນທີ່ເກີດຜົນທາງຝ່າຍວິນຍານຈິດ (Spiritual Christian) ບໍ່ແມ່ນຄຣິສຕຽນທີ່ເດີນຕາມ ໆ ກັນໄປຢ່າງບໍ່ມີຄວາມໝາຍ ການທີ່ເຮົາຈະເປັນແສງສວ່າງ ແລະມີແບບຢ່າງຂອງພຣະຄຣິສນັ້ນມີຄວາມໝາຍຫລາຍໄປກວ່າການບໍ່ເວົ້າຜິດ ບໍ່ເຮັດສິ່ງຜິດ ແຕ່ຍັງໝາຍລວມໄປເຖິງການເຮັດດີຕໍ່ຜູ້ອື່ນຈົນກະທັ່ງເຂົາເຫັນພຣະເຢຊູໃນຕົວຂອງເຮົາ ພຣະເຢຊູນາຍຄຣູຜູ້ປະເສີດ ພຣະອົງຊົງເດີນທາງຈາກເໜືອຈົດໃຕ້ ແລ້ວຂຶ້ນເໜືອ ແລະລົງໃຕ້ລວມໄດ້ 3 ລອບດ້ວຍກັນ ສິ່ງທີ່ພຣະອົງເຮັດຄື ນຳຄົນມາເຖິງພຣະເຈົ້າ ທຸກບົດບາທແລະການດຳເນີນຊີວິດຂອງພຣະອົງ ນຳຄົນມາເຖິງຄວາມເຂົ້າໃຈ ເຖິງຄວາມຮັກອັນສູງສຸດທີ່ພຣະເຈົ້າມີຕໍ່ມະນຸດ ພຣະເຢຊູຊົງເປັນແບບຢ່າງໃນເຣື່ອງການເຊື່ອຟັງພຣະເຈົ້າ ການຮູ້ຈັກວ່າແມ່ນສິ່ງໃດເປັນທີ່ພໍພຣະທັຍພຣະເຈົ້າ ແລະແມ່ນນ້ຳພຣະທັຍພຣະປະສົງຂອງພຣະເຈົ້າ ຫລາຍກວ່າຄວາມນຶກຄິດຫລື ຄວາມຕ້ອງການຕາມໃຈປາຖນາຂອງເຮົາເອງ ດັ່ງນີ້ແລ້ວ ເຫດໃດຈຶ່ງມີຄຣິສຕຽນຈຳນວນຫລາຍທີ່ຍັງຂວຍເຂີນແລະອາຍທີ່ຈະສະແດງອອກເຖິງຄວາມເຊື່ອແທ້ຂອງການເປັນຄຣິສຕຽນທີ່ມີຢູ່ ໂດຍບໍ່ກ້າໃຫ້ຄວາມເຊື່ອທີ່ມີຢູ່ໃນພຣະຄຣິສປາກົດມາໃຫ້ຜູ້ອື່ນໄດ້ເຫັນ ໃຫ້ເຮົາມາເບິ່ງພຣະເຢຊູເປັນແບບຢ່າງ ພຣະເຢຊູມີສັດຕູຫລາຍກວ່າເຮົາ ພຣະອົງມີຜູ້ນຳຝ່າຍສາສນາຢູ່ທາງຫລັງ ທາງອ້ອມຂ້າງ ຄອຍຕຳໜິຕິຕຽນແລະຈັບຜິດພຣະອົງ ມີຄົນຄອຍຍົ່ວຍຸໃຫ້ພຣະອົງຊົງຍ້ານກົວ ແຕ່ພຣະອົງຍືນຫຍັດຕໍ່ຄວາມຈິງຄັ້ງແລ້ວຄັ້ງເລົ່າ ແລະກ່າວສອນປະຊາຊົນໃນທີ່ສາທາຣະນະ ແລ້ວພຣະອົງກໍບອກແກ່ຄົນເຫລົ່ານັ້ນວ່າ ຈົ່ງອອກໄປບອກຄົນອື່ນ ໆ ຕໍ່ ໆ ໄປໃນຕາແສງ ໃນບ່ອນທີ່ຕົນອາສັຍຢູ່ ດັ່ງຕົວຢ່າງຂອງຍິງຊາວຊະມາເຣັຽ **"ຍິງນັ້ນຈຶ່ງປະໜໍ້ນ້ຳຂອງຕົນໄວ້ ແລະເຂົ້າໄປໃນເມືອງບອກຄົນທັງປວງ"** (ໂຢຮັນ 4:28) ແຕ່ສ່ວນຄົນຕາບອດ ຄົນເປັ້ຽ ໃນຈຳນວນຄົນເຫລົ່ານີ້ທີ່ໄດ້ຕ້ອນຮັບພຣະອົງ ໃນທັນໃດນັ້ນເອງເຂົາດີໃຈ ແລະເລີ້ມສະແດງຕົວ ສະແດງອອກໃນ

ຄຳພະຍານວ່າຊີວິດຂອງເຂົາວ່າໄດ້ປ່ຽນແປງແລ້ວ ແຕ່ກ່ອນເຂົາຕາບອດ ບັດນີ້ເຂົາເຫັນຮຸ່ງ ແຕ່ກ່ອນເຂົາເປັນງ່ອຍ ເປັນເປັ້ຍເສັຽຂາ ບັດນີ້ເຂົາຍ່າງໄດ້ແລ້ວ ແຕ່ກ່ອນເຂົາເຄີຍເປັນຍິງຊົ່ວແຕ່ວ່າຕໍ່ຈາກນີ້ໄປຫລັງຈາກທີ່ເຂົາໄດ້ພົບພໍ້ກັບພຣະເຢຊູນັ້ນ ເຂົາຈະບໍ່ເຮັດບາບອີກ ເຂົາສະແດງຕົວອອກມາວ່າໄດ້ຕ້ອນຮັບແລະໄດ້ຮັບອິສຣະພາບຈາກຄວາມທົນທຸກພົ້ນຈາກຄວາມບາບແລະບອກເຖິງຄຳພຍານຂອງເຂົາ

ພຣະທັມມາຣະໂກ 5:19 ບັນທຶກເຖິງພຣະເຢຊູຊົງສັ່ງໄວ້ວ່າ **"ໃຫ້ເຈົ້າເມືອບ້ານຫາຍາດພີ່ນ້ອງແລ້ວບອກເຂົາເຖິງເຣື່ອງເຫດການອັນໃຫຍ່ ຊຶ່ງພຣະເຈົ້າໄດ້ຊົງໂຜດແກ່ເຈົ້າແລະຊົງພຣະເມດຕາແກ່ເຈົ້າແລ້ວ"** ເຮົາທຸກຄົນເປັນພະຍານຕໍ່ຜູ້ອື່ນໄດ້ສເມີ ເຖິງການປ່ຽນແປງ ແລະການບັງເກີດຊີວິດໃໝ່ຂອງເຮົາ ທ່ານເຄີຍຄິດທີ່ຈະບອກເລົ່າເຖິງຄວາມເຊື່ອຂອງທ່ານຕໍ່ຜູ້ອື່ນຢ່າງຈະແຈ້ງຫລືບໍ່? ຖ້າທ່ານຂາດກຳລັງຂໍໃຫ້ທູນຂໍຈາກພຣະວິນຍານບໍຣິສຸດໃຫ້ນຳພາທ່ານໃຫ້ຊູກຳລັງທ່ານ ແລະຮຽນຮູ້ເອົາແບບຢ່າງນຳພຣະເຢຊູຄຣິສ

ພຣະທັມມາຣະໂກບົດທີ 5:19 ທີ່ເຮົາອ່ານມານັ້ນ ພຣະເຢຊູຊົງໜູນໃຈໃຫ້ຊາຍຜູ້ນັ້ນທີ່ຖືກຜີສິງແລະອາສັຍຢູ່ຕາມອຸໂມງຝັງສົບ ເມື່ອພຣະອົງຂັບຜີອອກຈາກຜູ້ນັ້ນແລ້ວ ຊາຍຜູ້ນັ້ນຮ້ອງຂໍຈະໄປນຳພຣະອົງ ແຕ່ພຣະເຢຊູຕອບເຂົາວ່າໃຫ້ເຂົາກັບໄປເຮືອນຂອງຕົນແລະບອກເລົ່າເຖິງຊີວິດໃໝ່ທີ່ເຂົາໄດ້ຮັບກັບຜູ້ອື່ນ ໆ ພວກເຮົາກໍຄືກັນ ພວກເຮົາອອກຈາກຊີວິດເກົ່າມາສູ່ຊີວິດໃໝ່ ຕົວເກົ່າເຮົາຕາຍແລ້ວ ແຕ່ພຣະຄຣິສໄດ້ປະທານຊີວິດໃໝ່ແກ່ເຮົາ ອັນນີ້ແຫລະແມ່ນຂ່າວປະເສີດທີ່ເຮົາຈະບອກແກ່ຄົນທັງຫລາຍ ຊຶ່ງເປັນຊີວິດຄຣິສຕຽນແທ້ຈິງ ທີ່ເດີນຕາມແບບຢ່າງພຣະຄຣິສທຸກມື້ຢ່າງສເມີຕົ້ນສເມີປາຍ ບໍ່ແມ່ນມື້ນຶ່ງເຊື່ອພຣະເຈົ້າຫລາຍ ອີກມື້ນຶ່ງເຊື່ອພຣະເຈົ້ານ້ອຍ

ທ່ານເປໂຕກ່າວວ່າ **"ຈົ່ງມີໃຈພ້ອມຢູ່ສເມີ ເພື່ອພວກທ່ານຈະສາມາດຕອບແກ້ຕົວໄດ້ຕໍ່ທຸກຄົນທີ່ຖາມພວກທ່ານວ່າ ທ່ານມີເຫດຜົນປະການໃດຈຶ່ງມີຄວາມຫວັງຢ່າງນີ້"** (1 ເປໂຕ 3:15) ຜູ້ທີ່ໄດ້ຮັບຄວາມຮັກແລະປະສົບການເຖິງພຣະຄຸນການຊ່ວຍເຫລືອຂອງພຣະເຈົ້າ ກໍມີຄວາມຕື່ນເຕັ້ນທີ່ຈະບອກເລົ່າແບ່ງປັນກັບຜູ້ອື່ນ ໆ ຫລືແມ່ນວ່າຈະບໍ່ໄດ້ບອກເລົ່າດ້ວຍປາກ ແຕ່ກໍບອກເລົ່າດ້ວຍຊີວິດແລະການກະທຳທຸກແນວ ທັງຄວາມຄິດ ວາຈາແລະການສະແດງອອກ ໂດຍການດຳເນີນຊີວິດທີ່ຕິດຕາມພຣະຄຣິສ ແລະຍຶດຖືເອົາພຣະອົງເປັນແບບຢ່າງ

ເມື່ອເຮົາຈື່ຈຳພຣະທັມຕອນນີ້ແລ້ວ ໃຫ້ເຮົາເອົາໄປຖືປະຕິບັດ ແລ້ວເຮົາຈະພົບກັບພລັງອຳນາດໃໝ່ທີ່ເຮັດໃຫ້ເຮົາມີອານຸພາບ ມີກຳລັງໃຈພິເສດໃນການທີ່ເຮົາມີຊີວິດຈິດວິນຍານຂອງການເປັນຄຣິສຕຽນທີ່ແທ້ຈິງ

**<u>ການຍ່າງນຳແບບພຣະເຢຊູຜູ້ເປັນນາຍຄຣູຕ້ອງມີຄວາມຕັ້ງໃນແລະຮູ້ຈັກໃຈຂອງຄຣູ</u>**

ຈົ່ງຢູ່ການຮຽນຮູ້ສາມາດເປັນໄປໂດຍທັມຊາດ ໂດຍຮັບຈາກພາຍນອກ ໂດຍການຟັງ ອ່ານ ຂຽນ

ແລະສໍາຜັດ ການຮຽນແບບນີ້ ເຮົາອາດຈະຮຽນຮູ້ ແລະຮັບຮູ້ໂດຍບໍ່ຮູ້ສຶກຕົວ ແຕ່ຫລາຍກວ່ານີ້ອີກ ແມ່ນວ່າການຮຽນຮູ້ທີ່ເກີດຜົນແລະມີປະສິດທິພາບນັ້ນ ເຮົາຕ້ອງມີວິໄນ ມີຄວາມຕັ້ງໃຈຈິງ ຊຶ່ງເລີ່ມຕົ້ນມາຈາກພາຍໃນຕົວເຮົາກ່ອນ ທີ່ມີຄວາມຕັ້ງໃຈຊອກສແວງຫາ ແລະຮຽນຮູ້ ຮັບຮູ້ໄວ້ ສິ່ງທີ່ຈະເນັ້ນໃນທີ່ນີ້ແມ່ນວິໄນຝ່າຍຈິດວິນຍານຂອງຄຣິສຕຽນທຸກຄົນ ເພາະວ່າເຮົາບໍ່ຕ້ອງປ່ອຍໃຫ້ຊີວິດຍອງເຮົາລ່ອງລອຍໄປຕາມກະແສຕ່າງ ໆ ທີ່ຢູ່ອ້ອມຕົວ ເຖິງວ່າກະແສເຫລົ່ານັ້ນຈະມາຈາກອົງກອນສາສນາ ການເມືອງຫລືກະທັ່ງຄວາມນຶກຄິດຫລືຄວາມນິຍົມທາງສັງຄົມ ການລຽນແບບຈາກພຣະເຢຊູນັ້ນ ເຮົາມີຈິດທີ່ຜູກພັນແລະໃຫ້ພຣະເຢຊູເປັນສູນກາງຂອງຊີວິດ ໂດຍສັງເກດວ່າໃນສຖານະການຕ່າງ ໆ ທີ່ພຣະເຢຊູຕອບສນອງຕໍ່ເຫດການ ຕໍ່ຜູ້ທີ່ພຣະອົງໄດ້ພົບເຫັນ ກັບພວກຜູ້ນໍາສາສນາ ກັບສັດຕູທີ່ຄອຍມາລົບກວນພຣະອົງນັ້ນ ພຣະອົງໃຊ້ຫລັກວິທີການແນວໃດ

ຄໍາວ່າ "ຣັບບີ" (Rabbi) ໃນພາສາລາວໝາຍເຖິງ "ນາຍຄຣູ" ຫລື "ອາຈານ" ປາກົດຢູ່ໃນພຣະຄຣິສທັມຄັມພີຂ່າວປະເສີດທັງ 4 ໃນຫລາຍ ໆ ຕອນດ້ວຍກັນ ດັ່ງຕົວຢ່າງຂໍ້ພຣະທັມຕໍ່ໄປນີ້

- 🕮 **ພຣະທັມໂຢຮັນ 1:38, 49 "ຝ່າຍພຣະເຢຊູຊົງຫລຽວຫລັງເຫັນເຂົາທັງສອງຕິດຕາມມາ ຈຶ່ງຊົງຖາມເຂົາວ່າ "ພວກທ່ານຊອກຫາຫຍັງ" ເຂົາທູນພຣະອົງວ່າ "ຣັບບີ" (ຊຶ່ງແປວ່າ ອາຈານ) . . . ນາທານາເອນທູນຕອບພຣະອົງວ່າ "ພຣະອາຈານເອີຍ ທ່ານເປັນພຣະບຸດຂອງພຣະເຈົ້າ ທ່ານເປັນກະສັດຂອງຊາດອິສຣາເອນ"**

- 🕮 **ພຣະທັມໂຢຮັນ 13:13-14 13 ທ່ານທັງຫລາຍເອີ້ນເຮົາວ່າ ອາຈານ ແລະນາຍເຈົ້າ ພວກທ່ານເອີ້ນຖືກຕ້ອງແລ້ວ ເພາະເຮົາເປັນຢ່າງນັ້ນ ເຫດສັນນັ້ນເຮົາຜູ້ເປັນນາຍແລະອາຈານຂອງພວກທ່ານໄດ້ລ້າງຕີນຂອງທ່ານ ພວກທ່ານກໍຄວນລ້າງຕີນຂອງກັນແລະກັນເໝືອນກັນ ພຣະທັມໂຢຮັນ 6:25 ເມື່ອເຂົາໄດ້ພົບພຣະອົງຟາກທະເລສາບເບື້ອງນັ້ນແລ້ວ ເຂົາໄດ້ທູນພຣະອົງວ່າ "ພຣະອາຈານເອີຍ ທ່ານມາທີ່ນີ້ເມື່ອໃດ?"**

ຂໍ້ພຣະທັມເຫລົ່ານີ້ໄດ້ກ່າວອ້າງເຖິງສາວົກຫລືຜູ້ຕິດຕາມພຣະອົງໃຊ້ເອີ້ນພຣະອົງ ແລະເຮົາອາດຈະເວົ້າໄດ້ວ່າ ພວກເຂົາເອີ້ນພຣະເຢຊູວ່າ **"ນາຍຄຣູ"** ຫລື **"ພຣະບໍຣົມຄຣູ"** ທີ່ເອີ້ນແນວນີ້ຍ້ອນວ່າ ພຣະອົງຊົງເປັນຜູ້ສິດສອນ ຊົງບອກທາງແຫ່ງການມີຊີວິດໃໝ່ທີ່ຖືກຕ້ອງ ພຣະອົງມີຊີວິດທີ່ຖືກຕ້ອງບໍຣິສຸດ ແລະພຣະອົງເຮັດທຸກແນວໃຫ້ສາວົກແລະຜູ້ເຊື່ອໄດ້ເຫັນເປັນແບບຢ່າງ ພຣະອົງສະແດງນໍ້າພຣະທັຍຄວາມເມດຕາປານີຕໍ່ຜູ້ຫລົງຫາຍ ແລະສາວົກກໍໄດ້ຮັບການອວຍພອນໃຫ້ອອກໄປເຮັດໃນແນວດຽວກັນ ພຣະເຢຊູຜູ້ເປັນນາຍຄຣູ ເປັນແບບຢ່າງແກ່ເຮົາໃນດ້ານ

- ❖ ການຖວາຍກຽດຕິຍົດຕໍ່ພຣະເຈົ້າ
- ❖ ຊີວິດທີ່ບໍຣິສຸດບໍ່ເຮັດບາບ
- ❖ ການເຊື່ອຟັງພຣະບິດາ

- ການຖວາຍຊີວິດເປັນເຄື່ອງບູຊາໄຖ່ບາບ
- ຄວາມເຂົ້າໃຈພຣະວັຈນະຂອງພຣະເຈົ້າດີເລີດ
- ການເຮັດຕາມນໍ້າພຣະທັຍຂອງພຣະເຈົ້າໂດຍບໍ່ມີຂໍ້ຂັດເຄືອງໃຈ
- ຊົງມີຈິດໃຈທີ່ອົດກລັ້ນຕໍ່ຄົນບາບ
- ມີຈິດໃຈທີ່ຮັກປະຊາຊົນ
- ຊົງປະກາດສັ່ງສອນເຖິງແຜ່ນດິນຂອງພຣະເຈົ້າ
- ໃຫ້ຄວາມຫວັງແກ່ທຸກຄົນໃຫ້ໂອກາດແກ່ຄົນບາບໄດ້ກັບໃຈໃໝ່
- ຊົງສະລະຊີວິດເພື່ອແຜນການຂອງພຣະເຈົ້າໄດ້ສຳເຣັດ
- ຊົງປົກປ້ອງຮັກສາລູກແກະ

ນອກເໜືອຈາກຄຸນລັກສະນະຝ່າຍວິນຍານທີ່ພຣະເຢຊູເປັນແບບຢ່າງແກ່ເຮົາແລ້ວ ພຣະຄຣິສທັມຄັມພີຫລາຍຂໍ້ ຫລາຍຕອນ ໄດ້ກ່າວເນັ້ນສອນໃຫ້ຄຣິສຕຽນສົມຄວນມີທ່າທີ ການໂຕ້ຕອບທີ່ຖືກຕ້ອງເລີ້ມຕັ້ງແຕ່ໃນຄົວເຮືອນ ຜູ້ເປັນບຸດໃຫ້ເຊື່ອຟັງບິດາມາຣດາ ສາມີໃຫ້ຮັກພັລຍາ ພັລຍາໃຫ້ເຊື່ອຟັງສາມີ ຄຣິສຕຽນສົມຄວນປະຕິບັດໃຫ້ຖືກຕ້ອງຕໍ່ເພື່ອນບ້ານແລະຄົວເຮືອນຂອງຜູ້ອື່ນທັງໃນແລະນອກຄຣິສຈັກ ເຮົາຕ້ອງມີຊີວິດທີ່ຮູ້ຈັກເຄົາຣົບສິດທິຂອງຜູ້ອື່ນ ປະຕິບັດຕາມກົດໝາຍຂໍ້ບັງຄັບຂອງຫ້ອງການ ການຮ່ວມງານກັບຜູ້ທີ່ເຮັດວຽກນຳກັນໃຫ້ຮູ້ຈັກຟັງຄວາມນາຍ ແລະເຂົ້າໃຈເຖິງກົດເກນຂອງຫ້ອງການ (Policy and Procedure) ຖ້າເປັນນາຍ (Supervisor) ໃຫ້ມີໃຈກະຣຸນາຕໍ່ລູກນ້ອງ ການໄປມາບົນຖນົນໃຫ້ຮູ້ຈັກການເຄົາຣົບກົດຈຣາຈອນ ເຊື່ອຟັງອຳນາດຣັຖບາລ ການເລືອກຕັ້ງອອກສຽງສະແດງຄວາມຄິດເຫັນ ສົມຄວນເຄົາຣົບສິດອຳນາດຂອງບ້ານເມືອງ ຜູ້ປົກຄອງປະເທດ ຊຶ່ງສິ່ງເຫລົ່ານີ້ໄດ້ກ່ຽວຂ້ອງກັບຊີວິດຂອງເຮົາທຸກມື້ ແລະຫລີກລ່ຽງບໍ່ໄດ້ ໂດຍສະເພາະຢ່າງຍິ່ງໃນຖານະທີ່ເຮົາເປັນຄຣິສຕຽນ ເຮົາຕ້ອງມີຊີວິດທີ່ເປັນແບບຢ່າງແລະສ່ອງແສງສວ່າງຂອງພຣເຢຊູຄຣິສ ພຣະອົງຜູ້ເປັນນາຍຄຣູຜູ້ປະເສີດທີ່ໄດ້ສິດສອນ ແລະເປັນແບບຢ່າງແກ່ເຮົາດ້ວຍຊີວິດຂອງພຣະອົງເອງ

**<u>ຈົ່ງທົບທວນເຖິງການກໍ່ຮູບແບບຊີວິດຄຣິສຕຽນຝ່າຍວິນຍານ ຈາກຂໍ້ພຣະທັມດັ່ງຕໍ່ໄປນີ້</u>**

- 🕮 **ພຣະທັມ 2 ໂກຣິນໂທ 13:5 "ຈົ່ງພິຈາຣະນາເບິ່ງຕົວເອງວ່າພວກເຈົ້າຕັ້ງຢູ່ໃນຄວາມເຊື່ອຫລືບໍ່ ຈົ່ງຊັນນະສູດຕົວເອງສາ ເຈົ້າທັງຫລາຍບໍ່ຮູ້ຫລືວ່າພຣະເຢຊູຄຣິສຊົງສະຖິດຢູ່ໃນພວກເຈົ້າ ເວັ້ນເສັຽແຕ່ພວກເຈົ້າຈະຜ່ານການຊັນນະສູດບໍ່ໄດ້"**
- 🕮 **ພຣະທັມຟີລິບປອຍ 2:5 "ເຈົ້າທັງຫລາຍຈົ່ງມີນໍ້າໃຈຕໍ່ກັນເໝືອນຢ່າງທີ່ມີໃນພຣະເຢຊູຄຣິສ"**
- 🕮 **ພຣະທັມໂຣມ 13:1 "ທຸກຄົນຈົ່ງຍອມຢູ່ໃຕ້ບັງຄັບຜູ້ມີອຳນາດປົກຄອງ ດ້ວຍວ່າບໍ່ມີອຳນາດອັນໃດທີ່ບໍ່ໄດ້ມາຈາກພຣະເຈົ້າ ແລະຜູ້ທີ່ມີອຳນາດນັ້ນກໍແມ່ນພຣະເຈົ້າຊົງແຕ່ງຕັ້ງຂຶ້ນ"**

🕮 ພຣະທັມເອເຟໂຊ 5:22, 25 "ຝ່າຍພັຣຍາ ຈົ່ງຍອມຢູ່ໃຕ້ບັງຄັບສາມີຂອງຕົນເໝືອນຍອມຟັງອົງພຣະຜູ້ເປັນເຈົ້າ... ຝ່າຍສາມີ ຈົ່ງຮັກພັຣຍາຂອງຕົນເໝືອນດັ່ງພຣະຄຣິສໄດ້ຊົງຮັກຄຣິສຈັກ ແລະຊົງສະລະພຣະອົງເອງເພື່ອຄຣິສຈັກ"

🕮 ພຣະທັມໂກໂລຊາຍ 3:20 "ຝ່າຍລູກທັງຫລາຍ ຈົ່ງຟັງຄວາມພໍ່ແມ່ຂອງຕົນໃນທຸກສິ່ງ ເພາະເຮັດຢ່າງນັ້ນເປັນທີ່ຊອບພຣະທັຍຂອງອົງພຣະຜູ້ເປັນເຈົ້າ"

🕮 ພຣະທັມເອເຟໂຊ 6:5 "ຝ່າຍພວກຂ້ອຍຂ້າ ຈົ່ງເຊື່ອຟັງຄວາມນາຍຝ່າຍໂລກດ້ວຍຄວາມຢຳເກງຈົນຕົວສັ່ນ ດ້ວຍນ້ຳໃສໃຈຈິງເໝືອນດັ່ງຟັງພຣະຄຣິສ"

🕮 ພຣະທັມ 1 ເປໂຕ 2:13 "ເພາະເຫັນແກ່ອົງພຣະຜູ້ເປັນເຈົ້າ ທ່ານທັງຫລາຍຈົ່ງຍອມຢູ່ໃຕ້ຂໍ້ບັງຄັບທີ່ມະນຸດຕັ້ງໄວ້ທຸກຢ່າງ ບໍ່ວ່າຜູ້ນັ້ນຈະເປັນມະຫາກະສັດຜູ້ສູງສຸດ"

🕮 ພຣະທັມມັດທາຍ 22:21 "ເຂົາທູນວ່າ 'ເປັນຂອງກາຍຊາ' ແລ້ວພຣະອົງຊົງກ່າວກັບເຂົາວ່າ 'ເຫດສັນນັ້ນສິ່ງທີ່ເປັນຂອງກາຍຊາ ຈົ່ງຄືນຖວາຍແກ່ກາຍຊາ ແລະສິ່ງທີ່ເປັນຂອງພຣະເຈົ້າ ຈົ່ງຄືນຖວາຍແດ່ພຣະເຈົ້າ'"

ທັງໝົດທີ່ກ່າວມານີ້ໄດ້ປາກົດຢູ່ໃນຊີວິດຂອງພຣະເຢຊູຄຣິສໃນຖານະພຣະບໍຣິນຄຣູ ພວກເຮົາຫລາຍ ໆ ຄົນໄດ້ຮັບການເອີ້ນຈາກສະມາຊິກວ່າອາຈານ ວ່ານາຍຄຣູ ເຖິງຂັ້ນສາສນາຈານ ເຖິງຂັ້ນມີຍົດມີສັກຣະດັບສູງໄປເຖິງດອກເຕີ ໃຫ້ເຮົາພິຈາຣະນາເບິ່ງວ່າເຮົາໄດ້ເດີນຕາມຮອຍພຣະບາດຂອງພຣະເຢຊູຫລືບໍ່ ພຽງນ້ອຍນຶ່ງມີບໍ່ ແລະນ້ອຍນຶ່ງທີ່ເຮັດຕາມພຣະອົງນັ້ນພຽງພໍຫລືບໍ່ກັບຄຳວ່າອາຈານທີ່ຜູ້ອື່ນເຂົາໃຫ້ກຽດແກ່ເຮົາ ອັນນີ້ແມ່ນຄຳເຕືອນສະຕິແກ່ຜູ້ທີ່ເປັນອາຈານທຸກ ໆ ຄົນ ເພື່ອໃຫ້ເຮົາຫັນມາຢ່າງນຳພຣະເຢຊູນາຍຄຣູຜູ້ເປັນແບບຢ່າງ

ລາງຄົນອາດກ່າວວ່າ ຂ້າພະເຈົ້າບໍ່ເຄີຍໃຫ້ໃຜເອີ້ນຕົວວ່ານາຍຄຣູຫລືອາຈານ ແລະຄິດວ່າຄຳສອນນີ້ບໍ່ມີຫຍັງກ່ຽວຂ້ອງນຳເຮົາ ແຕ່ຂໍໃຫ້ມາພິຈາຣະນາວ່າໃນຖານະຄຣິສຕຽນທັມມະດາຄົນນຶ່ງ ເຮົາສົມຄວນມີຊີວິດຄຣິສຕຽນຕິດຕາມພຣະເຢຊູຄຣິສແນວໃດ ມີຍຸກນຶ່ງໃນສະຫະຣັຖອເມຣິກາທີ່ເຂົາມັກໃຊ້ອັກສອນສີ່ຕົວ ແມ່ນ WWJD (What will Jesus Do?) **"ພຣະເຢຊູຈະເຮັດແນວໃດ"** ອັນເປັນຖ້ອຍຄວາມທີ່ນິຍົມກັນຣະຍະນຶ່ງໃນການສອນກັບເຍົາວຊົນຊາວອເມຣິກັນ ຂໍ້ຄວາມສັ້ນ ໆ ນີ້ເປັນພຽງຖ້ອຍຄຳທີ່ເຕືອນໃຈເຮົາວ່າ ກ່ອນທີ່ເຮົາຈະຕັດສິນໃຈເຣື່ອງໃດລົງໄປໃຫ້ຕັ້ງສະຕິໃຫ້ໝັ້ນເສັຽກ່ອນແລ້ວຖາມຕົວເຮົາເອງວ່າ ຫາກຖ້າເປັນພຣະເຢຊູ ພຣະອົງຈະໂຕ້ຕອບຕໍ່ສຖານະການນັ້ນໃນແນວໃດ ຫລືພຣະອົງຈະເຮັດແນວໃດ ພຣະອົງຈະຕັດສິນໃຈຢ່າງໃດ ແລ້ວເຮົາກໍຍຶດຖືເອົາແບບຢ່າງຂອງພຣະເຢຊູນັ້ນ ໂດຍວິທີການຍັບຍັ້ງຊັ່ງໃຈ ແລະເອົາພຣະເຢຊູເປັນສູນການແຫ່ງຄວາມຄິດ ກ່ອນທີ່ເຮົາຈະໃຫ້ໂຕ້ຕອບຫລືເຮັດສິ່ງໃດລົງໄປ ເຮົາກໍໄດ້ນຳຕົວຂອງເຮົາເຂົ້າໃກ້ແລະພຍາຍາມຢ່າງຍິ່ງທີ່ຈະເຂົ້າໃຈ ແລະລຽນເອົາ

ແບບຢ່າງຂອງພຣະອົງ ແຕ່ສຳລັບການທີ່ຈະມີຊີວິດຄຣິສຕຽນທີ່ຢ່າງຕາມແບບຢ່າງຂອງພຣະເຢຊູ ຈົນກະທັ່ງເຮົາເກີດລັກສະນະຂອງພຣະອົງໃນຕົວເຮົາ ຕ້ອງໃຊ້ເວລາຕລອດຊີວິດ ແລະມີການປ່ຽນແປງຢູ່ສເມີຕລອດເວລາ ອັນນີ້ບໍ່ໄດ້ໝາຍຄວາມວ່າເຮົາຈະກາຍເປັນພຣະເຢຊູ ແຕ່ມີຄວາມໝາຍວ່າ **ພຣະເຈົ້າໄດ້ເອີ້ນເຮົາໃຫ້ມີລັກສະນະຂອງຊີວິດທີ່ພຣະເຈົ້າຈະພໍພຣະທັຍເຮົາ** ແລະພາກພູມໃຈທີ່ເຮົາມີຊີວິດຕາມແບບຢ່າງທີ່ພຣະອົງໄວ້ວາງໄວ້ ຊຶ່ງເປັນສິ່ງຈຳເປັນທີ່ຄຣິສຕຽນຕ້ອງມີຄວາມຕັ້ງໃຈຈະປ່ຽນແປງຊີວິດຂອງເຮົາ ໃຫ້ເຂົ້າໃກ້ຄຽງຄ້າຍຄືກັບພຣະເຢຊູຄຣິສ (Chirstlike) ພຣະທັມເປໂຕສະບັບຕົ້ນ 1:15-16 ກ່າວວ່າ **"ແຕ່ເພາະພຣະອົງຜູ້ຊົງເອີ້ນທ່ານທັງຫລາຍນັ້ນບໍຣິສຸດ ຝ່າຍພວກທ່ານຈຶ່ງກາຍເປັນຜູ້ບໍຣິສຸດໃນກິຣິຍາວາຈາທຸກປະການເໝືອນກັນ ເພາະມີຄຳຂຽນໄວ້ແລ້ວວ່າ 'ເຈົ້າທັງຫລາຍຈຶ່ງເປັນບໍຣິສຸດ ເພາະຝ່າຍເຮົາບໍຣິສຸດ'"** ມີຂໍ້ພຣະຄັມພີຫລາຍຂໍ້ທີ່ດຽວທີ່ບອກສອນໃຫ້ເຮົາລຽນຈາກພຣະອົງ ເຊັ່ນ ພຣະທັມສຸພາສິດ 23:12 ພຣະທັມມັດທາຍ 11:29 ພຣະທັມລູກາ 9:23 ຂໍ້ພຣະທັມເຫລົ່ານີ້ ບອກສອນເຮົາວ່າຖ້າເຮົາຕ້ອງການເປັນສາວົກຂອງພຣະເຢຊູ ຢ່າງນ້ອຍທີ່ສຸດເຮົາຕ້ອງຮູ້ຈັກການຍ່າງນຳພຣະອົງ ຮຽນຈາກພຣະອົງ ເບິ່ງດູແບບຢ່າງຂອງພຣະອົງແລ້ວຂັບຕາມ ເຮົາອາດຈະຕອບວ່າເຮົາກໍຮຽນຢູ່ແລ້ວລ່ະ ແຕ່ຜູ້ທີ່ເປັນສາວົກແທ້ນັ້ນຕ້ອງມີວິນັຍໃນການຮຽນຮູ້ ຕ້ອງມີຄວາມຕັ້ງໃຈຈິງໃນການຮຽນຮູ້ຈັກພຣະອົງ ບໍ່ໃຊ່ຟັງທີ່ນີ້ນິດຟັງໂນ່ນໜ່ອຍແລ້ວເຮັດພໍໃຫ້ຜ່ານ ໆ ໄປ ໂດຍຂາດວິນັຍ ແລະຮູ້ຈັກໃຈຂອງພຣະເຢຊູ

ການກໍ່ຮ່າງສ້າງຊີວິດຝ່າຍວິນຍານຈິດຂອງຄຣິສຕຽນໝາຍເຖິງ **"ການຢູ່ໃນຣະບຽບແບບແຜນແລະຂໍ້ກຳນົດທີ່ຖືກຕ້ອງ"** ແລະກໍໝາຍລວມເຖິງການຈັດການກັບຊີວິດໃຫ້ມີຣະບຽບ ມີສີລທັມຕາມຄວາມເຊື່ອ ຢ່າງສມ່ຳສເມີ ຈົນສາມາດເຫັນແບບຢ່າງຂອງການປະຕິບັດປາກົດແຈ້ງໃນລັກສະນະນິສັຍລວມເຖິງຄວາມຄິດທີ່ມີຣະບຽບດ້ວຍ (ບໍ່ເປັນຄົນຟຸ້ງຊ່ານ ຄິດໄດ້ຫຍັງກໍເຮັດໄປໂດຍບໍ່ຮູ້ວ່າຜົນທີ່ຈະໄດ້ຮັບແມ່ນຫຍັງ) ຊຶ່ງຈະກໍ່ໃຫ້ເກີດຄວາມເສັຽຫາຍໄດ້

ໄດ້ມີເຣື່ອງເລົ່າກັນວ່າ ທ່ານຄານທີຜູ້ຕໍ່ສູ້ເພື່ອຄວາມຍຸຕິທັມຂອງປະຊາຊົນຊາວອິນເດັຽ ໝູ່ຂອງທ່ານໄດ້ຖາມທ່ານວ່າ ແມ່ນຫຍັງທ່ານຈຶ່ງບໍ່ເປັນຄຣິສຕຽນເທື່ອ ທ່ານຄານທີຕອບວ່າ **"ຖ້າຂ້ອຍໄດ້ພົບຄຣິສຕຽນທີ່ຕິດຕາມພຣະຄຣິສເມື່ອໃດ ຂ້ອຍຈະພິຈາຣະນາເບິ່ງ"** ແທ້ຈິງຄຣິສຕຽນແມ່ນຜູ້ຕິດຕາມພຣະຄຣິສ ແຕ່ຫລາຍຄົນໃຊ້ຊີວິດຂອງຕົນແບບຂາດວິນັຍ ຂາດຄວາມຍຳເກງໃນພຣະເຈົ້າ ແລະບໍ່ສາມາດສ່ອງແຈ້ງຕໍ່ຄົນທັງປວງຕາມແບບທີ່ພຣະເຢຊູໄດ້ກ່າວໄວ້ໃນພຣະທັມມັດທາຍ 5:14-16 **"ພວກທ່ານຄືແສງສວ່າງສຳລັບໂລກ ເມືອງທີ່ຕັ້ງຢູ່ເທິງພູຈະບັງລັບໄວ້ບໍ່ໄດ້ ບໍ່ທ່ອນມີຜູ້ໃດເມື່ອໄຕ້ໂຄມແລ້ວເອົາບຸງມາກວບ ແຕ່ເຄີຍຕັ້ງໄວ້ເທິງຮອງຕີນໂຄມ ແລະມັນສ່ອງແຈ້ງໄປທົ່ວທຸກຄົນທີ່ຢູ່ໃນເຮືອນນັ້ນ ເໝືອນຢ່າງນັ້ນແຫລະ ພວກທ່ານຈຶ່ງສ່ອງແຈ້ງແກ່ຄົນທັງປວງ ເພື່ອວ່າ ເມື່ອເຂົາເຫັນການດີທີ່ພວກທ່ານເຮັດເຂົາຈະໄດ້ສັຣເສີນພຣະບິດາຂອງພວກທ່ານຜູ້ຊົງສະຖິດຢູ່ໃນສວັນ"** ແຕ່ຄຣິສຕຽນຈຳນວນຫລາຍຍັງບໍ່ມີຊີວິດທີ່ປ່ຽນແປງໃໝ່ຢ່າງແທ້ຈິງ ແລະຍັງຄົງດຳເນີນຊີວິດແບບນິສັຍສັນດານເດີມ ລາງເທື່ອກໍກັບກາຍເປັນຫີນສະດຸດຂອງຜູ້ອື່ນ ເປັນເຫດຂັດຂວາງໃຫ້ຜູ້ອື່ນບໍ່ມາເຖິງພຣະເຈົ້າ ແລະເຮັດໃຫ້ຄຣິສຈັກມົວໝອງ ອີກທັງ

ຍັງມີຄຣິສຕຽນຈຳນວນຫລາຍທີ່ຄິດວ່າ ພຣະຄຣິສແມ່ນຜູ້ທີ່ຄອຍຕິດຕາມຊ່ວຍເຫລືອລາວ ພຣະອົງຊົງພຣະຊົນຢູ່ເປັນນິດ ເຮົາໄວ້ວອນຂໍເພື່ອໃຫ້ພຣະອົງບໍຣິການເຮົາຕາມທີ່ເຮົາປາຖນາ ທີ່ຖືກນັ້ນເຮົາຕ້ອງສຳນຶກສເນີວ່າໃນແຕ່ລະມື້ເຮົາແມ່ນຜູ້ຕິດຕາມແຜນການຂອງພຣະອົງ ແລະໄວ້ວາງໃຈໃນການຊົງນຳໂດຍພຣະວິຍານບໍຣິສຸດ ເຮົາແມ່ນຜູ້ຕິດຕາມບໍ່ແມ່ນຜູ້ນຳໜ້າ

ພຣະເຢຊູຄຣິສຮ້ອງເຮົາໃຫ້ຕິດຕາມພຣະອົງ (ລກ 5:27) ແລະເປັນສາວົກ ເປັນຄຣິສຕຽນ ແມ່ນຜູ້ຕິດຕາມພຣະລັກສະນະຂອງພຣະອົງ ຊຶ່ງພຣະອົງໄດ້ວາງຮູບແບບໄວ້ສຳລັບເຮົາ ຜູ້ເປັນ **"ສາວົກ" ແມ່ນຜູ້ຕິດຕາມ ຜູ້ຮຽນຄຳສອນ ຮູ້ຈັກຮັກຜູ້ອື່ນ ແລະຜູ້ຍອມເສັຽສະລະຊີວິດເພື່ອພຣະຣາຊອານາຈັກຂອງພຣະເຈົ້າ** (ລກ 17:23) ຕລອດຊີວິດຂອງພຣະອົງທີ່ຢູ່ໃນໂລກນີ້ ພຣະອົງໄດ້ມີວິນັຍ ມີຄວາມມັ່ງໝັ້ນມີຄວາມຕັ້ງໃຈແທ້ ເພື່ອໃຫ້ນ້ຳພຣະທັຍຂອງພຣະເຈົ້າໃນການຊ່ວຍກູ້ມະນຸດໂລກສຳເຣັດ ພຣະອົງຊົງເປັນແບບຢ່າງແກ່ເຮົາ ດັ່ງນັ້ນໃນຖານະທີ່ເຮົາເປັນສາວົກ ເຮົາຕ້ອງລຽນນຳແບບຢ່າງຂອງພຣະອົງເຮົາຈຶ່ງມັ່ງໝັ້ນໃຫ້ມີວິນັຍໃນການຍ່າງຕາມພຣະເຢຊູຜູ້ເປັນນາຍຄຣູ

ຣ່ 9/26/07

# ບົດທີ 6

# ຍ່າງນຳພຣະເຢຊູຄຣິສ
# ຜູ້ເປັນແບບຢ່າງໃນການໄຫວ້ວອນ

**"ຈົ່ງໝັ່ນໃສ່ໃຈໃນການໄຫວ້ວອນ**
**ຈົ່ງເຝົ້າລະວັງຢູ່ໃນການນັ້ນດ້ວຍການຂອບພຣະຄຸນ"**
**ໂກໂລຊາຍ 4:2**
**"ຈົ່ງໄຫວ້ວອນຢູ່ບໍ່ຂາດ ຈົ່ງຂອບພຣະຄຸນໃນທຸກສິ່ງ"**
**1 ເທຊະໂລນິກ 5:17-18**

ຄຳສອນໂດຍທົ່ວ ໆ ໄປ ການໄຫວ້ວອນພຣະເຈົ້າຂອງຄຣິສຕຽນແມ່ນສິ່ງຈຳເປັນທີ່ສຸດ ຄືກັບການຫາຍໃຈເຂົ້າອອກຊຶ່ງເປັນເຣື່ອງທີ່ຈຳເປັນທີ່ສຸດຂອງຊີວິດ ແຕ່ການຫາຍໃຈຂອງມະນຸດນັ້ນເບິ່ງຄືງ່າຍແລະເປັນໄປໂດຍທັມຊາດ ໂດຍບໍ່ຕ້ອງພຍາຍາມຫລາຍ ເພາະວ່າຕຣາບໃດທີ່ເຮົາຍັງມີຊີວິດຢູ່ໂດຍປົກຕິ ເຮົາຫາຍໃຈເຂົ້າອອກຕລອດເວລາໂດຍອັຕໂນມັດ ແທ້ຈິງແລ້ວການອະທິຖານຫລືການໄຫວ້ວອນຂອງຄຣິສຕຽນແມ່ນສິ່ງຈຳເປັນຢ່າງແທ້ຈິງ ຕາມຄຳສອນໂດຍທົ່ວໄປ ເມື່ອເບິ່ງດູພຣະເຢຊູຄຣິສພຣະບຸດຂອງພຣະເຈົ້າ ພຣະອົງຊົງປລີກຕົວອອກຈາກຝູງຊົນໄປຫາບ່ອນສງົບງຽບເພື່ອການອະທິຖານໄຫວ້ວອນຕໍ່ພຣະບິດາ "ແຕ່ພຣະອົງໄດ້ສະເດັດອອກໄປກາງປ່າແລະໄຫວ້ວອນຢູ່" (ລກ 5:16) ສິ່ງເຫລົ່ານີ້ແມ່ນຂາດບໍ່ໄດ້ ຄືກັບການຫາຍໃຈເຂົ້າອອກ ຍ້ອນວ່າຫລາຍເທື່ອເມື່ອເຮົາໄຫວ້ວອນຕໍ່ພຣະເຈົ້າໃນສິ່ງທີ່ເຮົາຂັດຂ້ອງເຮັດບໍ່ໄດ້ ໃນສິ່ງທີ່ເຮົາຂາດເຂີນ ຫລືເກີນຄວາມສາມາດຂອງຕົວເອງທີ່ຈະຄວບຄຸມສຖານະການ ຫລືໃນສິ່ງທີ່ເກີນຄວາມຄິດຂອງມະນຸດທີ່ຈະເຂົ້າໃຈ ເຮົາຈຶ່ງໄດ້ເຂົ້າເຝົ້ານຳເອົາສິ່ງເຫລົ່ານີ້ມາໄຫວ້ວອນ ຂໍການຊົງນຳພາ ຂໍການຊ່ວຍເຫລືອຈາກພຣະເຈົ້າ ແຕ່ທີ່ໜ້າຍິນດີຫລາຍກວ່ານີ້ອີກຄືວ່າ ເຮົາບໍ່ຕ້ອງລໍຈົນກວ່າເຮົາມີບັນຫາຫລືຄວາມທຸກຍາກ ແລ້ວຈຶ່ງມາເຂົ້າເຝົ້າອະທິຖານໄຫວ້ວອນຫາພຣະເຈົ້າ ແຕ່ເຮົາສາມາດອະທິຖານກັບພຣະເຈົ້າໄດ້ທຸກເວລາ ທຸກສຖານະການ ທຸກສະຖານທີ່ ແລະບໍ່ພຽງແຕ່ໃນເວລາທີ່ເຮົາທຸກຍາກທີ່ສຸດ ແຕ່ໃນເວລາທີ່ເຮົາມີຄວາມສຸກດ້ວຍ ເຮົາສັລເສີນພຣະເຈົ້າໄດ້ ຄລ້າຍຄືກັບລົມຫາຍໃຈເຂົ້າແລະອອກຕລອດເວລາ

## ນຶ່ງ. ຄວາມໝາຍຂອງການອະທິຖານ

ການອະທິຖານນັ້ນເປັນຂອງຂວັນທີ່ໄດ້ຮັບຈາກພຣະເຈົ້າ ແລະເປັນສິ່ງທີ່ພິເສດທີ່ເຮັດໃຫ້ເຮົາໄດ້ເຂົ້າໃກ້ສົນທະນາ ແລະຢູ່ກັບພຣະອົງ ໂດຍບໍ່ຈຳກັດເວລາຫລືສະຖານທີ່ເພາະວ່າເຮົາສາມາດທີ່ຈະເຂົ້າໃກ້ເຖິງພຣະທີ່ນັ່ງແຫ່ງພຣະຄຸນຢູ່ຕລອດເວລາໄດ້ ເຊັ່ນດຽວກັບການທີ່ເຮົາໄດ້ເວົ້າຄຸຍກັບເພື່ອນສະນິດ ເຮົາຈະຮູ້ສຶກວ່າບໍ່ເບື່ອເລີຍ ແລະເຮົາສາມາດທີ່ຈະເປີດເຜີຍເຣື່ອງຕ່າງ ໆ ທີ່ມີຢູ່ພາຍໃນສ່ວນເລິກຂອງຈິດໃຈໄດ້ຢ່າງງ່າຍດາຍ ດັ່ງນັ້ນເມື່ອເຮົາອະທິຖານເຮົາຈຶ່ງສາມາດທີ່ຈະສົນທະນາກັບພຣະເຈົ້າໄດ້ເຊັ່ນດຽວກັນກັບການເວົ້າຄຸຍກັບເພື່ອນສະນິດ ເຮົາຈຶ່ງບໍ່ຈຳເປັນຕ້ອງໃຊ້ຄຳສັບທີ່ຍາກ ໆ ໃນການອະທິຖານກັບພຣະເຈົ້າ ເພາະພຣະອົງຊົງຮູ້ຈັກຊີວິດຂອງເຮົາເປັນຢ່າງດີ ແລະພຣະອົງຊົງຕ້ອງການທີ່ຈະແບ່ງເບົາພາລະແລະບັນຫາທີ່ເຮົາກຳລັງຜະເຊີນຢູ່ບໍ່ວ່າຈະເປັນ ຄວາມຮູ້ສຶກທີ່ຊ້ຳໃຈ ອຸກໃຈ ຄວາມໂສກເສົ້າ ຄວາມຄຽດ ຄວາມຮູ້ສຶກທີ່ວ່າຕົນເອງຕ່ຳຕ້ອຍຂາດຄຸນຄ່າ ຄວາມທຸກ ຄວາມຢ້ານ ແລະສະຖານການທຸກຢ່າງທີ່ເກີດຂຶ້ນໃນຊີວິດຂອງເຮົາ ແຕ່ໜ້າເສັຽດາຍທີ່ຄຣິສຕຽນຈຳນວນຫລາຍທີ່ໄດ້ຮັບເຊື່ອໃນພຣະເຢຊູຄຣິສແລ້ວ ກັບໃຫ້ພຣະອົງຊົງປະທັບຢູ່ໃນຫ້ອງໃຕ້ດິນ ແລະຕົນເອງຍັງຄົງເປັນເຈົ້າຊີວິດເໜືອຊີວິດຂອງຕົນເອງ ຊຶ່ງພວກເຂົາມັກຈະຮຽກຮ້ອງພຣະນາມຂອງພຣະເຢຊູຄຣິສກໍຕໍ່ເມື່ອມີບັນຫາເທົ່ານັ້ນ

ທີ່ຈິງແລ້ວ ການອະທິຖານນັ້ນບໍ່ແມ່ນເປັນພຽງການສົນທະນາກັບພຣະເຈົ້າເທົ່ານັ້ນ ແຕ່ປຽບເໝືອນກັບການຫາຍໃຈຝ່າຍຈິດວິນຍານທີ່ເປັນໄປຢ່າງຕໍ່ເນື່ອງຢູ່ຕລອດເວລາຂອງຄຣິສຕຽນ ບຸກຄົນຜູ້ທີ່ຮູ້ຈັກວ່າການອະທິຖານນຳມາຊຶ່ງຄວາມຊື່ນຊົມຍິນດີນັ້ນ ເຂົາຈະເຕັມໃຈທີ່ຈະຮຽນຮູ້ຈັກການຄຸກເຂົ່າອະທິຖານຢ່າງຈິງຈັງໄດ້ດ້ວຍ ເພາະວ່າຍິ່ງເຮົາຮູ້ຈັກນ້ຳພຣະທັຍຂອງພຣະເຈົ້າ ກໍຈະເຮັດໃຫ້ເຮົາໄດ້ເຂົ້າໃກ້ຊິດພຣະອົງຫລາຍຂຶ້ນ ພຣະເຈົ້າຊົງອ້າແຂນຕ້ອນຮັບເຮົາຢູ່ສເມີ ດັ່ງນັ້ນການອະທິຖານຈຶ່ງເປັນການທີ່ເຮົາເຂົ້າໄປຢູ່ໃນພຣະຊວງຂອງພຣະອົງ ແລະໄດ້ຮັບການໂອບອຸ້ມຈາກພຣະເຈົ້າ ຊຶ່ງເຮັດໃຫ້ເຮົາສາມາດທີ່ຈະອະທິຖານທູນຂໍຕໍ່ພຣະເຈົ້າໄດ້ຢ່າງເປັນກັນເອງໂດຍບໍ່ມີສິ່ງໃດທີ່ຈະເປັນອຸປະສັກຂວາງກັ້ນໄດ້ເລີຍ ເຮົາຈຶ່ງໄດ້ຮັບຄຳຕອບຈາກພຣະເຈົ້າຕາມນ້ຳພຣະທັຍຂອງພຣະອົງໄດ້

## ສອງ. ການເຂົ້າເຝົ້າໄຫ້ວວອນພຣະເຈົ້າ ແມ່ນການຜູກສັມພັນທະພາບກັບພຣະອົງ

"ຈົ່ງທູນເຮົາ ແລະເຮົາຈະຕອບເຈົ້າ ແລະຈະບອກສິ່ງທີ່ໃຫຍ່ຍິ່ງແລະທີ່ລີ້ຊ່ອນຢູ່ ຊຶ່ງເຈົ້າບໍ່ຮູ້ນັ້ນໃຫ້ແກ່ເຈົ້າ" (ຢຣມ 33:3)

ການຕິດຕໍ່ສື່ສານເວົ້າຈາກັນເປັນສິ່ງທີ່ສຳຄັນ ບໍ່ວ່າໃນຄວາມສັມພັນນັ້ນຈະເປັນພໍ່ ແມ່ແລະລູກ ສາມີແລະພັຣຍາ ນາຍຈ້າງກັບລູກຈ້າງ ຄຣູຝຶກກັບນັກກິລາ ແລະສິ່ງທີ່ສຳຄັນທີ່ສຸດ ຄື ຄວາມສັມພັນຣະຫວ່າງພຣະເຈົ້າກັບຜູ້ທີ່ຮັກພຣະອົງ ພຣະເຢຊູຊົງເປັນນັກອະທິຖານ ເຖິງແມ່ນວ່າພຣະເຢຊູຊົງເປັນພຣະບຸດອົງດຽວຂອງພຣະເຈົ້າ ທີ່ຊົງຣິດທານຸພາບ ແຕ່ພຣະອົງກໍຍັງຊົງຕິດຕໍ່ສື່ສານໄປຫາພຣະເຈົ້າພຣະບິດາໂດຍການອະທິຖານ ນີ້ເປັນການເຂົ້າໃຈຍາກສຳລັບເຮົາ ແຕ່ບົດຮຽນກ່ຽວກັບເຣື່ອງນີ້ເຂົ້າໃຈໄດ້ງ່າຍ ຖ້າ

ແມ່ນວ່າພຣະເຢຊູຍັງຈຳເປັນຕ້ອງຕິດຕໍ່ສື່ສານກັບພຣະເຈົ້າ ເພື່ອກະທຳພຣະຣາຊະກິດຂອງພຣະອົງໃຫ້ສຳເຣັດ ຫລາຍກວ່ານັ້ນອີກເທົ່າໃດທີ່ເຮົາເອງຍິ່ງຈຳເປັນຕ້ອງອະທິຖານ ຈຶ່ງຄິດເຖິງວ່າທ່ານຕ້ອງຜະເຊີນສິ່ງໃດໃນມື້ນີ້ ຖ້າທ່ານຖາມວ່າ "ພຣະເຢຊູຊົງເຮັດຢ່າງໃດ" ທ່ານກໍສາມາດ ໝັ້ນໃຈໄດ້ ເມື່ອເບິ່ງຈາກຊີວິດທີ່ເປັນຕົວຢ່າງອັນດີຂອງພຣະອົງ ວ່າພຣະອົງຈະອະທິຖານກ່ອນເຮັດສິ່ງອື່ນຢ່າງແນ່ນອນ ຂໍໃຫ້ເຮົາຮັບເອົາສິ່ງນີ້ມາເປັນແບບແຜນໃນທາງຊີວິດເຮົາເໝືອນກັນ

ການໄຫວ້ວອນ ແມ່ນການສ້າງສັມພັນທະພາບ ໂດຍການຜູກສັມພັນດ້ວຍການສົນທະນາຂອງຄົນສອງຝ່າຍ ຝ່າຍເຮົາເວົ້ານຳພຣະເຈົ້າ ແລະຝ່າຍເຮົາອີກນັ້ນແຫລະທີ່ຕ້ອງສົນໃຈຟັງຄຳຕອບຈາກພຣະເຈົ້າ ເພາະວ່າພຣະອົງເປັນອີກຝ່າຍນຶ່ງທີ່ຟັງຄຳໄຫວ້ວອນຂອງເຮົາ ແລະພຣະອົງກຳລັງຊ່ວຍເຫລືອນຳພາແລະຊີ້ບອກທາງເດີນ ແລະທາງແກ້ໄຂບັນຫາແກ່ເຮົາ ແຕ່ຫລາຍເທື່ອເຮົາສ້າງສັມພັນທະພາບທີ່ບໍ່ຖືກຕ້ອງກັບພຣະເຈົ້າອົງຍິ່ງໃຫຍ່ສູງສຸດ ໂດຍຕັ້ງສູນຢູ່ທີ່ຕົນເອງແຕ່ຝ່າຍດຽວ ແລະໂດຍການເວົ້າຍາວຄືກັບຈິ່ມລອຍ ໆ ອອກໄປ ເມື່ອຈົບແລ້ວກໍປະປ່ອຍ ແລ້ວຕົວເອງກັບຫວນຄືນມາຄໍ່າຄວນຢູ່ໃນຄວາມທຸກແລ້ວກໍອຸກໃຈຄືເດີມ ດັ່ງນັ້ນເຮົາຈຶ່ງຕ້ອງມີການຝຶກຝົນວິນັຍໃນການເຂົ້າເຝົ້າພຣະເຈົ້າ ເສັຽໃໝ່

ດັ່ງຕົວຢ່າງທີ່ເຮົາຮູ້ຈັກດີວ່າ ການຮັກສາຮູບຊົງໃນຝ່າຍຮ່າງກາຍນັ້ນ ຈະຕ້ອງມີການຝຶກຫັດຮ່າງກາຍຢ່າງມີຣະບຽບວິນັຍ ເພື່ອໃຫ້ກ້າມເນື້ອກະດູກເອັນມີຄວາມເຂັ້ມແຂງ ມີສະມັດທະພາບໃນການເຮັດວຽກຮ່ວມກັນຕລອດທັ້ງຮ່າງກາຍ ໃນທຳນອງດຽວກັນການຮັກສາສັມພັນທະພາບກັບຜູ້ນຶ່ງຜູ້ໃດໃຫ້ເກີດສັມພັນທະພາບທີ່ດີ ຈະຕ້ອງໃຊ້ເວລາກັບຜູ້ນັ້ນ ເຮົາທຸກຄົນຕ່າງກໍມີຄວາມຕັ້ງໃຈຢ່າງແນ່ວແນ່ທີ່ຈະຢູ່ກັບຜູ້ທີ່ຕົນຮັກ ພຣະເຈົ້າຊົງຮັກທ່ານ ແລະສະຖິດຢູ່ນຳທ່ານຢ່າງແນ່ນອນຕລອດໄປ ພຣະອົງປະສົງມີສັມພັນທະພາບກັບເຮົາ ພຣະອົງຊົງເຫັນຄຸນຄ່າໃນຕົວທ່ານ ຈຶ່ງໄດ້ປະທານພຣະບຸດຂອງພຣະອົງເປັນຄ່າໄຖ່ບາບຂອງທ່ານເຖິງໄມ້ກາງແຂນ ຄວາມຮັກອັນຍິ່ງໃຫຍ່ນີ້ເປັນຄືກັບຂົວທີ່ເຊື່ອມ **"ຊ່ອງວ່າງ"** ເພື່ອໃຫ້ມະນຸດທີ່ໄດ້ເຮັດບາບຈະສາມາດມີຄວາມຊົມຊື່ນຍິນດີໃນມິຕພາບອັນສົມບູນນີ້ກັບພຣະເຈົ້າອົງບໍຣິສຸດ

ແມ່ນຄວາມຈິງທີ່ວ່າຄວາມອຸກໃຈ ວຽກການ ແລະຄວາມປະສົງຢາກໄດ້ໃນສິ່ງຕ່າງ ໆ ໄດ້ບີບຮັດເອົາເວລາໄປໝົດ ເຮັດໃຫ້ການມີສັມພັນທະພາບກັບພຣະເຈົ້າເປັນເຣື່ອງທີ່ປ່ອຍໃຫ້ລໍຖ້າໄປກ່ອນ (ມາຣະໂກ 4:19) ໃນການຮັກສາຮູບຊົງຝ່າຍຈິດວິນຍານນັ້ນ ສິ່ງສຳຄັນອັນດັບແລກຄືການຕັ້ງເວລາໄວ້ເພື່ອເຂົ້າເຝົ້າພຣະເຈົ້າເປັນປະຈຳທຸກມື້ ດ້ວຍຄວາມຕັ້ງໃຈ ດ້ວຍທ່າທີທີ່ເຄົາຣົບຍຳເກງ ແລະຖວາຍກຽດແດ່ພຣະເຈົ້າ ເມື່ອທ່ານອະທິຖານແລະອ່ານພຣະວັຈນະຂອງພຣະເຈົ້າເປັນປະຈຳ ທ່ານຈະມີຄວາມໝັ້ນໃຈແລະຮູ້ວ່າພຣະເຈົ້າຊົງສຖິດຢູ່ດ້ວຍ ການຕັດສິນໃຈທຸກເຣື່ອງຈະມີພຣະເຈົ້າເປັນສູນກາງແລະນຳພາໃຫ້ພົບກັບຄຳຕອບ ທ່ານຈະມີສັມພັນທະພາບກັບພຣະອົງຢ່າງແໜ້ນແຟ້ນ ເພາະວ່າພຣະອົງມີຈຸດປະສົງທີ່ຈະມີສັມພັນທະພາບນຳທ່ານກ່ອນຢູ່ແລ້ວ "ຢ່າທຸກຮ້ອນໃຈດ້ວຍສິ່ງໃດເລີຍ ແຕ່ຈົ່ງທູນເຣື່ອງຄວາມປາຖນາຂອງພວກເຈົ້າທຸກຢ່າງຕໍ່ພຣະເຈົ້າ ດ້ວຍການໄຫວ້ວອນ ແລະການອ້ອນວອນຂໍ ພ້ອມກັບການ

ຂອບພຣະຄຸນ ແລ້ວສັນຕິສຸກອັນມາແຕ່ພຣະເຈົ້າຊຶ່ງເກີນຄວາມເຂົ້າໃຈ ຈະເຝົ້າຮັກສາຈິດໃຈແລະຄວາມຄິດຂອງເຈົ້າທັງຫລາຍໄວ້ໃນພຣະເຢຊູຄຣິດ" (ຟປ 4:6-7)

## ສາມ. ຈົ່ງພິຈາຣະນາຮູບແບບການອະທິຖານ

ໃນພຣະທັມລູກາ 18:10-14 ໄດ້ກ່າວເຖິງຄົນສອງຄົນທີ່ມີທ່າທີໃນການອະທິຖານໄຫວ້ວອນທີ່ຕ່າງກັນດັ່ງນີ້ ມີຊາຍສອງຄົນຂຶ້ນໄປໄຫວ້ວອນໃນບໍຣິເວນພຣະວິຫານ ຜູ້ນຶ່ງເປັນຝ່າຍຟາຣີຊາຍແລະຄົນນຶ່ງເປັນຄົນເກັບພາສີ ຝ່າຍຜູ້ທີ່ເປັນຄົນຟາຣີຊາຍຄົນນັ້ນຢືນນຶກໃນໃຈຂອງຕົນໄຫວ້ວອນວ່າ **"ຂ້າແດ່ພຣະເຈົ້າ ຂ້າພຣະອົງຂໍໂມທະນາຂອບພຣະຄຸນພຣະອົງ ທີ່ຂ້າພຣະອົງບໍ່ເໝືອນຄົນອື່ນ ຊຶ່ງເປັນຄົນໂລບຄົນບໍ່ຍຸດຕິທັມ ຄົນຫລິ້ນຊູ້ສູ່ຜົວເມັຽ ແລະບໍ່ເໝືອນຄົນເກັບພາສີຜູ້ນີ້ ໃນລະຫວ່າງອາທິດນຶ່ງຂ້າພຣະອົງຖືສິນອົດອາຫານສອງເທື່ອ ຂອງທຸກສິ່ງທີ່ຂ້າພຣະອົງຫາມາໄດ້ ຂ້າພຣະອົງແບ່ງເປັນສິບສ່ວນ ຖວາຍນຶ່ງສ່ວນ"** ສ່ວນຄົນເກັບພາສີ ຜູ້ນັ້ນຢືນຢູ່ແຕ່ໄກ ບໍ່ຫານເງີຍໜ້າເບິ່ງຟ້າ ແຕ່ຕີເອິກຂອງຕົນກ່າວວ່າ **"ຂ້າແດ່ພຣະເຈົ້າ ຂໍຊົງໂຜດພຣະເມດຕາແກ່ຂ້າພຣະອົງ ຜູ້ເປັນຄົນບາບແດ່ທ້ອນ"** ເຮົາ (ພຣະເຢຊູ) ບອກທ່ານທັງຫລາຍວ່າ **"ຄົນນີ້ແຫລະ ເມື່ອກັບລົງໄປຍັງເຮືອນຂອງຕົນ ກໍຊົງນັບວ່າຊອບທັມຫລາຍກວ່າຄົນອື່ນນັ້ນ ເພາະວ່າທຸກຄົນທີ່ຍົກຕົວຂຶ້ນຈະຖືກຖອນລົງ ແຕ່ຜູ້ທີ່ໄດ້ຖ່ອມຕົວລົງຈະຖືກຍົກຂຶ້ນ"**

ໃນທຳນອງດຽວກັນຕາມຕົວຢ່າງຂ້າງເທິງ ການອະທິຖານໄຫວ້ວອນຂອງເຮົາກໍອາດຈະມີທ່າທີທີ່ບໍ່ຖືກຕ້ອງ ດ້ວຍການອວດອ້າງເຖິງສິ່ງດີໃນຕົວເຮົາ ຕົວຢ່າງທີ່ປາກົດໃນພຣະຄັມພີຄ່ອນຂ້າງຊັດແຈ້ງເຖິງວ່າຄົນນຶ່ງຄົນໃດເບິ່ງຄືກັບວ່າຖ່ອມໃຈດີ ແທ້ທີ່ຈິງກໍບໍ່ໄດ້ຖ່ອມໃຈໃນການອະທິຖານແຕ່ກັບໂອ້ອວດຕົວ ລາງເທື່ອເຮົາອາດຈະບອກວ່າ ຕົວເຮົາອາດຈະເປັນຄົນກາງ ກລ່ຳ ໆ ກິ່ງ ໆ ຣະຫວ່າງທັງສອງຄົນ ຄືເຄິ່ງນຶ່ງອວດຕົວ ແລະອີກເຄິ່ງນຶ່ງຖ່ອມຕົວ ຫລືອາດຈະເປັນແນວໃໝ່ອອກໄປອີກແນວນຶ່ງກໍໄດ້ ເຖິງຢ່າງໃດກໍຕາມຊີວິດຄຣິສຕຽນທີ່ຈະຢ່າງຕາມພຣະຄຣິສກໍຕ້ອງຮຽນຄຳອະທິຖານຈາກພຣະຄຣິສ

### ພຣະເຢຊູເປັນແບບຢ່າງໃນການໄຫວ້ວອນ

ພຣະອົງຊົງອະທິຖານໃນພຣະທັມມັດທາຍ 6:9-15 ຊຶ່ງເປັນແບບຢ່າງສຳລັບເຮົາ ຄຳອະທິຖານໄຫວ້ວອນຂອງພຣະອົງໄດ້ຄອບຄຸມເຖິງສິ່ງເຫລົ່ານີ້

- 🕮 **ຂໍ້ 9 ເຫດສັນນີ້ ພວກທ່ານຈົ່ງອ້ອນວອນຕາມຢ່າງນີ້ວ່າ 'ຂ້າແດ່ພຣະບິດາຂອງຂ້າພຣະອົງທັງຫລາຍ ຜູ້ຊົງສະຖິດໃນສວັນ ຂໍໃຫ້ພຣະນາມຂອງພຣະອົງເປັນທີ່ເຄົາຣົບບູຊາ'**
  ເພື່ອເທີດພຣະກຽດພຣະເຈົ້າ ຍົກຍໍສາທຸການພຣະບິດາ
- 🕮 **ຂໍ້ 10 ຂໍໃຫ້ພຣະຣາຊອານາຈັກຂອງພຣະອົງມາຕັ້ງຢູ່ ຂໍໃຫ້ເປັນໄປຕາມນ້ຳພຣະທັຍຂອງພຣະອົງ ໃນສວັນເປັນຢ່າງໃດກໍໃຫ້ເປັນຢ່າງນັ້ນທີ່ແຜ່ນດິນໂລກ**

ຊີ້ເຫັນເຖິງຄວາມສຳຄັນ ແລະຈຳເປັນທີ່ຈະໃຫ້ຣາຊອານາຈັກຂອງພຣະເຈົ້າຄອບຄອງດວງໃຈມະນຸດໃນໂລກນີ້

📖 **ຂໍ້ 11 ຂໍຊົງໂຜດປະທານອາຫານປະຈຳວັນ ໃຫ້ແກ່ຂ້າພຣະອົງທັງຫລາຍໃນກາລະວັນນີ້**
ເປັນການອະທິຖານຂໍໃຫ້ໄດ້ຮັບການລ້ຽງດູໃນເຣື່ອງຈຳເປັນຂອງຊີວິດໃນແຕ່ລະມື້

📖 **ຂໍ້ 12 ຂໍຊົງໂຜດຍົກໂທດໃຫ້ຂ້າພຣະອົງ ເໝືອນຂ້າພຣະອົງຍົກໂທດໃຫ້ແກ່ຜູ້ທີ່ເຮັດຜິດຕໍ່ຂ້າພຣະອົງນັ້ນ**
ໃນການອະທິຖານເຮົາຕ້ອງສຳນຶກເຖິງຄວາມຜິດ ຂໍ້ບົກພ່ອງໃນຊີວິດ ແລະຂໍການອະພັຍຍົກໂທດບາບ ຕັ້ງຕົ້ນຊີວິດໃໝ່ກັບພຣະເຈົ້າໃນແຕ່ລະມື້ ໃນເວລາດຽວກັນ ໃຫ້ເຮົາຄິດເຫັນເຖິງຜູ້ອື່ນທີ່ເຂົາອາດຈະເຮັດຜິດພລາດລ່ວງເກີນເຮົາ ໃຫ້ເຮົາຍົກໂທດເຂົາ ແລະໃຫ້ເຂົາມີໂອກາດຕັ້ງຕົວໃໝ່ໄດ້ ຄືກັບເຮົາທີ່ຂໍການຕັ້ງຕົວໃໝ່ຈາກພຣະເຈົ້າ

📖 **ຂໍ້ 13 ແລະຂໍຢ່າພາຂ້າພຣະອົງເຂົ້າໄປໃນການທົດລອງ ແຕ່ຂໍຊົງໂຜດໃຫ້ພົນຈາກການຊົ່ວຮ້າຍ (ເຫດວ່າຣາຊອານາຈັກ ຣິດອຳນາດ ແລະພຣະຣັສມີກໍເປັນຂອງພຣະອົງສືບໆ ໄປເປັນນິດ ອາແມນ)**
ທີ່ສຸດຂໍພຣະເຈົ້ານຳເຮົາໃຫ້ຫລີກໃຫ້ພົ້ນຈາກສິ່ງທີ່ລໍ້ລວງເຮົາໃນໂລກນີ້ ລາງເທື່ອແມ່ນຄວາມກຽດ ຍົດສັກ ອຳນາດ ເງິນຄຳ ຜູ້ຍິງ/ຜູ້ຊາຍ ການຮ້າຍທຸກສິ່ງທຸກແນວຂໍພຣະເຈົ້າປົກປ້ອງເຮົາບໍ່ໃຫ້ຕົກໄປເປັນທາດ ຫລືກະທັ່ງໄປໄກ້ຊິດກໍຢ່າ ໃນຕອນທ້າຍຂອງຂໍ້ນີ້ແມ່ນຄືກັບການບົນບານ ສາທຸ ໂດຍການຍົກຍໍເທີດທູນພຣະກະຣຸນາຄຸນຂອງພຣະເຈົ້າ ເພາະພຣະອົງຍິ່ງໃຫຍ່ ແລະພຣະຣັສມີຂອງພຣະອົງຄຸ້ມຫົວຄຸ້ມຊີວິດເຮົາໃນແຕ່ລະມື້

📖 **ຂໍ້ 14-15 ເພາະວ່າຖ້າວ່າທ່ານຍົກຄວາມຜິດຂອງເພື່ອນມະນຸດ ພຣະບິດາຂອງທ່ານຜູ້ຊົງສະຖິດໃນສວັນຈະຊົງໂຜດຍົກຄວາມຜິດຂອງທ່ານດ້ວຍ ແຕ່ຖ້າທ່ານບໍ່ຍົກຄວາມຜິດຂອງເພື່ອນມະນຸດ ພຣະບິດາຂອງທ່ານກໍຈະບໍ່ຊົງໂຜດຍົກຄວາມຜິດຂອງທ່ານເໝືອນກັນ**
ແມ່ນການຍໍ້າຄວາມສຳຄັນຂອງສັມພັນທະພາບຣະຫວ່າງພຣະເຈົ້າກັບເຮົາ ແລະຣະຫວ່າງເຮົາກັບເພື່ອນມະນຸດທີ່ຢູ່ອ້ອມຂ້າງຕົວເຮົາ ອີກທັງກ່າວເຕືອນໃຫ້ຣະວັງໄວ້ວ່າ ຢ່າໂອ້ອວດຕົວ ບໍ່ຊັງຜູ້ອື່ນ ເພາະວ່າເມື່ອໂອ້ອວດຕົວແລ້ວ ເຮົານັ້ນແຫລະ ຈະເສັຽຜົນປະໂຍດຢ່າງໃຫຍ່ຫລວງ ແມ່ນພຣະເຈົ້າຈະບໍ່ຊົງໂຜດຍົກຄວາມຜິດຂອງເຮົາ

ຄຳອະທິຖານໄຫວ້ວອນຂອງພຣະເຢຊູເລິກຊຶ້ງເຖິງຈິດໃຈ ເຮົາອາດແກ້ຕົວວ່າມີຫລາຍໂຜດ ຈະເຮັດໄດ້ແນວໃດທີ່ຈະໄຫວ້ວອນໃຫ້ຄົບທຸກຂໍ້ຄວາມຕາມແບບຢ່າງຂອງພຣະເຢຊູຄຣິສ ໃນບົດຮຽນນີ້ຂໍແນະນຳຫລັກປະຕິບັດສອງແນວ

1. ທ່ອງຈື່ຈຳ ຫລືເວົ້າປາກເປົ່າຄຳອະທິຖານຂອງພຣະເຢຊູໃຫ້ຂຶ້ນໃຈສາ

2. ທຸກເທື່ອທີ່ໄຫວ້ວອນດ້ວຍພາສາສ່ວນຕົວກໍໄຫວ້ວອນເນັ້ນໄປທີ່ຂໍ້ໃດຂໍ້ນຶ່ງຕາມຄຳອະທິຖານຂອງພຣະເຢຊູ ໂດຍເນັ້ນໄປຕາມຄວາມເປັນຈິງທີ່ເຮົາກຳລັງປະສົບກັບເຫດການນັ້ນຢູ່ ແລ້ວໄຫວ້ວອນຕື່ມຂໍ້ທີ່ເຮົາຈື່ໄດ້ ທີ່ຕິງກັບເລື່ອງຣາວທີ່ອະທິຖານຢູ່

ເທົ່ານີ້ແຫລະ ອັນນີ້ຂຶ້ນຢູ່ກັບຕົວເຮົາທີ່ຈະຍອມເບິ່ງພຣະເຢຊູແລະຝຶກຢ່າງໄປນຳພຣະຄຣິສ

**ຈົ່ງອະທິຖານກ່ອນຈະເຮັດສິ່ງອື່ນໃດ**

ກໍ່ຊີວິດຄຣິສຕຽນ ລຽນແບບອີງພຣະຄຣິສ ຕັ້ງຄວາມນຶກຄິດ ທັງໃຈວາຈາ
ການກະທຳ ຈົດຈຳທຸກທ່າ ພຣະທັຍກິຣິຍາ ພຣະທັມສົມບູນ
ແຜນການພຣະເຈົ້າ ເພີ່ມພູນຄຣິສຈັກ ພຣະອົງຊົງຮັກ ຝ້າວກ້າວເດີນຕາມ
ສົນໃຈຜູ້ຄົນ ຫ່ວງໃຍໄຕ່ຖາມ ທຸກ ໆ ໂມງຍາມ ອະທິຖານບໍ່ວາຍ

## ສີ່. ທ່ານຈະເຮັດແນວໃດເພື່ອຈະໃຊ້ເວລາເຂົ້າເຝົ້າພຣະເຈົ້າໃຫ້ມີຄຸນພາບ

ທ່ານດານີເອນ ຜູ້ທີ່ແຂງແຮງໃນການຮັບໃຊ້ພຣະເຈົ້າ ໃຫ້ແບບຢ່າງແກ່ເຮົາໃນການເຂົ້າເຝົ້າພຣະເຈົ້າໃນພຣະທັມດານີເອນ 6:10, 11 **"ເມື່ອດານີເອນຮູ້ວ່າໜັງສືຄຳສັ່ງໄດ້ລົງພຣະນາມແລ້ວ ເພິ່ນກໍໄປຍັງເຮືອນຂອງຕົນ ໃນຫ້ອງຊັ້ນເທິງຂອງເຮືອນນັ້ນທີ່ມີປ່ອງຢ້ຽມທີ່ໄຂປິ່ນໜ້າໃສ່ກຸງເຢຣູຊາເລັມ ແລະເພິ່ນກໍຄຸກເຂົ່າລົງມື້ລະສາມເທື່ອອະທິຖານ ແລະໂມທະນາພຣະຄຸນພຣະເຈົ້າຂອງເພິ່ນ ດັ່ງທີ່ເພິ່ນເຄີຍປະຕິບັດມາ"**

ໃນເລື່ອງນີ້ເຮົາໄດ້ຮຽນຮູ້ວ່າ ທ່ານດານີເອນໄດ້

(1) ຈັດເວລາໄວ້ສະເພາະສຳລັບການໄຫວ້ວອນມີສັມພັນທະພາບກັບພຣະເຈົ້າ ✓

(2) ມີສະຖານທີ່ສະເພາະສຳລັບອະທິຖານໄຫວ້ວອນ ✓

(3) ມີຣະບຽບລາຍການທີ່ເປັນເລື່ອງສະເພາະໃນການທູນຕໍ່ພຣະເຈົ້າ ✓

### ແບບຢ່າງທີ່ດີໃນການໄຫວ້ວອນອະທິຖານຕໍ່ພຣະເຈົ້າ

**(1) ເວລາທີ່ອຸທິດ (ເສັຽສະລະ) ໄວ້ສຳລັບເຂົ້າເຝົ້າພຣະເຈົ້າ**

ຄຣິສຕຽນທີ່ເຕີບໂຕແລ້ວ ມັກຈະໃຊ້ເວລາໃນການເຂົ້າເຝົ້າພຣະເຈົ້າໃນຕອນຮຸ່ງເຊົ້າກ່ອນທີ່ຈະໄປເຮັດວຽກ ຫລືຜະເຊີນກັບຊີວິດປະຈຳວັນ ຊຶ່ງເປັນພລັງອຳນາດທີ່ຊ່ວຍເຮົາໃນແຕ່ລະມື້ ເປັນຫຍັງເຮົາຈຶ່ງບໍ່ຕັ້ງເປົ້າໝາຍໃນການ **"ສົມພັດຕິດຕໍ່"** ກັບພຣະບິດາເຈົ້າແຫ່ງຟ້າສວັນ ແລະຍຶດໝັ້ນພຣະອົງໄວ້ໃນຕອນເຊົ້າຂອງທຸກ ໆ ມື້ ແລະນັດໝາຍກັບພຣະອົງໃນ

ຕອນແລງກ່ອນທີ່ຈະພັກຜ່ອນຫລັບນອນເພື່ອພົບພໍ້ກັບພຣະອົງອີກໃນຮຸ່ງເຊົ້າວັນຕໍ່ມາ ພຣະເຢຊູວາງແບບຢ່າງໄວ້ **"ກ່ອນຮຸ່ງເຊົ້າເວລາຍັງມືດຢູ່ ພຣະອົງໄດ້ຊົງລຸກຂຶ້ນສະເດັດອອກໄປຍັງປ່າບ່ອນສງັດ ແລະຊົງອ້ອນວອນຢູ່ທີ່ນັ້ນ"** (ມກ 1:35)

ກ. ທ່ານອາດຈະຕ້ອງແຕ່ງຕົວ ອາບນໍ້າ ຊອກຫາອາຫານກິນ ຫລືນໍ້າດື່ມກ່ອນທີ່ຈະເຂົ້າເຝົ້າພຣະເຈົ້າ

ຂ. ໃຫ້ເລີ້ມຕົ້ນດ້ວຍການຈັດຕັ້ງເວລາຂອງທ່ານໄວ້ 10 ນາທີ ໃຊ້ເວລາ 5 ນາທີສຳລັບ**ອ່ານພຣະຄັມພີ** ພາວະນາທັມ ຫລືສຶກສາທັມ ແລ້ວໃຊ້ເວລາທີ່ເຫລືອ**ອະທິຖານ**

ຄ. ແນ່ນແທ້ ທ່ານຈະພົບພໍ້ກັບຄວາມຍິນດີໃນການອະທິຖານກັບພຣະເຈົ້າ ໃນຕລອດມື້ທີ່ຊີວິດຂອງທ່ານຕ້ອງຍ່າງກ້າວໄປ ໂດຍມອບເອົາສິ່ງຕ່າງ ໆ ທີ່ຢູ່ໃນຈິດໃຈຂອງທ່ານຝາກໄວ້ກັບພຣະອົງດ້ວຍ

**(2) ຫາສຖານທີ່ ມີໄວ້ສະເພາະສຳລັບນັດໝາຍກັບພຣະເຈົ້າ**

ພຣະເຢຊູມີຄວາມຖ່ອມຕົວ ມັກອອກໄປຍັງສະຖານທີ່ສງົບເພື່ອອະທິຖານ ເຮົາຈຳເປັນຕ້ອງມີສຖານທີ່ສ່ວນຕົວສຳລັບເວົ້າອອກສຽງກັບພຣະເຈົ້າ ໂດຍມີຄວາມຮູ້ສຶກເປັນອິສຣະໃນການອະທິຖານ ສະຖານທີ່ນັ້ນອາດຈະເປັນໃນລົດຍົນ ຫ້ອງນຶ່ງຫ້ອງໃດໃນບ້ານຂອງທ່ານ ຫລືທາງເດີນນອກບ້ານ ຖ້າເປັນໄປໄດ້ໃຫ້ຊອກຫາສະຖານທີ່ ໆ ເໝາະສຳລັບການ ອ່ານພຣະຄັມພີ ແລະອະທິຖານອອກສຽງກັບພຣະເຈົ້າ ໃນທຳນອງດຽວກັນໃຫ້ຮູ້ຈັກສງົບແລະຟັງສຽງຈາກພຣະວິນຍານຂອງພຣະອົງ ແລະຈື່ຈຳພຣະວັຈນະໃນຈິດໃຈຂອງທ່ານ ເຖິງແມ່ນວ່າມີຄວາມຈຳເປັນໃນຊີວິດແລະຫາທີ່ສງົບໄດ້ຍາກ ກໍຂໍຢ່າໃຫ້ເຮົາຂາດການໄຫວ້ວອນ

**(3) ມີການກຳນົດລາຍການໃນການໃຊ້ເວລາກັບພຣະເຈົ້າ**

ກ. **ປະການທຳອິດ ກະຕຽມຈິດໃຈຂອງທ່ານ** ທີ່ຈະຟັງພຣະສຸຣະສຽງຂອງພຣະເຈົ້າ ໂດຍການສາຣະພາບບາບແຕ່ລະເຣື່ອງ ພຣະເຈົ້າໃຫ້ອະພັຍແກ່ເຮົາສເມີ ເມື່ອເຮົາຫັນໜີຈາກບາບອ່ອຍໜ້າຫາພຣະອົງ

ຂ. **ປະການທີສອງ "ຂຸດຄົ້ນ"** ໃນພຣະວັຈນະຂອງພຣະເຈົ້າ ເພື່ອຈະພົບພໍ້ກັບພຣະເຈົ້າ ໃຫ້ມີເຈັ້ຽສໍໄວ້ໃນມືສເມີເພື່ອຈະຈົດບັນທຶກແນວຄວາມຄິດທີ່ພຣະເຈົ້າຊົງເປີດເຜີຍແກ່ທ່ານ ຈົ່ງຈື່ໄວ້ວ່າຈຸດປະສົງຂອງການເຂົ້າເຝົ້າພຣະເຈົ້າ ເພື່ອຮຽນຮູ້ຈັກພຣະອົງຫລາຍຍິ່ງຂຶ້ນ ແລະໃຫຍ່ຂຶ້ນໃນຄວາມຮັກຂອງພຣະເຈົ້າ ອີກທັງເຊື່ອຟັງພຣະອົງຢ່າງແທ້ຈິງ

ຄ. **ປະການສຸດທ້າຍ** ຫລັງຈາກທີ່ອ່ານພຣະຄັມພີແລ້ວ **ທ່ານຕ້ອງການອະທິຖານກັບພຣະເຈົ້າ** ໂດຍໃຫ້ຄິດເຖິງຄວາມຈິງທີ່ໄດ້ສຶກສາຈາກພຣະຄັມພີວ່າກ່ຽວກັບຊີວິດຂອງທ່ານແນວໃດ ທ່ານອາດຈະຕ້ອງການຈົດຫົວຂໍ້ອະທິຖານໄວ້ ຂໍໃຫ້ຄິດເຖິງຫົວຂໍ້ອະທິຖານສະເພາະເຈາະຈົງສຳລັບຄອບຄົວຂອງທ່ານ ວຽກການ ຫົວໜ້າງານ ອາຊີບ ຄຣິສຈັກ ຄວາມຕ້ອງການສ່ວນຕົວ ແລະຜູ້ຮັບໃຊ້ພຣະເຈົ້າໃນບ່ອນຕ່າງ ໆ

ຜູ້ເຊື່ອທີ່ມີປະສົບການໃນເລື່ອງການສັລເສີນພຣະເຈົ້າທູລຂໍໄຫວ້ວອນ ດ້ວຍຄຳອະທິຖານ ແລະ ດ້ວຍການພາວະນາ ຈະຮູ້ຕົວວ່າພຣະເຈົ້າຊົງສະຖິດຢູ່ດ້ວຍຕລອດເວລາ ພຣະອົງຊົງສົນໃຈແລະຫ່ວງໃຍເຮົາ **"ກ່ອນທີ່ເຂົາຮ້ອງເອີ້ນ ເຮົາຈະຕອບ ຂນະທີ່ເຂົາຍັງເວົ້າຢູ່ ເຮົາຈະຟັງ"** (ອສຍ 65:24) ຜູ້ເຊື່ອເຫລົ່ານີ້ທີ່ມີປະສົບການໃນຊີວິດອະທິຖານ ຕ່າງໆໃຫ້ຄຳພຍານທີ່ຄືກັນວ່າ ຊີວິດຂອງເຮົາມີພລັງໃໝ່ ມີກຳລັງ ມີຄວາມດີໃຈ ຄືກັບມີລົມຫາຍໃຈເຂົ້າອອກ ມີຈິດໃຈທີ່ມີຄວາມຫວັງ ມີພລັງໃນການດຳເນີນຊີວິດ ຄືກັບອ໊ອກຊີເຢັນ (ລົມຫັນໃຈ) ຢູ່ເຕັມປອດ ທີ່ຊ່ວຍຟອກເລືອດພາຍໃນກາຍໃຫ້ສະອາດເສາະໃສຢູ່ຕລອດເວລາ ຂໍພຣະເຈົ້າອວຍພຣະພອນແດ່ທ່ານໃນການໄຫວ້ວອນຕໍ່ພຣະເຈົ້າ ໂດຍພຣະນາມຂອງພຣະເຢຊູຄຣິສ

# ຄວາມໝາຍແລະແບບຢ່າງ
# ການອະທິຖານຂອງພຣະເຢຊູ

ເມື່ອຂ້າພະເຈົ້າເປັນວັຍຣຸ່ນນັ້ນ ຂ້າພຣະເຈົ້າເປັນນັກປະຕິວັດ ຂ້າພະເຈົ້າຈຶ່ງມັກຈະອະທິຖານດັ່ງນີ້ວ່າ "ຂ້າແຕ່ພຣະເຈົ້າຂພຣະອົງໄດ້ຊົງໂຜດປະທານຣິດອຳນາດແກ່ຂ້າພຣະອົງໃນການທີ່ຈະປະຕິວັດໂລກນີ້" ຊຶ່ງຄຳທູນຂໍໃນເຣື່ອງນີ້ເປັນພຽງສິ່ງດຽວທີ່ຂ້າພະເຈົ້າໄດ້ອະທິຖານ

ແຕ່ເມື່ອເຂົ້າສູ່ວັຍກາງຄົນ ເວລາຜ່ານໄປເຖິງຄື່ງຊີວິດແລ້ວ ຂ້າພະເຈົ້າກໍໄດ້ສຳນຶກວ່າຕົນເອງບໍ່ເຄີຍໄດ້ຊ່ວຍປ່ຽນແປງຈິດວິນຍານຂອງເພື່ອນມະນຸດໄດ້ແມ່ນແຕ່ພຽງຄົນດຽວ ຂ້າພະເຈົ້າຈຶ່ງໄດ້ປ່ຽນແປງຄຳອະທິຖານດັ່ງນີ້ວ່າ "ຂ້າແຕ່ພຣະເຈົ້າ ຂໍພຣະອົງຊົງໂຜດປະທານພຣະຄຸນແລະສະຕິປັນຍາແກ່ຂ້າພຣະເຈົ້າ ເພື່ອທີ່ຈະໃຫ້ຄົນທີ່ຂ້າພຣະອົງໄດ້ພບກັບພວກເຂົານັ້ນເກີດການປ່ຽນແປງຢ່າງນ້ອຍກໍຂໍໃຫ້ເປັນຄອບຄົວແລະຍາດພີ່ນ້ອງຂ້ອງຂ້າພຣະອົງກໍພຽງພໍແລ້ວ"

ດຽວນີ້ຂ້າພະເຈົ້າເປັນຄົນແກ່ແລ້ວ ມື້ຕາຍອາດເປັນມື້ນີ້ຫລືມື້ອື່ນນີ້ກໍໄດ້ ເມື່ອເຖິງເວລານີ້ແລ້ວຂ້າພະເຈົ້າຈຶ່ງໄດ້ມີຄວາມເຂົ້າໃຈຢ່າງຊັດເຈນວ່າ ຂ້າພະເຈົ້າເອງເປັນຄົນໂງ່ແຄ່ໃດ ດັ່ງນັ້ນສິ່ງດຽວທີ່ຍັງຄົງເປັນຄຳອະທິຖານຂອງຂ້າພະເຈົ້າກໍຄື "ຂ້າແຕ່ພຣະເຈົ້າ ຂໍພຣະອົງໄດ້ຊົງໂຜດປະທານພຣະຄຸນແກ່ຂ້າພຣະອົງ ເພື່ອທີ່ຂ້າພະເຈົ້າຈະມີຄວາມສາມາດໃນການທີ່ຈະປ່ຽນແປງຊີວິດຂອງຕົນເອງ" ຄຳອະທິຖານນີ້ເຮັດໃຫ້ຂ້າພະເຈົ້າສຳນຶກໄດ້ວ່າ ຖ້າຫາກຂ້າພະເຈົ້າໄດ້ອະທິຖານຢ່າງນີ້ຕັ້ງແຕ່ເທື່ອທຳອິດແລ້ວ ກໍຄົງຈະບໍ່ໄດ້ປ່ອຍເວລາໃຫ້ຜ່ານໄປໂດຍເປົ່າປໂຍດເຊັ່ນນີ້ເລີຍ"

**"ຫລາຍຄົນມີຄວາມຄິດທີ່ຈະປ່ຽນແປງໂລກ ຫລືເພື່ອນມະນຸດ ແຕ່ກັບບໍ່ເຄີຍຄິດທີ່ຈະປ່ຽນແປງຕົນເອງເລີຍ"**

ມະນຸດທຸກຄົນສາມາດອະທິຖານໄດ້ຄືກັນ ແຕ່ຈະມີລັກສະນະຂອງຄຳອະທິຖານທີ່ແຕກຕ່າງກັນໄປ ວ່າຈະອະທິຖານຕໍ່ໃຜ ເພື່ອຫຍັງ ເປັນຫຍັງ ຈະແນວໃດນັ້ນບໍ່ຄືກັນ ການອະທິຖານຂອງຄຣິສຕຽນນັ້ນເປັນສິ່ງທີ່ຍິ່ງໃຫຍ່ແລະໜ້າອັດສະຈັນ ເພາະເປັນການທີ່ຜູ້ເຊື່ອອະທິຖານຕໍ່ພຣະເຈົ້າໂດຍກົງໄດ້ໃນພຣະນາມຂອງພຣະເຢຊູຄຣິສ ເຖິງແມ່ນວ່າເຮົາຈະເປັນພຽງຜູ້ທີ່ຖືກສ້າງມາກໍຕາມ ແຕ່ກໍຍັງສາມາດທີ່ຈະສົນທະນາກັບພຣະຜູ້ສ້າງທີ່ຍິ່ງໃຫຍ່ແຫ່ງຈັກກະວານໄດ້ ແລະສິດທິພິເສດນີ້ມີໄວ້ສຳລັບຄຣິສຕຽນທຸກຄົນທີ່ເຊື່ອວາງໃຈໃນພຣະເຈົ້າ ແຕ່ຂຶ້ນຢູ່ກັບແຕ່ລະບຸກຄົນທີ່ຈະໃຊ້ສິ່ງນີ້ຫລາຍນ້ອຍແຕກຕ່າງກັນໄປ

ທ່ານ **ອາລ໌. ເອ. ທອລ໌ເລີ** ກ່າວວ່າ "ຈົ່ງອະທິຖານເພື່ອໃຫ້ພັນທະກິດທີ່ຍິ່ງໃຫຍ່ຂອງພຣະເຈົ້າຈະໄດ້ເກີດຂຶ້ນ ຈົ່ງຄາດຫວັງເຖິງແຜນການທີ່ຍິ່ງໃຫຍ່ ຊຶ່ງພຣະເຈົ້າຈະຊົງກະທຳ ແລະຈົ່ງທຸ້ມເທຊີວິດໃນການເຮັດວຽກງານເພື່ອສິ່ງທີ່ມີຄຸນຄ່າໃຫຍ່ຍິ່ງ ແຕ່ເໜືອກວ່າສິ່ງອື່ນໃດທັງໝົດນັ້ນກໍຄື ຈົ່ງທູນອະທິຖານຕໍ່ພຣະເຈົ້າເທົ່ານັ້ນ" **ຊາມູເອນ ຄາລ໌ຄວິກ** ກ່າວວ່າ "ງານທີ່ມານເຈາະຈົ່ງກະທຳກໍຄື ການຂັດ

ຂວາງການອະທິຖານຂອງຄຣິສຕຽນ ມານບໍ່ເຄີຍຢ້ານຄຣິສຕຽນທີ່ຄົ້ນຄວ້າຫາຄວາມຮູ້ຫລາຍ ໆ ມີແຜນການທີ່ຍິ່ງໃຫຍ່ໃນພັນທະກິດຂອງພຣະເຈົ້າ ແລະມີຄວາມເຊື່ອໂດຍປາດສະຈາກການອະທິຖານ ແຕ່ມັນກັບຫົວເລາະເຍາະແລະດູໝິ່ນສະຕິປັນຍາຂອງຄຣິສຕຽນເຫລົ່ານີ້ ທີ່ບໍ່ມີການອະທິຖານຢູ່ໃນຊີວິດ ແຕ່ເມື່ອໃດທີ່ຄຣິສຕຽນໄດ້ຖຸກເຂົ່າລົງອະທິຖານຢ່າງຈິງຈັງແລ້ວ ມານຊາຕານຈະຢ້ານຈົນຕົວສັ່ນ" ທ່ານໂກວ໌ເດນໄດ້ກ່າວໄວ້ວ່າ "ໃນປະຈຸບັນນີ້ບຸກຄົນທີ່ມີຊື່ສຽງຈຳນວນຫລວງຫລາຍ ມີຊີວິດແຫ່ງການອະທິຖານທີ່ຈິງຈັງຫລາຍ ຊຶ່ງບໍ່ແມ່ນເປັນພຽງການເວົ້າຫລືການສອນກ່ຽວກັບເລື່ອງການອະທິຖານເທົ່ານັ້ນ ແຕ່ພວກພວກເຂົາເປັນນັກອະທິຖານທີ່ໃຊ້ເວລາກັບພຣະເຈົ້າຢ່າງແທ້ຈິງ ເຖິງແມ່ນວ່າຈະບໍ່ມີເວລາວ່າງເທົ່າໃດ ແຕ່ພວກເຂົາເຫລົ່ານັ້ນກໍຈະສວຍໂອກາດຈາກເວລາໃນການເຮັດວຽກງານ ໂດຍຖືວ່າການອະທິຖານເປັນງານທີ່ສຳຄັນເລັ່ງດ່ວນຊຶ່ງຕ້ອງກະທຳກ່ອນງານອື່ນ"

## ຄວາມສຳຄັນຂອງການອະທິຖານ

"ຂ້າແດ່ພຣະເຈົ້າຜູ້ຊົງເປັນຄວາມຮັກ ລູກຂໍຂອບຄຸນຂອງພຣະອົງ ທີ່ຊົງຍອມຮັບໃຫ້ລູກສາມາດທີ່ຈະເຂົ້າເຝົ້າພຣະອົງ ແລະເຂົ້າເຖິງພຣະທັຍທີ່ເຕັມລົ້ນໄປດ້ວຍຄວາມຮັກທີ່ຍິ່ງໃຫຍ່ຂອງພຣະອົງໄດ້" ເຖິງແມ່ນວ່າໂລກນີ້ຈະເຕັມໄປດ້ວຍຄວາມບາບແລະຜິນຂອງການສາບແຊ່ງກໍຕາມ ບຸກຄົນທີ່ໄດ້ຄຸກເຂົ່າອະທິຖານຢ່າງແທ້ຈິງນັ້ນ ກໍສາມາດທີ່ຈະເຂຍ່າໂລກນີ້ເພື່ອໃຫ້ເກີດການປ່ຽນແປງໃໝ່ໄດ້ ທ່ານໄດ້ອະທິຖານຫລາຍປານໃດໃນຊີວິດປະຈຳວັນຂອງທ່ານ ທ່ານຂີ້ຄ້ານອະທິຖານບໍ່? ເປັນຫຍັງທ່ານຕ້ອງດູໝັ່ນອະທິຖານສເມີ

**1) ພຣະເຢຊູຄຣິສຊົງເປັນແບບຢ່າງໃນການອະທິຖານ** ເພາະພຣະອົງຊົງເປັນນັກອະທິຖານ ດັ່ງນັ້ນການອະທິຖານຈຶ່ງເປັນສິ່ງທີ່ສຳຄັນຕໍ່ພຣະຣາຊກິຈຂອງພຣະອົງ ເມື່ອຊົງດຳເນີນຊີວິດຢູ່ໃນໂລກນີ້

ຂະນະທີ່ພຣະເຢຊູຄຣິສຍັງຊົງຢູ່ໃນໂລກນີ້ ພຣະອົງໄດ້ຊົງສຳແດງຊີວິດແຫ່ງການເປັນນັກອະທິຖານໃຫ້ພວກສາວົກໄດ້ເຫັນຢ່າງຊັດເຈນຫລາຍເທື່ອ ເຖິງແມ່ນວ່າພຣະອົງຊົງເປັນພຣະເຈົ້າ ພຣະອົງກໍຍັງຊົງສອນໃຫ້ສາວົກໄດ້ຮູ້ຈັກການອະທິຖານດ້ວຍຊີວິດຂອງພຣະອົງເອງ ເພື່ອທີ່ຈະໃຫ້ພວກເຂົາໄດ້ເຂົ້າໃຈເຖິງຄວາມສຳຄັນຂອງການອະທິຖານ ດັ່ງນັ້ນພຣະເຢຊູຄຣິສຈຶ່ງຊົງເປັນແບບຢ່າງໃນຊີວິດແຫ່ງການອະທິຖານແກ່ເຮົາ

(1) ເມື່ອຊົງເລີ້ມຕົ້ນພຣະຣາຊກິດກັບປະຊາຊົນ (ລກ 3:21)

(2) ໃນຍາມຮຸ່ງເຊົ້າຂອງມື້ໃໝ່ (ມກ 1:35)

(3) ເມື່ອກຳລັງມີງານຍຸ່ງ (ລກ 5:15-16) ແລະພາຍຫລັງຈາກການເຮັດວຽກງານສຳເຣັດແລ້ວ (ມທ 14:23)

(4) ກ່ອນຊົງເລືອກສາວົກສິບສອງຄົນ ພຣະອົງໄດ້ຊົງອະທິຖານຕລອດທັງຄືນ (ລກ 6:12-13)

(5) ກ່ອນຊົງລ້ຽງປະຊາຊົນຫ້າພັນຄົນ (ຢຮ 6:11)

(6) ກ່ອນທີ່ຈະຊ່ວຍສາວົກໃຫ້ຣອດພົ້ນຈາກພາຍຸຮ້າຍໃນທະເລ (ມທ 14:23)

(7) ກ່ອນທີ່ຈະຊົງຮຽກລາຊະໂລໃຫ້ເປັນຂຶ້ນມາຈາກຄວາມຕາຍ (ຢຮ 11:41-42)

(8) ຣະຫວ່າງການຮັບປະທານອາຫານມື້ສຸດທ້າຍ (ມກ 14:22)

(9) ກ່ອນທີ່ຈະຊົງຜະເຊີນກັບຄວາມຕາຍ (ມທ 26:36-44)

(10) ພຣະອົງຍັງຊົງອະທິຖານເພື່ອຜູ້ທີ່ເຊື່ອທີ່ເບື້ອງຂວາພຣະຫັດຂອງພຣະເຈົ້າໃນສວັນສະຖານ (ຣມ 8:34, ຮຮ 7:25)

**2) ເປັນພຣະບັນຊາຂອງອົງພຣະຜູ້ເປັນເຈົ້າ** (ມທ 7:7, ລກ 18:1, ຢຣມ 33:3) ຊຶ່ງເປັນວິທີທີ່ພຣະເຈົ້າຊົງຕັ້ງໄວ້ ເພື່ອທີ່ຈະໃຫ້ທ່ານໄດ້ຮັບພຣະພອນທີ່ມາຈາກພຣະອົງ ແມ່ນຄວາມເມດຕາ ພຣະຄຸນ ສັນຕິສຸກ ສະຕິປັນຍາ ຄວາມເຂົ້າໃຈ ຄວາມຊື່ນຊົມຍິນດີ ຄວາມກ້າຫານ ຄວາມເຂັ້ມແຂງ ແລະການນຳພາຂອງພຣະວິນຍານບໍຣິສຸດ

**3) ເປັນສິ່ງທີ່ກະທຳໃຫ້ພຣະເຈົ້າຊົງພໍພຣະທັຍ** ເພາະພຣະເຈົ້າຊົງມີຄວາມປາຖນາໃຫ້ເຮົາຢູ່ກັບພຣະອົງ ຖ້າເຮົາຫລງກັບສິ່ງອື່ນພຣະອົງກໍຈະຊົງເສັຽພຣະທັຍ

**4) ເປັນປັດຈັຍສຳຄັນທີ່ຕ້ອງມີໃນການໂຕຂຶ້ນໃນຝ່າຍວິນຍານຂອງຄຣິສຕຽນ** (ອຟ 6:10-18)

(1) ການອະທິຖານເຮັດໃຫ້ເຮົາໄດ້ຮັບຄວາມຊື່ນຊົມຍິນດີ

(2) ການອະທິຖານເຮັດໃຫ້ເຮົາເກີດການປ່ຽນແປງໃໝ່ (ຢກ 5:17-18)

(3) ການອະທິຖານເຮັດໃຫ້ເຮົາສາມາດຮັກຜູ້ທີ່ບໍ່ໜ້າຮັກໄດ້ (ລກ 6:27-28)

(4) ການອະທິຖານເຮັດໃຫ້ຕົວເຮົາເປັນທີ່ຖວາຍກຽດຕິຍົດແດ່ພຣະເຈົ້າ (ຢຮ14:13)

**5) ເປັນຄວາມສຳພັນແຫ່ງຄວາມຮັກຣະຫວ່າງພຣະເຈົ້າກັບທ່ານ** ຖ້າບໍ່ມີຄວາມຮັກຣະຫວ່າງທ່ານກັບພຣະເຈົ້າແລ້ວ ກໍຈະເຮັດໃຫ້ບໍ່ຢາກສົນທະນາກັບພຣະເຈົ້າ

**6) ມີການທົດລອງຂອງມານຢູ່ຕລອດເວລາ** ຖ້າບໍ່ໄດ້ອະທິຖານທ່ານກໍຈະມີຊັຍຊະນະຕໍ່ການທົດລອງບໍ່ໄດ້

**7) ປະກາດຂ່າວປະເສີດຢ່າງມີປະສິດທິພາບ** ໂດຍສຳແດງວ່າພຣະເຢຊູຊົງເປັນພຣະເຈົ້າ

ການອະທິຖານນັ້ນເປັນສິ່ງທີ່ສຳຄັນຫລວງຫລາຍໃນການຖວາຍກຽດຕິຍົດແດ່ພຣະເຈົ້າ ທ່ານຄວນຈະໃຫ້ເວລາກັບພຣະອົງເມື່ອໃດ? ແລ້ວທ່ານມີຄວາມຕັ້ງໃຈທີ່ຈະອະທິຖານຕາມເວລາທີ່ຕັ້ງໄວ້ນັ້ນຫລືບໍ່?

## **ຄຳອະທິຖານທີ່ພຣະເຢຊູຄຣິສໄດ້ຊົງສອນໄວ້** (ມທ 6:5-15, ລກ 11:1-4)

ຄຳອະທິຖານນີ້ມີລັກສະນະພິເສດທີ່ສຳຄັນຢູ່ 4 ປະການຄື

- ✞ ເປັນແບບຢ່າງແຫ່ງການອະທິຖານທີ່ສົມບູນ ຊຶ່ງສອນໃຫ້ຮູ້ວ່າຄວນຈະອະທິຖານທູນຂໍຕາມລຳດັບຄວາມສຳຄັນກ່ອນຫລັງແນວໃດ
- ✞ ເປັນການອະທິຖານໃນເຣື່ອງທີ່ທັມດາແລະເປັນແບບລຽບງ່າຍ ແຕ່ມີເນື້ອຫາສາຣະທີ່ສຳຄັນຊຶ່ງກ່ຽວກັບພັນທະກິຈຂອງພຣະເຈົ້າທີ່ເຮົາຄວນຈະອະທິຖານຢ່າງຄົບຖ້ວນ
- ✞ ເນັ້ນເຖິງຄວາມຕ້ອງການສູງສຸດຂອງມະນຸດ 3 ປະການໃນການອະທິຖານຄື ຄວາມຕ້ອງການໃນດ້ານອາຫານ ການຍົກໂທດ ແລະການພິທັກຮັກສາ
- ✞ ເປັນຄຳອະທິຖານທີ່ມີຄວາມສົມບູນແບບທີ່ສຸດ ແລະໃຊ້ໄດ້ທຸກຍຸກທຸກສມັຍທັງໃນອດີດປະຈຸບັນແລະອນາຄົດ

**1) "ຂ້າແດ່ພຣະບິດາຂອງຂ້າພຣະອົງທັງຫລາຍ ຜູ້ຊົງສະຖິດໃນສວັນ ຂໍໃຫ້ພຣະນາມຂອງພຣະອົງເປັນທີ່ເຄົາຣົບບູຊາ"**

(1) ຄຳອະທິຖານທີ່ສອນໃຫ້ເຮົາໄດ້ຮູ້ຢ່າງຊັດເຈນວ່າຄວນຈະອະທິຖານຕໍ່ໃຜ ແລະຜູ້ນັ້ນຄວນມີລັກສະນະແນວໃດ

(2) ເປັນຫຍັງເຮົາຈຶ່ງຕ້ອງເລີ້ມຕົ້ນຄຳອະທິຖານດ້ວຍຄຳທີ່ວ່າ **"ຂ້າແດ່ພຣະບິດາຂອງຂ້າພຣະອົງທັງຫລາຍ"**

ກ. ເປັນຄຳທີ່ສຳແດງພຣະເຈົ້າໃນຖານທີ່ພຣະອົງຊົງເປັນພຣະບິດາ ຊຶ່ງໄດ້ຊົງສຳແດງພຣະອົງໃນຖານະທີ່ຊົງເປັນພຣະຜູ້ເປັນເຈົ້າຫລືພຣະຜູ້ເປັນເຈົ້າຈອມໂຍທາ ພຣະຜູ້ຊົງຣິດອຳນາດຍິ່ງໃຫຍ່ (ເອໂລອິມ) ໃນພຣະຄັມພີເດີມ ແຕ່ໃນພຣະຄັມພີໃໝ່ນັ້ນຊົງສຳແດງໃຫ້ຜູ້ເຊື່ອໄດ້ປະຈັກແຈ້ງວ່າ ພຣະເຈົ້າຊົງເປັນພຣະບິດາແລະພຣະເຢຊູຄຣິສອົງພຣະຜູ້ເປັນເຈົ້າຂອງເຮົາ ໄດ້ຊົງສຳແດງວ່າພຣະເຈົ້າຊົງເປັນພຣະບິດາໃນການອະທິຖານທຸກເທື່ອ (ມທ 11:25, ຢຮ 11:41, 17:1, 20:17) ແຕ່ພຣະເຢຊູຄຣິສຍັງໄດ້ຊົງໃຊ້ຄຳວ່າ "ພຣະບິດາ" ໃນຄຳອະທິຖານຂອງພຣະອົງຫລາຍເທື່ອ (ເຊັ່ນ ມທ 27:46)

ຂ. ການຮຽກພຣະເຈົ້າວ່າພຣະບິດາເປັນສິ່ງທີ່ມີຄວາມໝາຍແລະສຳຄັນຫລາຍ

❖ ພຣະເຈົ້າຊົງເປັນຜູ້ໃຫ້ກຳເນີດຊີວິດຂອງມະນຸດທຸກຄົນ ຊຶ່ງສິ່ງນີ້ເປັນການຊົງສຳແດງພຣະຄຸນທົ່ວໄປຂອງພຣະເຈົ້າ (ອຊຢ 64:8, ມລກ 2:10)

❖ ເພາະວ່າມະນຸດເຮັດບາບແລະຖືກແຍກຈາກພຣະເຈົ້າ ພວກເຂົາຈຶ່ງບໍ່ສາມາດຮຽກ ພຣະເຈົ້າວ່າພຣະບິດາໄດ້ ແຕ່ຜູ້ທີ່ເຊື່ອແລະຕ້ອນຮັບພຣະເຢຊູຄຣິສນັ້ນຈະໄດ້ຮັບສິດທິພິເສດໃນການເປັນບຸດຂອງພຣະເຈົ້າ ຈຶ່ງສາມາດຮຽກພຣະເຈົ້າວ່າພຣະບິດາໄດ້ ຊຶ່ງເປັນການສຳແດງພຣະຄຸນພິເສດສຳລັບຜູ້ທີ່ເຊື່ອ (ຣມ 8:15) ພຣະເຢຊູຄຣິສໄດ້ຊົງແຍກຜູ້ເຊື່ອໄວ້ໃຫ້ຢູ່ໃນ

ຖານະທີ່ພິເສດຄືເປັນຄົນຂອງພຣະເຈົ້າ (ຢຮ 17:9) ດັ່ງນັ້ນຄຣິສຕຽນຈຶ່ງໄດ້ຮັບສິດທິພິເສດ ຊຶ່ງເປັນພຣະພອນຝ່າຍວິນຍານຢ່າງຫລວງຫລາຍ ທີ່ແຕກຕ່າງໄປຈາກມະນຸດທົ່ວໄປໃນໂລກນີ້ (ຢຮ 8:44, ອຟ 2:3) ທ່ານຕ້ອງລະນຶກຢູ່ສເມີວ່າພຣະເຈົ້າບໍ່ໄດ້ພຽງແຕ່ຊົງສ້າງທ່ານເທົ່ານັ້ນ ແຕ່ພຣະອົງຊົງໄຖ່ບາບຂອງທ່ານ ແລະຊົງນຳພາຊີວິດຂອງທ່ານຕລອດມາ ຍ້ອນວ່າພຣະເຈົ້າຊົງເປັນພໍ່ຂອງທ່ານ

ຄ. ຄຳວ່າ "ຂ້າພຣະອົງທັງຫລາຍ" ສອນໃຫ້ທ່ານຮູ້ວ່າພຣະເຈົ້າບໍ່ພຽງແຕ່ຊົງເປັນພຣະບິດາຂອງທ່ານເທົ່ານັ້ນ ແຕ່ຍັງຊົງເປັນພຣະບິດາຂອງຜູ້ທີ່ເຊື່ອຄົນອື່ນ ໆ ດ້ວຍ ດັ່ງນັ້ນໃນຄຣິສຈັກຜູ້ທີ່ຮຽກພຣະບິດາທຸກ ໆ ຄົນຈຶ່ງເປັນພີ່ນ້ອງຂອງທ່ານ ທ່ານຈຶ່ງຄວນມີຄວາມຮັກແລະຮ່ວມສາມັກຄີທັນກັນ ເພື່ອບໍ່ໃຫ້ພຣະເຈົ້າຊົງເສັຽພຣະທັຍ ແລະຂໍໃຫ້ທ່ານໄດ້ຄິດເຖິງຜູ້ທີ່ບໍ່ຮູ້ຈັກພຣະເຢຊູຄຣິສ ເພື່ອທີ່ຈະໄປປະກາດນຳໃຫ້ພວກເຂົາກັບໃຈມາເປັນບຸດຂອງພຣະເຈົ້າດ້ວຍເຊັ່ນກັນ ແລະເພື່ອໃຫ້ຄອບຄົວຂອງພຣະເຈົ້າໄດ້ທວີຂຶ້ນຈົນສຸດປາຍແຜ່ນດິນໂລກ ຊຶ່ງສິ່ງນີ້ເປັນໜ້າທີ່ຂອງເຮົາທີ່ຕ້ອງຮ່ວມກັນຮັບຜິດຊອບ

(3) ການທີ່ພຣະເຈົ້າຊົງສະຖິດໃນສວັນນັ້ນ ບໍ່ແມ່ນການກ່າວເຖິງສະເພາະສະຖານທີ່ເທົ່ານັ້ນ ແຕ່ລວມເຖິງພຣະບັນລັງຂອງພຣະເຈົ້າ ການຄອບຄອງແລະສິດທິອຳນາດທຸກຢ່າງຂອງພຣະອົງ ດັ່ງນັ້ນພຣະເຈົ້າຜູ້ຊົງຄອບຄອງ ແລະຜູ້ທີ່ຊົງສຳແດງຣິດທານຸພາບໃນຊີວິດຂອງທ່ານ ພຣະອົງຈຶ່ງຊົງຮູ້ແລະຊົງໄດ້ນຳທຸກສິ່ງທຸກຢ່າງໃນຊີວິດຂອງທ່ານ ຜູ້ຊຶ່ງເປັນບຸດຂອງພຣະອົງ ສະນັ້ນທ່ານບໍ່ຕ້ອງຢ້ານ ໃນຂະນະທີ່ອະທິຖານກໍເທົ່າກັບວ່າທ່ານກຳລັງເຂົ້າເຝົ້າຕໍ່ໜ້າພຣະບັນລັງຂອງພຣະເຈົ້າ ໃນສະຖານທີ່ຊຶ່ງພຣະອົງໄດ້ຊົງສະຖິດຢູ່ ດັ່ງນັ້ນທ່ານຈຶ່ງມີຄວາມໝັ້ນໃຈໃນຄຳຕອບທີ່ຈະໄດ້ຮັບຈາກການອະທິຖານດ້ວຍການຂອບຄຸນແລະການສັລເສີນ (ພສສ 115:3, 2 ຂຄວ 20:6, ພສສ 11:4, 33:13)

**ຖ້າປາສຈາກພຣະເຢຊູຄຣິສແລ້ວ ເຮົາກໍບໍ່ສາມາດທີ່ຈະຮຽກພຣະເຈົ້າວ່າ "ພຣະບິດາ" ໄດ້**

**"ຂອບພຣະຄຸນພຣະເຢຊູຄຣິສຜູ້ຊົງໄຖ່ບາບຂອງຂ້ອຍ"**

- ທ່ານມີບັນຫາຫລືບໍ່?
- ທ່ານມີຄວາມເຈັບປວດຫລືບໍ່?
- ຈົ່ງມາຫາພຣະບິດາ
- ຈົ່ງໄດ້ຮັບພຣະຄຸນຍິ່ງໃຫຍ່ ເມື່ອເຮົາຮຽກພຣະເຈົ້າວ່າ "ພຣະບິດາ" ໂດຍພຣະນາມຂອງພຣະເຢຊູຄຣິສ

(4) ຄຳອະທິຖານວ່າ **"ຂໍໃຫ້ພຣະນາມຂອງພຣະອົງເປັນທີ່ເຄົາຣົບບູຊາ"** ນີ້ ພຣະເຢຊູຊົງສອນຫຍັງແກ່ທ່ານຊຶ່ງເປັນບຸດຂອງພຣະເຈົ້າ

ກ. ຄຳອະທິຖານນີ້ຕ້ອງມາເປັນອັນດັບແຮກກ່ອນຫົວຂໍ້ອື່ນ ໆ ໃນການອະທິຖານ

ຂ. ເປັນການຍົກຍ້ອງພຣະນາມທີ່ຍິ່ງໃຫຍ່ຂອງພຣະເຈົ້າ ກ່ອນການອະທິຖານເພື່ອຄວາມຕ້ອງການ ຄວາມຈຳເປັນແລະເຫດການທີ່ເຮົາກຳລັງຜະເຊີນຢູ່ໃນທຸກກໍລະນີ

ຄ. "ພຣະນາມຂອງພຣະອົງ" ນັ້ນມີຄວາມໝາຍວ່າ [1] ພຣະນາມຂອງພຣະເຈົ້ານັ້ນໄດ້ສຳແດງເຖິງພຣະລັກສະນະຂອງພຣະອົງເອງທຸກປະການ ດັ່ງນັ້ນເມື່ອເຮົາໄດ້ອອກພຣະນາມຂອງພຣະເຈົ້ານັ້ນ ເປັນການທີ່ເຮົາໄດ້ຄິດເຖິງຄວາມບໍຣິສຸດ ຣິດທານຸພາບ ຄວາມທ່ຽງທຳ ພຣະເມດຕາເຈົ້າຂອງພຣະເຈົ້າແລະ ອື່ນ ໆ (ພສສ.8:9) [2] ພຣະນາມຂອງພຣະເຈົ້ານັ້ນເປັນການສຳແດງເຖິງພຣະລາດຊະກິດຂອງພຣະອົງ (ພສສ.20:1) ດັ່ງນັ້ນເມື່ອເຮົາໄດ້ອອກພຣະນາມຂອງພຣະເຈົ້ານັ້ນ ເປັນການທີ່ເຮົາກຳລັງມີສຳພັນທະພາບກັບພຣະອົງ ແລະຍອມໃຫ້ພຣະອົງຊົງຈັດການຊີວິດຂອງເຮົາໃຫ້ສວຍ-ງາມແລະພຣະເຈົ້າຈະຊົງເຮັດວຽກທີ່ຍິ່ງໃຫຍ່ໃນຊີວິດຂອງເຮົາຕາມພຣະນາມຂອງພຣະອົງ ຜົນທີ່ເຮົາຈະໄດ້ຮັບຈາກການອອກພຣະນາມຂອງພຣະເຈົ້າກໍຄື ຄວາມຍິນດີອີ່ມເອມໃຈດ້ວຍພຣະລັກສະນະຂອງພຣະອົງ (ພສສ.17:15)

**2) "ຂໍໃຫ້ພຣະຣາຊອານາຈັກຂອງພຣະອົງມາຕັ້ງຢູ່"**

ເຮົາຄວນຈະອະທິຖານນັ້ນຄື ການທູນຂໍໃຫ້ພຣະເຈົ້າຜູ້ຊົງສ້າງສັພສິ່ງ ແລະຊົງທີ່ເປັນປະມຸກສູງສຸດໃນສວັນແລະຊົງຄອບຄອງຈັກກະວານນີ້ ໄດ້ຊົງກະທຳໃຫ້ແຜ່ນດິນຂອງພຣະອົງມາຕັ້ງຢູ່ ໂດຍໃຫ້ຊີວິດຂອງເຮົາສົນໃຈໃນເຣື່ອງນີ້ ບໍ່ແມ່ນເປັນແຕ່ສົນໃຈອະທິຖານເພື່ອບັນຫາຕົນເອງ ຫລືສຖານການຮອບຂ້າງທີ່ເຮົາກຳລັງຜະເຊີນຢູ່ເທົ່ານັ້ນ

**(1) ຄວາມໝາຍຂອງແຜ່ນດິນ (ຫລືຣາຊອານາຈັກ) ຂອງພຣະເຈົ້າ**

ກ. ແຜ່ນດິນຂອງພຣະເຈົ້ານັ້ນບໍ່ແມ່ນ ການປົກຄອງຫລືອຳນາດທາງດ້ານການເມືອງໃນໂລກນີ້ (ຢຮ 18:36, ກຈ 1:6) ໃນຂະນະທີ່ພວກສາວົກຕິດຕາມພຣະເຢຊູຄຣິສນັ້ນ ພວກເຂົາມີຄວາມຄາດຫວັງທີ່ຈະໄດ້ຮັບຕຳແໜ່ງທາງດ້ານການເມືອງ ແລະມີຄວາມຕ້ອງການທີ່ຈະເປັນໃຫຍ່ມີຊື່ສຽງໃນໂລກນີ້ ແຕ່ເມື່ອພຣະເຢຊູຄຣິສໄດ້ຊົງຖືກຕອກຄຶງທີ່ໄມ້ກາງແຂນແລ້ວ ພວກເຂົາກໍຝັນສະລາຍ ແລະໜີກະຈັດກະຈາຍໄປຄົນລະທິດຄົນລະທາງ ຫລັງຈາກທີ່ພວກເຂົາໄດ້ຍິນຂ່າວວ່າພຣະເຢຊູຄຣິສໄດ້ຄືນພຣະຊົນແລ້ວ ແລະໄດ້ມີປະສົບການກັບພຣະເມຊີອາຜູ້ຊົງພຣະຊົນຢູ່ແລະເຕັມໄປດ້ວຍຣິດທານຸພາບຂອງພຣະວິນຍານບໍຣິສຸດແລ້ວ ພວກຂົາກໍເລີ່ມສ້າງຄວາມຝັນທີ່ແຕກສະລາຍນັ້ນຂຶ້ນມາໃໝ່ອີກເທື່ອ

ຂ. ດັ່ງນັ້ນແຜ່ນດິນຂອງພຣະເຈົ້ານັ້ນບໍ່ໄດ້ປາກົດເປັນນິມິດໃຫ້ເຫັນໄດ້ດ້ວຍຕາ ແຕ່ເປັນສະພາບທີ່ພຣະເຈົ້າຊົງຄອບຄອງຢູ່ (ລກ 17:20)

ຄ. ແຜ່ນດິນຂອງກຣະເຈົ້ານັ້ນເກີດຂຶ້ນເມື່ອໃດ

- ແຜ່ນດິນຂອງພຣະເຈົ້າໄດ້ເຂົ້າມາຕັ້ງຢູ່ໃນໂລກນີ້ແລ້ວໃນອດີດແຕ່ກົກເຄົ້າໂດຍທາງພຣະເຢຊູຄຣິສ

- ແຜ່ນດິນຂອງພຣະເຈົ້າໄດ້ມາຕັ້ງຢູ່ໃນຊີວິດຂອງທ່ານເມື່ອເຊື່ອພຣະເຢຊູຄຣິສ ໃນເວລາປະຈຸບັນນີ້
- ໃນອນາຄົດແຜ່ນດິນຂອງພຣະເຈົ້າຈະມາຕັ້ງຢູ່ຢ່າງສົມບູນດັ່ງທີ່ (ພນ 22:20) ກ່າວໄວ້ວ່າ "ພຣະອົງຜູ້ຊົງເປັນພຍານໃນເຫດການທັງປວງເຫລົ່ານີ້ ຕັດວ່າ 'ເຮົາຈະມາໃນໄວ ໆ ນີ້ແນ່ນອນ' ອາແມນ ພຣະເຢຊູເຈົ້າເຊີນສະເດັດມາເຖີດ

ງ. ແຜ່ນດິນຂອງພຣະເຈົ້ານັ້ນຂຶ້ນຢູ່ກັບພຣະເຈົ້າຜູ້ຊົງເປັນເຈົ້າຂອງແລະງເປັນຜູ້ຄອບຄອງ

ຈ. ແຜ່ນດິນຂອງພຣະເຈົ້າໝາຍເຖິງ ອານາຈັກທີ່ພຣະເຈົ້າຊົງຄອບຄອງດ້ວຍສິດທິອຳນາດຂອງພຣະອົງ ແລະຊົງກະທຳໃຫ້ນ້ຳພຣະທັຍຂອງພຣະອົງສຳເຣັດຄົບຖ້ວນ (ມທ 12:28)

ສ. ແຜ່ນດິນຂອງພຣະເຈົ້າມີລັກສະນະທີ່ສຳຄັນຄື ເປັນຄວາມຊອບທັມ ສັນຕິສຸກ ແລະຄວາມຊື່ນຊົມຍິນດີໃນພຣະວິນຍານບໍຣິສຸດ (ຣມ 14:17)

ຊ. ແຜ່ນດິນຂອງພຣະເຈົ້ານັ້ນເປັນການຂຍາຍອອກທວີຄູນຈາກຈຳນວນທີ່ເລັກນ້ອຍຈົນກາຍເປັນຈຳນວນມະຫາສານ (ມທ 13:31, ກຈ 2:47)

ຍ. ແຜ່ນດິນຂອງພຣະເຈົ້ານັ້ນໄດ້ສຳເຣັດຜົນຢ່າງສົມບູນ ໂດຍຜ່ານທາງຈິດວິນຍານທີ່ມີການສາຣະພາບບາບ (ກຈ 3:19)

(2) ການທີ່ເຮົາອະທິຖານວ່າ **"ຂໍໃຫ້ຣາຊອານາຈັກຂອງພຣະອົງມາຕັ້ງຢູ່"** ນັ້ນຍ່ອມໝາຍເຖິງ ການສະແດງອອກເປັນຄຳເວົ້າເຖິງຄວາມຮັບຜິດຊອບຂອງເຮົາ ທີ່ມີຕໍ່ແຜ່ນດິນຂອງພຣະເຈົ້າ ຊຶ່ງມີຄວາມໝາຍທີ່ເລິກຊຶ້ງຫລາຍເກີນກວ່າທີ່ຈະອະທິຖານດ້ວຍປາກເທົ່ານັ້ນ ດັ່ງນັ້ນເຮົາຈຶ່ງຄວນທີ່ຈະສຳນຶກໃນໜ້າທີ່ຊຶ່ງເຮົາຕ້ອງກະທຳກໍຄື

ກ. ເຮົາຄວນທີ່ຈະອະທິຖານ ເພື່ອໃຫ້ແຜ່ນດິນຂອງພຣະເຈົ້າແລະນ້ຳພຣະທັຍຂອງພຣະອົງໄດ້ຂຍາຍຄວາມສຳເຣັດເພີ່ມຫລາຍຂຶ້ນໂດຍທາງການອະທິຖານຂອງເຮົາ

ຂ. ເຮົາຈະຕ້ອງຮັບຜິດຊອບໃນການປະກາດຂ່າວປະເສີດເຣື່ອງແຜ່ນດິນຂອງພຣະເຈົ້າ ຊຶ່ງເປັນແຜ່ນດິນທີ່ຈະຖືກຂຍາຍອອກໄປພ້ອມກັບຂ່າວປະເສີດ (ກຈ 1:8)

ຄ. ເຮົາຈະຕ້ອງປະຕິບັດຕົນໃຫ້ເໝາະສົມກັບການເປັນຕົວແທນຂອງແຜ່ນດິນຂອງພຣະເຈົ້າ ເພາະເຮົາມີສັນຊາດເປັນຊາວສວັນ (ຄຈ 2:20) ຄຣິສຕຽນຈຶ່ງຕ້ອງມີຊີວິດທີ່ສຳແດງພຣະລັກສະນະຂອງພຣະເຢຊູຄຣິສໃຫ້ເພື່ອນມະນຸດໄດ້ເຫັນຢ່າງຊັດເຈນ ເພື່ອວ່າພວກເຂົາຈະໄດ້ມີຄວາມປາຖນາທີ່ຈະມີຊີວິດຂອງຊາວສວັນເຊັ່ນດຽວກັນ ແຕ່ຖ້າພີ່ນ້ອງທີ່ຮັກໃນພຣະເຢຊູຄຣິສມີຄວາມຮູ້ສຶກເໜັດເໜື່ອຍທໍ້ຖອຍ ແລະພ່າຍແພ້ຕໍ່ຕົນເອງເນື່ອງຈາກການໃຫ້ຕົນເອງເປັນໃຫຍ່ໃນຊີວິດແລ້ວ ຂໍໃຫ້ທ່ານໄດ້ສແວງຫາການຊົງຄອບຄອງຊີວິດແລະການຊົງນຳຈາກອົງພຣະຜູ້ເປັນເຈົ້າ ໂດຍການຄິດເຖິງໄມ້ກາງແຂນແລ້ວລະຖິ້ມຄວາມຄິດທີ່ເຫັນແກ່ຕົວຢ່າງສິ້ນເຊີງ ແລະອະທິຖານທູນຂໍໃຫ້

ພຣະເຈົ້າຊົງຄອບຄອງຊີວິດຂອງທ່ານ ແລ້ວພຣະເຈົ້າຈະຊົງສຳແດງຄວາມຍິ່ງໃຫຍ່ ພຣະພອນ ແລະ ຣິດທານຸພາບຂອງພຣະອົງໃນຊີວິດຂອງທ່ານ

ມີໃຜເປັນເຈົ້າຂອງຊີວິດທ່ານ ຫລືວ່າທ່ານເປັນເຈົ້າຂອງຊີວິດຂອງຕົນເອງ ຖ້າເປັນເຊັ່ນນັ້ນແລ້ວ ທ່ານຮູ້ສຶກເໜັດເໜື່ອຍນຳບໍ່? ມີສິ່ງດຽວທີ່ຈະແກ້ໄຂບັນຫານີ້ໄດ້ ກໍຄືຂໍໃຫ້ທ່ານໄດ້ເລີ້ມຕົ້ນຊີວິດໃໝ່ດ້ວຍການຍອມໃຫ້ພຣະເຢຊູຄຣິສຊົງເປັນເຈົ້າຊີວິດຂອງທ່ານຢ່າງແທ້ຈິງແລ້ວ ພຣະເຢຊູກໍຈະຊົງຄອບຄອງຈິດວິນຍານ ຄວາມຄິດ ຄວາມຮູ້ສຶກຂອງທ່ານໃຫ້ເຕັມລົ້ນດ້ວຍພຣະວິນຍານບໍຣິສຸດ

**3) "ຂໍໃຫ້ເປັນໄປຕາມນ້ຳພຣະທັຍຂອງພຣະອົງ ໃນສວັນເປັນຢ່າງໃດກໍໃຫ້ເປັນຢ່າງນັ້ນທີ່ແຜ່ນດິນໂລກ"**

ຄຳອະທິຖານນີ້ກ່ຽວຂ້ອງກັບການທູນຂໍໃຫ້ເປັນໄປຕາມນ້ຳພຣະທັຍຂອງ²ຣະເຈົ້າ ບໍ່ແມ່ນເປັນໄປຕາມຄວາມປາຖນາຫລືຄວາມຕັ້ງໃຈຂອງເຮົາເອງ

(1) ຄວາມໝາຍຂອງນ້ຳພຣະທັຍຂອງພຣະເຈົ້າຄື

ກ. ເປົ້າໝາຍຂອງພຣະເຈົ້າ (2 ຕທ 1:9)

ຂ. ຄວາມຊື່ນຊົມຍິນດີຂອງພຣະເຈົ້າ (ອຟ 1:9)

ຄ. ຄວາມຄາດຫວັງ ຄວາມປາຖນາຂອງພຣະເຈົ້າທີ່ມາຈາກພຣະທັຍທີ່ລ້ຳເລີກຂອງພຣະອົງ (ອຟ 1:11)

ງ. ແຜນການຂອງພຣະເຈົ້າ (ກຈ 2:23, 4:28)

ຈ. ສະພາບທີ່ບໍ່ປ່ຽນແປງເປັນນິດ (ຮຣ 6:17)

ສ. ສິ່ງທີ່ບໍ່ມີຜູ້ໃດສາມາດຂັດຂືນຫລືຕໍ່ຕ້ານໄດ້ ແຕ່ຕ້ອງຍອມຮັບ (ຣມ 9:19)

(2) ຄວາມໝາຍ "ໃນສວັນ" ຄືສະຖານທີ່ຊຶ່ງນ້ຳພຣະທັຍທັງສິ້ນຂອງພຣະເຈົ້າໄດ້ສຳເຣັດຢ່າງສົມບູນ (ພສສ 103:21)

(3) ຄວາມໝາຍຂອງ "ກໍໃຫ້ເປັນຢ່າງນັ້ນທີ່ແຜ່ນດິນໂລກ" ຄື ການອະທິຖານຂໍໃຫ້ສິ່ງທີ່ເລີດປະເສີດທຸກຢ່າງທີ່ມີໃນແຜ່ນດິນຂອງພຣະເຈົ້ານັ້ນ ໄດ້ເກີດຂຶ້ນຢ່າງສຳເລັດຄົບຖ້ວນເທິງແຜ່ນດິນໂລກດ້ວຍຄືກັນ ແຕ່ຖ້າທ່ານບໍ່ຄົ້ນໃຫ້ພົບ ບໍ່ຍອມຮັບແລະບໍ່ເຊື່ອຟັງນ້ຳພຣະທັຍຂອງພຣະເຈົ້າແລ້ວ ທ່ານກໍຈະຕ້ອງພົບຄວາມສັບສົນແລະຄວາມຂັດແຍ້ງຫລາຍສິ່ງຫລາຍຢ່າງຊຶ່ງເຂົ້າມາໃນຊີວິດຂອງທ່ານ

(4) ເຮົາຕ້ອງມີຄວາມຮັບຜິດຊອບ ເພື່ອທີ່ຈະໃຫ້ຄຳອະທິຖານນີ້ໄດ້ສຳເຣັດໂດຍການ

ກ. ອະທິຖານ (ກຈ 1:14, 2:1, 1 ຢຣ 5:14, 1 ກສດ 18:37, ລກ 2:28-32)

ຂ. ປະຕິເສດຕົນເອງໂດຍຖືວ່ານ້ຳພຣະທັຍຂອງພຣະເຈົ້າຕ້ອງມາກ່ອນເຣື່ອງ ສ່ວນຕົວ ເພື່ອໃຫ້ນ້ຳພຣະທັຍຂອງພຣະເຈົ້າສຳເຣັດ (1 ກທ 15:31, ມທ 16:24, ລກ 12:27)

ຄ. ຖວາຍຕົວເຮັດຕາມນ້ຳພຣະທັຍພຣະເຈົ້າດ້ວຍຄວາມຊື່ນຊົມຍິນດີ (ຢຮ 4:34, 5:30, ຢຮ 6:38-39)

(5) ວິທີການທີ່ຈະຮູ້ຈັກນ້ຳພຣະທັຍຂອງພຣະເຈົ້າໄດ້ຢ່າງຊັດເຈນ

ກ. ໂດຍພຣະວັຈນະຂອງພຣະເຈົ້າ (ຢຮ 6:40, 1 ທຊ 4:3, 5:16-18)

ຂ. ຕ້ອງໃຊ້ຄວາມຄິດທີ່ພຣະເຈົ້າຊົງໂປດໂຜດປະທານໃຫ້ແກ່ເຮົາ (ພປ 2:13)

ຄ. ໂດຍສະຖານນະການທີ່ກຳລັງພະເຊີນຢູ່ (ສພສ 16:19, ກຈ 16:)

ງ. ໂດຍການພັດທະນາຈິດວິນຍານໃຫ້ມີຄວາມສັມພັນທີ່ດີກັບພຣະເຈົ້າ ແລະການຈະເລີນຂຶ້ນສູ່ຄວາມເປັນຜູ້ໃຫຍ່ຝ່າຍວິນຍານ ສິ່ງທີ່ສຳຄັນກໍຄືຕ້ອງມອບທຸກສິ່ງແດ່ພຣະເຈົ້າດ້ວຍຄວາມໄວ້ວາງໃຈຢ່າງເຕັມປ່ຽມ (ຣມ 12:1-3)

ຈ. ພຣະເຈົ້າຈະຊົງນຳເຮົາຕາມນ້ຳພຣະທັຍຂອງພຣະອົງກໍຕໍ່ເມື່ອ ເຮົາຕ້ອງການໃຫ້ນ້ຳພຣະທັຍຂອງພຣະເຈົ້າເປັນສິ່ງທີ່ສຳຄັນທີ່ສຸດໃນຊີວິດຂອງເຮົາເທົ່ານັ້ນ

**ຄຳຖາມ** ຫາກພຣະເຈົ້າໄດ້ຊົງໂຜດປະທານໂອກາດໃຫ້ທ່ານພຽງເທື່ອດຽວໃນຊີວິດ ທີ່ຈະເລືອກເອົາສິ່ງໜຶ່ງສິ່ງໃດພຽງຢ່າງດຽວເທົ່ານັ້ນ ທ່ານຈະເລືອກເອົາຫຍັງ?

**ຄຳຕອບ** ຂອງຈອນ ນິວຕັນຄື "ຂໍພຣະເຈົ້າຊົງເປັນຜູ້ທີ່ເລືອກໃຫ້ ເພື່ອນ້ຳພຣະທັຍຂອງພຣະອົງຈະໄດ້ສຳເຣັດໃນຊີວິດຂອງຂ້າພະເຈົ້າຢ່າງຄົບບໍຣິບູນ" ເພາະວ່າພຣະເຈົ້າຊົງຮູ້ທຸກສິ່ງໃນຊີວິດຂອງເຮົາ ແລະພຣະອົງຜູ້ດຽວທີ່ຊົງສາມາດກຳນົດແຜນການສຳລັບຊີວິດຂອງເຮົາໄດ້ຢ່າງສົມບູນ

ເຮົາໄດ້ຮຽນກ່ຽວກັບຫົວຂໍ້ທີ່ສຳຄັນ 3 ປະການໃນການອະທິຖານ ຊຶ່ງເຈາະຈົງກັບພຣະເຈົ້າ ແລ້ວຕໍ່ໄປນີ້ເຮົາຈະໄດ້ສຶກສາກ່ຽວກັບຫົວຂໍ້ທີ່ສຳຄັນອີກ 3 ປະການຊຶ່ງເຈາະຈົງກັບຊີວິດຂອງມະນຸດ

**4) "ຂໍຊົງໂຜດປະທານອາຫານປະຈຳວັນ ໃຫ້ແກ່ຂ້າພຣະອົງທັງຫລາຍໃນກາລະວັນນີ້"**

ໃນຕອນແຣກນັ້ນເຮົາຈະໃຫ້ຄວາມສຳຄັນໃນເລື່ອງຂອງພຣະເຈົ້າ ແຕ່ໃນຕອນນີ້ເຮົາຈະ ໃຫ້ຄວາມສຳຄັນກ່ຽວກັບເຣື່ອງຂອງມະນຸດ ໃນດ້ານປັດຈັຍທີ່ຈຳເປັນສຳລັບຊີວິດ 2 ປະການຄື

ກ. ອາຫານທີ່ຈະຮັບປະທານ

ຂ. ສັມພັນທະພາບຣະຫວ່າງມະນຸດໃນດ້ານການປອງດອງກັນ ຄວາມຂັດແຍ້ງຣະຫວ່າງ ມະນຸດໃນເຣື່ອງການທຳກິນ

(1) ຄວາມໝາຍຂອງຄຳວ່າ "ປະຈຳວັນ" ຄື

ກ. ພຣະເຢຊູຄຣິສໄດ້ຊົງສອນເຮົາໃຫ້ອະທິຖານທູນຂໍອາຫານ ທີ່ຈຳເປັນຕໍ່ຊີວິດຂອງເຮົາໃນແຕ່ລະມື້ເທົ່ານັ້ນ ບໍ່ແມ່ນເປັນອາທິດ ເປັນເດືອນ ຫລືເພື່ອຄວາມຕ້ອງການຕາມໃຈໂລບຂອງຕົນເອງ (ພປ 4:19)

ຂ. ເປັນພຣະເມດຕາຂອງພຣະເຈົ້າ ໃນການຊົງລ້ຽງດູບຸດຂອງພຣະອົງດ້ວຍອາຫານປະຈຳວັນຕາມແຜນການຂອງພຣະອົງ (ອພຍ.16, ມທ 6:34)

ຄ. ເປັນຄຳອະທິຖານທີ່ພຣະເຢຊູຄຣິສໄດ້ຊົງສອນ ເພື່ອໃຫ້ເຮົາຮູ້ຈັກທີ່ຈະມີຄວາມຮັບຜິດຊອບ 4 ປະການຄື

- ພຣະເຈົ້າຊົງຕ້ອງການທີ່ຈະໃຫ້ເຮົາອະທິຖານແທນທີ່ຈະມີຊີວິດທີ່ເຕັມໄປດ້ວຍຄວາມກະວົນກະວາຍ (ມທ 7:7, ສພສ.30:8-9)
- ການເຮັດວຽກງານ (ສພສ.6:6) ເຊັ່ນດຽວກັບມົດໃນອາກາດຕ້ອງດູໝັ່ນຫາອາຫານ ແລະດອກໄມ້ໃນທົ່ງຫຍ້າກໍຕ້ອງພະຍາຍາມຫຍັ່ງຮາກຂອງມັນໃຫ້ເລິກລົງໄປໃນດິນ ເພື່ອທີ່ຈະດູດອາຫານມາບຳລຸງລ້ຽງລຳຕົ້ນ ໃບແລະດອກຂອງມັນ ເຮົາກໍຕ້ອງເຮັດວຽກເພື່ອທີ່ຈະໄດ້ມາຊຶ່ງອາຫານທີ່ພຣະເຈົ້າໄດ້ຊົງຈັດຕຽມໄວ້ໃຫ້ເຊັ່ນດຽວກັນ
- ການພໍໃຈໃນສິ່ງທີ່ຕົນເອງມີຢູ່ (ຢກ 1:17, 1 ຕທ 6:6-8, ຮຣ13:5) ແລະໃຫ້ເຮົາຂອບໃຈພຣະເຈົ້າສຳລັບອາຫານໃນແຕ່ລະມື້

<u>ຂໍ້ຄິດໃນການອະທິຖານ</u>

"ບາງຄົນມີອາຫານ ແຕ່ບໍ່ມີຄວາມສາມາດທີ່ຈະກິນໄດ້ ຍິ່ງກວ່ານັ້ນ ບາງຄົນມີຄວາມສາມາດທີ່ຈະກິນໄດ້ແຕ່ບໍ່ມີອາຫານຈະກິນ "ຂ້າແດ່ພຣະບິດາເຈົ້າ ຂໍຂອບຄຸນທີ່ຊົງໂຜດປະທານອາຫານແລະຄວາມສາມາດທີ່ຈະກິນໄດ້ໃຫ້ແກ່ຂ້າພຣະອົງ"

ການຊ່ວຍເຫລືອຄົນອື່ນ ແລະງານພັນທະກິດຕ່າງ ໆ ພຣະເຢຊູຄຣິສໄດ້ຊົງໃຊ້ຄຳວ່າ "ຂ້າພຣະອົງທັງຫລາຍ" ນັ້ນກໍເພາະວ່າພຣະອົງຕ້ອງການທີ່ຈະສອນເຮົາບໍ່ໃຫ້ອະທິຖານເພື່ອຕົນເອງເທົ່ານັ້ນ ສິ່ງທີ່ສຳຄັນອີກປະການໜຶ່ງກໍຄື ເຮົາຕ້ອງຄິດເຖິງອາຫານປະຈຳວັນຝ່າຍຈິດວິນຍານດ້ວຍ

### 5) "ຂໍຊົງໂຜດຍົກໂທດໃຫ້ຂ້າພຣະອົງ ເໝືອນຂ້າພຣະອົງຍົກໂທດໃຫ້ແກ່ຜູ້ທີ່ເຮັດຜິດຕໍ່ຂ້າພຣະອົງນັ້ນ"

ຄວາມໝາຍຂອງຄຳອະທິຖານນີ້ບໍ່ແມ່ນກ່ຽວກັບຄວາມບາບດັ້ງເດີມ ແຕ່ເປັນຄວາມບາບ ທີ່ເກີດຂຶ້ນໃນການດຳເນີນຊີວິດຄຣິສຕຽນທຸກມື້ ເຖິງແມ່ນວ່າເຮົາຈະໄດ້ຮັບການອະພັຍໂທດບາບແລ້ວກໍຕາມ ແຕ່ເຮົາກໍຍັງຄົງຢູ່ໃນໂລກນີ້ແລະຍັງຕ້ອງຕໍ່ສູ້ກັບທັມມະຊາດບາບຊຶ່ງຢູ່ພາຍໃນເນື້ອໜັງຂອງເຮົາເອງ ດັ່ງນັ້ນເຮົາຈຶ່ງຕ້ອງສາຣພາບຄວາມຜິດບາບຕໍ່ພຣະເຈົ້າ ແລະຮັບ

ການຊຳລະຄວາມຜິດບາບໂດຍພຣະໂລຫິດຂອງພຣະເຢຊູຄຣິສທຸກມື້ດ້ວຍ ຊຶ່ງສິ່ງນີ້ປຽບໄດ້ກັບການທີ່ພຣະເຢຊູຄຣິສໄດ້ຊົງລ້າງຕີນຂອງພວກສາວົກ (ຢຮ 13:8) ນັ້ນກໍມີຄວາມໝາຍເຊັ່ນດຽວກັນ ຄືສາວົກຂອງພຣະເຢຊູຄຣິສນັ້ນໄດ້ຮັບການຊຳລະຊີວິດໃຫ້ບໍຣິສຸດແລ້ວ ໂດຍການກັບໃຈໃໝ່ ຊຶ່ງປຽບເໝືອນກັບການທີ່ເຮົາໄດ້ອາບນ້ຳແລ້ວ ກໍບໍ່ຈຳເປັນຕ້ອງອາບນ້ຳຊ້ຳອີກເທື່ອໜຶ່ງ ແຕ່ໃນການດຳເນີນຊີວິດຄຣິສຕຽນໃນໂລກທີ່ເຕັມໄປດ້ວຍຄວາມບາບນີ້ ສາວົກຂອງພຣະເຢຊູຄຣິສມັກຈະກະທຳຜິດບາບໂດຍປະມາດຢູ່ຫລາຍເທື່ອໃນແຕ່ລະມື້ ພວກເຂົາຈຶ່ງຕ້ອງໄດ້ຮັບການຊົງຊຳລະໃນຄວາມຜິດບາບເຫລົ່ານັ້ນທຸກມື້ ຊຶ່ງສິ່ງນີ້ປຽບໄດ້ກັບການລ້າງຕີນທີ່ເປື້ອນຝຸ່ນແລະສິ່ງກະປົກຈາກການເດີນທາງເມື່ອເຮົາໄດ້ກັບມາເຖິງເຮືອນດ້ວຍ ພຣະອົງໄດ້ເຂົ້າໃຈເຖິງຄວາມສຳຄັນແລະຄວາມຈຳເປັນຂອງການສາຣພາບບາບຂອງຜູ້ເຊື່ອ ພຣະອົງຈຶ່ງຊົງລ້າງຕີນເຫລົ່າສາວົກດ້ວຍພຣະອົງເອງ

ເຮົາຈະພິຈາລະນາຄວາມສຳຄັນຂອງຄຳອະທິຖານ ໃນການຂໍພຣະເຈົ້າຊົງໂປດຍົກໂທດຄວາມຜິດບາບດັ່ງຕໍ່ໄປນີ້

(1) ໂດຍພຣະຄຸນຂອງພຣະເຈົ້າ ຈຶ່ງເຮັດໃຫ້ເຮົາໄດ້ຮັບການຍົກໂທດທາງພຣະເຢຊູຄຣິສ ແລະເຮົາຕ້ອງຍອມຮັບຄວາມຈິງທີ່ວ່າ ເຖິງແມ່ນວ່າພຣະເຈົ້າຈະຊົງນັບວ່າເຮົາເປັນຄົນຊອບທັມໂດຍພຣະຄຸນຂອງພຣະອົງກໍຕາມ ແຕ່ເຮົາກໍຍັງເປັນຄົນທີ່ມັກເຮັດບາບຢູ່ສເມີ ຊຶ່ງເຮົາທຸກຄົນທີ່ເປັນຄຣິສຕຽນກໍບໍ່ສາມາດທີ່ຈະປະຕິເສດຄວາມຈິງນີ້ໄດ້ ເຮົາຍັງຕ້ອງຕໍ່ສູ້ກັບຄວາມຜິດບາບຂອງຕົນເອງ ແລະຍັງຕ້ອງຕໍ່ສູ້ກັບການທົດລອງຈາກຊາຕານທີ່ມັກມີອິດທິພົນຢູ່ເໜືອຊີວິດຂອງເຮົາດ້ວຍ ດັ່ງນັ້ນ ມາລ໌ຕິນ ລູເທີລ໌ ຈຶ່ງໄດ້ກ່າວວ່າ “ຄຣິສຕຽນນັ້ນຄືຄົນຊອບທັມ ແຕ່ໃນຂະນະດຽວກັນກໍເປັນຄົນບາບດ້ວຍ” ດັ່ງນັ້ນເຮົາຈຶ່ງຕ້ອງສາຣພາບຄວາມຜິດບາບຂອງເຮົາກັບພຣະເຈົ້າ ແລະມອບຊີວິດທີ່ມີຄວາມບົກພ່ອງຂອງເຮົາໃຫ້ພຣະເຈົ້າຊົງຊຳລະໃຫ້ບໍຣິສຸດ ເພື່ອເຮົາຈະໄດ້ມີປະສົບການກັບຄວາມຮັກຂອງພຣະເຈົ້າທີ່ມີຄຸນຄ່າຕໍ່ຊີວິດຂອງເຮົາຫລາຍຍິ່ງຂຶ້ນ ຄຣິສຕຽນທີ່ເພິ່ງພຣະອົງຈຶ່ງໄດ້ຮັບການອະພັຍໃນຄວາມຜິດບາບທີ່ຮ້າຍແຮງນັ້ນໄດ້ດ້ວຍຄວາມຮັກອັນຍິ່ງໃຫຍ່ຂອງພຣະອົງ

(2) ຄຳອະທິຖານນີ້ໃຫ້ທ່ານຮູ້ວ່າ ການສາຣພາບບາບນັ້ນ ມີຄວາມຈຳເປັນຫລາຍໃນຊີວິດຂອງທ່ານ ເພາະເມື່ອໄດ້ສາພາບບາບເຮັດໃຫ້ຈິດວິນຍານມີເສລີພາບແລະມີຈິດສຳນຶກທີ່ຖືກຕ້ອງດັ່ງນັ້ນການອະທິຖານສາຣພາບບາບນັ້ນຈຶ່ງເປັນເລື່ອງທີ່ສຳຄັນຫລາຍ ມາລ໌ຕິນ ລູເທີລ໌ ໄດ້ກ່າວວ່າ “ສາເຫດທີ່ບໍ່ມີການສາຣພາບບາບນັ້ນກໍຄື ການບໍ່ມີຄວາມຖ່ອມໃຈເປັນການສ່ວນຕົວນັ້ນເອງ” ແຕ່ວ່າການສາຣພາບບາບເລື້ອຍ ໆ ນັ້ນກໍເປັນບັນຫາເຊັ່ນກັນ ເຖິງແນວໃດກໍຕາມການ ບໍ່ ຍອມສາຣະພາບບາບນັ້ນກໍເປັນບັນຫາທີ່ໃຫຍ່ກວ່າອີກຫລາຍເທົ່າ ເພາະຈະເຮັດໃຫ້ເຮົາຕົກຢູ່ໃນຄວາມບາບອັນໃຫຍ່ຫລວງ ຖ້າທ່ານສາຣະພາບບາບຢ່າງແທ້ຈິງທ່ານກໍຈະໄດ້ຮັບການຍົກໂທດຄວາມຜິດບາບດ້ວຍຄວາມ ຊື່ນຊົມຍິນດີແລະຊີວິດຂອງທ່ານກໍຈະປ່ຽນແປງຢ່າງຫລວງຫລາຍໄດ້ (1 ຢຮ1:9, ພສສ 32:1-5)

(3) ຄຳອະທິຖານນີ້ ສອນໃຫ້ທ່ານຮູ້ວ່າຄຣິສຕຽນທຸກຄົນຈຳເປັນຕ້ອງຍົກໂທດຄວາມຜິດບາບຂອງຜູ້ອື່ນດ້ວຍໃນກວ້າງຂວາງ ແລ້ວພຣະເຈົ້າຈຶ່ງຈະຊົງຍົກໂທດໃນຄວາມຜິດບາບຂອງເຮົາ

ຄຣິສຕຽນທີ່ເຊື່ອຟັງພຣະບັນຊາຂອງພຣະເຢຊູຄຣິສທີ່ວ່າ "ຈົ່ງຮັກຊຶ່ງກັນແລະກັນ ແລະຈົ່ງຍົກໂທດໃຫ້ແກ່ກັນແລະກັນ" ນັ້ນກໍຈະມີຄວາມສາມາດທີ່ຈະດຳເນີນຊີວິດຢູ່ໄດ້ຢ່າງມີຄຸນນະພາບໂດຍອາສັຍອຳນາດແຫ່ງຄວາມຮັກແລະການອະພັຍໂທດ

ຈົ່ງຮັກແລະຍົກໂທດຄວາມຜິດບາບຂອງຄົນອື່ນ ທ່ານມີຊີວິດແຫ່ງການອະພັຍໂທດດ້ວຍຄວາມຮັກແລະໄດ້ຮັບການອະພັຍໂທດແລ້ວຫລືຍັງ "ຂ້າແດ່ພຣະເຈົ້າ ຂ້າພຣະອົງບໍ່ສາມາດທີ່ຈະຮັກ... ໄດ້ເລີຍແຕ່ຂ້າພຣະອົງເຊື່ອແນ່ວ່າ ຂ້າພຣະອົງຈະສາມາດຮັກພວກເຂົາໄດ້ໂດຍຄວາມຮັກຂອງພຣະອົງ"

**6) "ຂໍຢ່າພາຂ້າພຣະອົງເຂົ້າໄປໃນການທົດລອງ ແຕ່ຂໍຊົງໂຜດໃຫ້ພົນຈາກການຊົ່ວຮ້າຍ"**

ຊີວິດຂອງຄຣິສຕຽນນັ້ນຍ່ອມຕ້ອງຜະເຊີນກັບການທົດລອງໃນທຸກຍາມ ດັ່ງນັ້ນພາຍຫລັງຈາກການທີ່ໄດ້ຮັບການອະພັຍໂທດແລ້ວຈຶ່ງເປັນຊ່ວງເວລາທີ່ສຳຄັນຫລາຍ ກໍຄືຈິດໃຈທີ່ມີຄວາມຕັ້ງໃຈຢ່າງເດັດດ່ຽວທີ່ຈະ "ບໍ່" ກະທຳບາບອີກຢ່າງເດັດຂາດ ສິ່ງທີ່ສຳຄັນທີ່ຄຣິສຕຽນຄວນຮູ້ຈັກໃນເລື່ອງນີ້ມີຢູ່ 5 ປະການ

(1) ທ່ານຕ້ອງຮູ້ຈັກທີ່ຈະແຍກແຍະການທົດລອງໃຫ້ເປັນ 2 ປະເພດ

ກ. ການທົດລອງເພື່ອຝຶກເຮົາ ພຣະເຈົ້າຊົງເປັນຜູ້ທົດສອບແລະຝຶກຝົນຄຣິສຕຽນເພື່ອຈະໄດ້ຈະເລີນເຕີບໂຕຂຶ້ນໃນຄວາມເຊື່ອ ແລະເມື່ອມີຊັຍຕໍ່ການທົດລອງນີ້ແລ້ວ ກໍຈະໄດ້ຮັບພຣະພອນ ແລະປະໂຫຍດຢ່າງຫລວງຫລາຍ ດັ່ງນັ້ນການທົດລອງແນວນີ້ຈຶ່ງເປັນສິ່ງທີ່ໜ້າຍິນດີ (ຢກ1:2-3, 1 ກທ.10:13, ພບຍ.13:3) ຕົວຢ່າງໃນເຣື່ອງນີ້ຄືຊີວິດຂອງອັບລາຮາມ

ຂ. ການທົດລອງເພື່ອທຳລາຍ ສິ່ງນີ້ເປັນການທົດລອງທີ່ມາຈາກມານຊາຕານ ຊຶ່ງຄຣິສຕຽນຕ້ອງຫລີກໃຫ້ພົ້ນ (ຢກ 1:13)

(2) "ສິ່ງຊົ່ວຮ້າຍ"ໃນພາສາເຮັບເຣີ ເປັນນາມເພດຊາຍເປັນບຸກຄົນໝາຍເຖິງຊາຕານເຈົ້າແຫ່ງການທຳລາຍ ສິ່ງທີ່ຄຣິສຕຽນຄວນລະມັດລະວັງກໍຄື ຢ່າປະເມີນຄ່າຂອງຊາຕານໃຫ້ນ້ອຍຫລືຫລາຍກວ່າຄວາມເປັນຈິງ ບາງຄົນຄິດຄາດຄະເນໃນເລື່ອງນີ້ຫລາຍເກີນໄປຈົນເປັນໄພແກ່ຊີວິດແລະຄວາມເຊື່ອຂອງຕົນເອງ ດັ່ງນັ້ນເຮົາຈຶ່ງຄວນໃຊ້ພຣະຄັມພີໃນການພິສູດຄວາມຈິງ (1 ປຕ 5:8 2 ກທ 2:11, ພນ 2:24)

(3) ຄຣິສຕຽນຕ້ອງຮູ້ຈັກກົນອຸບາຍຂອງມານຊາຕານທີ່ໃຊ້ທຳລາຍມະນຸດ 3 ແນວແມ່ນ **ຕັນຫາຂອງເນື້ອໜັງ ຕັນຫາຂອງຕາ** ແລະ **ຄວາມທະນົງໃນລາບຍົດ** (1 ຢຮ 2:15-16)

(4) ລັກສະນະການເຮັດວຽກງານຂອງຊາຕານໃນຊີວິດຂອງເຮົາຄື ການໂຈມຕີຈຸດອ່ອນຂອງມະນຸດ (ຢກບ1:14) ເຊັ່ນ **ພະຍາມານໂຈມຕີຈຸດອ່ອນຂອງຢູດາທີ່ຮັກເງິນ**

**ພະຍາມານໂຈມຕີຈຸດອ່ອນຂອງແຊມຊັນເລື່ອງຜູ້ຍິງ**

**ພະຍາມານໂຈມຕີຈຸດອ່ອນຂອງເປໂຕດ້ານອາລົມ**

(5) ເຄັດລັບແຫ່ງການມີຊັຍຊະນະເໜືອການທົດລອງແມ່ນ

ກ. ເຮົາຄວນຮູ້ຢ່າງຊັດເຈນວ່າ ໂລກນີ້ເຕັມໄປດ້ວຍການທົດລອງ (ມທ 24:10)

ຂ. ເຮົາຕ້ອງຕື່ນຕົວຕໍ່ການຖືກທົດລອງ (ຢຣ 17:15)

ຄ. ເຮົາຕ້ອງອະທິຖານ (ມທ 26:41)

ງ. ເຮົາຕ້ອງລະມັດລະວັງຕົນເອງດ້ວຍການບໍ່ໃຫ້ໂອກາດແລະບໍ່ຢູ່ໃນສະຖານທີ່ຊຶ່ງລໍ້ແຫລມຕໍ່ການຖືກທົດລອງ (ພສສ 1:1)

ຈ. ເຮົາຕ້ອງເຂົ້າໃຈເຖິງ ສະພາບຄວາມອ່ອນແອຂອງຕົນເອງຢ່າງຖ່ອງແທ້ ແລະພຶ່ງພຣະເຈົ້າຢູ່ຕະຫລອດເວລາ ຢ່າພຶ່ງອາສັຍຫລືໄວ້ວາງໃຈໃນກຳລັງຂອງຕົນເອງ

ສ. ເຮົາຕ້ອງມີຊີວິດທີ່ແຂງແຮງທັງທາງດ້ານຮ່າງກາຍ ຈິດໃຈແລະວິນຍານ ເພື່ອທີ່ເຮົາຈະໄດ້ບໍ່ຕົກຢູ່ໃນການທົດລອງ ເຮົາຄວນຕັ້ງໃຈທີ່ຈະອະທິຖານທຸກເຊົ້າ ຂໍພຣະເຈົ້າຊົງໃຫ້ເຮົາເຕັມປ່ຽມໄປດ້ວຍພຣະວິນຍານບໍຣິສຸດແລະລິດທານຸພາບຂອງພຣະອົງ ມີຊີວິດແຫ່ງຊັຍຊະນະເໜືອການທົດລອງໄດ້ທຸກມື້ ຄຣິສຕຽນເປັນຜູ້ມີເສລີພາບທີ່ແທ້ຈິງ ເພາະໄດ້ພົ້ນຈາກການຜູກມັດຂອງມານແລ້ວ ດັ່ງນັ້ນການມີເສລີພາບທີ່ແທ້ຈິງນັ້ນກໍຄືເສລີພາບໃນພຣະວິນຍານບໍຣິສຸດແລະເສລີພາບທີ່ເປັນອິດສະລະຈາກບາບ ຄຣິສຕຽນທຸກຄົນຄວນທີ່ຈະອະທິຖານວ່າຂໍຢ່ານຳຂ້າພຣະອົງເຂົ້າໄປໃນການທົດລອງ ແຕ່ຂໍໃຫ້ພົ້ນຈາກສິ່ງຊົ່ວຮ້າຍຕລອດຊີວິດ ຈົນເຖິງວາລະສຸດທ້າຍຢ່າງຈິງຈັງ

7) ລົງທ້າຍດ້ວຍຄຳສັນເສີນ **"ເຫດວ່າຣາຊອານາຈັກ ຣິດອຳນາດ ແລະພຣະຣັສມີກໍເປັນຂອງພຣະອົງສືບໆ ໄປເປັນນິດ ອາແມນ"**

ຄຳອະທິຖານນີ້ເປັນການສລຸບຄວາມໝາຍທີ່ສຳຄັນໄວ້ໃນຕອນສຸດທ້າຍ ເພື່ອທີ່ຈະສະແດງວ່າພຣະເຈົ້າຊົງພຣະຊົນຢູ່ແລະເຮົາອະທິຖານໄດ້ດ້ວຍຄວາມໝັ້ນໃຈ (1 ຂຄວ 29:11)

(1) "ຣາຊອານາຈັກ" ຄຳນີ້ໃຊ້ເພື່ອທີ່ຈະສຳແດງວ່າຣາຊອຳນາດນັ້ນຄືສິດທິອຳນາດໃນການຄອບຄອງຂອງພຣະເຈົ້າ (ພນ 11:15, ມທ 6:33)

(2) "ຣິດອຳນາດ" ຄຳນີ້ໝາຍເຖິງຣິດເດດທີ່ພຣະເຈົ້າໄດ້ຊົງກະທຳໃຫ້ພຣະເຢຊູຄຣິສໄດ້ເປັນຂຶ້ນມາຈາກຄວາມຕາຍ (ພປ 4:13, ຢຣ 15:5, ພສສ. 62:11, ລກ 10:19)

(3) "ພຣະຣັສມີ" ພຣະເຈົ້າຊົງສຳແດງຄວາມຍິ່ງໃຫຍ່ຂອງພຣະອົງໃນສະຖານທີ່ຊຶ່ງພຣະອົງຊົງສະຖິດຢູ່ແລະຊົງກະທຳພຣະຣາຊກິຈຂອງພຣະເຈົ້າ (ຢຮ 1:14)

(4) "ອາແມນ" ມີຄວາມໝາຍຄື

ກ. ການມີຄວາມໝັ້ນໃຈວ່າຄຳອະທິຖານນີ້ອອກມາຈາກຈິດສຳນຶກທີ່ຖືກຕ້ອງ

ຂ. ມີຄວາມຫວັງວ່າຈະສຳເລັດຕາມຄຳອະທິຖານຢ່າງແນ່ນອນ

ຄ. ເປັນການສະແດງອອກເຖິງຄວາມສັດຊື່ແລະຄວາມຈົ່ງຮັກພັກດີທີ່ມີຕໍ່ພຣະເຈົ້າ

ງ. ເປັນການອຸທິດຖວາຍ (2 ກທ 1:20, ພນ 3:14, ພສສ 106:48)

**ໃນພຣະເຢຊູຄຣິສນັ້ນຍ່ອມບໍ່ມີຄວາມຜິດຫວັງ ເພາະບໍ່ມີສິ່ງໃດທີ່ຍາກສຳລັບພຣະອົງ**

9/18/2007

ຮົງ 9/26/07

# ບົດທີ 7

# ຢ່າງນຳພຣະຄຣິສ
# ໝັ້ນໃຈໃນຄວາມພົ້ນ

**ຂໍ້ຄວາມເຫລົ່ານີ້ ເຮົາຂຽນມາເຖິງເຈົ້າທັງຫລາຍ**
**ທີ່ເຊື່ອໃນພຣະນາມພຣະບຸດຂອງພຣະເຈົ້າ**
**ເພື່ອເຈົ້າທັງຫລາຍຈະໄດ້ຮູ້ວ່າພວກເຈົ້າມີຊີວິດອັນຕລອດໄປເປັນນິດ**
1 ໂຢຮັນ 5:13

ຄວາມໝັ້ນໃຈໃນຄວາມພົ້ນ ແມ່ນເຣື່ອງສຳຄັນຕໍ່ຊີວິດຄຣິສຕຽນ ທີ່ເຮັດໃຫ້ເຮົາເກີດຄວາມໜັກແນ່ນບໍ່ສົງສັຍ ຄວາມໝັ້ນໃຈແມ່ນຜົນທີ່ມາຈາກຄວາມເຊື່ອ ພຣະເຢຊູຄຣິສເປັນແບບຢ່າງແກ່ເຮົາໃນເຣື່ອງນີ້ ເພາະວ່າທຸກອິຣິຍະບົດ ທຸກຄວາມເວົ້າ ການກະທຳ ການຮັບໃຊ້ ແລະຊີວິດຂອງພຣະອົງໄດ້ປາກົດໃຫ້ເຫັນແຈ້ງວ່າ ພຣະອົງມີຄວາມໝັ້ນໃຈແທ້ ພຣະອົງກ່າວສເມີວ່າໃຫເຮົາມີຄວາມເຊື່ອ ນີ້ແມ່ນຄວາມຈິງທີ່ພຣະອົງໄດ້ບອກສອນແລະແຈ້ງໃຫ້ແກ່ເຮົາ ຄວາມໝັ້ນໃຈໃນຄວາມພົ້ນນີ້ໄດ້ມາຍ້ອນວ່າ ເຮົາໄດ້ພົບແລະຮັບເອົາ ຄວາມຈິງນັ້ນ ເຮົາໄດ້ພົ້ນແລ້ວແທ້ ໆ ແລະເຮົາຈຶ່ງມີຄວາມໝັ້ນໃຈ ບໍ່ແມ່ນເຮົາພຍາຍາມສ້າງຄວາມໝັ້ນໃຈໃນສິ່ງທີ່ເຮົາຍັງບໍ່ມີ ແຕ່ເຮົາມີແລ້ວ ເຮົາໄດ້ແລ້ວແມ່ນຄວາມພົ້ນຈາກພຣະເຢຊູຄຣິສ ຜູ້ເປັນພຣະບຸດຂອງພຣະເຈົ້າ ພຣະອົງຕາຍໄຖ່ບາບເທິງໄມ້ກາງແຂນ ເພື່ອຮັບບາບໂທດຂອງເຮົາ ແລະໃນພາກສ່ວນຂອງເຮົາກໍໄດ້ສາຣະພາບບາບກັບໃຈໃໝ່ຕ້ອນຮັບພຣະອົງ **"ໂດຍເຫດນີ້ ຈົ່ງໃຫ້ພວກເຮົາເຂົ້າໄປໃກ້ດ້ວຍຈິງໃຈ ດ້ວຍຄວາມເຊື່ອອັນເຕັມບໍຣິບູນ ມີໃຈທີ່ໄດ້ຮັບການຊົງຊຳຣະຈາກການຮູ້ສຶກຕົວວ່າມີບາບ ແລະມີຮ່າງກາຍທີ່ຊຳຣະລ້າງດ້ວຍນ້ຳບໍຣິສຸດ ຈົ່ງຍຶດໝັ້ນໃນຄວາມຫວັງທີ່ພວກເຮົາປະກາດຕົວວ່າ ໄດ້ຮັບໄວ້ແລ້ວນັ້ນ ຢ່າໃຫ້ເຄື່ອນໄຫວ ເພາະວ່າພຣະອົງຜູ້ຊົງປະທານພຣະສັນຍານັ້ນກໍຊົງສັດຊື່"** (ຮຣ 10:22-23)

1. ຈົ່ງໝັ້ນໃຈ ເຮົາພົ້ນແລ້ວໂດຍຄວາມເຊື່ອ "ດ້ວຍວ່າຊຶ່ງທ່ານທັງຫລາຍໄດ້ຖືກຊົງໂຜດໃຫ້ພົ້ນນັ້ນ ກໍຍ້ອນພຣະຄຸນດ້ວຍທາງຄວາມເຊື່ອ ສິ່ງເຫລົ່ານີ້ບໍ່ໃຊ່ພວກທ່ານເຮັດເອົາເອງ ແຕ່ພຣະເຈົ້າຊົງປະທານໃຫ້" (ອຟ 2:8)

ຄວາມພົ້ນທີ່ເຮົາໄດ້ມານີ້ ເຮົາໄດ້ມາບໍ່ແມ່ນການເຮັດດີ ມີສິລທັມຈາກການປະພຶດຕົວໃຫ້ເປັນຄົນດີ ແຕ່ໄດ້ມາຍ້ອນພຣະເຢຊູຄຣິສຕາຍໄຖ່ບາບເຮົາເທິງໄມ້ກາງແຂນ ພຣະໂລຫິດຂອງພຣະອົງລຶບລ້າງບາບແທນເຮົາແລ້ວ ຝ່າຍເຮົາພຽງແຕ່ສາຣະພາບບາບຂອງເຮົາ ແລະຕ້ອນຮັບພຣະອົງໄວ້ເປັນພຣະຜູ້ຊ່ວຍໃຫ້ຣອດພົ້ນ ເປັນເຈົ້າຊີວິດຂອງເຮົາ (Saviour and the Lord) ຄຣິສຕຽນຈຶ່ງເຂົ້າສ່ວນໃນຄວາມຊອບທັມເຖິງແມ່ນວ່າເຮົາຍັງບໍ່ທັນດີພ້ອມສົມບູນເທື່ອ ດ້ວຍຄວາມຮັກຂອງພຣະເຈົ້າ ເຮົາຖືກນັບເຂົ້າສ່ວນຂອງຄວາມຊອບທັມໄດ້ຍ້ອນພຣະເຢຊູໄດ້ເຮັດສົມບູນຄົບຖ້ວນ ຍ້ອນໂດຍພຣະໂລຫິດຂອງພຣະເຢຊູຄຣິສຜູ້ຊົງຕາຍໄຖ່ບາບເຮົາ ດັ່ງນັ້ນຄວາມໝັ້ນໃຈໃນຄວາມພົ້ນ ຈຶ່ງເກີດຂຶ້ນ ພຣະເຈົ້າຊົງຮັກເຮົາ ພຣະອົງຊົງສົງສານເຮົາ ແລະໄດ້ສົ່ງພຣະບຸດມາຊ່ວຍເຮົາໃຫ້ພົ້ນ ເປັນການຮັບເອົາທີ່ພຣະເຈົ້າໄດ້ເຮັດສຳເຣັດແລ້ວເພື່ອເຮົາ

## 2. ໝັ້ນໃຈໃນຄວາມພົ້ນໂດຍການມີສັມພັນທະພາບອັນຖືກຕ້ອງກັບພຣະເຈົ້າຜູ້ເປັນພຣະບິດາ

ເມື່ອເຮົາຕ້ອນຮັບພຣະເຢຊູຄຣິສພຣະບຸດຂອງພຣະເຈົ້າທີ່ໄດ້ສະເດັດລົງມາໃນໂລກນີ້ ແລະຮັບເອົາໂທດຜິດບາບແທນເຮົາແລ້ວ ເຮັດໃຫ້ເຮົາມີສັມພັນທະພາບກັບພຣະອົງໂດຍການບັງເກີດໃໝ່ເຂົ້າສູ່ຄອບຄົວຂອງພຣະເຈົ້າ ມີຖານະເປັນບຸດຂອງພຣະອົງ ມີພຣະວິນຍານບໍຣິສຸດສຖິດນຳເຮົາ ເປັນພຣະຜູ້ຊ່ວຍໃຫ້ເຮົາມີໄຊເໜືອບາບ ມີຊີວິດທີ່ຍ່າງແລະດຳເນີນຊີວິດຕາມແບບຂອງພຣະຄຣິສ ມີອິສຣະພາບແມ່ນໄດ້ເກີດໃໝ່ແລ້ວ ບໍ່ເປັນທາດຂອງຄວາມຢ້ານກົວໃນພູດຜີປີສາດ ອຳນາດມືດ ຍ້ອນວ່າພຣະເຈົ້າໃນລັກສະນະຂອງພຣະວິນຍານບໍຣິສຸດຈະຢູ່ນຳເຮົາ ຈະປົກປ້ອງເຮົາ ຈະນຳພາໃຫ້ຊີວິດຂອງເຮົາເຫັນແຈ້ງ ເຫັນຈິງ ສາມາດການດຳເນີນຊີວິດຄຣິສຕຽນທີ່ດີໄດ້ ທີ່ມີຄວາມສວ່າງເໜືອຄວາມຊົ່ວມົວໝອງຊີວິດທີ່ມີຄວາມຜາສຸກສາມາດຜ່ານຄວາມທຸກຮ້ອນ ການມີຄວາມສັມພັນອັນໜັກແໜ້ນຕິດສນິດກັບພຣະຄຣິສເຈົ້າຢ່າງຖືກຕ້ອງ ແມ່ນເຣື່ອງສຳຄັນຫລາຍ ປະສົບການຊີວິດແນວນີ້ທີ່ພາໃຫ້ຄຣິສຕຽນເກີດຄວາມໝັ້ນໃຈໃນຄວາມພົ້ນໄປໄດ້ໂດຍຕລອດ ພຣະທັມໂຣມ 8:16 ກ່າວວ່າ **"ຝ່າຍພຣະວິນຍານນັ້ນຊົງຮ່ວມເປັນພຍານກັບວິນຍານຂອງເຮົາທັງຫລາຍວ່າ ພວກເຮົາເປັນບຸດຂອງພຣະເຈົ້າ"**

## 3. ຄວາມໝັ້ນໃຈໃນຄວາມພົ້ນ ໂດຍການອ່ານແລະເຂົ້າໃຈພຣະວຈນະຂອງພຣະເຈົ້າ

**"ຂໍ້ຄວາມເຫລົ່ານີ້ ເຮົາຂຽນມາເຖິງເຈົ້າທັງຫລາຍທີ່ເຊື່ອໃນພຣະນາມພຣະບຸດຂອງພຣະເຈົ້າ ເພື່ອເຈົ້າທັງຫລາຍຈະໄດ້ຮູ້ວ່າພວກເຈົ້າມີຊີວິດອັນ"** (1 ຢຮ 5:13)

ພຣະວັຈນະຂອງພຣະເຈົ້າ ແມ່ນແສງສວ່າງແຫ່ງຄວາມຈິງທີ່ສ່ອງຊີວິດຈະນຳເຮົາໃຫ້ເກີດຄວາມໝັ້ນໃຈໃນຄວາມພົ້ນ ແລະພາໃຫ້ເຮົາຫລຸດພົ້ນຈາກຄວາມຢ້ານກົວທັງມວລ ບໍ່ຢ້ານໃນເຣື່ອງບຸນວາສນາຄາຖາອຳນາດ ການເຊັ່ນໄຫວ້ຕໍ່ວິນຍານທີ່ເຮົາບໍ່ຮູ້ຈັກ ເພາະວ່າເຮົາຮູ້ຈັກພຣະເຈົ້າອົງທ່ຽງແທ້ຂອງເຮົານັ້ນແມ່ນຜູ້ໃດ ພຣະອົງແມ່ນພຣະເຈົ້າອົງສູງສຸດ ມີຣິດທານຸພາບສູງສຸດ ເຮົາຈຶ່ງບໍ່ຕ້ອງຢ້ານກົວອຳນາດອື່ນ ໆ ອີກ ແລະເຮົາກໍໝັ້ນໃຈໄດ້ອີກວ່າພຣະອົງຈະປົກປ້ອງຮັກສາຄຸ້ມພັຍເຮົາ ທ່ານໂປໂລກ່າວໄວ້

ໃນພຣະທັມ 2 ຕີໂມທຽວ 1:12 ວ່າ **"ເພາະເຫດນີ້ແຫລະ ເຮົາຈຶ່ງອົດທົນເອົາສິ່ງທັງຫລາຍນີ້ ເຖິງປານນັ້ນ ເຮົາກໍບໍ່ມີຄວາມລະອາຍ ເພາະວ່າເຮົາຮູ້ຈັກພຣະອົງຜູ້ທີ່ເຮົາໄດ້ເຊື່ອແລະໄວ້ວາງໃຈນັ້ນ ແລະເຮົາເຊື່ອໝັ້ນວ່າພຣະອົງຊົງສາມາດຮັກສາ ຊຶ່ງເຮົາໄດ້ມອບໄວ້ກັບພຣະອົງຈົນເຖິງວັນນັ້ນ"** ແລະພຣະທັມ 2 ເປໂຕ 1:10 **"ເພາະເຫດນັ້ນ ພີ່ນ້ອງທັງຫລາຍເອີຍ ຈົ່ງອົດສາພຍາຍາມຫລາຍກວ່າເກົ່າ ເຮັດຕົນໃຫ້ເປັນໄປຕາມທີ່ພຣະເຈົ້າຊົງເອີ້ນແລະຊົງເລືອກໄວ້ນັ້ນ ເພາະວ່າຖ້າເຮັດຢ່າງນັ້ນແຫລະ ພວກທ່ານກໍຈະບໍ່ສະດຸດລົ້ມລົງຈັກເທື່ອ"**

4. ຄວາມໝັ້ນໃຈໃນຄວາມພົ້ນແມ່ນຜົນຂອງຄວາມເຊື່ອແທ້

ຄຣິສຕຽນທີ່ກໍ່ຮ່າງສ້າງຮູບແບບຂອງຊີວິດຝ່າຍວິນຍານ ຈຳເປັນຕ້ອງມີຄວາມເຊື່ອເປັນພື້ນຖານ **"ແຕ່ຖ້າບໍ່ມີຄວາມເຊື່ອແລ້ວ ຈະເປັນທີ່ພໍພຣະທັຍພຣະເຈົ້າບໍ່ໄດ້ ເພາະວ່າຜູ້ທີ່ມາເຝົ້າພຣະເຈົ້າໄດ້ນັ້ນ ຕ້ອງເຊື່ອວ່າພຣະອົງຊົງພຣະຊົນຢູ່ ແລະພຣະອົງຊົງເປັນຜູ້ປະທານຣາງວັນໃຫ້ແກ່ທຸກຄົນທີ່ສແວງຫາພຣະອົງ"** (ຮຣ 11:6) ຄຣິສຕຽນທີ່ຂາດຄວາເຊື່ອ ຈະຂາດຄວາມໝັ້ນໃຈໃນຄວາມພົ້ນ ຈະຂາດພລັງຊີວິດ ບໍ່ສາມາດປ່ຽນແປງຊີວິດ ແລະບໍ່ສາມາດເກີດຜົນຝ່າຍວິດວິນຍານ ຜູ້ນຶ່ງຜູ້ໃດທີ່ມີຄວາມເຊື່ອແທ້ຈິງໃນພຣະຄຣິສ ເຊື່ອໃນພຣະສັນຍາຂອງພຣະອົງ ແລະຂັບເຄື່ອນຊີວິດຕາມຄຳສອນ ສະແດງອອກເຖິງການເຊື່ອຟັງພຣະວິນຍານບໍຣິສຸດ ຄົນທີ່ມີຊີວິດທີ່ເຊື່ອແບບນີ້ໄດ້ສແດງຄວາມເຊື່ອໝັ້ນໃຫ້ເຫັນແລ້ວໂດຍບໍ່ຕ້ອງພຍາຍາມເຊື່ອ ຍ້ອນວ່າເຮົາເຊື່ອແທ້ **"ຄົນຊອບທັມຈະມີຊີວິດດຳຣົງຢູ່ໂດຍຄວາມເຊື່ອ"** (ຣມ 1:17 ທ.) ເຮົາຈຶ່ງໝັ້ນໃຈໃນຄວາມພົ້ນ ເຮົາໝັ້ນໃຈຍ້ອນການຕ້ອນຮັບພຣະຄຣິສ ມີປະສົບການຊີວິດທີ່ກັບໃຈໃໝ່ກ້າຫານທີ່ຈະເປັນພຍານເພື່ອພຣະອົງ ບໍ່ແມ່ນການຮັບພຣະອົງຢ່າງຫລິ້ນ ໆ ຫລືຕາມໝູ່ສຫາຍ ແຕ່ຮັບດ້ວຍປາກແລະຮັບດ້ວຍໃຈ ຮັບດ້ວຍຊີວິດ ຮັບດ້ວຍຄວາມເຊື່ອແທ້ ໆ ທີ່ແນ່ນໃຈບໍ່ແມ່ນຈາກສິ່ງທີ່ປາກົດເຫັນ ແຕ່ແມ່ນໂດຍຄວາມເຊື່ອທີ່ເຮົາໝັ້ນໃຈ ພຣະທັມເຮັບເຣີ 11:1 ກ່າວວ່າ **"ອັນນຶ່ງຄວາມເຊື່ອ ຄືຄວາມແນ່ນອນໃຈໃນສິ່ງທີ່ເຮົາຫວັງໄວ້ ເປັນຄວາມຕາຍໃຈເຖິງສິ່ງທີ່ຍັງບໍ່ເຫັນກັບຕາ" ດັ່ງນັ້ນທ່ານຈົ່ງດຳຣົງຊີວິດຢ່າງມີຄວາມເຊື່ອ ແລະຈົ່ງໝັ້ນໃຈໃນຄວາມພົ້ນຂອງທ່ານ"**

5. ຈົ່ງເບິ່ງແຍງຊຶ່ງກັນແລະກັນແລະໜັກແໜ້ນໃນຄວາມພົ້ນ

ເມື່ອທ່ານອ່ານພຣະທັມເຮັບເຣີ 10:24-25 **"ຈົ່ງຄ່ອຍພິຈາຣະນາເບິ່ງຊຶ່ງກັນແລະກັນ ເພື່ອປຸກໃຈຊຶ່ງກັນແລະກັນໃຫ້ມີຄວາມຮັກແລະເຮັດການດີງາມ ຢ່າປະການປະຊຸມກັນເໝືອນຢ່າງລາງຄົນເຄີຍປະນັ້ນ ແຕ່ຈົ່ງໜູນໃຈກັນຫລາຍກວ່າເກົ່າອີກ ເພາະທ່ານກໍຮູ້ກໍເຫັນຢູ່ວ່າວັນນັ້ນໃກ້ເຂົ້າມາແລ້ວ"** ພຣະທັມຕອນນີ້ຊີ້ແຈງໃຫ້ເຮົາໄດ້ເຫັນວ່າ ຄຣິສຕຽນທຸກຄົນ ແມ່ນຜູ້ທີ່ຢູ່ໃນຄົວເຮືອນດຽວກັນ ແມ່ນອ້າຍນ້ອງໃນພຣະຄຣິສ ການຢູ່ຮ່ວມກັນແນວນີ້ ຕ້ອງເປັນທັມມະດາທີ່ຈະມີເຣື່ອງທີ່ບໍ່ເຂົ້າໃຈກັນ ຫລືຄວາມເຫັນທີ່ບໍ່ກົງກັນ ບາງເທື່ອອາດຈະມີຄວາມເວົ້າທີ່ເຮັດໃຫ້ເກີດການນ້ອຍໃຈຫລືເສັຽໃຈໄດ້ ແຕ່ເຖິງປານນັ້ນເຮົາຕ້ອງຄິດເຫັນເຖິງຄວາມເປັນອ້າຍນ້ອງກັນໃນພຣະຄຣິສຍອມໃຫ້ອະພັຍກັນ ແລະເຮົາຈະບໍ່ເຮັດໃຫ້ຜູ້ນຶ່ງຜູ້ໃດ ສະດຸດ ຫລືເປັນເຫດໃຫ້ຜູ້ນຶ່ງຜູ້ໃດຕ້ອງສະດຸດລົ້ມລົງ ເຮົາຈະເບິ່ງແຍງຊ່ວຍເຫລືອ ເຕືອນສະຕິກັນ

ແລະກັນໃນຄວາມເຊື່ອ ໃຫ້ຄວາມຮັກຂອງພຣະເຈົ້າແລະໃຫ້ໂອກາດແກ່ຄົນທີ່ເຮັດຜິດບາບໄດ້ຫັນກັບມາສາຣພາບບາບຕັ້ງຕົ້ນຊີວິດໃໝ່ ໃຫ້ເກີດຄວາມໝັ້ນໃຈໃນຄວາມພົ້ນ ແລະການດຳເນີນຊີວິດຄຣິສຕຽນ ຮູ້ຈັກຍ່າງນຳພຣະຄຣິສ ໂດຍບໍ່ປະການປະຊຸມ ເພາະວ່າການປະການປະຊຸມຈະເຮັດໃຫ້ເຮົາອ່ອນແອລົງ ແລະເປັນຊ່ອງທາງຂອງມານທີ່ຈະເຮັດໃຫ້ເຮົາເກີດຄວາມສົງສັຍ ແລະບໍ່ໝັ້ນໃຈໃນຄວາມເຊື່ອ ແລະອາດຈະລໍ້ລວງເຮົາໃຫ້ຫລົງວ່າເຮົາຂາດຄວາມພົ້ນແລ້ວກໍໄດ້ ດັ່ງນັ້ນການນະມັສການພຣະເຈົ້າ ການສະມັກຄີທັມກັບພີ່ນ້ອງທີ່ມີຄວາມເຊື່ອ ແລະການອະທິຖານຕິດສນິດກັບພຣະເຈົ້າ ການອ່ານພຣະວັຈນະ ການໜູນໃຈກັນດ້ວຍຄຳສອນ ການເບິ່ງແຍງຮັກສາຊຶ່ງກັນແລະກັນ ຈະພາເຮົາໃຫ້ໝັ້ນໃຈໃນຄວາມພົ້ນ ຄວາມໝັ້ນໃຈໃນຄວາມພົ້ນມີຜົນເກີດຈາກຄວາມເຊື່ອອັນແທ້ຈິງທີ່ເຮົາມີຢູ່ໃນພຣະເຈົ້າຕລອດພຣະຄັມພີສອນວ່າ ຫາກເຮົາຕັດສິນໃຈເຊື່ອກັບໃຈບັງເກີດໃໝ່ ເຮົາຈຶ່ງເປັນຄຣິສຕຽນທີ່ໄດ້ຮັບຄວາມພົ້ນ ເປັນຄຣິສຕຽນທີ່ຣອດພົ້ນແລ້ວ ຄວາມໝັ້ນໃຈໃນຄວາມພົ້ນແທ້ ໆ ນີ້ແຫລະຈະພາໃຫ້ຄຣິສຕຽນມີພລັງຂັບເຄື່ອນ ມີຄວາມໂປ່ງໃສມີພລັງໃນການຍ່າງນຳພຣະຄຣິສ ໂດຍບໍ່ມີສິ່ງໃດມາສະກິດໃຫ້ສົງສັຍ ຊຶ່ງຈະເປັນຫົນທາງທີ່ພາໃຫ້ຊີວິດໃຫ້ມີພລັງ ມີຄວາມສຸກ ແລະມີຄວາມໝັ້ນໃຈເຕີມຂຶ້ນອີກ

**6. ຄວາມໝັ້ນໃຈໃນຄວາມພົ້ນໂດຍການເປັນພຍານ**

ຫລາຍຄົນທ້ວງຕິງວ່າ ຄຣິສຕຽນສົມຄວນໝັ້ນໃຈໃນຄວາມເຊື່ອເສັຽກ່ອນແລ້ວຈຶ່ງບອກແກ່ຄົນອື່ນເຖິງຄວາມພົ້ນຂອງຕົວ ຄວາມໝັ້ນໃຈໃນຄວາມພົ້ນແລ້ວເປັນສິ່ງທີ່ມາພ້ອມກັບການຕັດສິນໃຈຕ້ອນຮັບພຣະເຢຊູແລະຮັບການປ່ຽນແປງເສັຽໃໝ່ ຜູ້ນຶ່ງຜູ້ໃດທີ່ໄດ້ຮັບປະສົບການນີ້ໂດຍມີຄວາມເຊື່ອຢ່າງແທ້ຈິງ ເຂົາພ້ອມແລ້ວທີ່ຈະເປັນພຍານໃນສິ່ງທີ່ໄດ້ເກີດຂຶ້ນແກ່ເຂົາ ເປັນປະກົດການໃນຊີວິດທີ່ຜູ້ນັ້ນຈະເກັບມິດໄວ້ບໍ່ໄດ້ ແມ່ນຄວາມຕື່ນເຕັ້ນແລະຄວາມດີໃຈ ແຕ່ລະຄົນຈະມີປະສົບການທີ່ແຕກຕ່າງກັນໄປ ຢ່າງໃດກໍຕາມຫລັງຈາກຄວາມຕື່ນເຕັ້ນ ແລະມີປະສົບການກັບພຣະເຈົ້າແລ້ວ ເຮົາຈຳເປັນຕ້ອງຕອກຍໍ້ຄວາມໝັ້ນໃຈ ແລະເຂົ້າໃຈເຖິງພຣະສັນຍາຊຶ່ງເປັນສັນຍາທີ່ພຣະເຈົ້າປະທານແກ່ເຮົາ ວ່າຄວາມພົ້ນທີ່ເຮົາໄດ້ຮັບນັ້ນແມ່ນຂອງແທ້ຈິງ ແລະຈະບໍ່ສູນຫາຍ ເຮົາເອງຕ່າງຫາກທີ່ຕ້ອງຮູ້ຈັກຕັ້ງຕົ້ນຕຽມຕົວຍ່າງນຳພຣະອົງ ຮຽນແບບຢ່າງຂອງພຣະອົງດ້ວຍຄວາມສັດຊື່ ມີປະສົບການໃນຊີວິດຄຣິສຕຽນທີ່ມີຄວາມເຊື່ອອັນຖືກຕ້ອງ ມີສັມພັນທະພາບກັບພຣະເຈົ້າໂດຍຜ່ານທາງພຣະເຢຊູຄຣິສ ຍອມເປັນສາວົກທີ່ຕິດຕາມພຣະອົງຕໍ່ ໆ ໄປທຸກມື້ຕລອດຊີວິດນີ້ ພຣະອົງຊົງຕັດວ່າ **"ຈົ່ງຕາມເຮົາມາ"** (ມທ 19:22) ແລະຊົງເອີ້ນເຮົາວ່າ **"ມິດສະຫາຍ"** (ຢຮ 15:15-16) ທີ່ຮູ້ໃຈແລະເຮັດຕາມພຣະທັຍພຣະອົງ **"ດ້ວຍຂໍ້ນີ້ແຫລະຄວາມຮັກຂອງພຣະເຈົ້າສຳລັບເຮົາທັງຫລາຍໄດ້ປາກົດແຈ້ງ ຄືພຣະເຈົ້າໄດ້ຊົງໃຊ້ພຣະບຸດອົງດຽວຂອງພຣະອົງເຂົ້າມາໃນໂລກ ເພື່ອເຮົາທັງຫລາຍຈະໄດ້ມີຊີວິດດ້ວຍພຣະບຸດນັ້ນ ຄວາມຮັກທີ່ເຮົາກ່າວເຖິງນີ້ແຫລະ ບໍ່ແມ່ນເຮົາທັງຫລາຍໄດ້ຮັກພຣະເຈົ້າ ແຕ່ພຣະເຈົ້າໄດ້ຊົງຮັກພວກເຮົາ ແລະຊົງໃຊ້ພຣະບຸດຂອງພຣະອົງມາເພື່ອເປັນທາງຊົງຍົກຜິດບາບຂອງພວກເຮົາ... ຝ່າຍເຮົາທັງຫລາຍໄດ້ຮັກພຣະອົງ ຍ້ອນພຣະອົງໄດ້ຊົງຮັກພວກເຮົາກ່ອນ"** (1 ຢຮ 9:10-11, 19)

ທ່ານໝັ້ນໃຈວ່າພຣະເຈົ້າບໍ່ພຽງແຕ່ປະທານຊີວິດໃໝ່ແກ່ທ່ານ ແຕ່ພຣະອົງຊົງມີຊີວິດທີ່ຢູ່ໃນທ່ານ ຊົງສະຖິດນຳທ່ານ ພຣະອົງພ້ອມທີ່ຈະຍ່າງຮ່ວມທາງກັບທ່ານ ພຣະອົງຊົງສະຖິດຢູ່ໃນຊີວິດຂອງທ່ານ ແລະລໍຄອຍຄວາມເຊື່ອໝັ້ນຂອງທ່ານທີ່ຈະຍອມຍ່າງນຳພຣະອົງ ຄວາມໝັ້ນໃຈນີ້ບໍ່ແມ່ນຂຶ້ນກັບຄວາມຮູ້ສຶກ (feeling) ຫລືຕາມອາຣົມຂອງທ່ານໃນແຕ່ລະມື້ ແຕ່ຄວາມໝັ້ນໃຈໃນຄວາມພົ້ນຂຶ້ນຢູ່ກັບຄວາມເຊື່ອ (faith) ຂອງຕົວທ່ານທີ່ມີຕໍ່ພຣະເຢຊູຄຣິສຢ່າງແທ້ຈິງ ດັ່ງພຣະທັມ 2 ຕີໂມທຽວ 4:7 ວ່າ **"ເຮົາໄດ້ອົດສາສູ້ໃນການແຂ່ງຂັນ ເຮົາໄດ້ແລ່ນແຂ່ງຂັນຈົນເຖິງທີ່ສຸດ ເຮົາໄດ້ຮັກສາຄວາມເຊື່ອໄວ້ແລ້ວ"** ເພາະວ່າສິ່ງສຳຄັນທີ່ສຸດແມ່ນວ່າ ເມື່ອເຖິງບັ້ນປາຍຂອງຊີວິດ ເຮົາໄດ້ຜ່ານການທົດສອບເຖິງຄວາມມັ່ນຄົງໃນການຕິດຕາມພຣະເຢຊູຄຣິສຢ່າງແທ້ຈິງ ຄວາມສັມພັນຂອງເຮົາກັບອົງພຣະຜູ້ໂຜດໃຫ້ພົ້ນມີຄວາມສເມີຕົ້ນສເມີປາຍຊຶ່ງເປັນເຄື່ອງປະກັນວ່າ ເຮົາບໍ່ແມ່ນແຕ່ຈະໄດ້ໄປສວັນເທົ່ານັ້ນ ແຕ່ເຮົາຈະໄດ້ມົງກຸດແຫ່ງຊີວິດທີ່ມີໄຊຢ່າງເຫລືອລົ້ນ **"ຝ່າຍນັກກິລາທຸກຄົນກໍເຄັ່ງຄັດໃນລະບຽບທຸກຢ່າງ ເຂົາເຮັດຢ່າງນັ້ນກໍເພື່ອຈະໄດ້ພວງມາລັຍທີ່ຫ່ຽວແຫ້ງໄປ ແຕ່ເຮົາເຮັດເພື່ອຈະໄດ້ພວງມາລັຍອັນບໍ່ຫ່ຽວແຫ້ງໄປ"** (1 ກທ 9:25)

<u>ຄວາມຈິງທີ່ພົບໄດ້ໃນພຣະຄຣິສທັມຄັມພີ</u>

1. ຄວາມໝັ້ນໃຈໃນຄວາມພົ້ນຂອງທ່ານມີຮາກຖານຫຍັ້ງຢືນໃນພຣະວັຈນະຂອງພຣະເຈົ້າ
   ໂຢຮັນ 3:16, 1 ໂຢຮັນ 5:11-13
2. ຄວາມໝັ້ນໃຈໃນຄວາມພົ້ນຂອງທ່ານມີຮາກຖານໃນຄຳໝັ້ນສັນຍາຂອງພຣະເຈົ້າ
   ໂຣມ 10:9, ໂຢຮັນ 5:24
3. ຄວາມໝັ້ນໃຈໃນຄວາມພົ້ນຂອງທ່ານມີຮາກຖານຈາກຄວາມສັດຈິງທ່ຽງທັມຂອງພຣະເຈົ້າ
   1 ໂກຣິນໂທ 1:9, 1 ເທຊະໂລນິກ 5:24
4. ຄວາມໝັ້ນໃຈໃນຄວາມພົ້ນຂອງທ່ານມີຮາກຖານໃນພຣະວິນຍານຂອງພຣະເຈົ້າ
   ເອເຟໂຊ 1:13-14, 2 ໂກຣິນໂທ 5:17

<u>**ສລູບ**</u> ເຮົາມີຄວາມເຊື່ອໝັ້ນໃນຄວາມພົ້ນບາບທີ່ພຣະເຢຊູຄຣິສຊົງເຮັດໃຫ້ເຮົາ ເພາະວ່າ

1. ພຣະຄຣິສໄດ້ຕາຍໄຖ່ບາບເຮົາສຳເຣັດແລ້ວເທິງໄມ້ກາງແຂນ
2. **ພຣະວັຈນະ** ຂອງພຣະເຈົ້າໄດ້ກ່າວໄວ້
3. ພຣະເຈົ້າໃຫ້ **"ຄຳໝັ້ນສັນຍາ"** ໄວ້
4. ຊີວິດຂອງຜູ້ເຊື່ອໄດ້ປາກົດແຈ້ງເປັນພຍານເຖິງຄວາມໝັ້ນໃຈໃນຄວາມພົ້ນ
5. ພຣະເຈົ້າຊົງ **"ສັດຈິງ"** (ທ່ຽງທັມ) ທີ່ເຮົາໄວ້ວາງໃຈໄດ້
6. ພຣະວິນຍານບໍຣິສຸດສະຖິດນຳເຮົາ ໄດ້ເປັນພຍານເຖິງຄວາມພົ້ນ
7. ພຣະວິນຍານຂອງພຣະເຈົ້າໄດ້ **"ປະທັບຕາໝາຍ"** ເຮົາໄວ້ແລ້ວ
8. ຕົວເຮົາເອງເຫັນເຖິງຊີວິດທີ່ປ່ຽນແປງເມື່ອມີຄວາມເຊື່ອແທ້

ວັນທີ 2/19/07

# ບົດທີ 8

## ຍ່າງນຳພຣະເຢຊູຄຣິສ
## ມີຊີວິດທີ່ຮັກເຊີດຊູຄຣິສຈັກ

**ຂ້າພະເຈົ້າມີຄວາມດີໃຈ ເມື່ອພວກເຂົາກ່າວແກ່ຂ້າພະເຈົ້າວ່າ**
**"ຂໍໃຫ້ພວກເຮົາໄປຍັງພຣະວິຫານຂອງພຣະຜູ້ເປັນເຈົ້າ"**
ເພງສັລເສີນ 122:1

ຄຣິສຈັກແມ່ນຄອບຄົວຂອງພຣະເຈົ້າທີ່ບໍ່ໄດ້ເກີດຈາກເລືອດເນື້ອໜັງຂອງມະນຸດ ແຕ່ເກີດຈາກເນື້ອແລະເລືອດຂອງພຣະຄຣິສ ທີ່ໄຖ່ເຮົາທຸກຄົນອອກຈາກຄວາມຕາຍແຫ່ງບາບ ແລະປະທານໃຫ້ເກີດມີຊີວິດໃໝ່ໃນພຣະອົງ ຜູ້ເຊື່ອເຫລົ່ານີ້ໄດ້ຖືກເອີ້ນອອກມາຈາກຄວາມບາບ ເພື່ອເຂົ້າມາຮ່ວມກັນເປັນຄອບຄົວຂອງພຣະຄຣິສ ແລະມາຢູ່ຮ່ວມກັນເປັນ **"ຄຣິສຈັກ"** ຄຣິສຈັກປະກອບດ້ວຍຜູ້ເຊື່ອທີ່ເອີ້ນວ່າ **"ຄຣິສຕຽນ"** ຊຶ່ງມີຢູ່ທົ່ວໂລກ ໃນຫລາຍປະເທດ ຫລາຍເຊື້ອຊາດ ຫລາຍພາສາ ໃນທ້ອງຖິ່ນຕ່າງ ໆ ຄຣິສຈັກເຫລົ່ານີ້ຖືກສຖາປນາຂຶ້ນໂດຍພຣະຄຣິສ ແມ່ນບ່ອນທີ່ຜູ້ເຊື່ອໃຊ້ເຕົ້າໂຮມກັນເພື່ອສາມັກຄີທັມໂດຍຄວາມເຊື່ອໃນພຣະເຢຊູຄຣິສ ແລະນະມັສການພຣະເຈົ້າ ທັງຍັງເປັນບ່ອນທີ່ຄຣິສຕຽນໃຊ້ສຳລັບການຮຽນຮູ້ການດຳເນີນຊີວິດແບບຄຣິສຕຽນ ອີກທັງເພື່ອໜູນໃຈກັນແລະກັນ ແລະຮັບໃຊ້ຮ່ວມກັນເພື່ອປະກອບພຣະຣາຊກິຈຂອງພຣະອົງ ຄຣິສຈັກໃຫ້ການອົບຮົມສິດສອນເຖິງຄວາມຊອບທັມດ້ວຍພຣະວັຈນະຂອງພຣະເຈົ້າ ດ້ວຍຄຳເທສນາ ການສຶກສາພຣະຄຣິສທັມຄັມພີ **"ແລະການອົບຮົມໃນທາງຊອບທັມ"** (2 ຕີໂມທຽວ 3:16)

### ນຶ່ງ. ເຫດໃດເຮົາຈຶ່ງໄປຄຣິສຈັກ

ພຣະວັຈນະຂອງພຣະເຈົ້າບອກໃຫ້ຜູ້ເຊື່ອທີ່ເປັນຄຣິສຕຽນໄປຄຣິສຈັກ **ເພື່ອນະມັສການພຣະເຈົ້າ** ເພື່ອສແວງຫາພຣະພອນ ເພື່ອສແວງຫາຄຳສອນຈາກພຣະວັຈນະຂອງພຣະເຈົ້າແລະເພື່ອການສາມັກຄີທັມໜູນໃຈກັນ ເມື່ອຜູ້ນຶ່ງຜູ້ໃດຕັດສິນໃຈຕ້ອນຮັບເອົາຂ່າວປະເສີດແຫ່ງຄວາມພົ້ນຂອງພຣະເຢຊູຄຣິສ ສຶກສາເຂົ້າໃຈພຣະວັຈນະຂອງພຣະເຈົ້າພໍສົມຄວນ ຮັບບັບຕິສມາ ແລະເຂົ້າເປັນສະມາຊິກຂອງຄຣິສຈັກທ້ອງຖິ່ນ ຜູ້ນັ້ນຈະມີຄວາມເຂົ້າໃຈດີແລະຮັບຮູ້ວ່າຕົນເອງຕ້ອງໄປຄຣິສຈັກ ເພື່ອມີຊີວິດ

ຮ່ວມກັບສະມາຊິກຄົນອື່ນ ໆ ຢ່າງທີ່ເຮົາເອີ້ນກັນວ່າສາມັກຄີທັມຮ່ວມກັນ ພຣະທັມເຮັບເຣີ 10:25 ກ່າວວ່າ **"ຢ່າປະການປະຊຸມກັນເໝືອນຢ່າງລາງຄົນເຄີຍປະນັ້ນ ແຕ່ຈົ່ງໜູນໃຈກັນຫລາຍກວ່າເກົ່າອີກ ເພາະທ່ານກໍຮູ້ກໍເຫັນຢູ່ວ່າວັນນັ້ນໃກ້ເຂົ້າມາແລ້ວ"**

ຖ້າຈະຖາມສະມາຊິກໃນຄຣິສຈັກຂອງທ່ານວ່າຈິດສຳນຶກເບື້ອງຕົ້ນຂອງເຂົາທີ່ມາຄຣິສຈັກຍ້ອນຫຍັງ ເຮົາອາດຈະໄດ້ຄຳຕອບທີ່ຕ່າງກັນອອກໄປດັ່ງຕໍ່ໄປນີ້

1. ເຮົາໄປຄຣິສຈັກຍ້ອນຄຳສອນຂອງຜູ້ນຳ ຄຳເທສນາດີ ໜ້າສົນໃຈ ແລະໄດ້ຮຽນຮູ້ຈັກພຣະວັຈນະຂອງພຣະເຈົ້າ
2. ເຮົາໄປຄຣິສຈັກແມ່ນເຮັດໄປຕາມຣະບຽບຂອງການເປັນສະມາຊິກ
3. ເຮົາໄປຄຣິສຈັກຍ້ອນຢາກໃຫ້ລູກຂອງເຮົາໄດ້ຮັບການອົບຮົມສັ່ງສອນໃນທາງຂອງອົງພຣະເຈົ້າທີ່ເຮົາມີຄວາມເຊື່ອຖື
4. ເຮົາໄປຄຣິສຈັກຍ້ອນມີເທສການສລອງ ມີຄວາມມ່ວນຊື່ນ
5. ເຮົາໄປຄຣິສຈັກຍ້ອນມີການຊ່ວຍເຫລືອ
6. ເຮົາໄປຄຣິສຈັກຍ້ອນຍາດພີ່ນ້ອງຂອງເຮົາໄປ
7. ເຮົາໄປຄຣິສຈັກຍ້ອນມີສາວງາມ

ເຖິງວ່າຄຳຕອບເຫລົ່ານີ້ແມ່ນຄວາມຈິງແລະບໍ່ຜິດຫຍັງ ແຕ່ເປັນຄຳຕອບແລະເຫດຜົນທັມດາເບື້ອງຕົ້ນເທົ່ານັ້ນທີ່ນຳເຮົາເຂົ້າໄປເຖິງຄຣິສຈັກ ຫລາຍກວ່ານີ້ອີກຈາກການສຳຣວດພົບວ່າມີຄຣິສຕຽນພຽງ 10% ທີ່ຢູ່ໃນຄຣິສຈັກເພາະເຂົາຄິດເຫັນວ່າ ຄຣິສຈັກແມ່ນຄົວເຮືອນໃຫຍ່ຂອງພຣະເຈົ້າ ແລະເຂົາອຸທິດຕົວຂອງເຂົາ ມີຊີວິດທີ່ຮັກແລະເຊີດຊູຄຣິສຈັກທີ່ເຂົາປະຈຳຢູ່ນັ້ນ ຄົນທີ່ມີຄວາມຄິດແນວນີ້ ມີຄວາມເຂົ້າໃຈອັນຖືກຕ້ອງວ່າ ຄຣິສຈັກແມ່ນພຣະກາຍຂອງພຣະຄຣິສແລະແມ່ນຕົວແທນຂອງພຣະອົງໃນໂລກນີ້ ທີ່ຈະສືບທອດຈຸດປະສົງຂອງພຣະເຈົ້າໃຫ້ເຖິງຄວາມສຳເຣັດຈົນກວ່າການສະເດັດມາຂອງພຣະຄຣິສ ດັ່ງນັ້ນ **ຄຣິສຕຽນແຕ່ລະຄົນທີ່ຍ່າງນຳພຣະຄຣິສ ຈະມີຊີວິດທີ່ຮັກແລະເຊີດຊູຄຣິສຈັກ** ແລະເຫດຜົນທີ່ແທ້ຈິງຂອງການໄປຄຣິສຈັກ ເພາະວ່າຄຣິສຈັກແມ່ນສູນຣວມຂອງຜູ້ທີ່ມີຄວາມເຊື່ອໃນທ້ອງຖິ່ນໂດຍມີປະເຢຊູຄຣິສເປັນປະມຸກ ຜູ້ເຊື່ອເຂົ້າລວມກັນເປັນກຸ່ມເປັນກອງປະຊຸມ (congregation) ມີຊີວິດທີ່ຢູ່ນຳກັນ ເສີມສ້າງກັນແລະກັນ ເພື່ອປະກາດຂ່າວປະເສີດແລະຖວາຍພຣະສິຣິຂອງພຣະເຈົ້າແມ່ນຊີວິດຂອງພຣະຄຣິສທີ່ດຳຣົງຢູ່ໃນຄຣິສຈັກ ທີ່ເປັນພຍານຫລັກຖານສ່ອງແສງໃຫ້ຊາວໂລກໄດ້ເຫັນແລະສ່ອງແສງຜ່ານການເປັນຄຣິສຕຽນຂອງຜູ້ເຊື່ອແຕ່ລະຄົນທີ່ຢູ່ໃນຄຣິສຈັກ ຫລືຈະເວົ້າອີກນັຍນຶ່ງວ່າຫາກເຮົາບອກວ່າ ຕົວເຮົາແມ່ນຄຣິສຕຽນທີ່ຮັກໃນພຣະເຢຊູຄຣິສແທ້ ໆ ແຕ່ບໍ່ຍອມເຂົ້າຮ່ວມເປັນສະມາຊິກຂອງຄຣິສຈັກໃດເລີຍ ຫາກວ່າຄຣິສຕຽນທຸກຄົນຄິດແນວນີ້ກໍຈະບໍ່ມີຄຣິສຈັກທີ່ເຂັ້ມແຂງປາກົດຢູ່ໃຫ້ເຫັນ ຖ້າຫາກວ່າເຮົາເຊື່ອແທ້ແນ່ນອນເຮົາຈະບໍ່ຢູ່ລ່າ ໆ ກັບເຮືອນ ເຮົາຈະສາມາດເປີດເຜີຍຕໍ່ໄປໃຫ້ຄົນຮູ້ໂດຍການເປັນພຍານເຖິງແຜ່ນດິນແລະຣາຊອານາຈັກຂອງພຣະຄຣິສ ອີກທັງນຳຄົນອີກຫລາຍ ໆ

ຄືນມາເຖິງຄຣິສຈັກ

**ສອງ. ເຮົາຈະມີຊີວິດທີ່ຮັກຄຣິສຈັກໄດ້ແນວໃດ**

ພຣະທັມເອເຟໂຊ 5:22-32 ໄດ້ເປີດເຜີຍຄວາມຮັກຂອງພຣະຄຣິສທີ່ມີຕໍ່ຄຣິສຈັກ ແລະໄດ້ໃຊ້ປຽບທຽບໃຫ້ສາມີຮັກພັຣຍາຂອງຕົນ ເໝືອນດັ່ງທີ່ພຣະຄຣິສບຳຣຸງຖນອມລ້ຽງແລະຮັກຄຣິສຈັກ ໃນເວລາດຽວກັນເຮົາກໍຕ້ອງຮັບຮູ້ວ່າ ໃນຖານະການເປັນສາມີຕ້ອງຮູ້ຈັກຮັກບຳຣຸງຖນອມລ້ຽງແລະຫວງແຫນພັຣຍາຂອງຕົນ ຝ່າຍພັຣຍາກໍຕ້ອງຮັບຮູ້ຖານະຂອງຕົນ ຜູ້ເປັນພັຣຍາຕ້ອງຮູ້ຈັກຮັກບຳຣຸງຖນອມລ້ຽງຫວງແຫນສາມີຂອງຕົນຄືກັນ ອັນນີ້ແມ່ນບົດຮຽນປຽບທຽບໃຫ້ຄຣິສຕຽນທຸກຄົນຕ້ອງຮູ້ຈັກຮັກບຳຣຸງຮູ້ຈັກຖນອມເບິ່ງແຍງແລະຫວງແຫນຄຣິສຈັກດ້ວຍ

ການນະມັສການແມ່ນຈຸດໝາຍທີ່ສຳຄັນແລະເດັ່ນທີ່ສຸດຂອງການຢູ່ຮ່ວມກັນ ອັນເປັນສະແດງອອກໃນຄວາມຈິງຮັກພັກດີຕໍ່ພຣະເຈົ້າ ທີ່ເຮົາຈະເຕົ້າໂຮມເຂົ້າກັນເຂົ້າເຝົ້ານະມັສການພຣະອົງ ກິຈການທຸກຢ່າງໃນຄຣິສຈັກເປັນການຊ່ວຍຊູຊຶ່ງກັນແລະກັນໃຫ້ໃຫຍ່ຂຶ້ນໃນພຣະຄຣິສ ແລະນຳມາເຖິງຈຸດໝາຍທີ່ສຳຄັນ ແມ່ນການສລອງເຂົ້າເຝົ້ານະມັສການພຣະເຈົ້າໃນເຊົ້າວັນອາທິດ ດັ່ງນັ້ນການຍ້ຳເນັ້ນເຖິງການມີຊີວິດຮ່ວມກັນໃນຄຣິສຈັກຈຶ່ງບໍ່ໄດ້ໝາຍເຖິງການນະມັສການເທົ່ານັ້ນ ເພາະວ່າກ່ອນທີ່ຈະມາເຖິງຈຸດເດັ່ນຂອງການສລອງນະມັສການພຣະເຈົ້າ ເຮົາຕ້ອງມີກິຈການຮ່ວມເຮັດນຳກັນ ມີການຮຽນຮູ້ນຳກັນມີການຫ່ວງໃຍຊຶ່ງກັນແລະກັນ ອີກທັງມີການບຳຣຸງຮັກສາກັນແລະກັນ ຊຶ່ງບໍ່ພຽງແຕ່ທາງຮ່າງກາຍ ຈິດໃຈ ຈິດວິນຍານຂອງຜູ້ເຂົ້າມາໃນຄຣິສຈັກເທົ່ານັ້ນ ເພາະວ່າເມື່ອຄຣິສຈັກໃຫຍ່ຂຶ້ນກໍຕ້ອງມີການບຳຣຸງຮັກສາຕົວອາຄານ ແລະຄວາມປອດພັຍຮອບດ້ານຂອງຄຣິສຈັກດ້ວຍ ຄຣິສຈັກທຳອິດໃນກຸງເຢຣູຊາເລັມ ແມ່ນຄຣິສຈັກທີ່ເກີດຂຶ້ນໃໝ່ທີ່ປາກົດຢູ່ໃນພຣະທັມ ກິຈການ 2:42 **"ເຂົາໄດ້ໝັ້ນຄົງຢູ່ໃນຄຳສອນຂອງພວກອັຄສາວົກ ໃນການຮ່ວມໃຈກັນ ໃນການຫັກເຂົ້າຈີ່ ແລະໃນການໄຫວ້ວອນ"** ພຣະທັມຕອນນີ້ຊີ້ແຈ້ງໃຫ້ເຮົາເຫັນເຖິງລັກສະນະຂອງການທີ່ຊີວິດຢູ່ທີ່ສາມັກຄີທັມກັນໃນຄຣິສຈັກ

**ສາມ. ເຫດຜົນສຳຄັນທີ່ຕ້ອງສອນຄຣິສຕຽນໃຫ້ໄປຄຣິສຈັກຕາມຄຳສອນຂອງພຣະຄັມພີ**

**1.** ໄປເພື່ອນະມັສການພຣະເຈົ້າ ເພາະພຣະເມດຕາກະຣຸນາຂອງພຣະເຈົ້າທີ່ໄດ້ຊົງສ້າງແລະໂຜດຄວາມຣອດພົ້ນແກ່ຜູ້ເຊື່ອ ຜູ້ເຊື່ອຈຶ່ງສົມຄວນທີ່ຈະເຂົ້າເຝົ້ານະມັສການພຣະເຈົ້າຜູ້ຊົງພຣະຄຸນແລະເຫັນເຖິງພຣະຣັສມີພາບທັງຄວາມຍິ່ງໃຫຍ່ຂອງພຣະອົງທີ່ປາກົດໃນຊີວິດຂອງເຮົາ ການນະມັສການສະແດງອອກເຖິງຈິດວິນຍານທີ່ຕ້ອງການຍ້ອງຍໍສັນລະເສີນ ແລະຖວາຍກຽດແດ່ພຣະເຈົ້າ ໂດຍຮູ້ບຸນຄຸນຂອງພຣະອົງ ແລະສຳນຶກວ່າພຣະອົງຊົງມີຄຸນຄ່າສົມຄວນແກ່ການນະມັສການຂາບໄຫວ້ຢ່າງສູງສຸດເຄື່ອງຖວາຍບູຊາທີ່ພຣະເຈົ້າຕ້ອງການຈາກຜູ້ນະມັສການ ແມ່ນການເຂົ້າເຝົ້ານະມັສການດ້ວຍຄວາມຈິງໃຈ ແລະຮັບໃຊ້ພຣະອົງດ້ວຍຄວາມສັດຊື່ ທີ່ຜູ້ນະມັສການຕ້ອງມອບຖວາຍຊີວິດໃຫ້ດ້ວຍໃຈບໍຣິສຸດ

ການນະມັສການ ແມ່ນການມີປະສົບການທີ່ກໍ່ໃຫ້ເກີດສັມພັນທະພາບກັບພຣະເຈົ້າຢ່າງເລິກຊຶ້ງ ການມີຣະບຽບນະມັສການແລະລາຍການຕ່າງ ໆ ເປັນພຽງພາກສ່ວນຂອງການສະແດງອອກເຖິງການສັນລະເສີນພຣະເຈົ້າດ້ວຍຄວາມຈິງຮັກພັກດີຮ່ວມກັນ ອີກທັງກໍ່ໃຫ້ເກີດລຳດັບຂັ້ນຕອນທີ່ເປັນຣະບຽບໃນການນະມັສການ ຄຣິສຈັກໄດ້ຈັດຕັ້ງການນະມັສການຂຶ້ນດ້ວຍຈຸດປະສົງ ເພື່ອໃຫ້ຄຣິສຕຽນໄດ້ໄປເຂົ້າເຝົ້ານະມັສການໂດຍສຳແດງເຖິງຄວາມຈິງຮັກພັກດີ ໂດຍໃຫ້ພຣະຣັສມີພາບອັນຍິ່ງໃຫຍ່ຂອງພຣະເຈົ້າໄດ້ປາກົດໃນສຖານນະມັສການ ແລະຊາວໂລກຈະໄດ້ເຫັນພຣະເຈົ້າຜູ້ຊົງພຣະຊົນຢູ່ ການນະມັສການໃນຮູບແບບນີ້ ຈຶ່ງມີຄວາມສຳຄັນທີ່ຈະຕ້ອງເຮັດເປັນສ່ວນລວມດ້ວຍນ້ຳນຶ່ງໃຈດຽວກັນໃນຖານະທີ່ຜູ້ເຊື່ອເປັນປະຊາຊົນຂອງພຣະເຈົ້າ ການນະມັກການຍັງເຮັດໃຫ້ເກີດການຕອບສນອງຮ່ວມກັນຂອງຜູ້ເຊື່ອໃນການຮັບໃຊ້ຕາມພຣະປະສົງ ໂດຍການຮັບຟັງພຣະວັຈນະທີ່ເປີດເຜີຍແກ່ຜູ້ທີ່ນະມັສການພຣະອົງ ດ້ວຍເຫດນີ້ການໄປນະມັສການທີ່ຄຣິສຈັກຈຶ່ງເປັນສິ່ງທີ່ສຳຄັນທີ່ສຸດຂອງຄຣິສຕຽນທຸກຄົນ

**2. ແມ່ນນ້ຳພຣະທັຍຂອງພຣະເຈົ້າ** ທີ່ປາກົດໃນຄຳສິດສອນໃນພຣະວັຈນະຂອງພຣະເຈົ້າ ພຣະເຢຊູຄຣິສເປັນຜູ້ສ້າງຄຣິສຈັກໃຫ້ເປັນຕົວແທນຂອງພຣະອົງໃນໂລກນີ້ (ມທ 16:18-19) ໃຫ້ປະຕິບັດພັນທະກິດຂອງພຣະອົງຈົນກວ່າພຣະອົງຈະສະເດັດມາ (ມທ 18:20) ຜູ້ເຊື່ອເປັນສ່ວນປະກອບນຶ່ງຊຶ່ງມີຄວາມສຳຄັນຫລາຍໃນການກໍ່ຕັ້ງຄຣິສຈັກ ແມ່ນອະວັຍວະຂອງພຣະກາຍດຽວກັນໃນພຣະຄຣິສ (1 ກທ 12:13) ມີຊີວິດເຄື່ອນໄຫວປະກອບສ່ວນກັນໃຫ້ປະຊາຊົນທັງຫລາຍໄດ້ເຫັນພຣະອົງໂດຍຜ່ານທາງຄຣິສຈັກ ດັ່ງນັ້ນຈຶ່ງເປັນນ້ຳພຣະທັຍຂອງພຣະເຈົ້າທີ່ຊັດແຈ້ງ ພຣະອົງປະສົງໃຫ້ຄຣິສຕຽນທຸກຄົນໄປຄຣິສຈັກຮ່ວມກັນປະກອບສ່ວນເປັນພຣະກາຍຂອງພຣະຄຣິສ ເພາະວ່າການລວມຕົວກັນຂອງຜູ້ເຊື່ອເປັນກອງປະຊຸມໃນແຕ່ລະຄຣິສຈັກ ສາມາດສຳແດງອອກແລະຍົກຊູພຣະເຢຊູຄຣິສໃຫ້ຜູ້ຄົນທັງຫລາຍໄດ້ເຫັນ **"ແຕ່ໃຫ້ພວກເຮົາຍຶດເອົາຄວາມຈິງດ້ວຍໃຈຮັກ ເພື່ອຈະຈະເຣີນຂຶ້ນທຸກຢ່າງຈົນເຖິງພຣະອົງຜູ້ເປັນສີສະ ຄືພຣະຄຣິສ ເນື່ອງຈາກພຣະອົງນັ້ນ ຮ່າງກາຍທັງສິ້ນທີ່ຕິດຕໍ່ສນິດແລະຜູກພັນກັນໂດຍທຸກ ໆ ຂໍ້ຕໍ່ທີ່ຊົງປະທານ ຈຶ່ງໄດ້ຈະເຣີນໃຫຍ່ຂຶ້ນດ້ວຍຄວາມຮັກ ເມື່ອອະວັຍວະທຸກສ່ວນເຮັດໜ້າທີ່ຕາມຄວາມເໝາະສົມແລ້ວ"** (ອຟ 4:15-16) ໂດຍສິດທິອຳນາດຂອງຄຣິສຈັກທີ່ຄຣິສຕຽນປະກາດຂ່າວປະເສີດເຖິງການຕາຍໄຖ່ບາບ ແລະການຟື້ນຄືນພຣະຊົນຂອງພຣະເຢຊູຄຣິສ ພຣະອົງຊົງສັນຍາວ່າ **"ຝ່າຍເຮົາເມື່ອຖືກຍົກຂຶ້ນຈາກແຜ່ນດິນໂລກແລ້ວ ເຮົາກໍຈະຊັກນຳຄົນທັງຫລາຍມາຫາເຮົາ"** (ຢຮ 12:32) ດ້ວຍເຫດດັ່ງນັ້ນແລ້ວ ເຮົາຈະເຫັນໄດ້ວ່າພຣະເຈົ້າມີນ້ຳພຣະທັຍໃຫ້ຄຣິສຕຽນໄປຮ່ວມປະກອບສ່ວນເປັນພຣະກາຍຂອງພຣະຄຣິສ ແລະຮັບໃຊ້ພັນທະກິຈ (ministry) ຂອງພຣະອົງ

**3. ການໄປຄຣິສຈັກເພື່ອເສີມສ້າງຄວາມເຊື່ອໃຫ້ແຂງແຮງ** ແມ່ນເສີມແຮງ ເສີມກຳລັງໃຈ ແລະເສີມສ້າງຊີວິດຈິດວິນຍານໃຫ້ໃຫຍ່ຂຶ້ນ ພຣະທັມເຮັບເຣີ 10:25 ກ່າວວ່າ **"ຢ່າປະການປະຊຸມ"** ແມ່ນ

ໝາຍເຖິງການນະມັສການພຣະເຈົ້າ ຍ້ອນວ່າເມື່ອມີການປະກາດປະຊຸມ ຫລືຂາດການນະມັສການແລ້ວ ຈະກໍ່ເກີດການທໍ້ຖອຍໃນຄວາມເຊື່ອ ຂາດການຊູໃຈແລະຂາດກຳລັງໃນການດຳເນີນຊີວິດຄຣິສຕຽນໂດຍຄວາມເຊື່ອ ຈະເກີດການອ່ອນແອ ຈາກປະສົບການພົບວ່າ ຄົນທີ່ຂາດຈາກຄຣິສຈັກເປັນເດືອນເຂົາຈະຫັນກັບຄືນມາຍາກ ແລະໃນທີ່ສຸດຈະຫາຍໄປເປັນປີ ແຕ່ຈາກການສຳຣວດພົບວ່າ ເມື່ອພີ່ນ້ອງໃນຄຣິສຈັກມີຄວາມຮັກແພງຄອຍຕິດຕາມດ້ວຍຄວາມເຫັນອົກເຫັນໃຈ ໂດຍການໜູນໃຈແລະມີຄວາມຮັກໃຫ້ເຂົາໄດ້ຕັ້ງຕົວຂຶ້ນໃໝ່ (ຄຕ 6:1) ຊີວິດຂອງເຂົາກໍຊຸ່ມຊື່ນຂຶ້ນອີກ ມີພລັງໃໝ່ ມີກຳລັງໃຈໃນການດຳເນີນຊີວິດແບບຄຣິສຕຽນ ຈະເຫັນໄດ້ວ່າຄຣິສຈັກທີ່ມີສຸຂພາບດີ ຈະເປັນບ່ອນເສີມຄວາມເຊື່ອ ແລະເສີມສ້າງຊີວິດຈິດວິນຍານໃຫ້ແກ່ກັນແລະກັນ ແລະເປັນແຫລ່ງທີ່ຜູ້ຄົນຈະເຂົ້າມາພັກເຊົາ ແລະເສີມຕື່ມເຫື່ອແຮງກຳລັງ ໃຫ້ເຂັ້ມແຂງໃນການດຳເນີນຊີວິດຄຣິສຕຽນໄປໃນໂລກນີ້ຕໍ່ໄປ

**4. ການໄປຄຣິສຈັກເພື່ອຮັບໃຊ້ພຣະຣາຊກິດຂອງພຣະເຈົ້າ** ກໍ່ໃຫ້ເກີດການສາມັກຄີທັມກັນເກີດການຮ່ວມແຮງຮ່ວມໃຈປະກອບສ່ວນເຂົ້າເປັນອັນນຶ່ງອັນດຽວກັນໃນພຣະກາຍ ແລະຜູກພັນກັນໄວ້ໂດຍທາງຄວາມເຊື່ອຢ່າງແທ້ຈິງທີ່ມີຕໍ່ອົງພຣະເຢຊູຄຣິສ ຍ້ອນວ່າຜູ້ທີ່ໄປຄຣິສຈັກແລະຮ່ວມແຮງຮ່ວມໃຈໃນກິຈການຂອງພຣະຄຣິສ ຈະສົ່ງເສີມກຳລັງໃຈ ທັງຊູໃຈສິດຍາພິບາລແລະຜູ້ນຳຄຣິສຈັກ ໃນທຳນອງດຽວກັນສິດຍາພິບາລແລະຜູ້ນຳຄຣິສຈັກທີ່ດີກໍຈະຊ່ວຍຊູແຮງສະມາຊິກຂອງຕົນ ເຮັດໃຫ້ເກີດການຮ່ວມແຮງຮ່ວມໃຈໃນການຮັບໃຊ້ຖວາມກຽດແດ່ພຣະເຈົ້າ ເຮັດໃຫ້ພຣະເຢຊູຖືກຍົກຊູເດັ່ນໃນເມືອງໃນທ້ອງຖິ່ນຂອງເຮົາແລະເລື້ອງລືໄປ ເປັນການຖວາຍສງ່າຣາສີຕໍ່ພຣະຄຣິສ ແລະຕໍ່ສະມາຊິກຜູ້ເຊື່ອທຸກຄົນດ້ວຍ ພຣະທັມກິຈການ 2:42 ກ່າວວ່າ **"ເຂົາໄດ້ໝັ້ນຄົງຢູ່ໃນຄຳສອນຂອງພວກອັຄສາວົກ ໃນການຮ່ວມໃຈກັນໃນການຫັກເຂົ້າຈີ່ ແລະໃນການໄຫວ້ວອນ"**

**5. ການໄປຄຣິສຈັກເຮັດໃຫ້ຊີວິດຂອງເຮົາເກີດການເຊື່ອຟັງແລະຮັກພຣະເຈົ້າ** ພຣະບັນຍັດສຳຄັນທີ່ພຣະເຢຊູໄດ້ສັ່ງແກ່ເຮົານັ້ນ ແມ່ນ **"ຊາວອິສຣາເອນເອີຍ ຈົ່ງຟັງເທີ້ນ ອົງພຣະຜູ້ເປັນເຈົ້າຂອງເຮົາທັງຫລາຍຊຶ່ງເປັນພຣະເຈົ້າອົງດຽວ ແລະພວກເຈົ້າຈົ່ງຮັກອົງພຣະຜູ້ເປັນເຈົ້າຂອງເຈົ້າດ້ວຍສຸດໃຈ ດ້ວຍສຸດຈິດ ດ້ວຍສຸດຄວາມຄິດ ແລະດ້ວຍສຸດກຳລັງຂອງເຈົ້າ"** (ມກ 12:29-30) ຜູ້ທີ່ເຊື່ອແທ້ເຂົາຈະຈັດວັນເວລາເພື່ອໄປຄຣິສຈັກກ່ອນສິ່ງອື່ນໃດທັງໝົດ ຊຶ່ງມີຫລັກຖານຫລວງຫລາຍທີ່ປາກົດວ່າຄົນທີ່ຮັກໄປຄຣິສຈັກມີເວລາພຽງພໍສຳລັບເຣື່ອງຈຳເປັນອື່ນ ໆ ຢ່າງບໍ່ຂັດສົນໃນເຣື່ອງເວລາຫລືເງິນຄຳ ອີກທັງຊ່ວຍໃຫ້ລູກເມັຽມີຣະບຽບໃນຄົວເຮືອນອີກດ້ວຍ ຄນທີ່ຮັກພຣະເຈົ້າແທ້ຈິງເບິ່ງຄືສງ່າງາມມີຣະບຽບແລະໜ້ານັບຖືປາກົດບົນໃບໜ້າແລະລັກສະນະທ່າທີ ຍັງບໍ່ເຄີຍເຫັນຄຣິສຕຽນທີ່ເຊື່ອຟັງແລະຮັກພຣະເຈົ້າແທ້ ໆ ແນວນີ້ຈະບອກວ່າເຂົາບໍ່ສົນໃຈໄປຄຣິສຈັກ ຄົນທີ່ຮັກພຣະເຈົ້າແທ້ແລະເຊື່ອຟັງແທ້ ເຂົາຕ້ອງຮັກທີ່ຈະໄປຄຣິສຈັກ ແມ່ນວ່າເຂົາອາດຈະບໍ່ມັກໄປຄຣິສຈັກນຶ່ງ ແຕ່ເຂົາກໍຕ້ອງສແວງຫາອີກຄຣິສຈັກນຶ່ງທີ່ຈະໄປ ຫລືບາງເທື່ອຫາກເວົ້າພາສາທີ່ຕ່າງກັນ ຫລືຄວາມຄິດແຕກຕ່າງຈາກຊຸມຊົນຄຣິສຕຽນໂດຍທົ່ວໄປຢ່າງເດັດຂາດ ເຂົາອາດຈະກໍ່ຕັ້ງອີກຄຣິສຈັກນຶ່ງຂຶ້ນມາກໍໄດ້ ທັງໝົດນີ້ມີຈຸດປະສົງສຳຄັນເພື່ອໃຫ້ສຳເຣັດ

ຕາມຄຳບັນຊາຂອງພຣະເຢຊູຄຣິສທີ່ຈະຮັກແລະເຊື່ອຟັງພຣະອົງ ທີ່ສຳຄັນທີ່ສຸດຂໍໃຫ້ເຮົາຮັກແລະເຊື່ອຟັງພຣະອົງແທ້ ໆ ບໍ່ແມ່ນເຮັດໄປຍ້ອນເພາະຮັກໜ້າ ຮັກກຽດຂອງຕົວເອງ ຕາມທີ່ປາກົດໃນພຣະທັມເອເຟໂຊ 4:14 **"ເພື່ອພວກເຮົາຈະບໍ່ໄດ້ເປັນເດັກນ້ອຍອີກຕໍ່ໄປ ຖືກພັດໄປພັດມາ ແລະຫັນເຫໄປມາດ້ວຍລົມປາກຂອງຄຳສັ່ງສອນທຸກຢ່າງ ແລະດ້ວຍເລ່ກົນຂອງມະນຸດທີ່ຫລອກລວງໃຫ້ຫລົງຕາມອຸບາຍອັນສລາດຂອງເຂົາ"**

**6. ການໄປຄຣິສຈັກແມ່ນການ ເພື່ອຟັງພຣະວຈນະຂອງພຣະເຈົ້າ** ແມ່ນການສາມັກຄີທັມໂດຍການຍ່າງນຳກັນຕິດຕາມພຣະວັຈນະຂອງພຣະເຈົ້າທີ່ເປີດເຜີຍແກ່ເຮົາ ຜູ້ນຳສິດຍາພິບາລທີ່ດີ ທີ່ຮັກພຣະເຈົ້າແທ້ຈະເປັນຜູ້ນຳພາສະມາຊິກທັງກອງປະຊຸມ ໃຫ້ເຂົ້າໃຈເຖິງພຣະວັຈນະຂອງພຣະເຈົ້າຢ່າງຊັດແຈ້ງ ແລະມີການເນັ້ນ ໂນ້ມນ້າວໃຫ້ສະມາຊິກເກີດການສາມັກຄີທັມກັນ ເພື່ອດຳເນີນພຣະຣາຊກິຈຮ່ວມກັນໃຫ້ເກີດຜົນຫລາຍ ຄຣິສຕຽນແຕ່ລະຄົນທີ່ຍ່າງນຳກັນໃນຄຣິສຈັກຈະເກີດຜົນທັງໃນຊີວິດສ່ວນຕົວແລະຊີວິດສ່ວນຮວມ ທີ່ເປັນນ້ຳນຶ່ງໃຈດຽວກັນແລະມີຈຸດມຸ້ງໝາຍດຽວກັນ ອັນເປັນນິມິດໝາຍທີ່ເຫັນຮ່ວມກັນເຮັດໃຫ້ຣາຊກິຈໃນໜ່ວຍອື່ນທົ່ວໂລກເກີດໝາກຜົນດ້ວຍ **"ຂອງພຣະຣາຊທານຂອງພຣະອົງກໍຄືໃຫ້ລາງຄົນເປັນອັຄສາວົກ ລາງຄົນເປັນຜູ້ປະກາດພຣະທັມ ລາງຄົນເປັນຜູ້ປະກາດຂ່າວປະເສີດ ລາງຄົນເປັນສິດຍາພິບານແລະອາຈານ ເພື່ອຈັດຕຽມໄພ່ພົນທັງຫລາຍຂອງພຣະອົງໃຫ້ເປັນຜູ້ຮັບໃຊ້ທີ່ເໝາະສົມເພື່ອເສີມສ້າງພຣະກາຍຂອງພຣະຄຣິດໃຫ້ຈະເຣີນຂຶ້ນ ຈົນກວ່າເຮົາທຸກຄົນຈະບັນລຸເຖິງຄວາມເປັນນ້ຳນຶ່ງໃຈດຽວກັນໃນຄວາມເຊື່ອ ແລະໃນຄວາມຮູ້ເຖິງເຣື່ອງພຣະບຸດຂອງພຣະເຈົ້າ ຈົນກວ່າເຮົາຈະເປັນຄົນໃຫຍ່ເຕັມສ່ວນ ຄືເຕັມເຖິງຂນາດຄວາມສົມບູນຂອງພຣະຄຣິສ... ເນື່ອງຈາກພຣະອົງນັ້ນ ຮ່າງກາຍທັງສິ້ນທີ່ຕິດຕໍ່ສນິດແລະຜູກພັນກັນໂດຍທຸກ ໆ ຂໍ້ຕໍ່ທີ່ຊົງປະທານ ຈຶ່ງໄດ້ຈະເຣີນໃຫຍ່ຂຶ້ນດ້ວຍຄວາມຮັກເມື່ອອະວັຍວະທຸກສ່ວນເຮັດໜ້າທີ່ຕາມຄວາມເໝາະສົມແລ້ວ"** (ອຟ 4:11-13, 16)

**7. ການໄປຄຣິສຈັກແມ່ນການຍ່າງຕາມແບບຢ່າງພຣະຄຣິສ** ພຣະເຢຊູຄຣິສຊົງຍຶດໝັ້ນໃນການໄປວິຫານເປັນປະຈຳໃນທຸກບ່ອນທີ່ພຣະອົງສະເດັດໄປເພື່ອນະມັສການພຣະເຈົ້າ ແລະໂຜດປະຊາຊົນດ້ວຍພຣະວັຈນະຂອງພຣະເຈົ້າ (ລກ 4:16) ນີ້ແມ່ນການສແດງເຖິງຄວາມສຳຄັນຂອງການທີ່ຈະເຂົ້າສາມັກຄີທັມນະມັສການພຣະເຈົ້າ ອ່ານພຣະວັຈນະຂອງພຣະເຈົ້າ ແລະຮັບຟັງພຣະຄັມພີໂດຍກົງ ແມ່ນການອຸທິດເວລາເພື່ອການເຂົ້າເຝົ້າພຣະເຈົ້າຮ່ວມກັນໃນຄຣິສຈັກປັດຈຸບັນ ແລະເຮົາຍັງມີໜ້າທີ່ຮັບຜິດຊອບໃນການຮັບໃຊ້ ແລະຮ່ວມມືເພື່ອການນະມັສການນັ້ນໄດ້ສຳເຣັດຜົນຕໍ່ຜູ້ທີ່ນະມັສການພຣະອົງຢ່າງແທ້ຈິງ (ຢຮ 4:24, 5:23-24) ຜູ້ທີ່ນະມັສການພຣະອົງຢ່າງແທ້ຈິງ ພຣະອົງຈະໄດ້ຮັບພຣະພອນຜູ້ນັ້ນທັງທາງຝ່າຍຈິດໃຈ ຈິດວິນຍານ ຊີວິດຄອບຄົວ ແລະການງານ

**8. ການໄປຄຣິສຈັກແມ່ນເຄື່ອງໝາຍແຫ່ງຄວາມຣອດພົ້ນ** ໃນທີ່ນີ້ມີຄວາມໝາຍວ່າ ຜູ້ທີ່ໄປຄຣິສຈັກດ້ວຍຄວາມຮັກຢ່າງຈິງໃຈ ມີການກັບໃຈໃໝ່ແທ້ຈິງ ຄົນເຫລົ່ານີ້ຈະສາມັກຄີທັມກັນແລະຍ່າງນຳ

ກັນໄປ ແມ່ນລັກສະນະຂອງຄົນທີ່ຮັບຄວາມພົ້ນແລ້ວ ແລະກຳລັງມີຄວາມຫວັງອັນດຽວກັນ ມີຄວາມເຊື່ອດຽວກັນ ແລະໝັ້ນໃຈໃນຄວາມພົ້ນທີ່ໄດ້ຮັບຈາກພຣະຜູ້ໂຜດໃຫ້ພົ້ນອົງດຽວກັນ ແມ່ນພຣະເຢຊູຄຣິສ (ຢຮ 3:36, 5:25-26)

ແທ້ທີ່ຈິງແລ້ວການໄປຄຣິສຈັກນັ້ນຍັງມີເຫດຜົນອີກຫລວງຫລາຍທີ່ບໍ່ໄດ້ກ່າວອ້າງອີງເຖິງ ຊຶ່ງລ້ວນແຕ່ເປັນສິ່ງດີ ໆ ທີ່ພຣະເຈົ້າປະທານແກ່ເຮົາເມື່ອເຮົາໄປເຖິງຄຣິສຈັກ ແຕ່ວ່າຈາກປະສົບການຂອງຄຣິສຈັກຈະພົບວ່າ ຈະມີຄົນຈຳນວນຫລາຍທີ່ປະຕິເສດບໍ່ຢາກໄປຄຣິສຈັກ ບໍ່ຢາກເຮັດຫຍັງນຳຄຣິສຈັກ ບໍ່ຢາກເຂົ້າໃກ້ຊິດກັບຜູ້ເຊື່ອທີ່ຢູ່ໃນຄຣິສຈັກ ຫລືອາດຈະມີບາງຄົນເຂົ້າມາໃນຄຣິສຈັກແລ້ວພໍຣະຍະນຶ່ງພົບວ່າຕົນເອງຕ້ອງຕ້ອນຮັບພຣະເຢຊູຄຣິສເພື່ອຈະໄດ້ຮັບຄວາມພົ້ນ ແລະຕ້ອງເດີນໃນເສັ້ນທາງຊີວິດແບບຄຣິສຕຽນຄົນເຫລົ່ານີ້ຈະຕັດສິນໃຈແຍກຕົວອອກຫ່າງຈາກຄຣິສຈັກໂດຍໄວ ພຣະທັມ 1 ໂຢຮັນ 2:19 ກ່າວວ່າ **"ເຂົາເຫລົ່ານັ້ນໄດ້ອອກໄປຈາກພວກເຮົາ ແຕ່ເຂົາບໍ່ແມ່ນຝ່າຍພວກເຮົາ ເພາະວ່າຖ້າເຂົາແມ່ນຝ່າຍພວກເຮົາ ເຂົາກໍຈະໄດ້ຕັ້ງຢູ່ກັບພວກເຮົາຕໍ່ໄປ (ແຕ່ເຂົາໄດ້ອອກໄປແລ້ວ) ເພື່ອປາກົດແຈ້ງວ່າເຂົາເຫລົ່ານັ້ນບໍ່ແມ່ນຝ່າຍພວກເຮົາຈັກຄົນ"** ຊຶ່ງແມ່ນບົ່ງບອກວ່າເຂົາຈະບໍ່ຍ່າງນຳຄົນທີ່ຮັບຄວາມພົ້ນແລ້ວ (ອຟ 2:12)

**ຂໍ້ຄິດທີ່ສຳຄັນ**

ຕາມທີ່ໄດ້ບອກເລົ່າມາແຕ່ຕົ້ນ ເຖິງຄວາມສຳຄັນຂອງການທີ່ຜູ້ເຊື່ອຈະມີຊີວິດຄຣິສຕຽນທີ່ຍ່າງນຳພຣະຄຣິສ ທີ່ຮັກເຊີດຊູຄຣິສຈັກ ແລະໄປຮ່ວມສາມັກຄີທັມກັບຜູ້ເຊື່ອທີ່ຢູ່ໃນຄຣິສຈັກຢ່າງສມ່ຳສເມີ ໃນຂໍ້ຕໍ່ໄປນີ້ແມ່ນພຽງເຄື່ອງເຕືອນຈິດໃຈຂອງເຮົາວ່າ

**1.** ການໄປຄຣິສຈັກແລະຮ່ວມກິຈກັມ ຫລືເປັນຜູ້ນຳພາສະມາຊິກນັ້ນບໍ່ໄດ້ໝາຍຄວາມວ່າ ຈະເປັນເຄື່ອງປະກັນວ່າທ່ານເປັນຄຣິສຕຽນທີ່ດີແລ້ວ ແຕ່ຄຣິສຕຽນແທ້ແມ່ນຜູ້ທີ່ເຊື່ອກັບໃຈໃໝ່ ແລະຍິນດີຕິດຕາມພຣະຄຣິສ ເຕັມໃຈຮ່ວມກິຈການທັງມວລກັບຜູ້ເຊື່ອອື່ນ ໆ ຫລືເປັນຜູ້ນຳພາຄຣິສຈັກ ເພື່ອຖວາຍກຽດແດ່ພຣະເຈົ້າດ້ວຍການສຳນຶກເຖິງພຣະຄຸນຂອງພຣະອົງ ເຮົາຈຶ່ງຮັກແລະເຮັດດີຕໍ່ຄົນອື່ນ ໆ (ມກ 1:15, ອຟ 4:15, 2:13)

**2.** ບໍ່ມີຄຣິສຈັກໃດທີ່ບໍ່ມີບັນຫາ ຂໍ້ເຕືອນໃຈນີ້ແມ່ນສິ່ງທີ່ຍາກຕໍ່ຄຳອະທິບາຍ ພຣະຄຣິສບໍ່ແມ່ນບັນຫາ ແຕ່ຄົນທີ່ຢູ່ໃນພຣະຄຣິສທີ່ຍັງບໍ່ທັນດີຄົບຖ້ວນສົມບູນ ແລະມີບາງຄົນທີ່ເປັນບັນຫາເຂົາຍັງບໍ່ທັນໃຫຍ່ໃນການດຳເນີນຊີວິດຄຣິສຕຽນ ເຮົາຕ້ອງຍອມຮັບວ່າເຮົາທຸກຄົນຍັງບໍ່ສົມບູນຄົບຖ້ວນ ພຣະທັມຟີລິບປອຍ 2:3-5 **"ຢ່າເຮັດສິ່ງໃດໃນທາງຊີງດີຫລືຖືດີກັນ ແຕ່ຈົ່ງຖ່ອມໃຈລົງຖືວ່າຄົນອື່ນດີກວ່າຕົນຢ່າໃຫ້ຜູ້ໃດເຫັນແກ່ປໂຍດຂອງຕົນຝ່າຍດຽວ ແຕ່ຈົ່ງເຫັນແກ່ປໂຍດຂອງຄົນອື່ນດ້ວຍເຈົ້າທັງຫລາຍຈົ່ງມີນ້ຳໃຈຕໍ່ກັນເໝືອນຢ່າງທີ່ມີໃນພຣະເຢຊູຄຣິສ"** ພຣະທັມຂໍ້ນີ້ໄດ້ຕັກເຕືອນເຮົາໃຫ້ຮູ້ຈັກມີກິຣິຍາທ່າທີຕໍ່ກັນ

ໃນຄຣິສຈັກໃຫ້ເໝືອນຢ່າງທີ່ພຣະເຢຊູໄດ້ມີ ຄຣິສຈັກທີ່ຖວາຍກຽດແລະສງ່າຣາສີຕ້ອງມີສິ່ງເຫລົ່ານີ້ທີ່ປາກົດຢູ່ໃນ ຟີລິບປອຍ 2:6-11

**3.** ຄຣິສຈັກແລະການສາມັກຄີທັມກັນ ແມ່ນແສງແຈ້ງທີ່ສ່ອງໃນໂລກ ເພື່ອໃຫ້ຄົນອື່ນ ໆ ໄດ້ເຫັນພຣະຄຣິສ ດັ່ງນັ້ນຄຣິສຕຽນຕ້ອງລະນຶກເຖິງຂໍ້ນີ້ ແລະບໍ່ເຮັດສິ່ງໃດໃຫ້ຄຣິສຈັກເກີດການແຕກແຍກ ມົວໝອງ ບໍ່ໃຊ້ອາຣົມຮ້າຍ ບໍ່ເຫັນແກ່ອຳນາດ ກຽດຊື່ສຽງຂອງຕົວ ບໍ່ຕ້ອງມັກໃຫຍ່ ເອົາປຽບ ຫລືຈົ່ມວ່າກັນ **"ເຫດສັນນີ້ພວກທີ່ຮັກຂອງເຮົາເອີຍ ເໝືອນດັ່ງເຈົ້າທັງຫລາຍເຄີຍເຊື່ອຟັງທຸກເວລາສັນໃດ ພວກເຈົ້າຈົ່ງອົດສາພຍາຍາມດ້ວຍຄວາມຢຳເກງແລະຕົວສັ່ນ ເພື່ອໃຫ້ໄດ້ຄວາມພົ້ນສັນນັ້ນ ບໍ່ໃຊ່ຈຳເພາະເມື່ອເຮົາຢູ່ນຳພວກເຈົ້າເທົ່ານັ້ນ ແຕ່ຈົ່ງເຮັດຫລາຍກວ່ານັ້ນອີກໃນເມື່ອເຮົາບໍ່ຢູ່ນຳ ເພາະວ່າແມ່ນພຣະເຈົ້າເປັນຜູ້ຊົງກະທຳການຢູ່ພາຍໃນເຈົ້າທັງຫລາຍ ໃຫ້ມີໃຈປາຖນາແລະໃຫ້ເຮັດໄປເພື່ອຊອບພຣະທັຍຂອງພຣະອົງ ຈົ່ງເຮັດທຸກສິ່ງໂດຍບໍ່ມີການຈົ່ມແລະຖົກຖຽງກັນ ເພື່ອເຈົ້າທັງຫລາຍຈະບໍ່ຖືກຕິຕຽນແລະບໍ່ມີຄວາມຜິດ ເປັນບຸດຂອງພຣະເຈົ້າທີ່ບໍ່ມີຕຳໜິໃນຖ່າມກາງເຊື້ອຊາດອັນຄົດໂກງແລະຊົ່ວຊ້າ ເຈົ້າທັງຫລາຍຈົ່ງປາກົດໃນຖ່າມກາງເຂົາເໝືອນດັ່ງດວງສວ່າງຕ່າງ ໆ ທີ່ສ່ອງແຈ້ງໃນໂລກ ຄືສະແດງພຣະທັມອັນປະກອບດ້ວຍຊີວິດ ເພື່ອເຮົາຈະມີບ່ອນອວດໄດ້ໃນວັນຂອງພຣະຄຣິສວ່າ ເຮົາບໍ່ໄດ້ແລ່ນແລະບໍ່ໄດ້ເຮັດການໜັກໜ່ວງເປັນການເສັຽປໂຍດ"** (ຟປ 2:12-16) ຂໍໃຫ້ທ່ານໄດ້ພິຈາຣະນາຂໍ້ຄວາມນີ້ຈາກພຣະຄັມພີໂດຍກົງ ເພີ່ມເສີມສ້າງຄວາມເຂົ້າໃຈແຈ້ງໃນເຣື່ອງຂອງການທີ່ຜູ້ເຊື່ອຈະສາມາດສາມັກຄີທັມນຳກັນ ສາມາດຊຸກຍູ້ຊວ້ານຊູໃຈກັນ ຮຽນແບບຢ່າງເຊື່ອຟັງພຣະວັຈນະຂອງພຣະເຈົ້າ ອັນນີ້ແຫລະແມ່ນຊີວິດຄຣິສຕຽນທີ່ຮັກແລະເຊີດຊູຄຣິສຈັກ

# ຄວາມສັມພັນຣະຫວ່າງຜູ້ເຊື່ອຕໍ່ພຣະເຢຊູຄຣິສກັບຄຣິສຈັກ

## ຄຣິສຈັກ

| ພຣະເຢຊູຄຣິສຊົງເປັນ | ຊຸມຊົນຂອງພຣະເຈົ້າເປັນ | ຜູ້ເຊື່ອດຳເນີນຊີວິດໂດຍ |
|---|---|---|
| 1. ພຣະຜູ້ສ້າງຄຣິສຈັກ ມທ 16:18 | ຜູ້ທີ່ຖືກສ້າງໃຫ້ເປັນຄຣິສຈັກ | ເປັນຄຣິສຈັກທີ່ເກີດຜົນ |
| 2. ພຣະປະມຸກຂອງຄຣິສຈັກ ອຟ 1:22 | ປະຊາກອນ/ພົລເມືອງຂອງພຣະເຈົ້າ | ດຳເນີນຊີວິດຕາມແບບຢ່າງພຣະຄຣິສ |
| 3. ສີສະຂອງຄຣິສຈັກ ກຊ 1:18 ອຟ 5:23 | ພຣະກາຍຂອງພຣະເຢຊູ | ແມ່ນອະວັຍວະທີ່ຮັບໃຊ້ຄຣິສຈັກ |
| 4. ພຣະຜູ້ໂຜດໃຫ້ພົ້ນຂອງຄຣິສຈັກ ອຟ 5:23 | ຜູ້ຮັບການໄຖ່ບາບ | ຜູ້ປະກາດຂ່າວແຫ່ງຄວາມພົ້ນ |
| 5. ພຣະຜູ້ຊຳຣະຄຣິສຈັກໃຫ້ບໍຣິສຸດ ອຟ 5:27 | ວິສຸດທິຊົນ ມີຊີວິດຕາມແບບພຣະຄຣິສ | ເປັນເກືອແລະແສງສວ່າງ |
| 6. ເຈົ້າຂອງຄຣິສຈັກ (ເຈົ້າບ່າວ) ອຟ 5:27-28 | ສາວົກຂອງພຣະຄຣິສ (ເຈົ້າສາວ) ຜູ້ເຊື່ອແທ້ | ຍົກພຣະເຢຊູ ຮັກ ເຊີດຊູ ຄຣິສຈັກ |
| 7. ພຣະຜູ້ບຳຣຸງລ້ຽງຄຣິສຈັກ ອຟ 5:29 | ແກະຂອງພຣະເຢຊູ | ຊ່ວຍເບິ່ງແຍງຊຶ່ງກັນແລະກັນ |
| 8. ພຣະສີລາມຸມເອກ 2 ປຕ 2:4-6 | ພຣະວິຫານ (ອາຄານ) | ຊ່ວຍກັນກໍ່ສ້າງກັນແລະກັນຂຶ້ນ |

# ບົດທີ 9

# ຮັບໃຊ້ຢ່າງພຣະຄຣິສ ຖວາຍຊີວິດແດ່ພຣະເຈົ້າ

ຈົ່ງຢ້ານຢຳພຣະຜູ້ເປັນເຈົ້າ ແລະຮັບໃຊ້ພຣະອົງດ້ວຍຄວາມສັດຊື່ ແລະສຸດອົກສຸດໃຈ
ຈົ່ງລະນຶກເຖິງການງານອັນຍິ່ງໃຫຍ່ທີ່ພຣະອົງຊົງກະທຳສຳລັບພວກທ່ານ
1 ຊາມູເອນ 12:24

ເພາະບຸດມະນຸດນັ້ນບໍ່ໄດ້ມາໃຫ້ຄົນອື່ນປະຕິບັດຕົນ
ແຕ່ມາເພື່ອປະຕິບັດເຂົາ ແລະປະທານຊີວິດຂອງຕົນໃຫ້ເປັນຄ່າໄຖ່ຄົນຈຳນວນຫລາຍ
ມາຣະໂກ 10:45

ພຣະເຢຊູສະເດັດເຂົ້າມາໃນໂລກນີ້ ເພື່ອເຊື່ອຟັງພຣະເຈົ້າຈົນເຖິງທີ່ສຸດຂອງຊີວິດພຣະອົງ ແມ່ນຕາຍເທິງການແຂນ ໄຖ່ໂທດບາບມະນຸດ ແຕ່ພຣະອົງບໍ່ໄດ້ເຂົ້າມາໃນໂລກນີ້ ເພື່ອຈະມີຊີວິດລໍວັນທີພຣະອົງຈະໄດ້ໄຖ່ໂທດບາບຂອງເຮົາເທົ່ານັ້ນ ພຣະອົງໄດ້ດຳຣົງຊີວິດເປັນແບບຢ່າງທີ່ສຳຄັນທີ່ສຸດໃນການເຊື່ອຟັງພຣະເຈົ້າ ແມ່ນການຖ່ອມໃຈລົງ ແລະເປັນແບບຢ່າງທີ່ສຳຄັນທີ່ສຸດໃນການເຊື່ອຟັງພຣະເຈົ້າ ພຣະອົງໃຊ້ຊີວິດທີ່ບໍ່ເຮັດບາບ ແລະເປັນແບບຢ່າງໃນການຮັບໃຊ້ ດັ່ງທີ່ພຣະອົງໄດ້ຊົງປະກາດອອກມາໃຫ້ສາວົກຜູ້ທີ່ຕິດຕາມໄດ້ເຂົ້າໃຈເຖິງການທີ່ພຣະອົງຍອມເສັຽສະລະຊີວິດ ຊຶ່ງເປັນແບບຢ່າງແກ່ເຮົາທັງຫລາຍ

ໃນປັດຈຸບັນຈາກການສຳຣວດພົບວ່າປະມານ 85% ຂອງສະມາຊິກຄຣິສຈັກສົນໃຈມາຮ່ວມຄຣິສຈັກໂດຍບໍ່ຕ້ອງການເຮັດຫຍັງ ຫລືຫາວິທີທີ່ຈະຫລີກເວັ້ນໂດຍບໍ່ຕ້ອງການຮັບໃຊ້ຫຍັງ ບາງຄົນກໍຮັບໃຊ້ແບບບໍ່ເຕັມໃຈ ຫລືເຮັດໄປກໍຍ້ອນໄດ້ຮັບເລືອກໃຫ້ເຮັດ ຄຣິສຕຽນເຫລົ່ານີ້ມັກເປັນຜູ້ທີ່ຢາກຢູ່ແບບສະບາຍ ໆ ແລະເບິ່ງຫາວ່າຄຣິສຈັກຈະມີລາຍການຫຍັງແດ່ທີ່ເຮັດໃຫ້ຕົນເອງມີຄວາມມ່ວນໃຈ ໂດຍບໍ່ເຂົ້າໃຈເຖິງຈຸດປະສົງແທ້ຂອງຄຣິສຈັກ ສະມາຊິກແນວນີ້ຈະປະຕິເສດການຊຽກຮ້ອງຂອງພຣະເຈົ້າໃນເຣື່ອງການຮັບໃຊ້ ແມ້ແຕ່ເຣື່ອງເລັກ ໆ ນ້ອຍທີ່ຕົນເຮັດໄດ້ ກໍຈະພຍາຍາມຫລົບໜ້າ ດັ່ງນັ້ນ ພາຣະໜັກຈຶ່ງຕົກຢູ່ກັບສະມາຊິກອີກ 15% ທີ່ຕ້ອງເຮັດວຽກທຸກແນວ ຕ້ອງຮັບໃຊ້ທຸກເຣື່ອງ ຊ້ຳຍັງຖືກຕິຕຽນວ່າເຮັດບໍ່ໄດ້ດີ ບໍ່ຖືກໃຈ ຫລືບໍ່ສົມບູນແບບອີກດ້ວຍ ຄຣິສຕຽນທີ່ບໍ່ສົນໃຈໃນການຮັບໃຊ້ພຣະເຈົ້າຕ້ອງຄືນມາທົບທວນຄວາມເຊື່ອຂອງຕົວ ແລະຈື່ໄວ້ວ່າ "ຄວາມພົ້ນນັ້ນເຮົາໄດ້ມາຍ້ອນໂດຍຄວາມເຊື່ອ"

(save by faith, ຣມ 1:17) ແຕ່ບຳເໜັດຣາງວັນສຳລັບຊີວິດຄຣິສຕຽນຂອງເຮົາໄດ້ມາຍ້ອນຄວາມສັດຊື່ (Reward of Christian life by faithfulness) ແມ່ນການຮັບໃຊ້ພຣະເຈົ້າດ້ວຍຄວາມຈິງໃຈ ພຣະທັມໂກໂລຊາຍ 3:23-24 ກ່າວວ່າ "ແຕ່ຈົ່ງເຮັດດ້ວຍນ້ຳໃສໃຈຈິງ ດ້ວຍຄວາມຢຳເກງອົງພຣະຜູ້ເປັນເຈົ້າ ສິ່ງນຶ່ງສິ່ງໃດທີ່ເຈົ້າເຮັດນັ້ນ ຈົ່ງເຮັດດ້ວຍເຕັມໃຈເໝືອນເຮັດຖວາຍແກ່ອົງພຣະຜູ້ເປັນເຈົ້າ ບໍ່ໃຊ່ເໝືອນເຮັດແກ່ມະນຸດ ດ້ວຍຮູ້ແລ້ວວ່າ ອົງພຣະຜູ້ເປັນເຈົ້າຈະຊົງໃຫ້ເຈົ້າທັງຫລາຍໄດ້ຮັບມໍຣະດົກເປັນຄ່າບຳເໜັດ ເພາະວ່າຜູ້ທີ່ເຈົ້າທັງຫລາຍຮັບໃຊ້ນັ້ນກໍແມ່ນພຣະຄຣິສເຈົ້າ" ພຣະທັມນີ້ເນັ້ນໜັກຕັກເຕືອນເຮົາເຖິງຄວາມສັດຊື່ໃນການຮັບໃຊ້ພຣະເຈົ້າດ້ວຍຄວາມເຊື່ອໃນພຣະເຢຊູຄຣິສ ຕາມຖານະຄວາມສາມາດ ແລະຂອງປະທານທີ່ພຣະເຈົ້າມອບໃຫ້ແກ່ເຮົາລວມເຖິງການບໍ່ອວດຕົວໃຫ້ເປັນພາຣະຂອງຜູ້ອື່ນ ຫລືເປັນຜູ້ມັກຕິຕຽນຜູ້ອື່ນ ມັກນ້ອຍໃຈໃນສິ່ງເລັກນ້ອຍ ແລະດຶງຖ່ວງຜູ້ອື່ນບໍ່ໃຫ້ເຂົາຮັບໃຊ້ດ້ວຍ ຊຶ່ງປຽບທຽບຄືກັບກ້ອນຫີນທີ່ຄອຍສະດຸດໃຫ້ຜູ້ອື່ນລົ້ມລົງ ດັ່ງນັ້ນບົດຮຽນນີ້ຈຶ່ງຂໍເນັ້ນເຖິງການຮັບໃຊ້ ໂດຍໃຫ້ຄຣິສຕຽນແຕ່ລະຄົນຕັ້ງຕົ້ນຮັບໃຊ້ໃຫ້ຖືກຕ້ອງ ຕັ້ງແຕ່ເລື່ອງເລັກນ້ອຍຈົນກະທັ້ງເຖິງການເປັນຜູ້ຮັບໃຊ້ເຕັມເວລາດ້ວຍ

1. ຄຣິສຕຽນທຸກຄົນຕ້ອງຮັບໃຊ້ ເລີ້ມຕົ້ນດ້ວຍການຮັບໃຊ້ຄຣິສຈັກໃນທ້ອງຖິ່ນ ແມ່ນຄຣິສຈັກທີ່ເປັນສະມາຊິກຢູ່ ຊຶ່ງມີວຽກງານຫລາຍແນວ ຕັ້ງແຕ່ສິ່ງເລັກ ໆ ຈົນເຖິງເຣື່ອງໃຫຍ່ທີ່ຕ້ອງໃຊ້ຄວາມສາມາດແລະຂອງປະທານຕ່າງ ໆ ເຂົ້າຊ່ວຍໃຫ້ເກີດຜົນສຳເຣັດໃນການຮັບໃຊ້ ແລະເພື່ອບຳຣຸງພຣະກາຍຂອງພຣະຄຣິສແມ່ນຄຣິສຈັກໃຫ້ສົມບູນ ເພື່ອຄົນທັງຫລາຍຈະໄດ້ເຫັນພຣະຄຣິສແລະກຽດຕິຄຸນຂອງພຣະອົງ ຢ່າງລືມວ່າພຣະເຈົ້າຊົງເອີ້ນເຮົາໃຫ້ຮັບໃຊ້ໃນບ່ອນທີ່ເຮົາເປັນສະມາຊິກຢູ່ ພຣະອົງນຳພາເຮົາໄປເຖິງບ່ອນໃດ ຢູ່ໃສ ແມ່ນສຖານທີ່ ແມ່ນຄຣິສຈັກທີ່ພຣະອົງຕ້ອງການໃຫ້ເຮົາຮັບໃຊ້ ໃນສາຍຕາຂອງພຣະເຈົ້າຊົງເຫັນວ່າ ຄຣິສຕຽນແຕ່ລະຄົນຕ້ອງມີພາຣະກິຈແລະວຽກງານຮັບໃຊ້ພຣະອົງ ບໍ່ແນວໃດກໍແນວນຶ່ງ ຕາມຄວາມສາມາດ, ຕາມຂອງປະທານທີ່ປາກົດໃນພຣະທັມໂກຣິນໂທສະບັບຕົ້ນ 12:4-11 ບໍ່ພຽງເທົ່ານັ້ນ ພຣະອົງຍັງຫຍັ່ງຮູ້ເຖິງໃຈຂອງເຮົາວ່າ ເຮົາມີນ້ຳໃຈ, ມີຄວາມອົດສາພຍາຍາມ ແລະເອົາໃຈໃສ່ໃນການຮັບໃຊ້ຊຶ່ງຈະເຮັດໃຫ້ເກີດຜົນດີ ຊ່ວຍໃຫ້ເກີດການຮຽນຮູ້ ມີການປັບປຸງແປງ ແລະເປັນປໂຍດຕໍ່ຄົນທີ່ຢູ່ອ້ອມຂ້າງເຮົາ "ເພື່ອຈັດຕຽມໄພ່ພົນທັງຫລາຍຂອງພຣະອົງໃຫ້ເປັນຜູ້ຮັບໃຊ້ທີ່ເໝາະສົມເພື່ອເສີມສ້າງພຣະກາຍຂອງພຣະຄຣິສໃຫ້ຈະເຣີນຂຶ້ນ" (ອຟ 4:12)

2. ພຣະເຈົ້າແມ່ນເຈົ້າຂອງກິຈການ ເຮົາເປັນພຽງຫຸ້ນສ່ວນທີ່ຮັບໃຊ້ພຣະອົງໃນວຽກການຂອງຄຣິສຈັກ ແລະທຸກສິ່ງຕ້ອງຜູກພັນກ້າວໜ້າໄປຕາມພັນທະກິຈຂອງຄຣິສຈັກໂດຍມີພຣະຄຣິສເປັນສີສະຂອງພຣະກາຍແມ່ນຄຣິສຈັກ ຄຣິສຕຽນທີ່ຢູ່ໃນແຕ່ລະຄຣິສຈັກແມ່ນອະວັຍວະແລະສ່ວນຕ່າງ ໆ ຂອງພຣະກາຍເປັນຫຸ້ນສ່ວນແຫ່ງພັນທະກິຈທັງມວລ (ຣມ 12:48, 1 ກທ 12:5)

ດັ່ງນັ້ນແລ້ວບໍ່ວ່າເຮົາຈະເຮັດຫຍັງເຮົາຕ້ອງສຳນຶກຢູ່ສເມີວ່າ ເຮົາເຮັດທຸກສິ່ງເພື່ອຖວາຍແດ່ພຣະເຈົ້າ ຄວາມຄິດເຫັນທຸກແນວຈຶ່ງສົມຄວນມາຈາກສີສະແມ່ນພຣະຄຣິສ ຊຶ່ງໄດ້ເປີດເຜີຍໄວ້ແລ້ວເຖິງນ້ຳ

ພຣະທັຍແລະພຣະປະສົງຂອງອົງໃນພຣະວັຈນະຂອງພຣະເຈົ້າ ຢ່າໃຫ້ເຮົາຮັບໃຊ້ຕາມໃຈປາຖນາຂອງເຮົາເອງ ແຕ່ໃຫ້ເຮົາສແວງຫາວ່າ ພຣະອົງປາຖນາໃຫ້ເຮົາເຮັດແນວໃດຈຶ່ງຈະຖືກຕ້ອງຕາມພຣະຄຣິສທັມຄັມພີ ເຮົາຕ້ອງຮຽນຮູ້ ຂໍການນໍາພາຈາກພຣະອົງທຸກຄັ້ງທີ່ເຮົາຈະຮັບໃຊ້ໃນທຸກກໍຣະນີ ຂໍພຣະຄຣິສນໍາໜ້າແລ້ວເຮົາຕັ້ງສະຕິຢ່າງນໍາພຣະອົງ ຈຶ່ງຖາມຕົວເອງສເມີວ່າ ໃນເຣື່ອງແນວນີ້ ໃນສຖານະການນີ້ ເຫດການນີ້ ພຣະເຢຊູຜູ້ເປັນພຣະບຸດຂອງພຣະເຈົ້າ ພຣະອົງຈະຕັດສິນໃຈຫລືຕອບສນອງແນວໃດພຣະອົງຈະຮັບໃຊ້ ຈະແກ້ໄຂ ຈະເຮັດໃຫ້ໄດ້ດີແນວໃດ

3. ຄວາມສາມາດຂອງການຮັບໃຊ້ໄດ້ມາຈາກພຣະເຈົ້າ ຄວາມສາມາດໃນການດໍາເນີນງານການຮັບໃຊ້ມີຫລາຍຢ່າງຕ່າງ ໆ ກັນ ແຕ່ແມ່ນພຣະເຈົ້າອົງດຽວກັນທີ່ໃຫ້ຄວາມສາມາດແກ່ທຸກຄົນສໍາລັບວຽກງານອັນສະເພາະທີ່ເຂົ້າຮັບໃຊ້ນັ້ນ "ການດໍາເນີນງານມີຕ່າງໆກັນ ແຕ່ມີພຣະເຈົ້າອົງດຽວກັນຊຶ່ງເປັນຕົ້ນເຫດແຫ່ງການດໍາເນີນງານຕ່າງໆນັ້ນໃນທຸກຄົນ" (1 ກທ 12:6) ພຣະເຈົ້າຊົງຮູ້ຈັກດີວ່າ ທ່ານຮັກພຣະອົງ ທ່ານປາຖນາຕ້ອງການຮັບໃຊ້ພຣະອົງ ແຕ່ບັນຫາທີ່ມີຄົນບໍ່ໝັ້ນໃຈໃນຕົນເອງມັກເວົ້າສເມີແມ່ນ "ຂ້ອຍບໍ່ມີຄວາມສາມາດ ຫລືຂ້ອຍເຮັດບໍ່ເປັນ" ແຕ່ກໍມີຄຣິສຕຽນຈໍານວນຫລາຍ ທີ່ຕັ້ງຕົ້ນດີຕັ້ງອົກຕັ້ງໃຈດີ ດຸໝັ້ນຕ້ອງການຮຽນຮູ້ ແລະຕ້ອງການຮຽນເຮັດ ເມື່ອເຮົາຮູ້ເທົ່າໃດເຮົາກໍເຮັດໃຫ້ເຕັມກໍາລັງ ແລ້ວຮຽນຕື່ມ ຮູ້ຕື່ມ ເຮັດຕື່ມ ດ້ວຍການອົດສາສແວງຫາຄວາມຊ່ວຍເຫລືອຈາກພຣະເຈົ້າ ເມື່ອເຮົາຮຽນຮູ້ເຮັດ ຮູ້ຮັບໃຊ້ແລ້ວ ຈະເປັນພຣະພອນອັນຫລວງຫລາຍຕໍ່ຄຣິສຈັກຂອງພຣະອົງ ຢ່າໃຫ້ເຮົາເພິ່ງແຕ່ກໍາລັງ ຫລືເພິ່ງຄວາມຮູ້ສຶກຂອງເຮົາເອງໃນການຮັບໃຊ້ ແຕ່ໃຫ້ເຮົາເພິ່ງພຣະກໍາລັງຂອງພຣະເຈົ້າໂດຍການໃຊ້ຄວາມສາມາດທີ່ເຮົາມີຢູ່ ຊຶ່ງເປັນຂອງປະທານອັນພິເສດນັ້ນໃຫ້ເປັນປໂຍດສໍາລັບຜູ້ອື່ນ "ຕາມທີ່ທຸກຄົນໄດ້ຮັບສິ່ງທີ່ຊົງປະທານໃຫ້ແລ້ວ ກໍໃຫ້ໃຊ້ຂອງປະທານນັ້ນເພື່ອປໂຍດແກ່ກັນແລະກັນເໝືອນຜູ້ຮັບມອບໝາຍຜູ້ດີທີ່ຮັບໃຊ້ພຣະຄຸນນາ ໆ ປະການຂອງພຣະເຈົ້າ" (1 ປຕ 4:10)

4. ຄຣິສຕຽນຕອບສນອງການຊົງເອີ້ນຂອງພຣະເຈົ້າໃນຖານະຜູ້ຮັບໃຊ້ແບບຄາຣາວາດ (Lay Leader) ແມ່ນຜູ້ນໍາຄຣິສຈັກທີ່ຮັບໃຊ້ໃນຖານະຂອງການເປັນ ຜູ້ປົວລະບັດ (Deacon ມັຄນາຍົກ) ຮັບໃຊ້ໃນຖານະຜູ້ທີ່ເປັນຫົວໜ້າພະແນກຕ່າງ ໆ ຂອງຄຣິສຈັກ (ຂໍໃຫ້ນັກສຶກເບິ່ງລາຍລະອຽດຈາກວິຊາຄຣິສຕຽນສຶກສາ ແລະວິຊາອະພິບາລສິດ) ການຮັບໃຊ້ແບບຄາຣາວາດນີ້ມີຄວາມສໍາຄັນຫລາຍແລະມີບົດບາດການຮັບໃຊ້ໃກ້ຄຽງກັບຜູ້ຮັບໃຊ້ທີ່ຖວາຍຕົວເຕັມເວລາ ມີຄວາມແຕກຕ່າງກັນທີ່ວ່າ ຜູ້ຮັບໃຊ້ຄາຣາວາດ ຈະບໍ່ໄດ້ຮັບເງິນຕອບແທນຈາກຄຣິສຈັກ ແຕ່ເປັນອາສາສະມັກອາດຈະເປັນຄົນສາມັນທັມດາ ເປັນນັກທຸຣະກິຈ ຫລືຜູ້ທີ່ມີອາຊີບການງານທີ່ລ້ຽງຊີບ ລ້ຽງຕົນເອງ ແລະຄອບຄົວຢູ່ແລ້ວ ອາດຈະເປັນຜູ້ທີ່ມີຖານະທາງສັງຄົມ ທັງເປັນຜູ້ມີຄວາມຮູ້ຄວາມສາມາດມາເປັນຜູ້ນໍາຮ່ວມງານ ຮ່ວມທີມເວີຣ໌ຄ (Team work) ກັບສິດຍາພິບາລ ຊຶ່ງເປັນຜູ້ຮັບໃຊ້ພຣະເຈົ້າເຕັມເວລາ ຂໍ້ເຕືອນໃຈສໍາລັບຄາຣາວາດ ແມ່ນວ່າຕ້ອງມີຄວາມເຂົ້າໃຈພຣະຄັມພີ ແລະຈຸດປະສົງຂອງພຣະເຈົ້າທີ່ເອີ້ນເຂົາມາເປັນຜູ້ນໍາຄຣິສຈັກ ເພື່ອຈະໄດ້ນໍາຄຣິສຈັກເດີນບົນເສັ້ນທາງທີ່ຖືກຕ້ອງຕາມນໍ້າພຣະທັຍ ແລະພຣະປະສົງຂອງ

ພຣະເຈົ້າ ແມ່ນຜູ້ທີ່ຮັກພຣະເຈົ້າແລະມີຄວາມເຊື່ອຟັງ ແມ່ນຜູ້ທີ່ຕອບສນອງຕໍ່ການຊົງເອີ້ນຂອງພຣະເຈົ້າ ແລະມາຮັບໃຊ້ພຣະເຈົ້າຢ່າງເສັຽສະລະແລະສັດຊື່ພຣະທັມກາລາເຕັຽ 5:13ຂ "ແຕ່ຈົ່ງຮັບໃຊ້ຊຶ່ງກັນແລະກັນດ້ວຍຄວາມຮັກເທີ້ນ"

5. ຄຣິສຕຽນຕອບສນອງການຊົງເອີ້ນໂດຍຮັບໃຊ້ເຕັມເວລາ (Clergy) ພຣະເຈົ້າຕ້ອງເອີ້ນໃຫ້ບາງຄົນຖວາຍຊີວິດຂອງຕົນຮັບໃຊ້ພຣະເຈົ້າເຕັມເວລາ ແມ່ນຜູ້ທີ່ຍອມອຸທິດຊີວິດຂອງຕົນແລະໄດ້ຮັບການສນັບສນູນຂອງຄອບຄົວເພື່ອຮັບໃຊ້ພຣະເຈົ້າ ໂດຍບໍ່ມີຈຸດມຸ້ງໝາຍທີ່ຈະອອກໄປທຳມາຫາກິນໃນແນວອື່ນ ແຕ່ຖວາຍເວລາທັງໝົດເພື່ອຮັບໃຊ້ພຣະເຈົ້າເທົ່ານັ້ນ ພຣະທັມຊາມູເອນສະບັບຕົ້ນ 12:24 ກ່າວວ່າ "ຈົ່ງຢ້ານຢຳພຣະຜູ້ເປັນເຈົ້າ ແລະຮັບໃຊ້ພຣະອົງດ້ວຍຄວາມສັດຊື່ ແລະສຸດຈິດສຸດໃຈ ຈົ່ງລະນຶກເຖິງການງານອັນຍິ່ງໃຫຍ່ທີ່ພຣະອົງຊົງກະທຳສຳລັບພວກທ່ານ" ໃນລັກສະນະການຖວາຍຕົວຮັບໃຊ້ເຕັມເວລາແນວນີ້ ຄຣິສຈັກສົມຄວນໃຫ້ການລ້ຽງດູແກ່ຜູ້ນັ້ນ ຊຶ່ງເຮົາອາດຈະເອີ້ນວ່າເປັນສິດຍາພິບານຫລືບຸກຄະລາກອນ (ເຈົ້າໜ້າທີ່) ອື່ນ ໆ ທີ່ອາດມີຊື່ຕຳແໜ່ງແຕກຕ່າງກັນໄປ ແລ້ວແຕ່ຖານະຂອງຄຣິສຈັກທີ່ຈະເຮັດໄດ້ ລາງເທື່ອຄຣິສຈັກອາດຈະເປັນຄຣິສຈັກເລັກຫລືເພິ່ງເກີດໃໝ່ ຫລືຍັງຂາດຄວາມເຂັ້ມແຂງໃນການຖວາຍປັດຈັຍ ຄຣິສຈັກເຫລົ່ານີ້ບໍ່ສາມາດລ້ຽງດູຄວາມເປັນຢູ່ຂອງຜູ້ຮັບໃຊ້ເຕັມເວລາ ອາດຈະມີການໃຫ້ເງິນເດືອນພຽງສ່ວນນຶ່ງ ແລະຜູ້ຮັບໃຊ້ນັ້ນຈຳເປັນຕ້ອງໄປຫາອາຊີບເສີມເພື່ອເຈືອຈຸນຄອບຄົວຂອງຕົນ ຊຶ່ງຮ້ອງໃນພາສາອັງກິດວ່າ Bivocatinal Pastor ຂໍ້ເຕືອນໃຈສຳລັບຜູ້ຮັບໃຊ້ໃນລັກສະນະນີ້ວ່າຕ້ອງຣະວັງຕົວ ຢ່າງໃຫ້ອາຊີບເສີມມາບົດບັງ ຫລືຈອງດຶງເວລາແລະຄວາມສາມາດໃນການຮັບໃຊ້ຂອງຕົນ ຂໍໃຫ້ນັກສຶກສາໄປສຶກສາລາຍລະອຽດຂອງການຮັບໃຊ້ໃນລັກສະນະຕ່າງກັນຈາກວິຊາຫລັກການອະພິບາລສິດ

**ຈຸດປະສົງຂອງການຮັບໃຊ້ທີ່ຖືກຕ້ອງແລະພໍພຣະທັຍພຣະເຈົ້າ**

1) ຄຣິສຕຽນຮັບໃຊ້ເພື່ອເປັນການຖວາຍກຽດແດ່ພຣະເຈົ້າ ແລະຕອບສນອງການຊົງເອີ້ນຈາກພຣະເຈົ້າໃຫ້ຮັບໃຊ້ຄຣິສຈັກ ອັນເປັນກຽດສູງສຸດທີ່ເຮົາຈະຕ້ອງຮັບໃຊ້ດ້ວຍໃຈສັດຊື່ ແລະເຮັດດ້ວຍຄວາມເຕັມໃຈຕາມພຣະທັມເປໂຕສະບັບຕົ້ນ 4:11 "ຖ້າຜູ້ໃດກ່າວ ກໍໃຫ້ເໝືອນຜູ້ກ່າວພຣະທັມຂອງພຣະເຈົ້າ ຖ້າຜູ້ໃດເປັນຜູ້ບໍຣິຫານການຮັບໃຊ້ ກໍໃຫ້ບໍຣິຫານຮັບໃຊ້ເໝືອນຜູ້ຮັບກຳລັງທີ່ພຣະເຈົ້າຊົງໂຜດປະທານໃຫ້ ເພື່ອວ່າພຣະເຈົ້າຈະຊົງໄດ້ກຽດໃນການທັງປວງໂດຍທາງພຣະເຢຊູຄຣິສ ສະງ່າຣາສີແລະຣິດທານຸພາບຊົງມີແກ່ພຣະອົງສືບ ໆ ໄປເປັນນິດ ອາແມນ"

2) ຄຣິສຕຽນຮັບໃຊ້ເພື່ອຕິດຕາມພຣະຄຣິສ ພຣະທັມໂຢຮັນ 12:26ກ ກ່າວວ່າ "ຖ້າຜູ້ໃດປະຕິບັດເຮົາ ໃຫ້ຜູ້ນັ້ນຕິດຕາມເຮົາມາ ແລະເຮົາຢູ່ທີ່ໃດ ຜູ້ປະຕິບັດເຮົາຈະຢູ່ທີ່ນັ້ນເໝືອນກັນ" ການຮັບໃຊ້ພາໃຫ້ເຮົາເກີດຄວາມເຂົ້າໃຈນ້ຳພຣະທັຍແລະພຣະປະສົງຂອງພຣະເຈົ້າ ທີ່ຕ້ອງ

ການຊ່ວຍຜູ້ທີ່ຫລົງຫາຍໂດຍຜ່ານທາງພຣະເຢຊູຄຣິສ ແລະໂດຍການຍິນຍອມຮ່ວມມືຂອງເຮົາທີ່ມີຕໍ່ພຣະຄຣິສ ເພື່ອນຳຄົນທັງຫລາຍມາເຖິງການກັບໃຈໃໝ່ ແລະດຳເນີນຊີວິດຄຣິສຕຽນຢ່າງມີຄວາມໝາຍ

3) ການຮັບໃຊ້ແມ່ນການສະແດງອອກຂອງຄຣິສຕຽນທີ່ຮັກພຣະເຈົ້າ ແລະຮູ້ບຸນຄຸນຂອງພຣະອົງ ໂດຍການບົວລະບັດດີຕໍ່ຜູ້ອື່ນ ພຣະທັມເຮັບເຣີ 6:10 ກ່າວວ່າ "ເພາະວ່າພຣະເຈົ້າບໍ່ໄດ້ຊົງອະຍຸດຕິທັມ ຊຶ່ງຈະຊົງລືມການງານທີ່ພວກທ່ານໄດ້ເຮັດ ແລະຄວາມຮັກທີ່ທ່ານໄດ້ສະແດງຕໍ່ພຣະນາມຂອງພຣະອົງ ຄືການຮັບໃຊ້ໄພ່ພົນຂອງພຣະອົງເໝືອນດັ່ງພວກທ່ານຍັງຮັບໃຊ້ຢູ່" ຈະເຫັນໄດ້ວ່າມີຄົນທີ່ຮັກ ແລະຮູ້ບຸນຄຸນຂອງພຣະເຈົ້າ ຮັບໃຊ້ຄຣິສຈັກຕ່າງ ໆ ໃນທຸກຊາດທຸກພາສາທົ່ວໂລກ ຊຶ່ງເປັນແບບຢ່າງທີ່ດີຕໍ່ຄຣິສຕຽນທັງຫລາຍ

4) ການຮັບໃຊ້ຈະນຳຄວາມສຸກແລະຄວາມປິຕິຍິນດີມາສູ່ຕົວເຮົາແລະຄອບຄົວຂອງເຮົາ ພຣະເຢຊູໄດ້ວາງແບບຢ່າງແກ່ສາວົກແລະບອກໃຫ້ສາວົກເຮັດຕາມທີ່ພຣະອົງໄດ້ເຮັດໄວ້ ແມ່ນການຖ່ອມໃຈຮັບໃຊ້ຊຶ່ງກັນແລະກັນ ພຣະອົງຕັດວ່າ "ຖ້າທ່ານທັງຫລາຍຮູ້ສິ່ງເຫລົ່ານີ້ແລະເຮັດຕາມ ທ່ານກໍເປັນສຸກ" (ຢຮ 13:17) "ຈົ່ງບົວລະບັດພຣະເຈົ້າດ້ວຍຄວາມຍິນດີ ຈົ່ງເຂົ້າມາເຝົ້າພຣະອົງດ້ວຍການຮ້ອງເພງ" (ພສສ 100:2) ໃຫ້ເຮົາຮູ້ຈັກກ່າວສັລເສີນພຣະເຈົ້າແລະດີໃຈທີ່ໄດ້ຮ່ວມເປັນຫຸ້ນສ່ວນ (Partnership) ໃນຣາຊກິຈຂອງພຣະເຈົ້າ

5) ພຣະເຈົ້າຈະປະທານກຽດແກ່ຜູ້ນັ້ນທີ່ບົວລະບັດຮັບໃຊ້ພຣະອົງ ແມ່ນການຮັບໃຊ້ດ້ວຍໃຈສັດຊື່ ສຸຈະຣິດໃຈ ແລະຮັບຮູ້ວ່າພຣະເຈົ້າຜູ້ສູງສຸດ ແມ່ນນາຍທີ່ເຮົາຕິດຕາມຮັບຟັງຄຳສັ່ງ ເຮົາຮັບນິມິດໝາຍຈາກພຣະເຈົ້າບໍ່ແມ່ນຈາກຕົວຂອງເຮົາເອງ ເຮົາຖວາຍກຽດແດ່ພຣະເຈົ້າກ່ອນແລະພຣະສັນຍາວ່າຈະປະທານກຽດແກ່ເຮົາ "ຖ້າຜູ້ໃດປະຕິບັດເຮົາ ພຣະບິດາຈະຊົງປະທານກຽດຕິຍົດແກ່ຜູ້ນັ້ນ" (ຢຮ 12:26ຂ) ບໍ່ແມ່ນວ່າເຮົາຈະສແວງຫາກຽດໂດຍການຮັບໃຊ້ ເພາະວ່າທ່ານອາດຈະຜິດຫວັງໄດ້ ແຕ່ພຣະເຈົ້າຈະປະທານກຽດແກ່ຜູ້ທີ່ຮັບໃຊ້ພຣະເຈົ້າດ້ວຍໃຈຍິນດີ ເສັຽສະລະສັດຊື່ແລະເຊື່ອຟັງພຣະອົງ

**ທ່າທີແຫ່ງການຮັບໃຊ້ຢ່າງພຣະຄຣິສແມ່ນທ່າທີໃນການຮັບໃຊ້ຜູ້ອື່ນດ້ວຍຄວາມເມດຕາ**

ໃຫ້ເຮົາເບິ່ງພຣະເຢຊູ ພຣະອົງສົງສານແລະເມດຕາຕໍ່ປະຊາຊົນ ຕໍ່ແກະທີ່ຫລົງຫາຍ ພຣະອົງຊົງເຮັດທຸກແນວ ເພື່ອໃຫ້ຊີວິດຂອງຄົນເຫລົ່ານັ້ນ ທີ່ຕ້ອງທົນທຸກທໍຣະມານ ທັງການເຈັບປ່ວຍທາງຮ່າງກາຍຈິດໃຈ ແລະການຫລົງຫາຍຝ່າຍວິນຍານຈິດ ພຣະເຢຊູເອີ້ນຄຣິສຕຽນແຕ່ລະຄົນໃຫ້ຮັບໃຊ້ພຣະອົງພຣະອົງກ່າວວ່າ ຖ້າທ່ານຮັກເຮົາ "ຈົ່ງລ້ຽງລູກແກະຂອງເຮົາ" (ຢຮ 21:16-17) ພຣະອົງຍັງໄດ້ກ່າວອີກ

ວ່າ "ພວກທ່ານໄດ້ເຮັດການເຫລົ່ານີ້ແກ່ຜູ້ຕໍ່າຕ້ອຍທີ່ສຸດຄົນນຶ່ງໃນພວກພີ່ນ້ອງຂອງເຮົານີ້ ກໍໄດ້ເຮັດໃຫ້ເຮົາເໝືອນກັນ" (ມທ 25:40) ດັ່ງນັ້ນ ທ່າທີຂອງເຮົາໃນການຮັບໃຊ້ເຮົາຕ້ອງພິຈາຣະນາເຖິງຂໍ້ຕໍ່ໄປນີ້

1. ເຮົາຕ້ອງເປັນບຸກຄົນທີ່ໄວຕໍ່ຄວາມຮູ້ສຶກຂອງຄົນອື່ນ ແລະມີຄວາມພ້ອມທີ່ຈະເສັຽສະລະທັງກໍາລັງກາຍ ກໍາລັງໃຈ ເວລາ ແລະຊັບສິນ ໂດຍບໍ່ໄດ້ຄາດຫວັງໃນສິ່ງຕອບແທນຈາກຜູ້ທີ່ເຮົາຊ່ວຍເຂົານັ້ນ
2. ເຮົາຈະຕ້ອງເປັນບຸກຄົນທີ່ຍອມຮັບຄວາມຜິດຫວັງ ຫລືອາດຕ້ອງຮັບຄວາມເຈັບປວດຈາກບາດແຜລທີ່ຄົນອື່ນໄດ້ກະທໍາຕໍ່ເຮົາດ້ວຍຄວາມເຂົ້າໃຈຜິດ ໂດຍບໍ່ຕ້ອງແກ້ແຄ້ນຫລືຕໍ່ສູ້ໃດ ໆ
3. ການຮັບໃຊ້ແມ່ນການຊ່ວຍເຫລືອຄົນອື່ນໃຫ້ໄດ້ຮັບຜົນປໂຍດ ເພື່ອເສີມສ້າງຊີວິດໃໝ່ຂອງເຂົາໃຫ້ໃຫຍ່ຂຶ້ນ ແລະບໍ່ຕ້ອງຮ້ອງເອົາການຕອບແທນໃດ ໆ ຈາກຜູ້ນັ້ນ ແຕ່ວ່າເຮົາກໍຍັງມີຄວາມອິ່ມໃຈ ຂໍພຽງໄດ້ຊ່ວຍໃຫ້ຜູ້ອື່ນມີຊີວິດທີ່ດີ ມີຄວາມໝັ້ນຄົງໃນຄວາມເຊື່ອພຣະຄຣິສກໍພຽງພໍແລ້ວ
4. ເຮົາບໍ່ຕ້ອງມີຄວາມຄາດຫວັງໃນຜົນຕອບແທນ ຫລືຫວັງກໍາໄຣຈາກສິ່ງທີ່ໄດ້ທຸ້ມເທກະທໍາໃຫ້ແກ່ຄົນອື່ນ ເຮົາບໍ່ຮຽກຮ້ອງໃນສິດທິທີ່ພຶງຈະໄດ້ຮັບ ແລະບໍ່ຮຽກຮ້ອງຄວາມນັບຖືຈາກຄົນອື່ນ
5. ເມື່ອໄດ້ຮັບຄວາມອະຍຸດຕິທັມ ຖືກດູໝິ່ນ ກໍບໍ່ເດືອດເນື້ອຮ້ອນໃຈ ແຕ່ໃຫ້ຕັ້ງສະຕິຂໍພຣະເຈົ້າຊ່ວຍໃຫ້ເຮົາມອງຂ້າມສິ່ງເຫລົ່ານັ້ນແລະຍອມຮັບ ໂດຍຖືວ່າເປັນເຫດການທັມມະດາທີ່ເກີດກັບຄົນອື່ນ ໆ ດ້ວຍ
6. ຈົ່ງເຮັດທຸກສິ່ງເໝືອນເປັນການບົວລະບັດພຣະຄຣິສ ໂດຍທີ່ມີຄວາມສໍານຶກຢູ່ສເມີວ່າ ຈົ່ງໃຫ້ກຽດແກ່ຄົນອື່ນ ແລະປະຕິບັດດີຕໍ່ເຂົາສເມີ
7. ຂ້າທາດທີ່ແທ້ຈິງນັ້ນວັດແທກກັນທີ່ຄວາມສັດຊື່ໃນການຮັບໃຊ້ເຈົ້າຊີວິດ ວ່າເຮັດໃຫ້ເຈົ້າຊີວິດໄດ້ຮັບກຽດ ແລະພໍພຣະທັຍ ຈົ່ງກະທໍາຕົນໃຫ້ເປັນປໂຍດແກ່ຄົນທັງປວງ ເພື່ອຄົນທັງຫລາຍຈະໄດ້ສັລເສີນເຈົ້າຊີວິດທີ່ເຮົາຮັບໃຊ້

ຂໍພຣະເຈົ້າອວຍພຣະພອນຕໍ່ທ່ານທຸກນີ້ ໃນຖານະທີ່ທ່ານຮັກພຣະອົງໂດຍການຮັບໃຊ້ຕາມແບບຢ່າງຂອງພຣະຄຣິສ ຖວາຍຊີວິດແດ່ພຣະເຈົ້າ ອາແມນ

ລີ 2/19/07

# ບົດທີ 10

## ຮຽນຮູ້ການຖວາຍ

**ທຸກຄົນຈົ່ງໃຫ້ຕາມທີ່ຕົນໄດ້ຄິດໝາຍໄວ້ໃນໃຈ**
**ບໍ່ໃຊ່ໃຫ້ດ້ວຍຄິດເສັຽດາຍ ຫລືດ້ວຍຂືນໃຈໃຫ້**
**ເຫດວ່າພຣະເຈົ້າຊົງຮັກຄົນນັ້ນທີ່ໃຫ້ດ້ວຍຊື່ນໃຈຍິນດີ**
**2 ໂກຣິນໂທ 9:7**

ຜູ້ເທສນາຫລາຍ ໆ ຄົນຍ້ານທີ່ຈະເທສນາເຣື່ອງການຖວາຍເງິນຄຳ ແລະຄຣິສຕຽນຫລາຍຄົນກໍບໍ່ຢາກຟັງເຣື່ອງການທີ່ຕ້ອງຖວາມຊັບປານໃດ ຫລືຟັງແບບເຊື່ອພຽງບາງສ່ວນ ແລະມັກມີຄວາມຄິດວ່າຖ້າໄວ້ກ່ອນ ຄ່ອຍຄິດທີ່ຫລັງ ຫລືເອົາໄວ້ກ່ອນມີເງິນຄຳກ່ອນແລ້ວຈຶ່ງຄ່ອຍຖວາຍຫລາຍຂຶ້ນ ຕອນນີ້ເຮົາກຳລັງຕິດໜີ້ເຄດິດກາຣ໌ດລໍຖ້າຈ່າຍໃຫ້ຮ່ອນເສັຽກ່ອນ ລາງຄົນຈົ່ມໂອ້ບິລມີຫລາຍແນວ ແຕ່ມັກລືມວ່າຕ້ອງຈ່າຍບິລ ແຕ່ທຸກທີດກໍໄປມັກຊອບປີ້ງ ເຫັນຫຍັງງາມກໍຢາກຊື້ ກະເປົາໃບແພງ ເສື້ອນອກເນັກໄທ້ຣາຄາສູງທີ່ສຸດ ແມ່ນຂອງມັກຂາດບໍ່ໄດ້ ຍ້ານວ່າບໍ່ໃຊ້ຂອງຣາຄາແພງຈະເປັນຄົນບໍ່ມີຣະດັບ ເອົາລະ ເວົ້າໄປກໍຖືກໃຈທັງຜູ້ອ່ານແລະຜູ້ຂຽນ ຈະເອົາມືຊີ້ໜ້າໃຜບໍ່ໄດ້ດອກ ທຸກ ໆ ຄົນກໍຄືກັນໄປໝົດໃນເຣື່ອງນີ້ ແຕ່ທີ່ສຳຄັນສຳລັບບົດຮຽນນີ້ ມີຈຸດປະສົງມາແຈງໃຫ້ເຫັນວ່າ ການຖວາຍແລະການຈັດສັນປັນສ່ວນຖວາຍແດ່ພຣະເຈົ້ານັ້ນ ມີຄວາມໝາຍອັນໃດ

ການຮຽນຮູ້ເຣື່ອງການຖວາຍ ແລະການຈັດສັນປັນສ່ວນໃຫ້ເໝາະສົມເປັນເຣື່ອງສຳຄັນຫລາຍຕໍ່ການດຳເນີນຊີວິດຄຣິສຕຽນທີ່ແທ້ຈິງ ຄຣິສຕຽນແຕ່ລະຄົນມີລະດັບການຖວາຍແລະການເສັຽສະລະທີ່ຕ່າງຣະດັບກັນ ແລ້ວແຕ່ຣະດັບຄວາມເຊື່ອແລະການຍອມອຸທິດຖວາຍຂອງຜູ້ນັ້ນ ຜູ້ທີ່ສາມາດອຸທິດຖວາຍໄດ້ຫລາຍບໍ່ຕ້ອງຕຳໜິຕິຕຽນຜູ້ທີ່ຍັງອ່ອນແອໃນດ້ານນີ້ ແຕ່ໃຫ້ມອງເຫັນສ່ວນດີຂອງສະມາຊິກແຕ່ລະຄົນແລ້ວເສີມສ້າງເຂົາຂຶ້ນ ມີການຮຽນຮູ້ຮ່ວມກັນ ດ້ວຍຄວາມເຂົ້າໃຈກັນ ແຕ່ສ່ວນຜູ້ທີ່ຍັງອ່ອນແອໃນເຣື່ອງການອຸທິດຖວາຍກໍຕ້ອງມີການສຳຣວດຕົນເອງວ່າຍ້ອນດ້ວຍອຸປສັກອັນໃດທີ່ເປັນເຫດ ແລ້ວໃຫ້ນຳເອົາອຸປສັກນັ້ນມາອະທິຖານແລະຂໍການນຳພາຈາກພຣະເຈົ້າ ຍ້ອນວ່າຈະເຮັດດີປານໃດນັ້ນຂຶ້ນຢູ່ກັບຄວາມຈິງໃຈ ຫລາຍກວ່າການບັງຄັບຈິດໃຈຂອງຕົນ ແຕ່ການຮຽນຮູ້ ແລະການທຳຄວາມເຂົ້າໃຈຖານະຂອງຕົນເອງລວມເຖິງຄວາມພ້ອມໃນຝ່າຍຈິດວິນຍານ ການຜູກພັນກັບຄຣິສຈັກ ແລະຣະດັບການເຊື່ອຟັງພຣະເຈົ້າຂອງແຕ່ລະບຸກຄົນ ຄວາມເຂົ້າໃຈເຖິງພຣະຣາຊະກິຈຂອງພຣະເຈົ້າ ແລະສັມພັນທະ

ພາບອັນເລິກຊຶ້ງກັບພຣະເຈົ້າ ຈະສາມາດນຳພາໃຫ້ເກີດການອຸທິດຖວາຍທັງກຳລັງຝ່າຍຮ່າງກາຍ ຈິດໃຈ ແລະເງິນຄຳດ້ວຍຈິດໃຈທີ່ບໍຣິສຸດ ຊຶ່ງມີຄວາມໝາຍດັ່ງຕໍ່ໄປນີ້

1. **ການຖວາຍສະແດງເຖິງຄວາມຮັກແລະການຕອບແທນພຣະຄຸນທີ່ມີຕໍ່ພຣະເຈົ້າ** ຊຶ່ງເຣື່ອງນີ້ກໍສົມຄວນ ຍົກຍໍພີ່ນ້ອງຄຣິສຕຽນຈຳນວນຫລາຍທີ່ປະຕິບັດຢູ່ ມີພຽງສ່ວນນ້ອຍທີ່ຖວາຍຍ້ອນເຫດຜົນແນວອື່ນ ແຕ່ທີ່ສຳຄັນເຮົາບໍ່ໄດ້ຖວາຍຍ້ອນການອວດຕໍ່ຜູ້ອື່ນ ເພາະວ່າຜູ້ທີ່ຍາກຈົນທີ່ສຸດທີ່ໃຫ້ດ້ວຍຄວາມຮັກຄວາມຈິງໃຈ ແມ່ນຜູ້ທີ່ພຣະເຈົ້າພໍພຣະທັຍ ແຕ່ສຳລັບຜູ້ຮັ່ງມີທີ່ໃຫ້ຫລາຍກວ່າຜູ້ອື່ນ ແລະຍອມຖວາຍດ້ວຍຄວາມຈິງຮັກພັກດີເພື່ອພຣະຣາຊກິຈຂອງພຣະເຈົ້ານັ້ນ ຍ່ອມເກີດປໂຍດຫລາງຫລາຍຕໍ່ພຣະຣາຊກິຈຂອງພຣະເຈົ້າ ພຣະອົງສັນຍາວ່າພຣະອົງຈະເພີ່ມເຕີມແກ່ທຸກຄົນເປັນຮ້ອຍເທົ່າພັນເທົ່າຍ້ອນເຂົາຮູ້ຈັກລົງທຶນໃນຝ່າຍວິນຍານ (spiritual Investment) ແມ່ນແທ້ທີ່ພຣະຣາຊກິຈຂອງພຣະເຈົ້າຕ້ອງມີປັດຈັຍຫລາຍແນວເຂົ້າມາມີສ່ວນດຳເນີນການເພື່ອການເຜີຍແຜ່ຈະໄດ້ເກີດຜົນ ແລະຂ່າວປະເສີດຂອງພຣະເຢຊູຄຣິສຈະໄດ້ຂຍາຍອອກໄປຈົນເຖິງສຸດປາຍແຜ່ນດິນໂລກ ສາທຸໂມທານາຄຸນສຳລັບທຸກທ່ານທີ່ຖວາຍດ້ວຍໃຈຮັກແບບນີ້

2. **ຖວາຍແດ່ຄຣິສຈັກທ້ອງຖິ່ນ ແລະວຽກງານອື່ນ ໆ** ເພື່ອເສີມສ້າງຄຣິສຈັກຂອງພຣະຄຣິສ ພຣະທັມມັດທາຍ 16:18 ກ່າວວ່າ "ເຮົາຈະສ້າງຄຣິສຈັກຂອງເຮົາຂຶ້ນ" ຊຶ່ງໝາຍເຖິງຄຣິສຈັກສາກົລທີ່ກຳລັງຖືກສ້າງຂຶ້ນໂດຍຜ່ານທາງການຖວາຍຂອງຄຣິສຈັກທ້ອງຖິ່ນ ຊຶ່ງມາຈາກຄຣິສຕຽນທີ່ເຫັນເຖິງຄວາມຈຳເປັນສຳລັບວຽກງານສະເພາະທີ່ຕ້ອງສົ່ງເສີມ ເພື່ອໃຫ້ວຽກງານນັ້ນເສີມສ້າງຣາຊອານາຈັກຂອງພຣະເຈົ້າ ດັ່ງນັ້ນສະມາຊິກຈຶ່ງຕ້ອງຖວາຍແດ່ຄຣິສຈັກທ້ອງຖິ່ນຢ່າງສມ່ຳສເມີ ແລະຄຣິສຈັກຕ້ອງຮູ້ຈັກການຈັດສັນປັນສ່ວນເພື່ອຊ່ວຍເຫລືອພຣະຣາຊກິຈ (ministries) ທີ່ຈຳເປັນ ໃຫ້ມີຄຽງຄູ່ກັນໄປກັບການຂຍາຍໃຫຍ່ຂຶ້ນຂອງຄຣິສຈັກ ສະມາຊິກຄຣິສຕຽນທີ່ມີຄວາມສາມາດທາງການເງິນອາດຈະຈັດສັນປັດຈັຍອີກສ່ວນນຶ່ງມາຖວາຍພຣະຣາຊກິຈ (ministries) ແມ່ນວຽກທີ່ຢູ່ນອກຄຣິສຈັກທີ່ຈຳເປັນ ຕົວຢ່າງສຖານສົງເຄາະເຍົາວະຊົນ ຄົນຊະຣາ ການກູ້ພັຍ ໂຮງຮຽນພຣະຄຣິສທັມ ໂຮງພຍາບານ ໂຮງການພິມ ແລະແຈກຢາຍພຣະຄຣິສທັມຄັມພີ ເປັນຕົ້ນ ຊຶ່ງໂຮງການເຫລົ່ານີ້ຈະສົ່ງຜົນປໂຍດຍ້ອນຄືນມາເຖິງຄຣິສຈັກ ເຮັດໃຫ້ຄຣິສຈັກແຮງຫລາຍຂຶ້ນ

3. **ການຖວາຍແມ່ນພາກສ່ວນນຶ່ງຂອງການນະມັສການພຣະເຈົ້າ** ແມ່ນແທ້ການຖວາຍທີ່ພຣະເຈົ້າພໍພຣະທັຍ ແມ່ນການອຸທິດຊີວິດຈິດໃຈທີ່ເຊື່ອຟັງຂອງເຮົາ ການດ້ວຍການດຳເນີນຊີວິດຄຣິສຕຽນໂດຍການຍ່າງນຳພຣະອົງ ການບົວລະບັດຮັບໃຊ້ຢ່າງສັດຊື່ ແລະການຖວາຍຊັບເງິນຄຳສຳລັບວຽກງານຮັບໃຊ້ພຣະອົງ ແມ່ນການສແດງອອກຂອງຜູ້ທີ່ຮັກແລະນະມັສການພຣະອົງດ້ວຍຈິງໃຈ ເປັນການຮູ້ຄຸນພຣະເຈົ້າແລ້ວຕອບແທນພຣະອົງດ້ວຍການຖວາຍ ເພື່ອພຣະຣາຊກິດຂອງພຣະອົງ ພຣະທັມຟີລິບປອຍ 4:18ຂ ກ່າວວ່າ **"ເຈົ້າທັງຫລາຍສົ່ງ (ຊັບ) ໄປໃຫ້ເປັນຂອງທານທີ່ມີກິ່ນຫອມຫວານ ເປັນ**

**ເຄື່ອງບູຊາທີ່ຊົງໂຜດຮັບ ແລະທີ່ຊອບພຣະທັຍພຣະເຈົ້າ"** ເຮົາບໍ່ຕ້ອງເອົາດອກໄມ້ທູບທຽນມາຂາບໄຫວ້ ຫລືຕ້ອງເອົາອາຫານມາເຊັ່ນໄຫວ້ ແຕ່ເອົາໃຈມາຖວາຍພ້ອມເງິນຄຳທີ່ໄດ້ຈັດຕຽມໄວ້ ອັນເປັນຄວາມຕັ້ງໃຈແທ້ແລະໝັ້ນຄົງເພື່ອນະມັສການພຣະເຈົ້າ

**4. ການຖວາຍປັດຈັຍມີສ່ວນໃນພຣະມະຫາບັນຊາຂອງພຣະເຈົ້າ** ຄຣິສຕຽນທຸກທ່ານທີ່ເຂົ້າໃຈດີເຖິງຄຳສັ່ງຂໍ້ນີ້ທີ່ວ່າ "ເຫດສັນນັ້ນພວກທ່ານຈົ່ງໄປ ຈົ່ງເຮັດໃຫ້ຄົນທຸກຊາດເປັນລູກສິດ ໃຫ້ເຂົາຮັບບັບຕິສະມາໃນພຣະນາມແຫ່ງພຣະບິດາ ພຣະບຸດ ແລະພຣະວິນຍານບໍຣິສຸດ ສັ່ງສອນເຂົາໃຫ້ຖືຮັກສາສາຣະພັດຊຶ່ງເຮົາໄດ້ສັ່ງພວກເຈົ້າໄວ້ແລ້ວນັ້ນ ນີ້ແຫລະ ເຮົາຢູ່ກັບທ່ານທັງຫລາຍທຸກໆ ວັນຈົນໝົດກັບ" (ມັດທາຍ 28:19-20) ຄຳສັ່ງນີ້ສຳເຣັດໄດ້ຈຳເປັນຕ້ອງອາສັຍປັດຈັຍຂອງການຖວາຍຈາກພີ່ນ້ອງທີ່ຮັກພຣະເຈົ້າ ແລະມີໃຈເຊື່ອຟັງ ຍຶດໝັ້ນຂໍ້ຄຳສັ່ງນີ້ ຫລາຍຄົນບໍ່ສາມາດອອກໄປປະກາດຂ່າວປະເສີດຕາມຄຳສັ່ງຂອງພຣະເຢຊູຍ້ອນດ້ອຍໂອກາດບໍ່ອຳນວຍໃຫ້ ແຕ່ມີສິ່ງນຶ່ງທີ່ເຮົາເຮັດໄດ້ແມ່ນການຖວາຍ ເພື່ອສົ່ງເສີມໃຫ້ຜູ້ທີ່ໄປປະກາດໄດ້ມີໂອກາດເຮັດວຽກການນີ້ໃຫ້ສຳເຣັດ

**5. ການຖວາຍສະແດງເຖິງຄວາມຮ່ວມມືຮ່ວມໃຈກັນ** ແມ່ນການສາມັກຄີທັມ ມີນ້ຳນຶ່ງໃຈດຽວກັນໃນພຣະຄຣິສ ແມ່ນພລັງທີ່ສາມາດເຮັດໃຫ້ພຣະຣາຊະກິຈຂອງພຣະເຈົ້າສຳເຣັດຜົນໃນຄຣິສຈັກທ້ອງຖິ່ນ ໃນໂອງການຕ່າງ ໆ ຂອງຄຣິສຕຽນ ແລະການປະກາດເຜີຍແຜ່ໄປເຖິງທົ່ວໂລກ ບໍ່ວ່າຈະເປັນຕຶວອາຄານທີ່ເບິ່ງເຫັນ ຫລືພຣະຣາຊະກິຈຝ່າຍວິນຍານຈິດທີ່ຊ່ວຍມະນຸດທຸກຊາດພາສາໃຫ້ຮັບຄວາມພົ້ນ ມີຜົນເນື່ອງມາຈາກການຖວາຍຢ່າງສັດຊື່ໃຫ້ແກ່ຄຣິສຈັກ ແລະແກ່ອົງການທີ່ຢູ່ນອກຄຣິສຈັກດ້ວຍ ເພື່ອໃຫ້ຣາຊະອານາຈັກຂອງພຣະຄຣິສຈຳເຣີນແຜ່ໄພສານອອກໄປຢ່າງທົ່ວເຖິງ

**6. "ການໃຫ້ເປັນເຫດໃຫ້ມີຄວາມສຸກຫລາຍກວ່າການຮັບ" (ກຈ** 20:35) ແມ່ນຄວາມເວົ້າຂອງພຣະເຢຊູ ທີ່ສະແດງອອກໃຫ້ເຫັນເຖິງການປ່ຽນແປງຊີວິດຂອງບຸກຄົນທີ່ມີຄວາມເຊື່ອໃນພຣະອົງ ເປັນຊີວິດທີ່ໄດ້ກັບໃຈແລະຮັບການປ່ຽນແປງເສີຍໃໝ່ ແມ່ນຈິດໃຈທີ່ຄິດເຖິງຜູ້ອື່ນຫລາຍກວ່າຄິດເຖິງຕົນເອງ ການໃຫ້ແບບນີ້ນອກເໜືອຈາກການຖວາຍຊັບສິ່ງຂອງແລ້ວຍັງຮວມໄປເຖິງການຖວາຍເວລາ ຖວາຍແຮງງານ ຖວາຍຄວາມສາມາດ ໃຫ້ການເບິ່ງແຍງຮັກສາ ໃຫ້ການເອົາໃຈໃສ່ຮັບຮູ້ທຸກສຸກຂອງຜູ້ທີ່ຢູ່ອ້ອມຂ້າງທັງໃນແລະນອກຄຣິສຈັກ ການໃຫ້ແບບນີ້ນຳຄວາມສຸກມາໃຫ້ແກ່ຜູ້ທີ່ໃຫ້ ອີກທັງມີບົດບາດສຳຄັນຫລາຍໃນການຖວາຍສະງ່າຣາສີແດ່ພຣະຄຣິສແລະຄຣິສຈັກຂອງພຣະອົງ ຄຣິສຈັກບາງບ່ອນອາດຈະມີເງິນຄຳຫລາຍຢ່າງພຽງພໍສຳລັບພຣະຣາຊະກິຈຂອງພຣະເຈົ້າແລ້ວກໍຕາມ ຫາກວ່າບໍ່ມີຜູ້ເສັຽສະລະເວລາກຳລັງຝ່າຍຮ່າງກາຍ ການສນັບສນູນແຮງງານແລະຄວາມຄິດທັງຄຳໄຫວ້ວອນ ແລ້ວເງິນຄຳທີ່ຢູ່ໃນຄຣິສຈັກກໍຢູ່ລ່າ ໆ ຈະບໍ່ເກີດປໂຍດຫຍັງ ດັ່ງນັ້ນຜູ້ນຳຄຣິສຈັກຕ້ອງຮູ້ຈັກໃຊ້ເງິນຄຳທີ່ມີຢູ່ໃນຄັງຂອງຄຣິສຈັກໃຫ້ເກີດຜົນຕໍ່ພຣະຣາຊະກິຈຂອງພຣະເຈົ້າ

**7. ການຖວາຍແມ່ນການລົງທຶນຖາວອນທີ່ຖວາຍກຽດແດ່ພຣະເຈົ້າ** ແມ່ນການຮ່ວມມືກັບພຣະອົງ ແມ່ນການຮ່ວມເຂົ້າສ່ວນໃນນໍ້າພຣະທັຍ ແລະພຣະປະສົງຂອງພຣະເຈົ້າ ແມ່ນການຂຍາຍຣາຊອານາຈັກຂອງພຣະຄຣິສໃຫ້ໃຫຍ່ຂຶ້ນແລະຖາວອນສືບໄປຈົນກວ່າພຣະເຢຊູຄຣິສສະເດັດມາ ການເກັບອອມຊັບ ການສ້າງເຮືອນໃຫຍ່ ການມີຣົຖຍານ ການມີການສຶກສາດີ ການຮູ້ຈັກລົງທຶນດີ ສິ່ງເຫລົ່ານີ້ແມ່ນສິ່ງດີ ໆ ທັງນັ້ນທີ່ຈະສົ່ງເສີມກຽດແລະສະງ່າຣາສີຂອງເຮົາແລະຄອບຄົວ ແຕ່ມື້ນຶ່ງທີ່ຊີວິດຂອງເຮົາຕ້ອງຜ່ານພົ້ນຈາກສິ່ງເຫລົ່ານີ້ແລ້ວຄຸນສົມບັດເຫລົ່ານີ້ກໍຈະຕົກໄປເປັນຂອງລູກຫລານຮຸ່ນຕໍ່ ໆ ໄປທີ່ຈະຮຽນຮູ້ຮັກສາ ສ່ວນຕົວເຮົາທີ່ຈາກໄປແລ້ວກໍຈະບໍ່ສາມາດຄອບຄຸມດູແລຫລືກ່ຽວຂ້ອງໄດ້ອີກຕໍ່ໄປ ແຕ່ການຖວາຍແດ່ພຣະເຈົ້າຢ່າງສັດຊື່ຈະເປັນການລົງທຶນທີ່ຕິດຕາມເຮົາໄປຈົນເຖິງໂລກໜ້າ ແມ່ນຟ້າສວັນທີ່ພຣະເຈົ້າຈະນໍາອອກມານັບແລະປະກາດເຖິງການທີ່ເຮົາໄດ້ຮ່ວມມືກັບພຣະອົງ ດັ່ງນັ້ນໃຫ້ເຮົາຮູ້ຈັກການຈັດສັນປັນສ່ວນທີ່ເໝາະສົມສໍາລັບການຖວາຍ ແລະເຮົາບໍ່ຕ້ອງກະວົນກະວາຍແລະໃຊ້ເງິນຄໍາຈົນເກີນກໍາລັງຄວາມສາມາດທີ່ຈະເຮັດໄດ້ແລ້ວມາຕົກທຸກອຸກໃຈຕໍ່ການຜ່ອນຈ່າຍບໍ່ຮອນໃນແຕ່ລະເດືອນ **"ເຫດສັນນັ້ນພວກທີ່ຮັກເອີຍ ເມື່ອທ່ານທັງຫລາຍກໍາລັງຄອຍຖ້າສິ່ງເຫລົ່ານີ້ຢູ່ ຈົ່ງອິດສາພຍາຍາມໃຫ້ພຣະອົງຊົງພົບພວກທ່ານຢູ່ໃນຄວາມສງົບ ໂດຍບໍ່ມີຈຸດດ່າງພ້ອຍແລະຂໍ້ຕໍານິ"** (2 ປຕ 3:13)

**8. ພຣະເຈົ້າອວຍພຣະພອນຢ່າງເຫລືອລົ້ນ** ແກ່ຜູ້ທີ່ຖວາຍຢ່າງໃຈກວ້າງຂວາງຢ່າງເຕັມໃຈເຮັດພຣະທັມມາລາກີ 3:10 **"ຈົ່ງນໍາເງິນເຕັມຈໍານວນນຶ່ງສ່ວນສິບມາທີ່ວິຫານ ເພື່ອວ່າຈະມີອາຫານໃນພຣະວິຫານ ຈົ່ງລອງເບິ່ງດູ ແລະພວກເຈົ້າເຫັນວ່າເຮົາຈະໄຂຟ້າສວັນ ແລ້ວຖອກເທພຣະພອນລົງມາຍັງພວກເຈົ້າຢ່າງຫລວງຫລາຍ"** ເຖິງວ່າທ່ານຈະຖືປະຕິບັດເຣື່ອງການຖວາຍຈໍານວນນຶ່ງສ່ວນສິບນີ້ຫລືບໍ່ກໍຕາມສິ່ງສໍາຄັນທີ່ຢູ່ຝ່າຍພຣະເຈົ້າແມ່ນວ່າພຣະອົງຮູ້ເຖິງຈິດໃຈຂອງຜູ້ຖວາຍແລະພຣະອົງຈະເທພຣະພອນໃສ່ຜູ້ນັ້ນທີ່ມີຈິດໃຈຖວາຍຢ່າງກວ້າງຂວາງ ໂດຍບໍ່ແມ່ນວ່າເຮົາເອົານຶ່ງສ່ວນສິບມາຖວາຍເພື່ອເປັນການຕໍ່ລອງກັບພຣະເຈົ້າ ແລ້ວຫວັງຈະໄດ້ຄືນມາຫລາຍກວ່າທີ່ຕົນໃຫ້ເພື່ອຈະໄດ້ກໍາໄລ ຖ້າເຮັດແນວນີ້ກໍກາຍເປັນຄົນໂລບຫລາຍກວ່າການຖວາຍພຣະເຈົ້າ ແທ້ຈິງມີຢູ່ວ່າການຖວາຍນັ້ນຂຶ້ນຢູ່ທີ່ໃຈໂມທະນາພຣະຄຸນ ແຕ່ຖ້າພຍາຍາມເພື່ອຫວັງໃຫ້ພຣະເຈົ້າເທພຣະພອນຄືນຫລືຖວາຍຫລາຍ ແຕ່ດ້ວຍໃຈຂັດຂືນກໍກາຍເປັນຄວາມຕັ້ງໃຈທີ່ຜິດ ດັ່ງນີ້ແຫລະຄົນທີ່ຫວ່ານພຽງເລັກນ້ອຍກໍກ່ຽວເກັບໄດ້ພຽງເລັກນ້ອຍ ແລະຄົນທີ່ຫວ່ານຫລາຍກໍກ່ຽວເກັບໄດ້ຫລາຍ ທຸກຄົນຈົ່ງໃຫ້ຕາມທີ່ຕົນໄດ້ຄິດໆໝາຍໄວ້ໃນໃຈ ບໍ່ໃຊ່ໃຫ້ດ້ວຍຄິດເສັຽດາຍ ຫລືດ້ວຍຂືນໃຈໃຫ້ ເຫດວ່າພຣະເຈົ້າຊົງຮັກຄົນນັ້ນທີ່ໃຫ້ດ້ວຍຊື່ນໃຈຍິນດີ ແລະພຣະເຈົ້າຊົງຣິດອາດປະທານພຣະຄຸນອັນສົມບູຣົນທຸກຢ່າງແກ່ເຈົ້າທັງຫລາຍ ເພື່ອໃຫ້ພວກເຈົ້າມີທຸກສິ່ງທຸກຢ່າງພຽງພໍສໍາລັບຕົວສເມີ ທັງຈະມີສິ່ງຂອງບໍຣິບູນສໍາລັບການງານດີທຸກຢ່າງດ້ວຍ ຕາມທີ່ມີຂຽນໄວ້ໃນພຣະຄັມພີວ່າ **"ທ່ານບໍຣິຈາກຢ່າງກວ້າງຂວາງໃຫ້ແກ່ຄົນທຸກຍາກ ຄຸນຄວາມດີຂອງທ່ານກໍຕັ້ງຢູ່ເປັນນິດ"** (2 ກທ 6-9)

9. ແທ້ຈິງພຣະເຈົ້າເປັນເຈົ້າຂອງທຸກສິ່ງ ເຮົາແມ່ນຜູ້ເບິ່ງແຍງ (Steward) ເພາະມີຄຳຂຽນໄວ້ໃນພຣະຄັມພີວ່າ **"ດ້ວຍວ່າ 'ແຜ່ນດິນໂລກກັບສັພສິ່ງໃນໂລກນັ້ນເປັນຂອງອົງພຣະຜູ້ເປັນເຈົ້າ'"** (1 ກທ 10:26) **"ແຜ່ນດິນໂລກ ແລະທຸກໆສິ່ງໃນໂລກນີ້ເປັນຂອງພຣະຜູ້ເປັນເຈົ້າ ພົນແຜ່ນດິນແລະທຸກຄົນທີ່ອາໄສຢູ່ກໍເປັນຂອງພຣະອົງ"** (ພສສ 24:1) **"ຖ້າພວກເຈົ້າເຊື່ອຟັງພຣະອົງ ແລະຮັກສາຄຳໝັ້ນສັນຍາຂອງພຣະອົງໄວ້ ພວກເຈົ້າກໍຈະໄດ້ເປັນໄພ່ພົນຂອງພຣະອົງໝົດ ທັງໂລກເປັນຂອງພຣະອົງ"** (ອພຍ 19:5) **"ໃຜທີ່ໃຫ້ຫຍັງແກ່ເຮົາ ຊຶ່ງເຮົາຈະຕ້ອງຕອບແທນເຂົາ ສິ່ງໃດທີ່ຢູ່ໃຕ້ຟ້າສວັນທັງສິ້ນກໍເປັນຂອງເຮົາ"** (ໂຢບ 41:11 ທ.) ຕົວເຮົາແມ່ນພຽງຜູ້ດູແລເບິ່ງແຍງຈັດການສິ່ງທີ່ພຣະເຈົ້າປະທານອຳນາດການຈັດການແກ່ເຮົາ ເພື່ອເຮົາຈະສາມາດເບິ່ງແຍງແລະຕອບສນອງຕໍ່ຊີວິດຄວາມເປັນຢູ່ຂອງເຮົາ ອຳນາດນີ້ຄືກັບເຮົາເປັນເຈົ້າຂອງ ແຕ່ແທ້ຈິງແລ້ວສິດທິອັນເດດຂາດຢູ່ນຳພຣະເຈົ້າ ຖ້າພຣະເຈົ້າຈະເອົາຄືນເຮົາບໍ່ມີອຳນາດທີ່ຈະສູ້ກັບພຣະອົງໄດ້ ຄວາມອຸດົມສົມບູນຂອງເຮົາທີ່ມີຢູ່ຍ້ອນພຣະກະຣຸນາຄຸນຂອງພຣະອົງ ຄືກັບພໍ່ທີ່ໃຫ້ອຳນາດລູກໃນການດູແລປົກຄອງຊັບສິນ (stewardship) ພຣະອົງຊົງພໍພຣະທັຍເມື່ອເຮົານຳເອົາສ່ວນນຶ່ງມາຖວາຍຄືນພຣະອົງ ຄືກັບພໍ່ທີ່ດີໃຈທີ່ເຫັນລູກເອົາຂອງຈາກທົ່ງນາມາຝາກ ແຕ່ຫລາຍກວ່ານັ້ນອີກ ພຣະອົງມີຣິດເດດທີ່ຈະບັນດາລໃຫ້ທົ່ງນາມີຄວາມອຸດົມສົມບູນເກີດໝາກຜົນເພີ່ມພູນເຕີ່ມອີກຫລາຍ ໆ ເທົ່າ

**10. ຈົ່ງຖວາຍຢ່າງພຣະຄຣິສ** ແມ່ນຖວາຍຊີວິດອຸທິດໄວ້ເພື່ອໃຫ້ເປັນທີ່ພໍພຣະທັຍພຣະເຈົ້າ ໃນພຣະທັມໂຣມ 12:1 ທ່ານໂປໂລໄດ້ກ່າວເຊີນຊວນຄຣິສຕຽນໃຫ້ຖວາຍຕົວແດ່ພຣະເຈົ້າ **"ເຫດສັນນັ້ນພີ່ນ້ອງທັງຫລາຍເອີຍ ໂດຍເຫັນແກ່ພຣະເມດຕາກະຣຸນາຂອງພຣະເຈົ້າ ເຮົາຈຶ່ງຊັກຊວນພວກເຈົ້າໃຫ້ຖວາຍຕົວແກ່ພຣະອົງ ເພື່ອເປັນເຄື່ອງບູຊາທີ່ມີຊີວິດ ເປັນອັນບໍຣິສຸດ ແລະເປັນທີ່ຊອບພຣະທັຍພຣະເຈົ້າ ຊຶ່ງເປັນການນະມັສການທີ່ສົມກັບຝ່າຍວິນຍານຂອງເຈົ້າທັງຫລາຍ"** ຄວາມເມດຕາກະຣຸນາຂອງພຣະເຈົ້າໄດ້ປາກົດເປັນຄວາມຮັກແກ່ເຮົາໂດຍທາງພຣະເຢຊູຄຣິສທີ່ອຸທິດຖວາຍຊີວິດຂອງພຣະອົງ ເພື່ອເປັນຄ່າໄຖ່ແກ່ມະນຸດສະໂລກ ຊຶ່ງເປັນທີ່ພໍພຣະທັຍແກ່ພຣະເຈົ້າ ການອຸທິດຖວາຍຂອງພຣະເຢຊູຄຣິສນີ້ແຫລະເປັນຮູບແບບແກ່ຄຣິສຕຽນເຮົາໃນການອຸທິດຖວາຍຕົວ ທີ່ຄຣິສຕຽນສົມຄວນຢ່າງນຳຕາມແບບຢ່າງພຣະເຢຊູຄຣິສໃນການມອບຖວາຍຊີວິດແດ່ພຣະເຈົ້າ ການທີ່ຜູ້ນຶ່ງຜູ້ໃດຈະຍອມມອບຖວາຍຊີວິດຢ່າງສິ້ນສຸດກໍເປັນພື້ນຖານແຫ່ງການຖວາຍທັງມວລ ຊີວິດຄຣິສຕຽນເປັນເຄື່ອງບູຊາທີ່ໄດ້ມອບຖວາຍໄວ້ໃຫ້ກັບພຣະເຈົ້າ ເປັນເຄື່ອງບູຊາທີ່ມີຊີວິດອັນມີຄຸນຄ່າ ໃນການເປັນແສງສວ່າງໃຫ້ແກ່ທຸກຄົນໄດ້ເຫັນສະງ່າຣາສີຂອງພຣະເຈົ້າ ເປັນເຄື່ອງບູຊາອັນບໍຣິສຸດ ແມ່ນຊີວິດທີ່ຍອມເສັຽສະລະມອບໄວ້ໃຫ້ກັບພຣະເຈົ້າ ເປັນຜູ້ຮັບໃຊ້ຂອງພຣະເຈົ້າແຕ່ພຣະອົງດຽວ ຈະເຫັນໄດ້ວ່າການຖວາຍແນວນີ້ ເປັນການດຳເນີນຊີວິດທີ່ເອົາໃຈຂອງພຣະເຈົ້າເປັນທີ່ຕັ້ງ ແລະໄດ້ໃຊ້ທຸກສິ່ງທຸກຢ່າງທີ່ມີຢູ່ໃນຊີວິດນີ້ເຮັດສິ່ງທີ່ຖືກໃຈພຣະເຈົ້າ ພຣະເຢຊູເປັນແບບຢ່າງໃຫ້ເຮົາເຫັນໄດ້ຢ່າງແຈ່ມແຈ້ງ ພຣະອົງໄດ້ເສັຽສະລະຄວາມເປັນພຣະເຈົ້າຖ່ອມພຣະທັຍດຳເນີນຊີວິດໃນຮູບແບບດຽວກັບມະນຸດ ພຣະອົງບໍ່ຫວງແຫນສິ່ງໃດທີ່ພຣະອົງມີຢູ່ ແລະມູ້

ໆໝາຍຢູ່ພຽງຢ່າງດຽວແມ່ນເຮັດໃຫ້ນ້ຳພຣະທັຍຂອງພຣະບິດາສຳເຣັດ ຖ້າເຮົາທຸກຄົນໄດ້ຍຶດແນວປະຕິບັດດຽວກັບພຣະເຢຊູຄຣິສ ເຮົາກໍຈະເປັນທີ່ພໍພຣະທັຍພຣະບິດາໂດຍບໍ່ຕ້ອງສົງສັຍ ສິ່ງຕ່າງ ໆ ທີ່ເຮົາຖວາຍກໍຈະເປັນພຣະພອນແລະເປັນຄວາມພາກພູມໃຈແກ່ພຣະບິດາ ດັ່ງນັ້ນແລ້ວເມື່ອເຮົາຈະຖວາຍສິ່ງນຶ່ງແນວໃດແລ້ວ ເປັນສິ່ງທີ່ເຮົາຖວາຍດ້ວຍຄວາມເຕັມໃຈສຳລັບພຣະບິດາ ແລະພຣະບິດາມີຄວາມພາກພູມໃຈໃນສິ່ງທີ່ເຮົາຖວາຍ ເຮົາຈະບໍ່ເຮັດຫລືຖວາຍສິ່ງທີ່ບໍ່ມີຄຸນຄ່າຄວາມໝາຍຖວາຍແດ່ພຣະເຈົ້າຂອງເຮົາ ດັ່ງນັ້ນຈຶ່ງເປັນສຸກໃຈສຳລັບຊີວິດຂອງເຮົາ ເມື່ອເຮົາຮູ້ແນວປະຕິບັດຂອງການຮູ້ຈັກຖວາຍໃຫ້ເປັນທີ່ຖືກໃຈພຣະເຈົ້າ

**11. ການຖວາຍສິບຊັກນຶ່ງ ຫລືຖວາຍຊັບ** ມີຄຣິສຕຽນຈຳນານຫລວງຫລາຍສາມາດຖວາຍສິບຊັກນຶ່ງໄດ້ເປັນປະຈຳໂດຍບໍ່ມີຄວາມຂາດເຂີນໃນແນວໃດ ແຕ່ກັບໄດ້ຮັບພຣະພອນຢ່າງເກີນຄວາມຄາດໝາຍຍ້ອນເຂົາຖວາຍດ້ວຍຄວາມເຊື່ອຢ່າງຈິງໃຈ ພຣະວັຈນະຂອງພຣະເຈົ້າໄດ້ພູດເຖິງພຣະສັນຍາແຫ່ງຄັງພຣະພອນແກ່ຜູ້ທີ່ຖວາຍສິບຊັກນຶ່ງເຂົ້າໃນພຣະວິຫານຂອງພຣະເຈົ້າ ເຫດທີ່ຄຣິສຕຽນຖວາຍສິບຊັກນຶ່ງເພາະຮູ້ວ່າ

ກ. ຄຳສັ່ງທີ່ມາຈາກພຣະເຈົ້າ ພຣະທັມລະບຽບເລວີ 27:30-33

ຂ. ເພື່ອໄວ້ໃຊ້ໃນພຣະວິຫານແລະເພື່ອເບິ່ງແຍງຜູ້ຮັບໃຊ້ຂອງພຣະເຈົ້າທີ່ໄດ້ຖວາຍຕົວຮັບໃຊ້ເຕັມເວລາ ພຣະທັມຈົດເຊັນບັນຊີ 18:21

ຄ. ເພາະວ່າສິບຊັກນຶ່ງແມ່ນຂອງພຣະເຈົ້າທີ່ເຮົາຕ້ອງນຳມາຖວາຍຄືນຕາມຫລັກການ ບໍ່ດັ່ງນັ້ນແລ້ວເຮົາຈະເປັນຄົນທີ່ສໍ້ໂກງຕໍ່ພຣະເຈົ້າ ແລະຂາດພຣະພອນ ພຣະທັມມາລາກີ 3:8

ງ. ຖ້າເຮົາສັດຊື່ເຮັດຕາມແລ້ວພຣະເຈົ້າຈະຖອກເທພຣະພອນລົງຢ່າງຫລວງຫລາຍ ແກ່ຜູ້ທີ່ຖວາຍສິບຊັກນຶ່ງ ພຣະທັມມາລາກີ 3:10-11

ການຖວາຍທີ່ເກີດຜົນນັ້ນຜູ້ເຊື່ອຕ້ອງເຮັດດ້ວຍຄວາມເຂົ້າໃຈແລະດ້ວຍເຕັມໃຈ ຕ້ອງມີຈິດໃຈພ້ອມພຽງກັນໃນຣະດັບຂອງຄອບຄົວດ້ວຍໂດຍບໍ່ຜິດຖຽງກັນ ແມ່ນຄວາມສຳນັກໃຈທີ່ຈະຖວາຍໃຫ້ແກ່ຄຣິສຈັກທີ່ເຮົາປະຈຳຢູ່ ເພື່ອເສີມສ້າງພຣະການຂອງພຣະຄຣິສ ເຮົາຕ້ອງມີຄວາມເຂົ້າໃຈເຖິງຄວາມຈຳເປັນຂອງການຖວາຍ "ທ່ານບໍຣິຈາກຢ່າງກວ້າງຂວາງໃຫ້ແກ່ຄົນທຸກຍາກ ຄຸນຄວາມດີຂອງທ່ານກໍຕັ້ງຢູ່ເປັນນິດ" (2 ກທ9:9)

**"ຂໍໃຫ້ພຣະເຈົ້າຜູ້ຊົງໂຜດປະທານສັນຕິສຸກນັ້ນ ຈົ່ງຊົງບັນດານໃຫ້ເຈົ້າທັງຫລາຍເປັນຄົນບໍຣິສຸດຮຽບຮ້ອຍ ແລະຊົງຮັກສາວິນຍານ ຈິດໃຈ ແລະກາຍຂອງພວກເຈົ້າໄວ້ບໍ່ໃຫ້ມີຂໍ້ຕິຕຽນໄດ້ ໃນເມື່ອອົງພຣະຜູ້ເປັນເຈົ້າຂອງເຮົາທັງຫລາຍ ຄືພຣະເຢຊູຄຣິດຈະສະເດັດມາປາກົດພຣະອົງຜູ້ຊົງເອີ້ນເອົາເຈົ້າທັງຫລາຍນັ້ນກໍທ່ຽງທັມ ພຣະອົງນັ້ນແຫລະ ຈະຊົງດຳເນີນງານ . . . ຂໍໃຫ້ພຣະຄຸນຂອງພຣະເຢຊູຄຣິດເຈົ້າຂອງພວກເຮົາສະຖິດຢູ່ກັບເຈົ້າທັງຫລາຍເທີນ"** (1 ທຊ 5:23-24, 28)